ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກອງທຶນປົກປັກຮັກສາສິ່ງແວດລ້ອມ (ກປສ)

ຄູ່ມື ການມີສ່ວນຮ່ວມຂອງຊຸມຊົນ

ຄູ່ມືຄຸ້ມຄອງໂຄງການ ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ເຫຼັ້ມ 7

ພະຈິກ 2023

ຄຳນຳ

ຄູ່ມືການມີສ່ວນຮ່ວມຊຸມຊົນ (CEF) ຂອງໂຄງການພາຍໃຕ້ກອງທຶນປົກປັກຮັກສາສິ່ງແວດລ້ອມ ເປັນເຄື່ອງມືໜຶ່ງທີ່ເຮັດວຽກຮ່ວມກັບຊຸມຊົນ, ການເຮັດແຜນພັດທະນາບ້ານ (CAP) ແລະ ການເຮັດສັນຍາອະນຸລັກຂອງຊຸມຊົນ (CCA) ເພື່ອຊ່ວຍໃຫ້ປະຊາຊົນທີ່ອາໃສຢູ່ໃນ ແລະ ອ້ອມຂ້າງເຂດປ່າສະຫງວນໄດ້ມີສ່ວນຮ່ວມໃນວຽກງານອະນຸລັກປ່າໄມ້ ແລະ ຊີວະນາໆພັນ ທີ່ມີສ່ວນຮ່ວມໃນສິດຜົນປະໂຫຍດຈາກການຄຸ້ມຄອງຮ່ວມກັນໃນການຍົກລະດັບຊີວິດການເປັນຢູ່, ສະຫວັດດີການຂອງຊຸມຊົນ ເພື່ອຮັບປະກັນວ່າຊຸມຊົນໃນທ້ອງຖິ່ນຈະໄດ້ຮັບການປະຕິບັດຢ່າງເປັນທຳ.

ຄູ່ມືນີ້ໄດ້ກຳນົດຫຼັກການຕົ້ນຕໍການມີສ່ວນຮ່ວມຂອງຊຸມຊົນເຊັ່ນ: ການຄັດເລືອກບ້ານ ແລະ ການແນະນຳໂຄງການ, ການສ້າງຄວາມຮັບຮູ້ຂອງຊຸມຊົນ ແລະ ການເກັບກຳຂໍ້ມູນຊັບພະຍາກອນທຳມະຊາດ, ການວາງແຜນ, ສ້າງຂໍ້ຕົກລົງແບບມີສ່ວນຮ່ວມ, ການຈັດຕັ້ງປະຕິບັດ ແລະ ການຕິດຕາມປະເມີນຜົນ. ຊຶ່ງປຶ້ມຄູ່ມືສະບັບນີ້ເປັນແນວທາງສຳລັບການນຳໃຊ້ການມີສ່ວນຮ່ວມຂອງຊຸມຊົນ (CEF) ຂອງໂຄງການ ພາຍໃຕ້ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ເປັນເຄື່ອງມືໃນການລົງເຮັດວຽກພາກສະໜາມສຳລັບອົງການຈັດຕັ້ງປະຕິບັດຕ່າງໆ ທີ່ໄດ້ຮັບທຶນຈາກກອງທຶນປົກປັກຮັກສາສິ່ງແວດລ້ອມ ເພື່ອເຮັດວຽກຮ່ວມກັບຊຸມຊົນໃນການອະນຸລັກປ່າໄມ້ ແລະ ຊີວະນາໆພັນ.

ຄູ່ມືສະບັບປັບປຸງ ປີ 2023 ສ້າງຂຶ້ນ ເພື່ອເປັນບ່ອນອີງໃຫ້ພະນັກງານ ຫກປສ ແລະ ພາກສ່ວນທີ່ໄດ້ຮັບທຶນຈາກ ກປສ ໂດຍສອດຄ່ອງກັບ ດຳລັດວ່າດ້ວຍກອງທຶນປົກປັກຮັກສາສິ່ງແວດລ້ອມ ສະບັບປີ 2017, ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງກອງທຶນປົກປັກຮັກສາສິ່ງແວດລ້ອມ ສະບັບປີ 2021 ແລະ ເງື່ອນໄຂຂອງອົງການສະໜອງທຶນສາກົນຕ່າງໆ ພ້ອມທັງຮັບປະກັນໃຫ້ບັນລຸຕາມເປົ້າໝາຍທີ່ວາງໄວ້ ໃນການຈັດຕັ້ງປະຕິບັດໂຄງການໃຫ້ມີ ຄຸນນະພາບ, ປະສິດທິພາບ ແລະ ປະສິດທິຜົນ.

ຫວັງຢ່າງຍິ່ງວ່າ ຄູ່ມືສະບັບນີ້ ຈະເປັນເຄື່ອງມືສຳຄັນ ແລະ ມີປະໂຫຍດທີ່ອຳນວຍຄວາມສະດວກໃຫ້ພະນັກງານຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ພາກສ່ວນທີ່ໄດ້ຮັບທຶນ ຫຼື ນຳໃຊ້ກົນໄກການຄຸ້ມຄອງບໍລິຫານຂອງ ກປສ ສາມາດຈັດຕັ້ງປະຕິບັດໂຄງການ ໄດ້ຢ່າງມີປະສິດທິຜົນສູງ.

ນະຄອນຫຼວງວຽງຈັນ, ວັນທີ:

ສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ
ປະທານ

ມ.ບຸນຄຳ ວໍລະຈິດ

ຄຳນຳ

ຄູ່ມືການມີສ່ວນຮ່ວມຊຸມຊົນ (CEF) ຂອງໂຄງການພາຍໃຕ້ກອງທຶນປົກປັກຮັກສາສິ່ງແວດລ້ອມ ເປັນເຄື່ອງມືໜຶ່ງທີ່ເຮັດວຽກຮ່ວມກັບຊຸມຊົນ, ການເຮັດແຜນຜັດທະນາບ້ານ (CAP) ແລະ ການເຮັດສັນຍາອະນຸລັກຂອງຊຸມຊົນ (CCA) ເພື່ອຊ່ວຍໃຫ້ປະຊາຊົນທີ່ອາໃສຢູ່ໃນ ແລະ ອ້ອມຂ້າງເຂດປ່າສະຫງວນໄດ້ມີສ່ວນຮ່ວມໃນວຽກງານອະນຸລັກປ່າໄມ້ ແລະ ຊີວະນາໆພັນ ທີ່ມີສ່ວນຮ່ວມໃນສິດຜົນປະໂຫຍດຈາກການຄຸ້ມຄອງຮ່ວມກັນໃນການຍົກລະດັບຊີວິດການເປັນຢູ່, ສະຫວັດດີການຂອງຊຸມຊົນ ເພື່ອຮັບປະກັນວ່າຊຸມຊົນໃນທ້ອງຖິ່ນຈະໄດ້ຮັບການປະຕິບັດຢ່າງເປັນທຳ.

ຄູ່ມືນີ້ໄດ້ກຳນົດຫຼັກການຕົ້ນຕໍການມີສ່ວນຮ່ວມຂອງຊຸມຊົນເຊັ່ນ: ການຄັດເລືອກບ້ານ ແລະ ການແນະນຳໂຄງການ, ການສ້າງຄວາມຮັບຮູ້ຂອງຊຸມຊົນ ແລະ ການເກັບກຳຂໍ້ມູນຊັບພະຍາກອນທຳມະຊາດ, ການວາງແຜນ, ສ້າງຂໍ້ຕົກລົງແບບມີສ່ວນຮ່ວມ, ການຈັດຕັ້ງປະຕິບັດ ແລະ ການຕິດຕາມປະເມີນຜົນ. ຊຶ່ງປຶ້ມຄູ່ມືສະບັບນີ້ເປັນແນວທາງສຳລັບການນຳໃຊ້ການມີສ່ວນຮ່ວມຂອງຊຸມຊົນ (CEF) ຂອງໂຄງການ ພາຍໃຕ້ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ເປັນເຄື່ອງມືໃນການລົງເຮັດວຽກພາກສະໜາມສຳລັບອົງການຈັດຕັ້ງປະຕິບັດຕ່າງໆ ທີ່ໄດ້ຮັບທຶນຈາກກອງທຶນປົກປັກຮັກສາສິ່ງແວດລ້ອມ ເພື່ອເຮັດວຽກຮ່ວມກັບຊຸມຊົນໃນການອະນຸລັກປ່າໄມ້ ແລະ ຊີວະນາໆພັນ.

ຄູ່ມືສະບັບປັບປຸງ ປີ 2023 ສ້າງຂຶ້ນ ເພື່ອເປັນບ່ອນອີງໃຫ້ພະນັກງານ ຫກປສ ແລະ ພາກສ່ວນທີ່ໄດ້ຮັບທຶນຈາກ ກປສ ໂດຍສອດຄ່ອງກັບ ດຳລັດວ່າດ້ວຍກອງທຶນປົກປັກຮັກສາສິ່ງແວດລ້ອມ ສະບັບປີ 2017, ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງກອງທຶນປົກປັກຮັກສາສິ່ງແວດລ້ອມ ສະບັບປີ 2021 ແລະ ເງື່ອນໄຂຂອງອົງການສະໜອງທຶນສາກົນຕ່າງໆ ພ້ອມທັງຮັບປະກັນໃຫ້ບັນລຸຕາມເປົ້າໝາຍທີ່ວາງໄວ້ ໃນການຈັດຕັ້ງປະຕິບັດໂຄງການໃຫ້ມີ ຄຸນນະພາບ, ປະສິດທິພາບ ແລະ ປະສິດທິຜົນ.

ຫວັງຢ່າງຍິ່ງວ່າ ຄູ່ມືສະບັບນີ້ ຈະເປັນເຄື່ອງມືສຳຄັນ ແລະ ມີປະໂຫຍດທີ່ອຳນວຍຄວາມສະດວກໃຫ້ພະນັກງານຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ພາກສ່ວນທີ່ໄດ້ຮັບທຶນ ຫຼື ນຳໃຊ້ກົນໄກການຄຸ້ມຄອງບໍລິຫານຂອງ ກປສ ສາມາດຈັດຕັ້ງປະຕິບັດໂຄງການ ໄດ້ຢ່າງມີປະສິດທິຜົນສູງ.

ນະຄອນຫຼວງວຽງຈັນ, ວັນທີ:

ສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ
ປະທານ

ສາລະບານ

ພາກສະເໜີ.....1

1. ຈຸດປະສົງລວມ.....1

2. ຂອບເຂດການນຳໃຊ້.....1

3. ຈຸດປະສົງ ແລະ ຫຼັກການຕົ້ນຕໍ ຂອງການມີສ່ວນຮ່ວມຂອງຊຸມຊົນ (CEF).....2

4. ການກະກຽມດຳເນີນການມີສ່ວນຮ່ວມ.....3

5. ອົງການຈັດຕັ້ງທີ່ໄດ້ຮັບໂຄງການຈາກກອງທຶນປົກປັກຮັກສາສິ່ງແວດລ້ອມ.....4

6. ພາບລວມຂັ້ນຕອນ ແລະ ບາດກ້າວຂອງການມີສ່ວນຮ່ວມຂອງຊຸມຊົນ.....7

ບາດກ້າວ 1.1: ການຄັດເລືອກບ້ານ.....11

ການຄັດເລືອກ ແລະ ການແນະນຳຂອງໂຄງການ.....12

1.1.1: ເງື່ອນໄຂໃນການໃນການຄັດເລືອກບ້ານ.....13

ບາດກ້າວ 1.2: ກອງປະຊຸມແນະນຳໂຄງການເບື້ອງຕົ້ນ.....17

1.2.1: ກ່ອນ: ກະກຽມກອງປະຊຸມແນະນຳໂຄງການເບື້ອງຕົ້ນ.....17

1.2.2: ລະຫວ່າງ: ດຳເນີນກອງປະຊຸມແນະນຳໂຄງການເບື້ອງຕົ້ນ.....17

1.2.3: ຫຼັງ: ສັງລວມ ແລະ ລາຍງານ.....18

ບາດກ້າວ 1.3: ການເກັບກຳຂໍ້ມູນພື້ນຖານທາງດ້ານເສດຖະກິດ-ສັງຄົມ.....19

1.3.1: ກ່ອນ: ກະກຽມ ແລະ ນັດໝາຍ.....19

1.3.2: ລະຫວ່າງ: ເກັບກຳຂໍ້ມູນພື້ນຖານທາງດ້ານເສດຖະກິດ-ສັງຄົມ ຈາກອົງການປົກຄອງບ້ານ.....19

1.3.3: ລະຫວ່າງ: ດຳເນີນການປະເມີນໄພຂົ່ມຂູ່ຕໍ່ຊີວະນາໆພັນແບບມີສ່ວນຮ່ວມ.....19

1.3.4: ລະຫວ່າງ: ທົບທວນຂໍ້ມູນ ກັບຕົວແທນຂອງແຕ່ລະບ້ານທີ່ເຂົ້າຮ່ວມ ແລະ ໃຫ້ຕົວແທນບ້ານຮັບຮອງ ຫຼື ກວດກາຄວາມຖືກຕ້ອງຂອງຂໍ້ມູນ ໃນແບບຟອມ.....20

1.3.5: ລະຫວ່າງ: ຢັ້ງຢືນຄວາມເຂົ້າໃຈ ແລະ ຄວາມສະໝັກໃຈເບື້ອງຕົ້ນ ໃນການເຂົ້າຮ່ວມ.....20

1.3.6: ລະຫວ່າງ: ສະຫຼຸບກອງປະຊຸມ.....21

1.3.7: ຫຼັງ: ສັງລວມ ແລະ ວິເຄາະຂໍ້ມູນ.....21

ຂັ້ນຕອນ 2: ການສ້າງຄວາມຮັບຮູ້ຂອງຊຸມຊົນ ແລະ ການເກັບກຳຂໍ້ມູນຊັບພະຍາກອນທຳມະຊາດ.....22

ບາດກ້າວ 2.1: ການປຶກສາຫາລືກັບຊຸມຊົນ.....22

2.1.1: ກ່ອນ: ປະສານງານ ແລະ ວາງແຜນການປະຊຸມ.....22

2.1.2: ລະຫວ່າງ: ເປີດກອງປະຊຸມ.....24

2.1.3: ລະຫວ່າງ: ຢັ້ງຢືນຄວາມສະໝັກໃຈໃນການເຂົ້າຮ່ວມໂຄງການຈາກປະຊາຊົນພາຍໃນບ້ານ.....25
2.1.4: ລະຫວ່າງ: ກຳນົດແຜນການຈັດຕັ້ງປະຕິບັດຂັ້ນຕອນ ຂອງໂຄງການພາຍໃນບ້ານ.....25
2.1.5: ຫຼັງ: ສະຫຼຸບ ແລະ ລາຍງານກິດຈະກຳ 25
ບາດກ້າວ 2.2: ການເກັບກຳຂໍ້ມູນທາງດ້ານຊັບພະຍາກອນທຳມະຊາດ ແລະ ເສດຖະກິດ-ສັງຄົມ 26
2.2.1: ກ່ອນ: ການກະກຽມການເກັບຂໍ້ມູນ.....26
2.2.2: ລະຫວ່າງ: ຢັ້ງຢືນການເຫັນດີກ່ອນເລີ່ມການເກັບກຳຂໍ້ມູນ PRA 27
2.2.4: ສະຫຼຸບ, ສັງລວມ ແລະ ວິເຄາະຂໍ້ມູນ 37
ຂັ້ນຕອນ 3: ການວາງແຜນ ແລະ ຂໍ້ຕົກລົງແບບມີສ່ວນຮ່ວມ 38
ບາດກ້າວ 3.1: ການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ (PLUB) 38
3.1.1: ກ່ອນ: ການກະກຽມ 39
3.1.2: ລະຫວ່າງ: ກອງປະຊຸມການວາງແຜນນຳໃຊ້ທີ່ດິນ ແລະ ກອງປະຊຸມຝຶກອົບຮົມ.....39
3.1.3: ລະຫວ່າງ: ການສຳຫຼວດການນຳໃຊ້ທີ່ດິນ.....41
3.1.4: ລະຫວ່າງ: ການທົບທວນຄືນ ແລະ ແລກປ່ຽນ 41
3.1.5: ຫຼັງ: ສະຫຼຸບຜົນໄດ້ຮັບ ແລະ ບົດຮຽນທີ່ຖອດຖອນໄດ້ 41
ບາດກ້າວ 3.2: ແຜນພັດທະນາບ້ານ (CAP).....42
3.2.1: ກ່ອນ: ກະກຽມເອກະສານ.....43
3.2.2: ລະຫວ່າງ: ສຳຫຼວດຄວາມເຕັມໃຈຂອງຄົນໃນປະຊາຊົນພາຍໃນບ້ານ 43
3.2.3: ລະຫວ່າງ: ວິເຄາະຂໍ້ມູນ ແລະ ກຳນົດ ກິດຈະກຳ 43
3.2.4: ລະຫວ່າງ: ການຂຽນແຜນພັດທະນາບ້ານ (CAP) 44
3.2.5: ລະຫວ່າງ: ຢັ້ງຢືນຄວາມເຕັມໃຈຂອງຊຸມຊົນໃນການເຂົ້າຮ່ວມ ແຜນພັດທະນາບ້ານ (CAP) 45
3.2.6: ຫຼັງ: ສະຫຼຸບ ແລະ ລາຍງານ.....45
ບາດກ້າວ 3.3: ສັນຍາອະນຸລັກຂອງຊຸມຊົນ (CCA) 45
3.3.1: ກ່ອນ: ກະກຽມເອກະສານ.....46
3.3.2: ລະຫວ່າງ ການສ້າງສັນຍາອະນຸລັກຂອງຊຸມຊົນ (CCA).....47
3.3.3: ລະຫວ່າງ: ຢັ້ງຢືນການຕົກລົງຂອງຊຸມຊົນຕໍ່ກັບ CCA 48
3.3.4: ຫຼັງ: ທົບທວນ ແລະ ລາຍງານ.....48
ຂັ້ນຕອນ 4: ການຈັດຕັ້ງປະຕິບັດແຜນພັດທະນາບ້ານ.....49
ບາດກ້າວ 4.1: ການຈັດຕັ້ງປະຕິບັດ.....49

ບາດກ້າວ 4.2: ກົນໄກການແກ້ໄຂຄຳຮ້ອງທຸກ 49
4.2.1: ຫຼັກການພື້ນຖານ 50
4.2.2: ການສະເໜີຄຳຮ້ອງທຸກ 52
ບາດກ້າວ 4.3: ການຕິດຕາມ ແລະ ປະເມີນຜົນ 53
4.3.1: ການຕິດຕາມ ແລະ ປະເມີນຜົນແບບມີສ່ວນຮ່ວມ 53
4.3.2: ການຕິດຕາມ ແລະ ປະເມີນຜົນໂຄງການ ແບບມາດຕະຖານ 54
ເອກະສານຊ້ອນທ້າຍ 55
A1. ກິດຈະກຳທີ່ສະໜັບສະໜູນໄດ້ 56
A2. ກິດຈະກຳທີ່ບໍ່ສະໜັບສະໜູນ 57
A3. ຕົວຢ່າງຜົນປະໂຫຍດເອົາເຂົ້າໃນ ສົນຍາອະນຸລັກຂອງຊຸມຊົນ 59
A4. ລາຍການກວດສອບ ການຄັດເລືອກບ້ານ 61
A5. ແບບຟອມຂໍ້ມູນພື້ນຖານທາງດ້ານເສດຖະກິດ-ສັງຄົມ ຂອງບ້ານ 62
A6. ການປະເມີນຄວາມສ່ຽງການຄຸກຄາມຊັບພະຍາກອນ 69
A7. ບົດບັນທຶກ ການເກັບກຳຂໍ້ມູນຊັບພະຍາກອນ 70
A8. ລາຍການ ຊະນິດພັນພືດ ແລະ ສັດປ່າ 71
A9. ການປະເມີນຊັບພະຍາກອນທຳມະຊາດ 76
A10. ການຈັດລະດັບຖານະທາງດ້ານເສດຖະກິດ 78
A11. ການວິເຄາະເສດຖະກິດບ້ານ 79
A12. ບັນຫາທີ່ເກີດໃນບ້ານ 80
A13. ການຢັ້ງຢືນການເຫັນດີຂອງຊຸມຊົນ 81
A14. ໃບຢັ້ງຢືນການຕົກລົງເຫັນດີ ຂອງຊຸມຊົນທີ່ຈະເຂົ້າຮ່ວມໃນກິດຈະກຳຂອງໂຄງການ 82
A15. ສະຫຼຸບນະໂຍບາຍ ກ່ຽວກັບຊົນເຜົ່າຂອງ (ກປສ) 84
A16. ສະຫຼຸບນະໂຍບາຍ ຂອງ (ກປສ) ກ່ຽວກັບບົດບາດຍິງ-ຊາຍ ແລະ ການມີສ່ວນຮ່ວມໃນສັງຄົມ (GSI) 90
A17. ສັງລວມນະໂຍບາຍຂອງ (ກປສ) ກ່ຽວກັບ ການປົກປ້ອງສິ່ງແວດລ້ອມ ແລະ ສັງຄົມ (ESS) 96

ຮູບພາບ

ຮູບພາບ 1 ການກວດສອບລາຍການ ອຸປະກອນທີ່ຈຳເປັນ 1
ຮູບພາບ 2 ກຽມຄວາມພ້ອມ ແລະ ເອກະສານທີ່ສຳຄັນ 4
ຮູບພາບ 3 ໂຄງຮ່າງຂອງອົງການຈັດຕັ້ງທີ່ສຳຄັນ ຂອງໂຄງການພາຍໃຕ້ ທກປສ 7
ຮູບພາບ 5 ບ້ານທີ່ຖືກຍົກຍ້າຍ ຫຼື ບ້ານເຕົ້າໂຮມບໍ່ສາມາດເຂົ້າຮ່ວມໃນໂຄງການ..... 13
ຮູບພາບ 4 ບ້ານທີ່ອາໃສການນຳໃຊ້ຊັບພະຍາກອນທຳມະຊາດເປັນບູລິມະສິດສູງ 13
ຮູບພາບ 7 ບ້ານທີ່ມີຄວາມສ່ຽງຕໍ່ຊັບພະຍາກອນທຳມະຊາດເປັນບູລິມະສິດສູງ..... 15
ຮູບພາບ 6 ບ້ານທີ່ມີຄວາມສ່ຽງໃນແຕ່ລະດັບ ທີ່ຕັ້ງຢູ່ພາຍໃນ ແລະ ອ້ອມຮອບ ເຂດສະຫງວນ..... 14
ຮູບພາບ 8 ການຢັ້ງຢືນການຕົກລົງເຫັນດີ ຂອງຊຸມຊົນທີ່ຈະເຂົ້າຮ່ວມໃນກິດຈະກຳຂອງໂຄງການ..... 16
ຮູບພາບ 9 ກອງປະຊຸມແນະນຳໂຄງການເບື້ອງຕົ້ນ..... 18
ຮູບພາບ 10 ການເກັບກຳຂໍ້ມູນທາງດ້ານຊັບພະຍາກອນທຳມະຊາດ ແລະ ເສດຖະກິດ-ສັງຄົມ..... 22
ຮູບພາບ 11 ການແຕ້ມແຜນວາດທາງສັງຄົມແບບມີສ່ວນຮ່ວມ..... 29
ຮູບພາບ 12 ແຜນວາດການນຳໃຊ້ຊັບພະຍາກອ່ນທຳມະຊາດຂອງຊຸມຊົນ 32
ຮູບພາບ 13 ແຜນວາດການວິເຄາະເສດຖະກິດຂອງ..... 34
ຮູບພາບ 14 ປະຕິທິນລະດູການ ແລະ ວັດທະນະທຳ 36
ຮູບພາບ 15 ປະຊາຊົນພາຍໃນບ້ານສ້າງແຜນດຳເນີນງານຂອງຊຸມຊົນຈາກຂໍ້ມູນທີ່ສັງລວມໄດ້ຈາກການສຳຫຼວດ . 39
ຮູບພາບ 16 ການຂຽນແຜນພັດທະນາບ້ານ..... 42
ຮູບພາບ 17 ສັນຍາອະນຸລັກຂອງຊຸມຊົນ ປະກອບມີວຽກງານການອະນຸລັກ ແລະ ການພັດທະນາ..... 46
ຮູບພາບ 18 ກົນໄກການຮ້ອງທຸກ..... 51
ຮູບພາບ 19 ການຕິດຕາມ ແລະ ປະເມີນຜົນແບບມີສ່ວນຮ່ວມ..... 54

ຄຳຫຍໍ້ພາສາອັງກິດ

ຄຳຫຍໍ້	ພາສາອັງກິດ	ພາສາລາວ
LENS2	Second Lao Environmental and Social Project	ໂຄງການສິ່ງແວດລ້ອມ ແລະສັງຄົມ (ຄສລ2)
EPF	Environment Protection Fund	ກອງທຶນປົກປັກຮັກສາສິ່ງແວດລ້ອມ
EPFO	Environment Protection Fund Office	ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ
CEF	Community Engagement Framework	ການມີສ່ວນຮ່ວມຂອງຊຸມຊົນ
CCA	Community Conservation Agreement	ສັນຍາອະນຸລັກຂອງຊຸມຊົນ (ອີງຕາມການຈັດຕັ້ງປະຕິບັດຕົວຈິງຂອງ ກົມປ່າໄມ້ ກປ, ຂໍ້ຕົກລົງ ສັນຍາອະນຸລັກຊຸມຊົນ)
CAP	Community Action Plan	ແຜນພັດທະນາຊຸມຊົນ
PO	Project Owner	ເຈົ້າຂອງໂຄງການ
PLUP	Participatory Land Use Plan	ການວາງແຜນການນຳໃຊ້ທີ່ດິນແບບມີສ່ວນຮ່ວມ
PAMP	Protected Area Management Plan	ການວາງແຜນການຄຸ້ມຄອງປ່າສະຫງວນ
PAA	Protected Area Authority	ອົງການຄຸ້ມຄອງປ່າສະຫງວນ
PRA	Participative Rural Apraisal	ການປະເມີນສະພາບຊົນນະບົດແບບມີສ່ວນຮ່ວມ
PRAM	Participatory Rural Appraisal Manual	ຄູ່ມືໃນການປະເມີນສະພາບຊົນນະບົດແບບມີສ່ວນຮ່ວມ
LFNC	Lao Front for National Construction	ສູນກາງແນວລາວສ້າງຊາດ
LWU	Lao Women's Union	ສູນກາງສະຫະພັນແມ່ຍິງລາວ

1. ຈຸດປະສົງລວມ

ປຶ້ມຄູ່ມືນີ້ເປັນແນວທາງສຳລັບການນຳໃຊ້ການມີສ່ວນຮ່ວມຂອງຊຸມຊົນ (CEF) ຂອງໂຄງການ ພາຍໃຕ້ກອງທຶນປົກປັກຮັກສາສິ່ງແວດລ້ອມ (EPF) ເພື່ອເຮັດວຽກຮ່ວມກັບຊຸມຊົນ, ການສ້າງຕັ້ງ ແລະ ຈັດຕັ້ງປະຕິບັດ ສັນຍາອະນຸລັກຂອງຊຸມຊົນ (CCA) ແລະ ແຜນພັດທະນາບ້ານ (CAP) ເພື່ອບັນລຸຈຸດປະສົງຂອງການອະນຸລັກ ແລະ ການພັດທະນາ.

ວຽກງານດັ່ງກ່າວຈະຊ່ວຍໃຫ້ປະຊາຊົນທີ່ອາໃສຢູ່ໃນ ແລະ ອ້ອມຂ້າງເຂດປ່າສະຫງວນໄດ້ມີສ່ວນຮ່ວມໃນວຽກງານອະນຸລັກປ່າໄມ້ ແລະ ສັດປ່າ, ມີສ່ວນຮ່ວມໃນສິດຜົນປະໂຫຍດຈາກການຄຸ້ມຄອງຮ່ວມກັນ ເພື່ອຊ່ວຍຍົກລະດັບຊີວິດການເປັນຢູ່, ສະຫວັດດີການຂອງຊຸມຊົນ ແລະ ຮັບປະກັນວ່າຊຸມຊົນໃນທ້ອງຖິ່ນຈະໄດ້ຮັບການປະຕິບັດຢ່າງເປັນທຳ.

2. ຂອບເຂດການນຳໃຊ້

ຄູ່ມືນີ້ເປັນຄູ່ມືສຳລັບການລົງເຮັດວຽກພາກສະໜາມຂອງບັນດາອົງການຈັດຕັ້ງທີ່ໄດ້ຮັບທຶນຈາກກອງທຶນປົກປັກຮັກສາສິ່ງແວດລ້ອມ ເພື່ອເຮັດວຽກຮ່ວມກັບຊຸມຊົນໃນການອະນຸລັກປ່າໄມ້ ອົງການເຫຼົ່ານີ້ເອີ້ນວ່າ ອົງການຈັດຕັ້ງປະຕິບັດໂຄງການ (PO).

ໂດຍອີງໃສ່ເນື້ອໃນຂອງປຶ້ມຫົວນີ້, ບັນດາອົງການຈັດຕັ້ງປະຕິບັດໂຄງການ (PO) ສາມາດເຂົ້າໃຈໄດ້ດີຂຶ້ນ ກ່ຽວກັບການຈັດຕັ້ງປະຕິບັດໂຄງການ ທີ່ໄດ້ຮັບທຶນຈາກ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ວິທີການໃນການຈັດຕັ້ງປະຕິບັດ. ບັນດາອົງການຈັດຕັ້ງປະຕິບັດໂຄງການຈະເຂົ້າໃຈກ່ຽວກັບຂັ້ນຕອນ ແລະ ບາດກ້າວ ຂອງຂະບວນການໃນການວາງແຜນ ແລະ ຈັດຕັ້ງປະຕິບັດໂຄງການ
.



ເອກະສານ ແລະ ເຄື່ອງມືທີ່ຈຳເປັນ

ໃນການລິເລີ່ມເຮັດວຽກກ່ຽວກັບການມີສ່ວນຮ່ວມຂອງຊຸມຊົນ ມີເອກະສານ ແລະ ເຄື່ອງມືທີ່ຈຳເປັນດັ່ງນີ້:

- ✓ ຕາຕະລາງ ແລະ ແບບຟອມໃນເອກະສານຊ້ອນທ້າຍຂອງປຶ້ມຄູ່ມືຫົວນີ້
- ✓ ຄູ່ມືໃນການປະເມີນສະພາບຊຸມນຸຍຶດແບບມີສ່ວນຮ່ວມ (PRAM)
- ✓ ຄູ່ມືການວາງແຜນການນຳໃຊ້ທີ່ດິນແບບມີສ່ວນຮ່ວມ
- ✓ ກົດໝາຍ, ນະໂຍບາຍ, ຍຸດທະສາດທີ່ກ່ຽວຂ້ອງທັງໝົດ ແລະ ແຜນການໃນການຄຸ້ມຄອງພື້ນທີ່ປ່າສະຫງວນ, ປ່າໄມ້, ທີ່ດິນ, ການພັດທະນາຊຸມຊົນ ແລະ ເອກະສານ ອື່ນໆທີ່ກ່ຽວຂອ້ງ.
- ✓ ອຸປະກອນການໃຫ້ຄວາມຮູ້ຕ່າງໆ ກ່ຽວກັບການອະນຸລັກ ແລະ ໂຄງການຕ່າງໆທີ່ໄດ້ ຮັບທຶນຊ່ວຍເຫຼືອຈາກກອງທຶນປົກປັກຮັກສາສິ່ງແວດລ້ອມ.

ຮູບພາບ 1 ການກວດສອບລາຍການ ອຸປະກອນທີ່ຈຳເປັນ

3. ຈຸດປະສົງ ແລະ ຫຼັກການຕົ້ນຕໍ ຂອງການມີສ່ວນຮ່ວມຂອງຊຸມຊົນ (CEF)

<u>ຈຸດປະສົງຕົ້ນຕໍ:</u>

- *ເພື່ອໃຫ້ທີມງານຜູ້ຈັດຕັ້ງປະຕິບັດໂຄງການ ຂັ້ນເມືອງ, ແຂວງ ລວມທັງເຜຍ່ງ ແລະ ຊາຍສາມາດເຂົ້າໃຈກ່ຽວກັບວຽກງານ ນະໂຍບາຍການປົກປ້ອງທາງດ້ານສິ່ງແວດລ້ອມ ແລະ ສັງຄົມ, ສາມາດຈັດຕັ້ງປະຕິບັດຂະບວນການ ແລະ ຂັ້ນຕອນຂອງການ ມີສ່ວນຮ່ວມຂອງຊຸມຊົນ (CEF).*

- *ເພື່ອຊ່ວຍສ້າງຄວາມເຂັ້ມແຂງຂອງລະບົບການຄຸ້ມຄອງການອະນຸລັກສິ່ງແວດລ້ອມ, ໂດຍສະເພາະການອະນຸລັກໃນເຂດ ສະຫງວນ, ການບັງຄັບໃຊ້ກົດໝາຍກ່ຽວກັບການອະນຸລັກ, ການຄຸ້ມຄອງ, ການປະເມີນສິ່ງແວດລ້ອມ ແລະ ສັງຄົມ.*

<u>ຫຼັກການຕົ້ນຕໍ:</u> ການມີສ່ວນຮ່ວມຂອງຊຸມຊົນ (CEF) ມີຫຼັກການຕົ້ນຕໍ ດັ່ງລຸ່ມນີ້:

- ຮ່ວມມືກັບຊຸມຊົນຢ່າງຊື່ສັດ ແລະ ສ້າງສັນ.
  ອະທິບາຍຈຸດປະສົງຂອງໂຄງການຢ່າງຈະແຈ້ງ, ເຫດຜົນຂອງການອະນຸລັກປ່າໄມ້ ແລະ ສັດປ່າ, ຜົນໄດ້ຮັບ ແລະ ຜົນກະທົບ ທີ່ອາດເກີດຂຶ້ນຈາກໂຄງການ.
- ຊຸມຊົນມີສິດໃນການປະຕິເສດ ຫຼື ຕອບຮັບໂຄງການ.
  ພະຍາຍາມຂົນຂວາຍການຮ່ວມມືຈາກຊຸມຊົນຜ່ານການປຶກສາຫາລື ແລະ ໂຄງການຕ່າງໆ, ແຜນການ ແລະ ຕົກລົງເຫັນດີ ໃຫ້ ມີສ່ວນຮ່ວມໃນການອອກແບບ ຫຼື ກຳນົດກິດຈະກຳ ເພື່ອສ້າງລາຍຮັບ ແລະ ປັບປຸງຊີວິດການເປັນຢູ່ຂອງຊຸມຊົນ ໄດ້ ຢ່າງຍືນຍົງ. (ອ້າງອີງໃສ່ ເອກະສານຊ້ອນທ້າຍ A13ໃນການຢັ້ງຢືນການເຫັນດີຂອງຊຸມຊົນ ໃນການເຂົ້າຮ່ວມໂຄງການ).
- ສະມາຊິກໃນຊຸມຊົນທັງໝົດຈະມີໂອກາດໃນການມີສ່ວນຮ່ວມ ແລະ ໄດ້ຮັບຜົນປະໂຫຍດຈາກໂຄງການຕ່າງໆ ພ້ອມທັງມີ ບົດບາດໃນການປະຕິບັດຕາມແຜນການຄຸ້ມຄອງເຂດປ່າສະຫງວນຢ່າງຍືນຍົງ.

ການຮ່ວມມືຂອງຊຸມຊົນຈະໄດ້ຖືກກຳນົດ ຜ່ານຂະບວນການ ໃນການວາງແຜນການຄຸ້ມຄອງປ່າສະຫງວນ (PAMP), ການວາງ ແຜນການນຳໃຊ້ທີ່ດິນແບບມີສ່ວນຮ່ວມ (PLUP), ແຜນພັດທະນາບ້ານ (CAP), ແລະ ສັນຍາອະນຸລັກຂອງຊຸມຊົນ (CCA).

<u>ແຜນພັດທະນາບ້ານແມ່ນຫຍັງ (CAP) ?</u>

ແຜນພັດທະນາບ້ານແມ່ນຍຸດທະສາດໃນການແກ້ໄຂບັນຫາທີ່ເກີດຂຶ້ນໃນຊຸມຊົນ ແລະ ປະເດັນກ່ຽວກັບການອະນຸລັກທີ່ໄດ້ຖືກ ລະບຸຂຶ້ນໃນເຂດປ່າສະຫງວນ ເຊິ່ງຈະມີໂຄງການ ທີ່ຊ່ວຍໃນການເພີ່ມລາຍໄດ້ ແລະ ພັດທະນາຊີວິດການເປັນຢູ່ຂອງຄອບຄົວ ແລະ ຊາວກະສິກອນ ພ້ອມທັງປົກປັກຮັກສາປ່າໄມ້ ແລະ ສັດປ່າໃນເຂດປ່າສະຫງວນ ເຊັ່ນ: ປ່າສະຫງວນ ແລະ ປ່າປ້ອງກັນ. ການຄັດ ເລືອກ ກິດຈະກຳໃນການພັດທະນາຊີວິດການເປັນຢູ່ ແມ່ນຜ່ານການປຶກສາຫາລືກັບຊຸມຊົນ ແລະ ຕ້ອງຢູ່ບົນພື້ນຖານຄວາມຕ້ອງ ການຂອງຊຸມຊົນ. ອ່ານເພີ່ມເຕີມກ່ຽວກັບແຜນພັດທະນາບ້ານ ຢູ່ໜ້າ 42.

ສັນຍາອະນຸລັກຂອງຊຸມຊົນແມ່ນຫຍັງ (CCA) ?

ສັນຍາອະນຸລັກຂອງຊຸມຊົນ ແມ່ນການເຮັດສັນຍາ ກັບຊຸມຊົນ ໃນການສ້າງຕັ້ງລະບຽບການ ເພື່ອໃຫ້ຊຸມຊົນປະຕິບັດຕາມ ໂດຍເປັນ ສ່ວນໜຶ່ງຂອງ ແຜນພັດທະນາບ້ານ. ຊຸມຊົນຈະເຫັນດີທີ່ຈະເຂົ້າຮ່ວມໃນວຽກງານການອະນຸລັກ ນັ້ນກໍ່ໝາຍຄວາມວ່າ ຊຸມຊົນຈະເຮັດ ສິ່ງທີ່ໄດ້ຮັບອະນຸຍາດ ແລະ ບໍ່ເຮັດໃນສິ່ງທີ່ຖືກຫ້າມ ເຊັ່ນ: ຊຸມຊົນອາດຈະຕົກລົງເຮັດການລາດຕະເວນປ່າສະຫງວນ ແລະ ບໍ່ລ່າສັດທີ່ ຫວງຫ້າມ. ນອກນີ້ ຍັງມີການຕົກລົງກ່ຽວກັບຜົນປະໂຫຍດທີ່ຊຸມຊົນຈະໄດ້ຮັບ ເພື່ອເປັນການແລກປ່ຽນໃນການເຂົ້າຮ່ວມໃນການ ອະນຸລັກ ເຊັ່ນ: ການພັດທະນາຊີວິດການເປັນຢູ່ ຫຼື ການຊ່ວຍເຫຼືອທາງດ້ານກະສິກຳ. ສັນຍານີ້ ສ້າງຂຶ້ນຈາກການຕົກລົງເຫັນດີຂອງ ສະມາຊິກຊຸມຊົນ ໝາຍຄວາມວ່າ ພວກເຂົາສາມາດປະຕິເສດທີ່ຈະເຂົ້າຮ່ວມ ຖ້າຫາກພວກເຂົາບໍ່ພໍໃຈ ຫຼື ບໍ່ເຫັນດີຕໍ່ກັບສັນຍາ ຢູ່ໜ້າ 45.

4. ການກະກຽມດຳເນີນການມີສ່ວນຮ່ວມ

ກ່ອນການລິເລີ່ມໂຄງການ, ຕ້ອງໄດ້ປະຕິບັດຂັ້ນຕອນລຸ່ມນີ້ຢ່າງຄົບຖ້ວນ

☐ **ກະກຽມແຜນດຳເນີນງານຂອງຊຸມຊົນ**

ກະກຽມແຜນການລົງສະໜັບສະໜຸນໂຄງການ, ກະກຽມທີມງານ, ສ້າງແຜນລົງທ້ອງຖິ່ນ, ປະສານສົມທົບກັບແຂວງ, ເມືອງ ແລະ ຂະແໜງການທີ່ກ່ຽວຂ້ອງຕ່າງໆ. ເພື່ອກຳນົດກຸ່ມເປົ້າໝາຍ ແລະ ຜູ້ທີ່ຈະເຂົ້າຮ່ວມ ການລົງເກັບກຳຂໍ້ມູນ ແລະ ແບ່ງຄວາມຮັບຜິດຊອບ.

☐ **ຮວບຮວມອຸປະກອນທີ່ຈຳເປັນ**

ຮວບຮວມເອົາເຄື່ອງມືທັງໝົດ ທີ່ທີມງານຕ້ອງການ, ລວມທັງອຸປະກອນການໃຫ້ຄວາມຮູ້ຕ່າງໆ, ປຶ້ມຄູ່ມື ແລະ ແບບສອບຖາມ

☐ **ເກັບກຳຂໍ້ມູນທີ່ກ່ຽວຂ້ອງກັບພື້ນທີ່ເປົ້າໝາຍໃນການອະນຸລັກ**

ການອະນຸລັກເຂດປ່າສະຫງວນ ແລະ ປ່າໄມ້ ຈະມີແຜນການ, ສຶກສາຂໍ້ມູນເບື້ອງຕົ້ນ, ແຜນທີ່, ປະຫວັດຄວາມເປັນມາ ແລະ ບົດລາຍງານ ຕ່າງໆ.

☐ **ການຝຶກອົບຮົມໃຫ້ພະນັກງານ**

ສະມາຊິກທັງໝົດຂອງໂຄງການຈັດຕັ້ງປະຕິບັດ (PO) ຄວນໄດ້ຮັບການຝຶກອົບຮົມ ກ່ຽວກັບບົດບາດຂອງເຂົາເຈົ້າ ແລະ ທັກສະທີ່ຈຳເປັນໃນການດຳເນີນໂຄງການ.



ກະກຽມທີມງານ



ກະກຽມອຸປະກອນ



ຝຶກອົບຮົມໃຫ້ພະນັກງານ



ຮູບພາບ 2 ກຽມຄວາມພ້ອມ ແລະ ເອກະສານທີ່ສຳຄັນ

5. ອົງການຈັດຕັ້ງທີ່ໄດ້ຮັບໂຄງການຈາກກອງທຶນປົກປັກຮັກສາສິ່ງແວດລ້ອມ

5.1. ເຈົ້າຂອງໂຄງການ (PO)

ເຈົ້າຂອງໂຄງການ (PO) ຈະເປັນໜ່ວຍງານທີ່ຮັບຜິດຊອບວຽກງານຂອງໂຄງການ ທີ່ໄດ້ຮັບທຶນຈາກກອງທຶນປົກປັກຮັກສາສິ່ງແວດລ້ອມ ຊຶ່ງການຈັດຕັ້ງດັ່ງກ່າວຈະເຮັດໜ້າທີ່ຄັດເລືອກ, ສະເໜີ, ຈັດຕັ້ງປະຕິບັດ ແລະ ຕິດຕາມໂຄງການ.

ພະນັກງານ ແລະ ຊ່ຽວຊານຂອງຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ຈະສະໜັບສະໜູນ ການຈັດຕັ້ງປະຕິບັດໂຄງການ (PO) ໃນກໍລະນີຈຳເປັນ ແລະ ການຈັດຕັ້ງອື່ນໆ ເຊັ່ນ: ພາກປະຊາສັງຄົມ ແລະ ການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ ກໍ່ສາມາດໃຫ້ການສະໜັບສະ ໜູນໄດ້ເຊັ່ນກັນ. ໂດຍທົ່ວໄປແລ້ວເຈົ້າຂອງໂຄງການ (PO) ຈະແມ່ນພະແນກ/ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ພະແນກ/ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນແຂວງ ຫຼື ເມືອງ ຊຶ່ງຈະຮັບຜິດຊອບໃນການອະນຸລັກປ່າໄມ້, ເຂດປ່າສະຫງວນ ຫຼື ປ່າປ້ອງກັນ.

ເຈົ້າຂອງໂຄງການ (PO) ຍັງເຮັດວຽກພາຍໃຕ້ການຊີ້ນຳ ແລະ ລະບຽບການຕ່າງໆຂອງຂະແໜງຄຸ້ມຄອງປ່າສະຫງວນ (PAA) ທີ່ຄຸ້ມຄອງເຂດພື້ນທີ່ປ່າໄມ້ ທີ່ໄດ້ມີການຈັດຕັ້ງປະຕິບັດໂຄງການ. ຂະແໜງຄຸ້ມຄອງປ່າສະຫງວນ (PAA) ຈະປະກອບມີໜ່ວຍງານທີ່ກ່ຽວຂ້ອງທີ່ຈະຕ້ອງໄດ້ປຶກສາຫາລືກັນຢ່າງຕໍ່ເນື່ອງຕະຫຼອດໄລຍະການຈັດຕັ້ງປະຕິບັດໂຄງການ, ໂດຍສະເພາະໜ່ວຍງານການພັດທະນາຊີວິດການເປັນຢູ່, ໜ່ວຍງານບໍລິການຊຸມຊົນ ແລະ ໜ່ວຍງານປຸກຈິດສຳນຶກ ຫຼື ໜ່ວຍງານທີ່ເຮັດວຽກຄ້າຍຄືກັນ ໃນແຕ່ລະທ້ອງຖິ່ນ.

5.2. ທີມງານວິຊາການໃນຂັ້ນກຸ່ມບ້ານ: (ອະທິບາຍ ຜູ້ຮັບຜິດຊອບ ແລະ ແຕ່ງຕັ້ງຄະນະກຳມະການ)

ທີມງານວິຊາການຂັ້ນກຸ່ມບ້ານປະກອບມີບຸກຄະລາກອນໃນຂັ້ນກຸ່ມບ້ານ ທີ່ມີຄວາມຮູ້ກ່ຽວກັບຊຸມຊົນ ໂດຍສະເພາະຮູ້ທາງດ້ານວັດທະນະທຳ, ພາສາ ແລະ ການນຳໃຊ້ຊັບພະຍາກອນທຳມະຊາດ. ທີມວິຊາການດັ່ງກ່າວຈະເປັນຄູ່ຮ່ວມງານຫຼັກຂອງໜ່ວຍງານຮັບຜິດຊອບໂຄງການໃນການຈັດຕັ້ງປະຕິບັດໂຄງການຕ່າງໆ ໃນຂັ້ນທ້ອງຖິ່ນ, ລວມທັງຕິດຕໍ່ປະສານງານກັບຄະນະກຳມະການພັດທະນາບ້ານ ແລະ ຊຸມຊົນໃນແຕ່ລະຂັ້ນຕອນ ແລະ ບາດກ້າວ ຂອງໂຄງການ ແລະ ພົວພັນກັບພາກສ່ວນທີ່ກ່ຽວຂ້ອງ ໂດຍອີງໃສ່ຄວາມເໝາະສົມທາງດ້ານວັດທະນະທຳ ຂອງຊຸມຊົນນັ້ນໆ ແລະ ຈະຮັບປະກັນວ່າໂຄງການ ໄດ້ດຳເນີນໄປດ້ວຍຄວາມສະໝັກໃຈຂອງສະມາຊິກໃນຊຸມຊົນ.

ທີມງານວິຊາການ:

- ໄດ້ຮັບການແຕ່ງຕັ້ງຈາກອົງການປົກຄອງຂັ້ນເມືອງ;
- ລວມເອົາຕົວແທນຈາກແນວລາວສ້າງຊາດ (LFNC) ແລະ ສະຫະພັນແມ່ຍິງລາວ (LWU) ຈາກຂັ້ນບ້ານ ຫຼື ກຸ່ມບ້ານ;
- ຕ້ອງໄດ້ມີການຝຶກອົບຮົມກ່ຽວກັບຈຸດປະສົງ ແລະ ຫຼັກການຕົ້ນຕໍຂອງໂຄງການທີ່ໄດ້ຮັບທຶນຈາກກອງທຶນປົກປັກຮັກສາສິ່ງແວດລ້ອມ;
- ທີມງານວິຊາການ ຄວນຮ່ວມມືກັບຊຸມຊົນໃນຮູບແບບທີ່ເໝາະສົມກັບວັດທະນະທຳຂອງຊຸມຊົນ ຮັບປະກັນວ່າໂຄງການໄດ້ຮັບການດຳເນີນ ໂດຍການຕົກລົງເຫັນດີຂອງຊຸມຊົນ;
- ຮັບປະກັນວ່າຊຸມຊົນສາມາດມີສ່ວນຮ່ວມຢ່າງມີຄວາມໝາຍໃນການວາງແຜນ, ການຕັດສິນໃຈ, ການຈັດຕັ້ງປະຕິບັດ ແລະ ການຕິດຕາມກວດກາໂຄງການ.

5.3. ຄະນະກຳມະການພັດທະນາບ້ານ

ຄະນະກຳມະການພັດທະນາບ້ານ ປະກອບມີອົງການປົກຄອງບ້ານ ແລະ ບັນດາອົງການຈັດຕັ້ງມະຫາຊົນ ຊຶ່ງແມ່ນໜ່ວຍງານຫຼັກໃນການຈັດຕັ້ງປະຕິບັດກິດຈະກຳຂອງໂຄງການໃນຂັ້ນຊຸມຊົນ.

ຄະນະກຳມະການພັດທະນາບ້ານເປັນຕົວແທນຂອງຊຸມຊົນພາຍໃນບ້ານ ແລະ ມີໂຄງຮ່າງການຈັດຕັ້ງ ດັ່ງຕໍ່ໄປນີ້: ປະທານ, ຮອງປະທານ, ທີ່ປຶກສາ, ບັນຊີ, ຄັງເງິນສົດ ແລະ ຜູ້ທີ່ເຮັດໜ້າທີ່ຮັບຜິດຊອບກຸ່ມຕ່າງໆ ທີ່ໄດ້ຮັບການແຕ່ງຕັ້ງຈາກຄະນະກຳມະການ ຊຶ່ງລວມມີ:

- ກຸ່ມປັບປຸງຊີວິດການເປັນຢູ່;
- ກຸ່ມບັງຄັບໃຊ້ກົດໝາຍ;
- ກຸ່ມຕິດຕາມ ແລະ ປະເມີນຜົນ;
- ກຸ່ມກອງທຶນພັດທະນາບ້ານ.

ຜູ້ທີ່ເຮັດໜ້າທີ່ຮັບຜິດຊອບກຸ່ມເຫຼົ່ານີ້ຈະຖືກແຕ່ງຕັ້ງຂຶ້ນຕາມຕຳແໜ່ງ ແລະ ໜ້າທີ່ຮັບຜິດຊອບຂອງຕົນ ທີ່ມີຢູ່ແລ້ວ ໃນອົງການປົກຄອງບ້ານ ຫຼື ອົງການຈັດຕັ້ງມະຫາຊົນ ທີ່ມີພາລະບົດບາດກ່ຽວຂ້ອງ.

5.4. ຊົນເຜົ່າ

- ຊຸມຊົນທີ່ອາໄສຢູ່ໃນເຂດປ່າສະຫງວນ ປະກອບມີປະຊາຊົນບັນດາເຜົ່າ ແຕ່ລະຊົນເຜົ່າ ແມ່ນມີ ວັດທະນະທຳ, ພາສາ, ຄວາມເຊື່ອ ແລະ ຮີດຄອງປະເພນີທີ່ແຕກຕ່າງກັນ;
- ນຳໃຊ້ຊັບພະຍາກອນປ່າໄມ້ ແລະ ເຄື່ອງປ່າຂອງດົງ ທີ່ແຕກຕ່າງກັນ;
- ການສ້າງໂຄງການ, ແຜນພັດທະນາບ້ານ (CAP) ແລະ ສັນຍາອະນຸລັກຂອງຊຸມຊົນ (CCA) ຕ້ອງເຄົາລົບ ກຸ່ມຊົນເຜົ່າຕ່າງໆ ແລະ ວິຖີການດຳລົງຊີວິດຂອງເຂົາເຈົ້າ;
- ປະຊາຊົນບໍ່ຄວນຖືກບັງຄັບໃຫ້ເຊື່ອຖື ແລະ ເຮັດຕາມວັດທະນາທຳອື່ນ ທີ່ເຂົາເຈົ້າເຄີຍເຊື່ອຖື ແລະ ປະຕິບັດຜ່ານມາ;
- ແຕ່ລະຊົນເຜົ່າຕ້ອງມີສ່ວນຮ່ວມໃນແຕ່ລະຂັ້ນຕອນ ແລະ ບາດກ້າວຂອງໂຄງການ. ບ້ານທີ່ມີຫຼາຍຊົນເຜົ່າຕ້ອງໄດ້ເອົາໃຈໃສ່ຕໍ່ກັບການມີສ່ວນຮ່ວມຂອງແຕ່ລະຊົນເຜົ່າເປັນພິເສດ. ບົດສະເໜີໂຄງການຈະລວມເອົາກົນໄກການສ່ວນຮ່ວມຂອງທຸກຊົນເຜົ່າເຂົ້າໃນທຸກຂະບວນການ;

- ທີມງານວິຊາການກຸ່ມບ້ານ ສ່ວນໃຫຍ່ຈະມາຈາກຊົນເຜົ່າດຽວກັນ ແລະ ແມ່ນປະຊາຊົນຂອງບ້ານນັ້ນ. ທີມງານວິຊາການ ສາມາດຊ່ວຍໃຫ້ຄຳແນະນຳໜ່ວຍງານຮັບຜິດຊອບໂຄງການ (PO) ໃນການປະສານກັບຊຸມຊົນ ພ້ອມດຽວກັນນັ້ນກໍ່ຮັບປະກັນວ່າ ປະຊາຊົນຂອງທຸກຊົນເຜົ່າໄດ້ຮັບການປະຕິບັດ ຢ່າງເປັນທຳ ແລະ ມີສ່ວນຮ່ວມຢ່າງເຕັມສ່ວນໃນກິດຈະກຳ ແລະ ການຕັດສິນໃຈ ຕ່າງໆ;
- ບັນດາໂຄງການທີ່ໄດ້ຮັບທຶນຈາກ ກປສ ຈະຕ້ອງນຳໃຊ້ນະໂຍບາຍຂອງ ກປສ ກ່ຽວກັບຊົນເຜົ່າ ຊຶ່ງໄດ້ສັງລວມລາຍລະອຽດຢູ່ໃນເອກະສານຊ້ອນທ້າຍ A15.

5.5. ບົດບາດຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງທຸກພາກສ່ວນໃນສັງຄົມ (GSI)

ແມ່ຍິງ ແລະ ຜູ້ຊາຍ ລວມທັງເດັກນ້ອຍ ລ້ວນແຕ່ມີໜ້າທີ່ ແລະ ຄວາມຮັບຜິດຊອບທາງດ້ານວັດທະນະທຳທີ່ແຕກຕ່າງກັນ ຊຶ່ງກ່ຽວຂ້ອງໂດຍກົງກັບຊີວິດການເປັນຢູ່ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດ. ກປສ ຮັບຮູ້ ແລະ ເຄົາລົບ ການມີສ່ວນຮ່ວມຂອງທຸກພາກສ່ວນໃນສັງຄົມ ແລະ ຮັບປະກັນວ່າແມ່ຍິງ ແລະ ຜູ້ດ້ອຍໂອກາດອື່ນໆຈະມີໂອກາດມີສ່ວນຮ່ວມ ແລະ ໄດ້ຮັບຜົນປະໂຫຍດທີ່ເໝາະສົມຈາກໂຄງການທີ່ໄດ້ຮັບທຶນຈາກ ກປສ. ໂຄງການທີ່ໄດ້ຮັບທຶນຈາກ ກປສ ບໍ່ສະໜັບສະໜຸນຄວາມບໍ່ສະເໝີພາບທາງດ້ານເສດຖະກິດ-ສັງຄົມທີ່ຮ້າຍແຮງຂຶ້ນໃນທຸກກໍລະນີ.

ການມີສ່ວນຮ່ວມຂອງທຸກພາກສ່ວນໃນສັງຄົມ ແມ່ນບູລິມະສິດສຳລັບທຸກໂຄງການທີ່ໄດ້ຮັບທຶນຈາກ ກປສ. ຜູ້ຮັບຜິດ ຊອບໂຄງການ ຈະດຳເນີນການເຜີຍແຜ່ ແລະ ປຶກສາຫາລືໃນຊຸມຊົນ ໂດຍເຄົາລົບສິດທິແມ່ຍິງ, ຊົນເຜົ່າ ແລະ ປະຊາຊົນຜູ້ດ້ອຍໂອກາດອື່ນໆ. ທີມງານໂຄງການຕ້ອງມີຄວາມຮັບຜິດຊອບການປະຕິບັດຕໍ່ທຸກພາກສ່ວນດ້ວຍຄວາມເຂົ້າໃຈ ແລະ ພິຈາລະນາຄວາມແຕກຕ່າງທາງດ້ານ ບົດບາດຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງທຸກພາກສ່ວນໃນສັງຄົມ. ເມື່ອໃດທີ່ມີການເຮັດວຽກຮ່ວມກັບຊຸມຊົນ ທີມງານຈະປຶກສາຫາລືໂດຍກົງກັບກຸ່ມແມ່ຍິງ ແລະ ຊົນເຜົ່າ ໂດຍຄຳນຶງເຖິງເວລາ ແລະ ຄວາມເໝາະສົມຂອງສະຖານທີ່.


ຄະນະກຳມະການບ້ານທີ່ຢູ່ໃນໂຄງການ ຄວນປະກອບມີແມ່ຍິງຢ່າງໜ້ອຍໜຶ່ງຄົນ ແລະ ຕາງໜ້າຜູ້ດ້ອຍໂອກາດອື່ນໆ. ໂຄງການ ແລະ ຄູ່ຮ່ວມງານ ຈະຕ້ອງປະຕິບັດຕາມນະໂຍບາຍ ກ່ຽວກັບບົດບາດຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງທຸກພາກສ່ວນໃນສັງຄົມ ຊຶ່ງລາຍລະອຽດຢູ່ໃນເອກະສານຊ້ອນທ້າຍ A16.

5.6. ນະໂຍບາຍການປົກປ້ອງສິ່ງແວດລ້ອມ ແລະ ສັງຄົມ (ESS)

ກປສ ມີນະໂຍບາຍ ກ່ຽວກັບປົກປ້ອງສິ່ງແວດລ້ອມ ແລະ ສັງຄົມ ໂດຍສະເພາະກິດຈະກຳທີ່ມີຄວາມສ່ຽງໃນປະເພດດັ່ງລຸ່ມນີ້:

- ແຮງງານ ແລະ ເງື່ອນໄຂການເຮັດວຽກ;
- ປະສິດທິພາບໃນການນຳໃຊ້ຊັບພະຍາກອນທຳມະຊາດ ແລະ ການປ້ອງກັນມົນລະພິດ;
- ສຸຂະພາບຊຸມຊົນ, ຄວາມປອດໄພ;
- ການໂອນສິດນຳໃຊ້ທີ່ດິນຄືນ ແລະ ການຈັດສັນຍົກຍ້າຍ ແບບບໍ່ສະໝັກໃຈ;
- ການອະນຸລັກຊີວະນາໆພັນ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດ ທີ່ມີຊີວິດແບບຍືນຍົງ;
- ຊົນເຜົ່າ;
- ມໍລະດົກວັດທະນະທຳ;
- ບົດບາດຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງທຸກພາກສ່ວນໃນສັງຄົມ.

ໂຄງການທັງໝົດທີ່ໄດ້ຮັບທຶນຈາກ ກປສ ຈະປະຕິບັດຕາມນະໂຍບາຍ ກ່ຽວກັບການປົກປ້ອງສິ່ງແວດລ້ອມ ແລະ ສັງຄົມ ລວມທັງຂັ້ນຕອນການຄຸ້ມຄອງຄວາມສ່ຽງຂອງ ສິ່ງແວດລ້ອມ ແລະ ສັງຄົມ ທີ່ກຳນົດໄວ້ໃນຄູ່ມືການຈັດຕັ້ງປະຕິບັດໂຄງການ (ເຫຼັ້ມ 2) ຂອງ ກປສ ຊຶ່ງລາຍລະອຽດຢູ່ໃນເອກະສານຊ້ອນທ້າຍ A17.



*ກຸ່ມຍ່ອຍຂອງຄະນະກຳມະການພັດທະນາໝູ່ບ້ານ ແມ່ນສ້າງຕັ້ງຈາກໜ່ວຍງານຄະນະພັກບໍລິຫານບ້ານ ທີ່ມີຢູ່ແລ້ວ

ຮູບພາບ 3 ໂຄງຮ່າງຂອງອົງການຈັດຕັ້ງທີ່ສຳຄັນ ຂອງໂຄງການພາຍໃຕ້ ຫກປສ

6. ພາບລວມຂັ້ນຕອນ ແລະ ບາດກ້າວຂອງການມີສ່ວນຮ່ວມຂອງຊຸມຊົນ

ຂັ້ນຕອນ ແລະ ບາດກ້າວ ຂອງການມີສ່ວນຮ່ວມຂອງຊຸມຊົນ ລວມ ມີ 4 ຂັ້ນຕອນ ແລະ ມີ 11 ບາດກ້າວ ຊຶ່ງສະແດງໃນຕາຕະລາງລຸ່ມນີ້:

ຂັ້ນຕອນ/ ບາດກ້າວ	ໜ້າ	ຈຸດປະສົງ	ວິທີການຈັດຕັ້ງ ປະຕິບັດ	ເຄື່ອງມື	ມື້/ ບ້ານ	ຜົນໄດ້ຮັບ
ຂັ້ນຕອນທີ 1: ການຄັດເລືອກບ້ານເປົ້າໝາຍ ແລະ ການແນະນຳໂຄງການ						
ບາດກ້າວ 1.1. ການຄັດເລືອກ ບ້ານ	11	ເພື່ອໃຫ້ໜ່ວຍງານຮັບຜິດ ຊອບໂຄງການສາມາດຄັດ ເລືອກບ້ານທີ່ຖືກຕາມເງື່ອນໄຂ ການຄັດເລືອກ 3 ຂໍ້ຄື: ບ້ານ ທີ່ມີການນຳໃຊ້ ຊັບພະຍາກອນທຳມະຊາດ ຕາມປະເພນີ, ບໍ່ແມ່ນບ້ານຍົກ ຍ້າຍ ຫຼື ບ້ານຕົ້ໂຮມ, ບ້ານ ທີ່ມີຄວາມສ່ຽງສູງທີ່ຈະເກີດ ໄພຂົ່ມຂູ່ຕໍ່ ຊັບພະຍາກອນທຳມະຊາດ	ເປີດກອງປະຊຸມ ພາກສ່ວນກ່ຽວ ຂ້ອງ ແລະ ທີມ ງານວິຊາການ	ລາຍການກວດ ສອບ ການຄັດ ເລືອກບ້ານເອກະ ສານຊ້ອນທ້າຍ - A4	3	ລາຍຊື່ຂອງບ້ານທີ່ ຜ່ານເກນ 3 ຂໍ້ ບົດລາຍງານກວດ ສອບການຄັດເລືອກ ບ້ານ. ເອກະສານຊ້ອນ ທ້າຍ - A4
ບາດກ້າວ 1.2. ກອງປະຊຸມແນະ ນຳໂຄງການ ເບື້ອງຕົ້ນ	15	ເພື່ອໃຫ້ຕາງໜ້າບ້ານເປົ້າໝາຍ ທີ່ຜ່ານເກນປະກອບດ້ວຍ: ຄະນະກຳມະການພັດທະນາ ບ້ານ ຢ່າງໜ້ອຍ 5 ຄົນ ຕໍ່ ບ້ານ ມີຄວາມເຂົ້າໃຈກ່ຽວກັບ ເປົ້າໝາຍ, ຈຸດປະສົງ, ຂັ້ນ ຕອນ ແລະ ຜົນທີ່ໄດ້ຮັບຈາກ ໂຄງການເພື່ອໃຫ້ຕາງໜ້າແຕ່ ລະບ້ານໄດ້ຢັ້ງຢືນຄວາມເຕັມ ໃຈແຕ່ເບື້ອງຕົ້ນໃນການເຂົ້າ ຮ່ວມໂຄງການ	ເປີດກອງປະຊຸມ ຕາງໜ້າບ້ານເປົ້າ ໝາຍທີ່ຜ່ານ ເກນທຸກບ້ານ	ອຸປະກອນທີ່ນຳ ໃຊ້ໃນການເຜີຍ ແຜ່ຂໍ້ມູນໂຄງ ການ , ຄວາມຮູ້ກ່ຽວ ກັບ ການ ອະນຸລັກ (ໃຫ້ ອະທິບາຍ ລະອຽດມີ ເອກະສານຫຍັງ ແດ່?)	3	
ບາດກ້າວ 1.3. ການເກັບກຳຂໍ້ ມູນພື້ນຖານທາງ ດ້ານເສດຖະກິດ-ສັງຄົມ	16	ເພື່ອເກັບກຳຂໍ້ມູນພື້ນຖານທາງ ດ້ານເສດຖະກິດສັງຄົມ ແລະ ໄພຂົ່ມຂູ່ຕໍ່ຊີວະນາໆພັນ	ສຳພາດ ຫຼື ໃຫ້ ຕາງໜ້າບ້ານຕື່ມ ຂໍ້ມູນໃສ່ແບບ ຟອມ	ແບບຟອມ ການ ເກັບກຳຂໍ້ມູນ ເສດຖະກິດ-ສັງຄົມ. ເອກະ ສານຊ້ອນທ້າຍ - A5	3-5	ບົດລາຍງານພື້ນ ຖານກ່ຽວກັບ ເສດຖະກິດສັງ-ຄົມ ຂອງບ້ານ.

ຂັ້ນຕອນ/ ບາດກ້າວ	ໜ້າ	ຈຸດປະສົງ	ວິທີການຈັດຕັ້ງ ປະຕິບັດ	ເຄື່ອງມື	ມື້/ ບ້ານ	ຜົນໄດ້ຮັບ
ຂັ້ນຕອນທີ 2: ສ້າງຄວາມຮັບຮູ້ຂອງຊຸມຊົນ ແລະ ການເກັບກຳຂໍ້ມູນຊັບພະຍາກອນທຳມະຊາດ						
ບາດກ້າວ 2.1. ການປຶກສາຫາລືກັບຊຸມຊົນ	19	ໃຫ້ຄວາມຮູ້ກ່ຽວກັບເປົ້າໝາຍ , ຈຸດປະສົງ, ຂັ້ນຕອນ ແລະ ຜົນໄດ້ຮັບຈາກໂຄງການເພື່ອ ຢັ້ງຢືນຄວາມເຕັມໃຈໃນການ ເຂົ້າຮ່ວມໂຄງການຈາກ ສະມາຊິກບ້ານເພື່ອກຳນົດ ແຜນການຈັດຕັ້ງປະຕິບັດຂັ້ນ ຕອນຂອງວຽກງານພາຍໃນ ບ້ານ	ຈັດກອງປະຊຸມ, ຝຶກອົບຮົມ ແລະ ປຶກສາຫາລື ລະຫວ່າງສະມາ ຊິກບ້ານ ຂອງ ແຕ່ລະບ້ານ	ອຸປະກອນ ເຜີຍແຜ່ຄວາມຮູ້ ກ່ຽວກັບ ການ ອະນຸລັກ	2-3	ແບບຟອມຢັ້ງຢືນ ຄວາມເຕັມໃຈ ຂອງຊຸມຊົນ. ເອກະສານຊ້ອນ ທ້າຍ - A14
ບາດກ້າວ 2.2. ການເກັບກຳຂໍ້ ມູນຊັບພະຍາ ກອນ	22	ເກັບກຳຂໍ້ມູນລະອຽດ ກ່ຽວ ກັບການນຳໃຊ້ຊັບພະຍາກອນ ທຳ ມະຊາດຂອງຊຸມຊົນໂດຍ ມີຊຸມຊົນເຂົ້າຮ່ວມ	ປະເມີນສະພາບ ຊົນນະບົດແບບ ມີສ່ວນຮ່ວມ (PRA)	ຂໍ້ມູນທີ່ໄດ້ຈາກ ບາດກ້າວ 1.3	3-5	ບົດລາຍງານການ ວິເຄາະຊັບພະຍາ ກອນ. ເອກະສານຊ້ອນ ທ້າຍ - A7
ຂັ້ນຕອນທີ 3: ການວາງແຜນແບບມີສ່ວນຮ່ວມ ແລະ ການສ້າງຂໍ້ຕົກລົງ						
ບາດກ້າວ 3.1. ການວາງແຜນນຳ ໃຊ້ທີ່ດິນແບບມີ ສ່ວນຮ່ວມ	32	ເພື່ອວິເຄາະຂໍ້ມູນ ກ່ຽວກັບ ການນຳໃຊ້ຊັບພະຍາກອນທຳ ມະຊາດຂອງຊຸມຊົນ ໂດຍມີ ຊຸມຊົນເຂົ້າຮ່ວມກຳນົດ ຂອບ ເຂດ ແລະ ປະເພດການນຳໃຊ້ ທີ່ດິນໃຫ້ຊັດເຈນ	ນຳໃຊ້ຂໍ້ມູນພື້ນ ຖານເສດຖະ ກິດ-ສັງຄົມ, PRA ໃນການ ວາງແຜນການ ນຳໃຊ້ທີ່ດິນ	ຄູ່ມື ການວາງ ແຜນການນຳໃຊ້ ທີ່ດິນແບບມີ ສ່ວນຮ່ວມ, ແຜນທີ່ ແລະ ພາບຖ່າຍດາວ ທຽມ	5	ແຜນນຳໃຊ້ທີ່ດິນ ຂອງບ້ານ
ບາດກ້າວ 3.2. ແຜນພັດທະນາ ບ້ານ (CAP)	35	ເພື່ອຄັດເລືອກເອົາກິດຈະກຳ ການອະນຸລັກ ແລະ ການພັດ ທະນາ ທີ່ໄດ້ຮັບການຕົກລົງ ຈາກຊຸມຊົນ	ນຳໃຊ້ຂໍ້ມູນພື້ນ ຖານທາງດ້ານ ເສດຖະກິດ-ສັງຄົມ, PRA,	ບົດລາຍງາຍຂໍ້ ມູນພື້ນຖານທາງ ດ້ານ ເສດຖະກິດ-ສັງ	3	ແຜນພັດທະນາ ບ້ານ

ຂັ້ນຕອນ/ ບາດກ້າວ	ໜ້າ	ຈຸດປະສົງ	ວິທີການຈັດຕັ້ງ ປະຕິບັດ	ເຄື່ອງມື	ມື້/ ບ້ານ	ຜົນໄດ້ຮັບ
		ເພື່ອສ້າງແຜນການປະຕິບັດ ວຽກງານການອະນຸລັກ ແລະ ການພັດທະນາ	PLUP ໃນ ການປຶກສາ ປຶກສາຫາລື ເພື່ອ ກຳນົດແຜນ ພັດທະນາບ້ານ, ຈັດກອງ ປະຊຸມ ເພື່ອປຶກສາຫາລື ແລະ ຕົກລົງສ້າງ ແຜນພັດທະນາ ບ້ານ	ຄົ້ນ, ປົດວິເຄາະ PRA ແລະ ແຜນນຳໃຊ້ທີ່ ດິນຂອງບ້ານ		
ບາດກ້າວ 3.3. ສັນຍາການ ອະນຸລັກຂອງຊຸມ ຊົນ (CCA)	37	ເພື່ອສ້າງຂໍ້ຕົກລົງລະຫວ່າງ ສະມາຊິກຂອງຊຸມຊົນ ແລະ ການຈັດຕັ້ງທີ່ໄດ້ຮັບໂຄງການ ໃນການຈັດຕັ້ງປະຕິບັດວຽກ ງານການອະນຸລັກ ແລະ ການ ພັດທະນາ ທີ່ມີຢູ່ໃນແຜນ ພັດທະນາບ້ານ	ກອງປະຊຸມເພື່ອ ປຶກສາຫາລື ແລະ ຕົກລົງສ້າງ ສັນຍາອະນຸ-ລັກ ຂອງຊຸມ-ຊົນ	ເອກະສານ ແຜນ ພັດທະນາບ້ານ	2	ສັນຍາອະນຸລັກ ຂອງຊຸມຊົນ
ຂັ້ນຕອນທີ 4: ການຈັດຕັ້ງປະຕິບັດ ແຜນພັດທະນາບ້ານ						
ບາດກ້າວ 4.1. ການຈັດຕັ້ງປະຕິ-ບັດ	41	ເພື່ອຈັດຕັ້ງປະຕິບັດວຽກງານທີ່ ໄດ້ກຳນົດໄວ້ໃນແຜນ ພັດທະນາບ້ານ	ຈັດຕັ້ງປະຕິບັດ ວຽກງານທີ່ໄດ້ ລະບຸໄວ້ໃນແຜນ ພັດທະນາບ້ານ	ແຜນພັດທະນາ ບ້ານ ພ້ອມດ້ວຍ ງົບປະມານ	12 ເດືອນ	ກິດຈະກຳການ ອະນຸລັກ ແລະ ການພັດທະນາໄດ້ ຮັບການຈັດຕັ້ງ ປະຕິບັດ
ບາດກ້າວ 4.2. ກົນໄກການແກ້ ໄຂຄຳຮ້ອງທຸກ	41	ເພື່ອໃຫ້ສະມາຊິກຂອງຊຸມຊົນ ສາມາດສົ່ງຄຳຮ້ອງທຸກທີ່ກ່ຽວ ກັບ ບັນຫາຂອງພວກເຂົາ				
ບາດກ້າວ 4.3. ການຕິດຕາມ ແລະ ການປະ ເມີນຜົນ	45	ເພື່ອຮັບປະກັນວ່າ ການຈັດຕັ້ງ ປະຕິບັດກິດຈະກຳ ສອດຄ່ອງ ກັບ ແຜນພັດທະນາບ້ານ ແລະ ສັນ-ຍາອະນຸລັກຂອງຊຸມຊົນ	ກອງປະຊຸມ ປະຈຳປີ ແລະ ປະຈຳໄຕມາດ		ທຸກ 3 ເດືອນ	ປົດລາຍງານການ ຕິດຕາມ ແລະ ປະ ເມີນຜົນ

➢ **ລາຍລະອຽດຂອງຂັ້ນຕອນການຈັດຕັ້ງປະຕິບັດການມີສ່ວນຮ່ວມຂອງຊຸມຊົນມີດັ່ງລຸ່ມນີ້:**

ບາດກ້າວ 1.1: ການຄັດເລືອກບ້ານ

ກ່ອນຈະເລີ່ມປະຕິບັດໂຄງການ ຜູ້ຮັບຜິດຊອບໂຄງການ ຕ້ອງຢັ້ງຢືນວ່າບ້ານທີ່ໄດ້ຖືກຄັດເລືອກ ເປັນບ້ານທີ່ມີສິດ ແລະ ມີເງື່ອນໄຂຄົບຖ້ວນທີ່ຈະໄດ້ຮັບການສະໜັບສະໜູນ ຈາກກອງທຶນປົກປັກຮັກສາສິ່ງແວດລ້ອມ, ລັດຖະບານ ແລະ ອົງການທີ່ໃຫ້ທຶນ.

❖ **ຈຸດປະສົງຂອງການຄັດເລືອກບ້ານ**

– **ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດໂຄງການສາມາດຄັດເລືອກບ້ານໃຫ້ຖືກຕາມເງື່ອນໄຂ ຊຶ່ງປະກອບ 3 ຂໍ້ຄື:**

✓ *ບ້ານທີ່ມີການນຳໃຊ້ຊັບພະຍາກອນທຳມະຊາດຕາມປະເພນີ;*

✓ *ບໍ່ແມ່ນບ້ານທີ່ຍົກຍ້າຍ ຫຼື ບ້ານເຕົ້າໂຮມ;*

✓ *ບ້ານທີ່ມີຄວາມສ່ຽງຂອງໄພຂົ່ມຂູ່ຕໍ່ຊັບພະຍາກອນທຳມະຊາດສູງ (ເອົາເນື້ອໃນໃນຕາຕະລາງຂ້າງເທິງ).*

– **ເພື່ອໃຫ້ຖືກຕາມບູລິມະສິດຂອງແຜນຍຸດທະສາດ ໃນການອະນຸລັກປ່າໄມ້ ແລະ ພັດທະນາຊຸມຊົນ**

❖ **ຜົນໄດ້ຮັບ**

ສາມາດກຳນົດຈຳນວນບ້ານ ແລະ ຊື່ບ້ານ ທີ່ເປັນບູລິມະສິດຂອງພື້ນທີ່ໂຄງການ ທີ່ມີເງື່ອນໄຂຄົບຖ້ວນໄດ້ຮັບການສະໜັບສະໜູນຈາກ ກອງທຶນປົກປັກຮັກສາສິ່ງແວດລ້ອມ, ລັດຖະບານ ແລະ ອົງການທີ່ໃຫ້ທຶນ. ລາຍລະອຽດ (ເອກະສານຊ້ອນທ້າຍ A6)

❖ **ກຸ່ມເປົ້າໝາຍ**

ໃນການຈັດຕັ້ງປະຕິບັດໂຄງການ ປະກອບມີກຸ່ມເປົ້າໝາຍຄື: ພະນັກງານແຂວງ, ເມືອງ, ບ້ານ ແລະ ພາກສ່ວນທີ່ກ່ຽວຂ້ອງ.

❖ **ວິທີການຈັດຕັ້ງປະຕິບັດ**

❖ **<u>ກ່ອນດຳເນີນງານ</u>**

- ອົງການຈັດຕັ້ງປະຕິບັດໂຄງການ ສ້າງຄວາມເຂົ້າໃຈ ກ່ຽວກັບເງື່ອນໄຂໃນການຄັດເລືອກ (ເງື່ອນໄຂ 1- 3 ຕາມຂໍ້ 1.1.1)
- ກຳນົດຂອບເຂດໃນການເກັບກຳຂໍ້ມູນ ແລະ ເກັບຂໍ້ມູນຕາມທີ່ໄດ້ກຳນົດໄວ້ ເພື່ອປະກອບເຂົ້າໃນການພິຈາລະນາຄັດເລືອກບ້ານ

❖ **<u>ໃນລະຫວ່າງການດຳເນີນງານ</u>**

- ຈັດກອງປະຊຸມພາຍໃນໂຄງການ ເພື່ອພິຈາລະນາຂໍ້ມູນ ແລະ ຄັດເລືອກບ້ານ

<u>ຫຼັງການດຳເນີນງານ</u>

- ສັງລວມຄຳເຫັນ ແລະ ລາຍຊື່ບ້ານທີ່ຖືກຕ້ອງຕາມເງື່ອນໄຂ 1-3 (ເອກະສານຊ້ອນທ້າຍ A4) ແລະ ສ້າງບົດລາຍງານລະອຽດກ່ຽວກັບວຽກງານການຄັດເລືອກບ້ານ

❖ **ຄຳແນະນຳເພີ່ມເຕີມ:**

ການພິຈາລະນາຄັດເລືອກບ້ານໃນຂາດກ້າວນີ້ ເປັນການຄັດເລືອກໂດຍຜູ້ຈັດຕັ້ງປະຕິບັດໂຄງການ, ສ່ວນເງື່ອນໄຂຂໍ້ທີ 4 ຊຸມຊຶນມີຄວາມເຕັມໃຈໃນການເຂົ້າຮ່ວມໂຄງການ ຈະຖືກນຳໄປພິຈາລະນາຮ່ວມກັບຊຸມຊຶນເບື້ອງຕົ້ນໃນຂາດກ້າວທີ 1.2. ແລະ ຂາດກ້າວ ທີ 2.1. ແລະ ແຕ່ລະຂາດກ້າວຕໍ່ໄປຂອງໂຄງການ.

1.1.1: ເງື່ອນໄຂໃນການໃນການຄັດເລືອກບ້ານ

<u>ເງື່ອນໄຂທີ 1: ສະມາຊິກໃນຊຸມຊົນນຳໃຊ້ຊັບພະຍາກອນທຳມະຊາດຕາມປະເພນີ</u>

ປະຊະຊົນຈະມີຄວາມເປັນເຈົ້າການໃນການອະນຸລັກປ່າໄມ້ ຖ້າພວກເຂົາຮູ້ສຶກວ່າປ່າໄມ້ເປັນຂອງພວກເຂົາຕາມປະເພນີ ແລະ ພວກເຂົາອາໄສປ່າໄມ້ ເພື່ອສະໜອງອາຫານ ແລະ ເປັນອຸປະກອນຮັບໃຊ້ໃນຄົວເຮືອນ.

<u>ເງື່ອນໄຂທີ 2: ບໍ່ແມ່ນບ້ານທີ່ຖືກຍົກຍ້າຍ ຫຼື ບ້ານເຕົ້າໂຮມ</u>

ໂດຍອີງຕາມນະໂຍບາຍຂອງໂຄງການ ພາຍໃຕ້ ຫກປສ, ຈະບໍ່ສະໜັບສະໜຸນໂຄງການ ຖ້າຫາກວ່າບ້ານເຫຼົ່ານັ້ນນອນຢູ່ໃນ ແຜນ ທີ່ຕ້ອງໄດ້ມີການຍົກຍ້າຍ ຫຼື ມີການຮວມບ້ານຕາມແຜນງານການພັດທະນາຂອງລັດ ຫຼື ຂອງເອກະຊົນຢູ່ແລ້ວ.ໃນ ກໍລະນີບ້ານເຕົ້າໂຮມ ຫຼື ບ້ານຍົກຍ້າຍຕ້ອງການເຂົ້າຮ່ວມໂຄງການ, ແມ່ນຕ້ອງໄດ້ປະຕິບັດຕາມເງື່ອນໄຂພິເສດດັ່ງຕໍ່ໄປນີ້.



ຮູບພາບ 5 ບ້ານທີ່ອາໃສການນຳໃຊ້ຊັບພະຍາກອນທຳມະຊາດເປັນບູລິມະສິດສູງ



ຮູບພາບ 4 ບ້ານທີ່ຖືກຍົກຍ້າຍ ຫຼື ບ້ານເຕົ້າໂຮມບໍ່ສາມາດເຂົ້າຮ່ວມໃນ ໂຄງການ

ເງື່ອນໄຂພິເສດ ສຳລັບບ້ານຍົກຍ້າຍ ແລະ ບ້ານເຕົ້າໂຮມ

ບ້ານຍົກຍ້າຍ ຫຼື ບ້ານເຕົ້າໂຮມ ສາມາດໄດ້ຮັບການສະໜັບສະໜູນຈາກກອງທຶນປົກປັກຮັກສາສິ່ງແວດລ້ອມ ຖ້າຫາກ ພວກເຂົາມີທີ່ດິນປູກຝັງທີ່ພຽງພໍສຳລັບຄົວເຮືອນ. ໝາຍຄວາມວ່າ ຕ້ອງໄດ້ສຳຫຼວດບ້ານ ແລະ ຕ້ອງໄດ້ສ້າງແຜນການ ນຳໃຊ້ທີ່ດິນແບບມີສ່ວນຮ່ວມ ແລະ ຖ້າຫາກສະມາຊິກບ້ານເຫັນດີວ່າ ຢູ່ບ້ານຂອງພວກເຂົາມີທີ່ດິນພຽງພໍ, ອົງການຈັດຕັ້ງປະຕິບັດໂຄງການ ຈຶ່ງສາມາດສະເໜີເອົາໂຄງການໄດ້.

<u>ເງື່ອນໄຂທີ 3: ບ້ານທີ່ມີຄວາມສ່ຽງສູງທີ່ຈະເກີດໄພຂົ່ມຂູ່ຕໍ່ຊັບພະຍາກອນທຳມະຊາດໃນເຂດພື້ນທີ່ອະນຸລັກຈາກການກະທຳທີ່ຜິດກົດໝາຍ</u>

ພື້ນທີ່ເປັນບຸລິມະສິດທີ່ຈະໄດ້ຮັບທຶນຈາກ ກອງທຶນປົກປັກຮັກສາສິ່ງແວດລ້ອມ ໃນການຈັດຕັ້ງປະຕິບັດໂຄງການແມ່ນເຂດທີ່ຢູ່ອາໄສຂອງ ຊະນິດພັນພືດ ແລະ ສັດປ່າ ທີ່ມີຄວາມສ່ຽງສູງທີ່ຈະເກີດໄພຂົ່ມຂູ່ຕໍ່ຊັບພະຍາກອນທຳມະຊາດຊຶ່ງມີຄວາມສ່ຽງຫຼາຍທີ່ສຸດໃນການສູນພັນ.

ບ້ານທີ່ຢູ່ໃນ ຫຼື ຢູ່ໃກ້ກັບເຂດອະນຸລັກຊີວະນາໆພັນ, ເຂດຫວງຫ້າມເດັດຂາດ ຈະໄດ້ຮັບການພິຈາລະນາວ່າເປັນເຂດທີ່ມີຄວາມສ່ຽງສູງ ຕາມລຳດັບດັ່ງລຸ່ມນີ້:

- *ບ້ານທີ່ຢູ່ໃນເຂດປ່າສະຫງວນ* (Enclave villages)
- *ບ້ານທີ່ຢູ່ລະຫວ່າງຊາຍແດນເຂດປ່າສະຫງວນ* (Straddle villages)
- *ບ້ານທີ່ຢູ່ຕິດກັບເຂດປ່າສະຫງວນ* (Adjacent villages)
- *ບ້ານທີ່ຢູ່ນອກເຂດປ່າສະຫງວນ* (External villages)



ຮູບພາບ 6 ບ້ານທີ່ມີຄວາມສ່ຽງໃນແຕ່ລະດັບ ທີ່ຕັ້ງຢູ່ພາຍໃນ ແລະ ອ້ອມຮອບ ເຂດສະຫງວນ



ຮູບພາບ 7 ບ້ານທີ່ມີຄວາມສ່ຽງຕໍ່ຊັບພະຍາກອນທຳມະຊາດເປັນບຸລິມະສິດສູງ

<u>ເງື່ອນໄຂທີ 4: ຊຸມຊົນເຕັມໃຈມີສ່ວນຮ່ວມໃນການວາງແຜນການນຳໃຊ້ທີ່ດິນແບບມີສ່ວນຮ່ວມ (PLUP), ແຜນພັດທະນາບ້ານ (CAP), ແລະ ສັນຍາອະນຸລັກຂອງຊຸມຊົນ (CCA)</u>

ຫຼັກການທີ່ສຳຄັນຂອງໂຄງການແມ່ນຖ້າສະມາຊິກໃນຊຸມຊົນບໍ່ຕ້ອງການໃຫ້ມີການຈັດຕັ້ງປະຕິບັດໂຄງການໃນບ້ານຂອງເຂົາເຈົ້າ, ໂຄງການນັ້ນຈະບໍ່ໄດ້ມີການສືບຕໍ່.

ຄວາມເຕັມໃຈຂອງຊຸມຊົນແມ່ນປັດໄຈສຳຄັນຂອງການສະໜອງທຶນຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ໃນການຈັດຕັ້ງປະຕິບັດໂຄງການ. ໂຄງການຕ້ອງມີຫຼັກຖານທີ່ຈະແຈ້ງທີ່ສະແດງໃຫ້ເຫັນວ່າຊຸມຊົນຮັບຮູ້ຜົນກະທົບ ແລະ ຜົນປະໂຫຍດຂອງໂຄງການ ແລະ ສະແດງຄວາມເຕັມໃຈໃນການເຂົ້າຮ່ວມ.

ທີມງານວິຊາການຂອງກຸ່ມບ້ານຊ່ວຍໃນການຢັ້ງຢືນ ວ່າຊຸມຊົນມີຄວາມເຕັມໃຈເຂົ້າຮ່ວມໃນໂຄງການ.

ການດຳເນີນໂຄງການຕ້ອງມີການຕົກລົງຂອງຊຸມຊົນ ເຊິ່ງສະແດງອອກດັ່ງຕໍ່ໄປນີ້ (ເອກະສານຊ້ອນທ້າຍ A13)

- ການຕົກລົງເຫັນດີຂອງຕົວແທນບ້ານໃນເວລາແນະນຳໂຄງການໃນເບື້ອງຕົ້ນ ແລະ ປະເມີນດ້ານເສດຖະກິດ-ສັງຄົມ *(ຂັ້ນຕອນທີ 1.2 ແລະ 1.3)*
- ການເຫັນດີໃນເບື້ອງຕົ້ນຫຼັງຈາກການປຶກສາຫາລືກັບຊຸມຊົນ *(ຂັ້ນຕອນທີ2.1)* ແລະ ກ່ອນທີ່ຈະມີການເກັບກຳຂໍ້ມູນຊັບພະຍາກອນທຳມະຊາດ *(ຂັ້ນຕອນທີ 2.2)*
- ຂໍ້ຕົກລົງກ່ຽວກັບແຜນພັດທະນາບ້ານ *(ຂັ້ນຕອນທີ 3.2)*
- ຂໍ້ຕົກລົງກ່ຽວກັບສັນຍາອະນຸລັກຂອງຊຸມຊົນ *(ຂັ້ນຕອນທີ 3.3)*
- ພາຍຫຼັງສຳເລັດການສ້າງແຜນພັດທະນາບ້ານ *(CAP)* ແລະ ສັນຍາອະນຸລັກຂອງຊຸມຊົນ *(CCA)* ແລະ ເລີ່ມຕົ້ນຈັດຕັ້ງປະຕິບັດໂຄງການ, ຊຸມຊົນອາດເລືອກທີ່ຈະຢຸດຕິໂຄງການ ແຕ່ຊຸມຊົນຈະຕ້ອງຊຳລະເງິນທີ່ໄດ້ຈ່າຍໄປແລ້ວຄືນໃຫ້ໂຄງການ.



ຮູບພາບ 8 ການຍົ້ງຍືນການຕົກລົງເຫັນດີ ຂອງຊຸມຊົນທີ່ຈະເຂົ້າຮ່ວມໃນກິດຈະກຳຂອງໂຄງການ

ບາດກ້າວ 1.2: ກອງປະຊຸມແນະນຳໂຄງການເບື້ອງຕົ້ນ

ອົງການຈັດຕັ້ງປະຕິບັດໂຄງການ ຈະເຮັດວຽກຮ່ວມກັບທີມງານວິຊາການ, ຕົວແທນຂອງບ້ານ, ຄະນະກຳມະການພັດທະນາບ້ານ ພ້ອມທັງ ອະທິບາຍກ່ຽວກັບໂຄງການໃຫ້ແກ່ຜູ້ຕາງໜ້າຊຸມຊົນ ແລະ ຄະນະກຳມະການພັດທະນາບ້ານ ເພື່ອຊ່ວຍໃຫ້ເຂົາເຈົ້າເຂົ້າໃຈ ກ່ຽວກັບ ຜົນປະໂຫຍດ, ຜົນເສຍທີ່ອາດຈະໄດ້ຮັບ ແລະ ພັນທະສັນຍາທີ່ປະຕິບັດ.

❖ ຈຸດປະສົງ

- ເພື່ອໃຫ້ຕົວແທນບ້ານເປົ້າໝາຍ ມີຄວາມເຂົ້າໃຈກ່ຽວກັບເປົ້າໝາຍ, ຈຸດປະສົງ, ຂັ້ນຕອນ ແລະ ຜົນໄດ້ຮັບຈາກໂຄງການ;
- ເພື່ອໃຫ້ຕົວແທນແຕ່ລະບ້ານໄດ້ຢັ້ງຢືນຄວາມສະໝັກໃຈເບື້ອງຕົ້ນໃນການເຂົ້າຮ່ວມໂຄງການ;
- ເພື່ອວາງແຜນ ຂັ້ນຕອນຕໍ່ໄປໃນການລົງເຮັດວຽກຢູ່ບ້ານເປົ້າໝາຍຂອງໂຄງການ ໂດຍສະເພາະ ກອງປະຊຸມປຶກສາຫາລືກັບ ຊຸມຊົນ (ບາດກ້າວ 2.1).

❖ ກຸ່ມເປົ້າໝາຍ

ຜູ້ເຂົ້າຮ່ວມໃນກອງປະຊຸມແນະນຳໂຄງການເບື້ອງຕົ້ນ ມີຄື:

- ທີມງານວິຊາການຂອງກຸ່ມບ້ານ
- ພະນັກງານໂຄງການ (PO)
- ຕົວແທນຈາກ ຄະນະກຳມະການພັດທະນາບ້ານ ຢ່າງໜ້ອຍ 5 ຄົນ ຈາກແຕ່ລະບ້ານ. ຕົວແທນຂອງແຕ່ລະບ້ານທີ່ມາເຂົ້າ ຮ່ວມຄວນປະກອບດ້ວຍແມ່ຍິງ ແລະ ຜູ້ຊາຍ. ຖ້າບ້ານໃດມີຫຼາຍຊົນເຜົ່າ, ຢ່າງໜ້ອຍ ຕ້ອງມີຕົວແທນໜຶ່ງຄົນຈາກແຕ່ລະຊົນ ເຜົ່າເຂົ້າຮ່ວມ.

1.2.1: ກ່ອນ: ກະກຽມກອງປະຊຸມແນະນຳໂຄງການເບື້ອງຕົ້ນ

- **ປະສານງານກັບຜູ້ເຂົ້າຮ່ວມ**
  - ທີມງານວິຊາການປະສານສົມທົບກັບຄະນະກຳມະການພັດທະນາບ້ານ (VDCs) ຂອງແຕ່ລະບ້ານ ເພື່ອວາງແຜນວາລະຂອງ ກອງປະຊຸມແນະນຳໂຄງການເບື້ອງຕົ້ນ ຢູ່ເມືອງ ຫຼື ແຂວງ;
  - ທີມງານວິຊາການຄວນສົ່ງແບບຟອມເສດຖະກິດ-ສັງຄົມ ທີ່ຢູ່ໃນ ເອກະສານຊ້ອນທ້າຍ A5 ເພື່ອໃຫ້ ຄະນະກຳມະການ ພັດທະນາບ້ານ (VDCs) ຊ່ວຍກະກຽມຂໍ້ມູນທີ່ກ່ຽວຂ້ອງ ແລະ ຂໍໃຫ້ຜູ້ເຂົ້າຮ່ວມຖືເອົາຂໍ້ມູນທີ່ກ່ຽວຂ້ອງກັບຊຸມຊົນມາ ພ້ອມ. ຖ້າຜູ້ເຂົ້າຮ່ວມສາມາດຕື່ມແບບຟອມໃຫ້ສຳເລັດກ່ອນການປະຊຸມ ຈະຊ່ວຍໃຫ້ການດຳເນີນກອງປະຊຸມສຳເລັດຕາມ ກຳເວລາ;
  - ທີມງານວິຊາການ ກຳນົດວັນ ແລະ ເວລາລົງເຮັດວຽກຮ່ວມກັບກຸ່ມຕ່າງໆ ໂດຍອີງຕາມຄວາມສະດວກຂອງຜູ້ເຂົ້າຮ່ວມ.

- **ການກະກຽມອຸປະກອນ**

ໃນການຈັດກອງປະຊຸມແນະນຳໂຄງການເບື້ອງຕົ້ນ ເພື່ອເຜີຍແຜ່ຂໍ້ມູນໂຄງການ ແລະ ຄວາມຮູ້ກ່ຽວກັບການອະນຸລັກ ຕ້ອງກະກຽມ ອຸປະກອນໃຫ້ແທດເໝາະກັບພື້ນທີ່ ເຊັ່ນ ແຜ່ນພັບ, ວິດີໂອ ແລະ ອື່ນໆ ທີ່ສາມາດສ້າງຄວາມເຂົ້າໃຈງ່າຍໃຫ້ແກ່ປະຊາຊົນ.

1.2.2: ລະຫວ່າງ: ດຳເນີນກອງປະຊຸມແນະນຳໂຄງການເບື້ອງຕົ້ນ

ທີມງານວິຊາການດຳເນີນຂັ້ນຕອນຕ່າງໆດັ່ງຕໍ່ໄປນີ້:

- **ກວດສອບຄວາມພ້ອມຂອງຜູ້ເຂົ້າຮ່ວມ**

ກວດເບິ່ງວ່າຫ້ອງປະຊຸມໄດ້ມີການຈັດແຈງເປັນທີ່ຮຽບຮ້ອຍດີ, ໃຫ້ທຸກຄົນມີບ່ອນນັ່ງທີ່ສາມາດໄດ້ຍິນ ແລະ ໄດ້ເຫັນໜ້າຄົນນຳ ສະເໜີ. ຮັບປະກັນວ່າແມ່ຍິງມີສ່ວນຮ່ວມ ແລະ ນັ່ງຢູ່ແຖວໜ້າ.



ຮູບພາບ 9 ກອງປະຊຸມແນະນຳໂຄງການເບື້ອງຕົ້ນ

- **ແນະນຳຜູ້ເຂົ້າຮ່ວມ ແລະ ອະທິບາຍກ່ຽວກັບຈຸດປະສົງຂອງກອງປະຊຸມແນະນຳໂຄງການເບື້ອງຕົ້ນ**

ຜູ້ນຳສະເໜີຢູ່ໃນກອງປະຊຸມຄວນບອກຊື່ ແລະ ຕຳແໜ່ງ ຄວນເຮັດກິດຈະກຳທີ່ຊ່ວຍຫຼຸດຜ່ອນຄວາມກັງວົນ ເພື່ອຊ່ວຍໃຫ້ຜູ້ເຂົ້າຮ່ວມເປີດໃຈ ແລະ ບໍ່ຮູ້ສຶກອາຍ.

- **ອະທິບາຍຄວາມສຳຄັນຂອງການອະນຸລັກ**

  – ໃຊ້ແຜ່ນພາບ ຫຼື ວີດີໂອ ໃນການນຳສະເໜີຄວາມສຳຄັນຂອງການອະນຸລັກໃຫ້ແກ່ຕົວແທນຂອງຊຸມຊົນ. ສົນທະນາ ກ່ຽວກັບຜົນປະໂຫຍດຂອງການອະນຸລັກ ໃຫ້ແກ່ຊຸມຊົນ ແລະ ຄອບຄົວ.

- **ອະທິບາຍກ່ຽວກັບໂຄງການທີ່ໄດ້ຮັບທຶນຈາກ ກອງທຶນປົກປັກຮັກສາສິ່ງແວດລ້ອມ**

  – ນຳໃຊ້ແຜ່ນພັບຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ.
  – ອະທິບາຍຜົນປະໂຫຍດ ແລະ ຜົນກະທົບ ຂອງໂຄງການ
  – ອະທິບາຍກິດຈະກຳ ຂອງໂຄງການທີ່ສາມາດເຮັດໄດ້

- **ຢັ້ງຢືນການຕົກລົງເຫັນດີຂອງຜູ້ເຂົ້າຮ່ວມກ່ອນ ການວິເຄາະເສດຖະກິດ-ສັງຄົມ.**

1.2.3: ຫຼັງ: ສັງລວມ ແລະ ລາຍງານ

- ສະຫຼຸບກິດຈະກຳ ແລະ ທົບທວນຄືນເປັນກຸ່ມ.
- ລາຍງານຜົນໄດ້ຮັບ ແລະ ບົດຮຽນທີ່ຖອດຖອນໄດ້.

ບາດກ້າວ 1.3: ການເກັບກຳຂໍ້ມູນພື້ນຖານທາງດ້ານເສດຖະກິດ-ສັງຄົມ.

ຂັ້ນຕອນນີ້ ເປັນການເຮັດວຽກຮ່ວມກັນລະຫວ່າງ ເຈົ້າຂອງໂຄງການ ແລະ ຕົວແທນຂອງຊຸມຊົນໃນເຂດພື້ນທີ່ໂຄງການທັງໝົດ ເພື່ອເກັບກຳຂໍ້ມູນເບື້ອງຕົ້ນທາງດ້ານເສດຖະກິດ-ສັງຄົມ ແລະ ຄວາມສ່ຽງທີ່ຈະເກີດໄພຂົ່ມຂູ່ຕໍ່ຊັບພະຍາກອນທຳມະຊາດ ເປັນຕົ້ນ ຊີວະນາໆພັນ ເພື່ອນຳໃຊ້ເປັນຂໍ້ມູນພື້ນຖານ ແລະ ການວິເຄາະ ກ່ຽວກັບຄວາມສ່ຽງຂອງຊຸມຊົນ ແລະ ປ່າໄມ້ ໃນປັດຈຸບັນ ແລະ ອະນາຄົດ (ຂໍ້ມູນນີ້ຈະຖືກນຳໃຊ້ໃນບາດກ້າວ ທີ 2.1.)

❖ ຈຸດປະສົງ

– ເພື່ອເກັບກຳຂໍ້ມູນພື້ນຖານທາງດ້ານເສດຖະກິດ-ສັງຄົມ (ຕາມເອກະສານຊ້ອນທ້າຍ A5)

– ເພື່ອເກັບກຳຂໍ້ມູນທາງດ້ານຄວາມສ່ຽງສູງທີ່ຈະເກີດໄພຂົ່ມຂູ່ຕໍ່ຊີວະນາໆພັນ (ຕາມແບບຟອມໃນເອກະສານຊ້ອນທ້າຍ A6)

❖ ກຸ່ມເປົ້າໝາຍ

ຕາງໜ້າຂອງຊຸມຊົນ ໃນເຂດພື້ນທີ່ໂຄງການ ຢ່າງໜ້ອຍ **5** ຄົນ ຕໍ່ບ້ານ ຊຶ່ງປະກອບມີ ອົງການປົກຄອງບ້ານ, ອົງການຈັດຕັ້ງມະຫາຊົນຂອງບ້ານ ແລະ ສະມາຊິກບ້ານ ທີ່ໃຊ້ປະໂຫຍດຈາກປ່າສະຫງວນ.

1.3.1: ກ່ອນ: ກະກຽມ ແລະ ນັດໝາຍ

- ການກະກຽມອຸປະກອນ
  - ແບບຟອມ ເອກະສານຊ້ອນທ້າຍ A5 ແລະ A6
  - ອຸປະກອນ ການຂຽນປະກອບແບບຟອມ
  - ອຸປະກອນນຳໃຊ້ໃນກອງປະຊຸມປຶກສາຫາລື (ເຊັ່ນ: ເຈ້ຍໃບໃຫຍ່, ປິກເຟີສ...)
- ຮວບຮວມຂໍ້ມູນມືສອງ ຈາກເມືອງ ຫຼື ໂຄງການພັດທະນາ ທີ່ເຄີຍໄດ້ເກັບກຳຂໍ້ມູນຈາກບ້ານເປົ້າໝາຍ;
- ວາງແຜນ ແລະ ກະກຽມຄວາມພ້ອມຂອງທີມງານ, ກຳນົດພາລະບົດບາດ ແລະ ຕົກລົງກ່ຽວກັບວິທີການໃນການເກັບກຳຂໍ້ມູນ;
- ນັດໝາຍຕົວແທນບ້ານ ໂດຍອີງຕາມຄວາມສະດວກຂອງສະມາຊິກສ່ວນຫຼາຍ ແລະ ແຈ້ງໃຫ້ຕາງໜ້າບ້ານ ກະກຽມຂໍ້ມູນກ່ຽວກັບບ້ານຂອງຕົນ ຕາມທີ່ໄດ້ລະບຸໄວ້ໃນແບບຟອມທັງສອງສະບັບ;
- ແຈ້ງໃຫ້ຕາງໜ້າບ້ານ ຮວບຮວມສຳເນົາແຜນພັດທະນາບ້ານ, ແຜນການນຳໃຊ້ທີ່ດິນ, ເອກະສານໂຄງການລົງທຶນ ແລະ ເອກະສານທີ່ກ່ຽວຂ້ອງ ຂອງໂຄງການອື່ນ ຖ້າມີ.

1.3.2: ລະຫວ່າງ: ເກັບກຳຂໍ້ມູນພື້ນຖານທາງດ້ານເສດຖະກິດ-ສັງຄົມ ຈາກອົງການປົກຄອງບ້ານ

- ໃຫ້ຄວາມຮູ້ ແລະ ຄວາມເຂົ້າໃຈກ່ຽວກັບການອະນຸລັກປ່າສະຫງວນ ແລະ ການພັດທະນາບ້ານ ເພື່ອໃຫ້ຕາງໜ້າບ້ານເຫັນຄວາມສຳຄັນຂອງການເກັບຂໍ້ມູນ;
- ເກັບຂໍ້ມູນຈາກຕົວແທນຂອງບ້ານ ໂດຍໃຊ້ແບບຟອມການເກັບກຳຂໍ້ມູນພື້ນຖານທາງດ້ານເສດຖະກິດ-ສັງຄົມ ໃນເອກະສານຊ້ອນທ້າຍ A5

1.3.3: ລະຫວ່າງ: ດຳເນີນການປະເມີນໄພຂົ່ມຂູ່ຕໍ່ຊີວະນາໆພັນແບບມີສ່ວນຮ່ວມ

ຄຳຖາມຫຼັກ ທີ່ນຳໃຊ້ໃນການເກັບຂໍ້ມູນເຂົ້າໃນແບບຟອມ ມີດັ່ງນີ້:

- ລາຍການໄພຂົ່ມຂູ່ຕໍ່ປ່າສະຫງວນ. ຄວນນຳໃຊ້ຄຳຖາມ ແລະ ບັນທຶກຄຳຕອບລົງໃນເຈ້ຍແຜ່ນໃຫຍ່ ເພື່ອໃຫ້ໄດ້ຂໍ້ມູນທີ່ຄົບຖ້ວນ ດັ່ງລຸ່ມນີ້:
  - ແມ່ນຫຍັງທີ່ ກໍ່ໃຫ້ເກີດຄວາມເສຍຫາຍໃຫ້ແກ່ປ່າໄມ້ໃນພື້ນທີ່ ທີ່ຢູ່ໃກ້ກັບຊຸມຊົນ?
  - ຊະນິດພັນພືດ ແລະ ສັດປ່າ ຊະນິດໃດທີ່ກຳລັງຈະສູນພັນ ຫຼື ຖືກທຳລາຍ? ແລະ ຍ້ອນສາເຫດຫຍັງ?
  - ຜົນກະທົບຈາກໄພຂົ່ມຂູ່ເຫຼົ່ານີ້ມີຫຍັງແດ່? ຕໍ່ກັບຊຸມຊົນ? ຕໍ່ກັບປ່າໄມ້? ຕໍ່ກັບສັດປ່າ?
- ຈັດລຳດັບໄພຂົ່ມຂູ່ຕ່າງໆ ຕາມຄວາມຮ້າຍແຮງ. ຄວນນຳໃຊ້ຄຳຖາມ ແລະ ບັນທຶກຄຳຕອບລົງໃນເຈ້ຍແຜ່ນໃຫຍ່ ເພື່ອໃຫ້ໄດ້ຂໍ້ມູນທີ່ຄົບຖ້ວນ ດັ່ງລຸ່ມນີ້:
  - ບັນຫາໃດແດ່ທີ່ໄດ້ກ່າວມາຂ້າງເທິງ ທີ່ໜ້າເປັນຫ່ວງຫຼາຍທີ່ສຸດ?
  - ບັນຫາໃດທີ່ໜ້າເປັນຫ່ວງຫຼາຍ ໃຫ້ຈັດລຽງລຳດັບ? (1-10)

1.3.4: ລະຫວ່າງ: ທົບທວນຂໍ້ມູນ ກັບຕົວແທນຂອງແຕ່ລະບ້ານທີ່ເຂົ້າຮ່ວມ ແລະ ໃຫ້ຕົວແທນບ້ານຮັບຮອງ ຫຼື ກວດກາຄວາມຖືກຕ້ອງຂອງຂໍ້ມູນ ໃນແບບຟອມ.

ຂັ້ນຕອນນີ້ອາດມີຄວາມຈຳເປັນໃຫ້ພະນັກງານແຍກກັນເຮັດວຽກກັບແຕ່ລະບ້ານ.

- ທວນຄືນລາຍການ ແລະ ລຳດັບ. ຖາມຜູ້ເຂົ້າຮ່ວມວ່າລາຍການທີ່ມີຄວາມສຽງຂອງໄພຂົ່ມຂູ່ຊັບພະຍາກອນປ່າໄມ້ຄົບຖ້ວນ ແລະ ຖືກຕ້ອງແລ້ວບໍ່;
- ໃຫ້ແຕ່ລະກຸ່ມ ຊອກຫາວິທີການແກ້ໄຂບັນຫາ ເພື່ອຫຼຸດຜ່ອນໄພຂົ່ມຂູ່ ແລ້ວຂຽນໃສ່ເຈ້ຍໃບໃໝ່;
- ບັນທຶກຜົນໄດ້ຮັບໃນແບບຟອມການປະເມີນໄພຂົ່ມຂູ່ຊີວະນາໆພັນ. ນຳໃຊ້ກ້ອງດິຈິຕອລ ເຊັ່ນ: ກ້ອງໂທລະສັບ ເພື່ອຖ່າຍຮູບລຳດັບຂອງໄພຂົ່ມຂູ່ ພ້ອມທັງຮັກສາເຈ້ຍໄວ້.

1.3.5: ລະຫວ່າງ: ຢັ້ງຢືນຄວາມເຂົ້າໃຈ ແລະ ຄວາມສະໝັກໃຈເບື້ອງຕົ້ນ ໃນການເຂົ້າຮ່ວມ

ໂຄງການທີ່ໄດ້ຮັບທຶນຈາກ ກອງທຶນປົກປັກຮັກສາສິ່ງແວດລ້ອມ ຈະດຳເນີນໄດ້ກໍຕໍ່ເມື່ອປະຊາຊົນພາຍໃນບ້ານມີຄວາມເຂົ້າໃຈ, ເຫັນດີເຂົ້າຮ່ວມ ແລະ ມີຄວາມຕ້ອງການປະກອບສ່ວນເຂົ້າໃນການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ (PLUP), ການສ້າງແຜນພັດທະນາບ້ານ (CAP) ແລະ ປະຕິບັດເງື່ອນໄຂຂອງສັນຍາອະນຸລັກຂອງຊຸມຊົນ (CCA)

ທີມງານວິຊາການຕ້ອງສອບຖາມຜູ້ເຂົ້າຮ່ວມເພື່ອໃຫ້ອະທິບາຍກ່ຽວກັບຈຸດປະສົງຂອງໂຄງການ, ຈຸດປະສົງຂອງການອະນຸລັກ ແລະ ການປົກປ້ອງຊັບພະຍາກອນປ່າໄມ້, ຖ້າຜູ້ເຂົ້າຮ່ວມບໍ່ສາມາດອະທິບາຍໄດ້ຕ້ອງອະທິບາຍຄືນໃຫ້ເຂົ້າໃຈ. ພ້ອມກັນນັ້ນຕ້ອງຖາມຄືນຄວາມເຂົ້າໃຈກ່ຽວກັບ ຈຸດດັ່ງກ່າວອີກເທື່ອໜຶ່ງໃຫ້ຈະແຈ້ງກວ່າເກົ່າ. ຖາມຊຸມຊົນວ່າພັນທະຂອງຕົນໃນການດຳເນີນໂຄງການ ແລະ ຜົນກະທົບທີ່ອາດເກີດຂຶ້ນ. ຖ້າຜູ້ເຂົ້າຮ່ວມມີຄຳຖາມ ຫຼື ຄວາມເປັນຫ່ວງ ກອງປະຊຸມນີ້ຈະເປັນໂອກາດທີ່ດີໃນການຕອບຄຳຖາມຂອງເຂົາເຈົ້າ. (ອ້າງອີງເອກະສານຊ້ອນທ້າຍ A13 ໃນການຢັ້ງຢືນຄວາມເຕັມໃຈຂອງຊຸມຊົນ)

1.3.6: ລະຫວ່າງ: ສະຫຼຸບກອງປະຊຸມ

- ຕອບຄຳຖາມ ແລະ ຄວາມເປັນຫ່ວງຕ່າງໆ
- ສະຫຼຸບກອງປະຊຸມ ແລະ ການຕັດສິນໃຈ
- ປິດກອງປະຊຸມ

1.3.7: ຫຼັງ: ສັງລວມ ແລະ ວິເຄາະຂໍ້ມູນ

1. ສະຫຼຸບບັນທຶກຢ່າງລະອຽດກ່ຽວກັບກິດຈະກຳ ແລະ ເກັບກຳລາຍຊື່ຂອງຜູ້ເຂົ້າຮ່ວມ;
2. ສັງລວມຂໍ້ມູນທີ່ກ່ຽວຂ້ອງກັບຊຸມຊົນ ແລະ ເຮັດໃຫ້ສາມາດນຳໃຊ້ໄດ້;
3. ຫຼັງຈາກເກັບກຳຂໍ້ມູນຈາກບ້ານແລ້ວ, ຂໍ້ມູນທັງໝົດ ຈະຖືກຮຽບຮຽງ ແລະ ວິເຄາະ. ກວດເບິ່ງຄວາມຖືກຕ້ອງ ແລະ ເກັບໄວ້ໃນບ່ອນທີ່ປອດໄພ;
4. ຂຽນປົດລາຍງານ.

❖ **ຄຳແນະນຳເພີ່ມເຕີມ:**

- ບາດກ້າວທີ 1.2 ແລະ 1.3 ສາມາດຈັດຕັ້ງປະຕິບັດແຍກ ຫຼື ພ້ອມກັນໄດ້;
- ຂໍ້ມູນທີ່ເກັບກຳໃນສອງບາດກ້າວນີ້ ຖ້າຍັງບໍ່ສົມບູນ ແມ່ນສາມາດເກັບເພີ່ມເຕີມໄດ້ໃນຂັ້ນຕອນຕໍ່ໄປ ແຕ່ຄວນຈະເກັບຂໍ້ມູນໃຫ້ເປັນພື້ນຖານ ເພື່ອນຳໄປວິເຄາະສ້າງແຜນການ ສ້າງຄວາມຮັບຮູ້ກັບຊຸມຊົນໃນບາດກ້າວ ທີ 2.1;
- ຂໍ້ມູນທາງດ້ານເສດຖະກິດ-ສັງຄົມ ຈະຕ້ອງອີງຕາມຂໍ້ມູນທີ່ເປັນຈິງ ແລະ ຂໍ້ມູນປັດຈຸບັນ ເນື່ອງຈາກຂໍ້ມູນດັ່ງກ່າວຈະໄດ້ນຳໄປໃຊ້ໃນການສ້າງແຜນພັດທະນາບ້ານ ໃນບາດກ້າວທີ 3.2 (ກວດຄືນ);
- ສາມາດມອບແບບຟອມໃຫ້ຕາງໜ້າບ້ານເປັນຜູ້ຕື່ມຂໍ້ມູນ ໃນບາດກ້າວທີ 1.2. ແລະ ໂຄງການ ຈະຕ້ອງໄດ້ຕິດຕາມ ແລະ ເກັບຂໍ້ມູນເພີ່ມເຕີມ ຖ້າຍັງເຫັນວ່າບໍ່ຄົບຖ້ວນ;
- ການເກັບກຳຂໍ້ມູນໃນບາດກ້າວນີ້ ຍັງຖືເປັນການສ້າງຄວາມຮັບຮູ້ທາງອ້ອມໃຫ້ແກ່ຊຸມຊົນ ກ່ຽວກັບການອະນຸລັກ ແລະ ການພັດທະນາຊຸມຊົນ ດ້ວຍການໃຫ້ຜູ້ເຂົ້າຮ່ວມເຜີຍແຜ່ຂໍ້ມູນໃຫ້ປະຊາຊົນພາຍໃນບ້ານ;
- ຄວນຈະມີຜູ້ເຮັດໜ້າທີ່ ໃນການບັນທຶກຕະຫຼອດໄລຍະການຈັດຕັ້ງປະຕິບັດກິດຈະກຳ ຕັ້ງແຕ່ຕົ້ນຈົນຈົບ.

ຂັ້ນຕອນ 2: ການສ້າງຄວາມຮັບຮູ້ຂອງຊຸມຊົນ ແລະ ການເກັບກຳຂໍ້ມູນຊັບພະຍາກອນທຳມະຊາດ

ບາດກ້າວ 2.1: ການປຶກສາຫາລືກັບຊຸມຊົນ

ເຈົ້າຂອງໂຄງການ ແລະ ທີມງານວິຊາການຈະເດີນທາງໄປບ້ານຕ່າງໆ ເພື່ອແລກປ່ຽນຂໍ້ມູນຂ່າວສານກ່ຽວກັບໂຄງການ, ການອະນຸລັກ ແລະ ຜົນໄດ້ຮັບຂອງການວິເຄາະຊັບພະຍາກອນທຳມະຊາດ. ວຽກງານນີ້ຈະເຮັດໃຫ້ຊຸມຊົນໄດ້ຮັບຂໍ້ມູນ ທີ່ຈະຊ່ວຍໃນການຕັດສິນໃຈຂອງຕົນ ວ່າເຫັນດີກັບໂຄງການຫຼື ບໍ່ ແລະ ໃຫ້ຂໍ້ມູນແກ່ເຈົ້າຂອງໂຄງການ ກ່ຽວກັບການນຳໃຊ້ຊັບພະຍາກອນທຳມະຊາດຂອງຊຸມຊົນ ແລະ ບັນຫາຂອງການພັດທະນາ ທີ່ຕ້ອງໄດ້ມີການພິຈາລະນາ ແລະ ແກ້ໄຂໃນລະຫວ່າງການດຳເນີນໂຄງການ.

❖ **ຈຸດປະສົງ**

- ເພື່ອໃຫ້ຄວາມຮູ້ແກ່ສະມາຊິກຊຸມຊົນກ່ຽວກັບເປົ້າໝາຍ, ຈຸດປະສົງ, ຂັ້ນຕອນ ແລະ ຜົນໄດ້ຮັບຈາກໂຄງການ;
- ເພື່ອຢັ້ງຢືນຄວາມສະໝັກໃຈໃນການເຂົ້າຮ່ວມໂຄງການຂອງປະຊາຊົນພາຍໃນບ້ານ (ເອກະສານຊ້ອນທ້າຍ A14);
- ເພື່ອກຳນົດແຜນການຈັດຕັ້ງປະຕິບັດຂັ້ນຕອນ ແລະ ບາດກ້າວຂອງໂຄງການພາຍໃນບ້ານ;

❖ **ກຸ່ມເປົ້າໝາຍ**

- ອົງການປົກຄອງບ້ານ, ອົງການຈັດຕັ້ງມະຫາຊົນຂອງບ້ານ
- ປະຊາຊົນພາຍໃນບ້ານ
- ກໍລະນີມີຫຼາຍຊົນເຜົ່າພາຍໃນບ້ານ ຕ້ອງໃຫ້ມີທຸກຊົນເຜົ່າເຂົ້າຮ່ວມທັງໝົດ

❖ **ວິທີການ**

2.1.1: ກ່ອນ: ປະສານງານ ແລະ ວາງແຜນການປະຊຸມ

- ປະສານງານກັບຊຸມຊົນ ເພື່ອກຳນົດເວລາທີ່ສະດວກສຳລັບເຂົາເຈົ້າ
- ກະກຽມວາລະກອງປະຊຸມ ແລະ ວາງແຜນການປະຊຸມ
- ອອກໜັງສືເຊີນ ຜູ້ເຂົ້າຮ່ວມ ໂດຍແຈ້ງຈຸດປະສົງ ແລະ ວາລະຂອງກອງປະຊຸມ
- ກະກຽມອຸປະກອນ

ອຸປະກອນຕ່າງໆ

- ອຸປະກອນເຜີຍແຜ່ຂໍ້ມູນໂຄງການ ປະກອບມີ: ແຜ່ນພັບ, ຮູບພາບ, ວີດີໂອ ແລະ ອື່ນໆ ໃນການໃຫ້ຄວາມຮູ້ກ່ຽວກັບ ຂະບວນການ, ຜົນປະໂຫຍດ, ຜົນກະທົບ ແລະ ພັນທະສັນຍາທີ່ຮຽກຮ້ອງຈາກຊຸມຊົນ



ຮູບພາບ 10 ການເກັບກຳຂໍ້ມູນທາງດ້ານຊັບພະຍາກອນທຳມະຊາດ ແລະ ເສດຖະກິດ-ສັງຄົມ

ກິດຈະກຳ	ຈຸດປະສົງ	ເປົ້າໝາຍຜູ້ເຂົ້າຮ່ວມ	ວິທີການ	ໜ້າ
1. ປະຫວັດຄວາມເປັນມາ ຂອງ ບ້ານ	• ເພື່ອເກັບກຳປະຫວັດຄວາມເປັນມາ ຂອງບ້ານ • ເພື່ອບັນທຶກເຫດການ ທີ່ສຳຄັນດ້ານທີ່ດີ ແລະ ທາງທີ່ເປັນຜົນເສຍຕໍ່ບ້ານຈາກອະດີດເຖິງປັດຈຸບັນ	ອົງການປົກຄອງບ້ານ, ອົງ ການຈັດຕັ້ງມະຫາຊົນ, ແນວ ໂຮມບ້ານ ແລະ ປະຊາຊົນພາຍ ໃນບ້ານ	ສົນທະນາເປັນກຸ່ມ ພ້ອມກັບ ບັນທຶກໃສ່ ເຈ້ຍ ແຜ່ນໃຫ່ຍ	27
2. ແຕ້ມແຜນວາດທາງສັງຄົມ	• ເພື່ອແຕ້ມແຜນຜັງທີ່ຕັ້ງຂອງບ້ານໂດຍສະແດງຂອບ ເຂດ, ເສັ້ນທາງ, ທີ່ຕັ້ງຂອງບ້ານ, ໂຮງຮຽນ ແລະ ໂຄງລ່າງພື້ນຖານຂອງບ້ານ ແລະ ອື່ນໆ	ກຸ່ມເພດຊາຍ ແລະ ກຸ່ມເພດຍິງ	ແຕ້ມໃສ່ເຈ້ຍແຜ່ນໃຫ່ຍ	29
3. ການນຳໃຊ້ຊະນິດພັນພືດ ແລະ ສັດປ່າຕ່າງໆ ຂອງບ້ານ	• ເພື່ອຮວບຮວມ,ລະບຸຊື່ຊະນິດພັນພືດ ແລະ ສັດປ່າ ທີ່ສຳຄັນ ແລະ ໃກ້ຈະສູນພັນ • ເພື່ອລວບລວມເອົາຊື່ຊະນິດພັນພືດ ແລະ ສັດປ່າ ແລະ ການນຳໃຊ້ປະໂຫຍດຂອງຊຸມຊົນ	ກຸ່ມຜູ້ຊາຍ ແລະ ກຸ່ມແມ່ຍິງ	ທົບທວນຄືນລາຍຊື່ຂອງ ຊະນິດພັນພືດ ແລະ ສັດປ່າ ພ້ອມທັງບັນທຶກ	29
4.ແຕ້ມແຜນວາດແຫຼ່ງ ຊັບພະຍາກອນທຳມະຊາດ ຂອງ ບ້ານ	• ເພື່ອແຕ້ມຂອບເຂດຊາຍແດນຂອງບ້ານ ແລະ ສະ-ແດງທີ່ຕັ້ງຂອງພູເຂົາ, ປ່າໄມ້, ພື້ນທີ່ທຳມາຫາກິນ, ແຫຼ່ງນ້ຳ, ຫ້ວຍນ້ຳ, ເສັ້ນທາງຄົມມະນາຄົມ, ພື້ນທີ່ ທຳການຜະລິດ, ພື້ນທີ່ລ້ຽງສັດ ແລະ ອື່ນໆ	ກຸ່ມຜູ້ຊາຍ ແລະ ກຸ່ມແມ່ຍິງ	ແຕ້ມໃສ່ເຈ້ຍແຜ່ນໃຫ່ຍ	32
5.ຈັດລຳດັບຖານະດ້ານ ເສດຖະກິດຂອງຄົວເຮືອນ	• ເພື່ອຈັດລຳດັບຖານະຄວາມເປັນຢູ່ ທາງດ້ານເສດຖະ ກິດຂອງປະຊາຊົນພາຍໃນບ້ານ • ເພື່ອເກັບກຳຈຳນວນຄອບຄົວໃນແຕ່ລະຖານະ	ອົງການປົກຄອງບ້ານ, ອົງ ການຈັດຕັ້ງມະຫາຊົນ ແລະ ແນວໂຮມບ້ານ	ສົນທະນາກຸ່ມ ພ້ອມກັບ ບັນທຶກໃສ່ ເຈ້ຍ ແຜ່ນໃຫ່ຍ	33
6. ວິເຄາະເສດຖະກິດຂອງບ້ານ	• ເພື່ອສັງລວມ ຂໍ້ມູນ ກິດຈະກຳ ໃນການສ້າງລາຍຮັບ ແລະ ລາຍຈ່າຍ ຂອງຄອບຄົວ ແບບພາບລວມ ຂອງ ຊຸມຊົນ • ເພື່ອຈັດລຽງ ບູລິມະສິດ ທາງດ້ານລາຍຮັບ ແລະ ລາຍ ຈ່າຍ	ກຸ່ມຜູ້ຊາຍ ແລະ ກຸ່ມແມ່ຍິງ	ສົນທະນາເປັນກຸ່ມ ພ້ອມກັບ ບັນທຶກໃສ່ ເຈ້ຍ ແຜ່ນໃຫ່ຍ	34
7. ບັນຫາຫຼັກ ແລະ ຮູບແບບ ການແກ້ໄຂບັນຫາຂອງບ້ານ	• ເພື່ອຮັບຮູ້ບັນຫາຫຼັກ ແລະ ຮູບແບບການ ແກ້ໄຂ ບັນຫາຂອງບ້ານທີ່ຜ່ານມາ • ເພື່ອຮັບຮູ້ ສະເໜີ ຕໍ່ການແກ້ໄຂບັນຫາຂອງບ້ານ • ເພື່ອກຳນົດບູລິມະສິດບັນຫາທີ່ຕ້ອງໄດ້ແກ້ໄຂ	ກຸ່ມຜູ້ຊາຍ ແລະ ກຸ່ມແມ່ຍິງ	ສົນທະນາເປັນກຸ່ມ ພ້ອມກັບ ບັນທຶກໃສ່ ເຈ້ຍ ແຜ່ນໃຫ່ຍ	35
8. ປະຕິທິນລະດູການ ແລະ ວັດທະນະທຳຂອງບ້ານ	• ເພື່ອຮັບຮູ້ຊ່ວງເວລາໃນຮອບປີ ຂອງຊຸມຊົນໃນການ ທຳການຜະລິດ, ລ້ຽງສັດ, ທຳມາຫາກິນ, ກິດຈະກຳ ສ້າງລາຍຮັບ ແລະ ຮີດຄອງປະເພນີ • ເພື່ອຮັບຮູ້ບົດບາດຍິງ-ຊາຍ ຕາມກິດຈະກຳຕ່າງໆໃນ ຮອບປີຂອງຊຸມຊົນ	ກຸ່ມຜູ້ຊາຍ ແລະ ກຸ່ມແມ່ຍິງ	ແຕ້ມໃສ່ເຈ້ຍແຜ່ນໃຫ່ຍ	36

- *ອຸປະກອນເຜີຍແຜ່ຄວາມຮູ້ກ່ຽວກັບ ການອະນຸລັກ ຊຶ່ງເຈົ້າຂອງໂຄງການຈະຕ້ອງໄດ້ກະກຽມໃຫ້ເໝາະກັບພື້ນທີ່ ປະກອບມີ: ແຜ່ນພັບ, ຮູບພາບ, ວີດີໂອ ແລະ ອື່ນໆ ທີ່ສາມາດສ້າງຄວາມເຂົ້າໃຈໃຫ້ແກ່ປະຊາຊົນໂດຍງ່າຍ.*
- ກະກຽມສະຖານທີ່ທີ່ເໝາະສົມສຳລັບການຈັດກອງປະຊຸມ

2.1.2: ລະຫວ່າງ: ເປີດກອງປະຊຸມ

- **ເປີດ ແລະ ສ້າງຄວາມເຂົ້າໃຈກອງປະຊຸມ**
  - ແນະນຳຜູ້ເຂົ້າຮ່ວມ
  - ກ່າວເປີດກອງປະຊຸມ
  - ນຳສະເໜີຈຸດປະສົງຂອງກອງປະຊຸມ
  - ສອບຖາມຄວາມຄາດຫວັງຂອງປະຊາຊົນຕໍ່ກັບກອງປະຊຸມ
  - ປັບຈຸດປະສົງຂອງກອງປະຊຸມໃຫ້ເປັນໄປໃນທິດທາງດຽວກັບຄວາມຄາດຫວັງຂອງຊຸມຊົນ
  - ນຳສະເໜີວາລະຂອງການປະຊຸມ
- **ໃຫ້ຄວາມຮູ້ກ່ຽວກັບໂຄງການ**

ອະທິບາຍກ່ຽວກັບຄວາມເປັນມາ ແລະ ຄວາມສຳຄັນຂອງໂຄງການ, ເປົ້າໝາຍ ແລະ ຈຸດປະສົງ, ວິທີການດຳເນີນງານ, ຜົນໄດ້ຮັບ, ຜົນກະທົບທີ່ອາດຈະເກີດຂຶ້ນກັບປະຊາຊົນ ແລະ ການອະນຸລັກປ່າໄມ້, ບົດບາດຂອງໂຄງການ ແລະປະຊາຊົນຕໍ່ຄວາມສຳເລັດຂອງໂຄງການ

ການປະເມີນສະພາບຊຸມຊົນແບບມີສ່ວນຮ່ວມ (PRA)

ເຄື່ອງມື PRA ມີຄູ່ມືກ່ຽວກັບວິທີການດຳເນີນການທີ່ສາມາດນຳໃຊ້ໄດ້ຢູ່ ໃນບ້ານເປົ້າໝາຍ.

(ຄູ່ມືກະກຽມ ໂດຍສະຖາບັນ NAFRI ປີທີ 2007)



- **ການເຜີຍແຜ່ຂໍ້ມູນ ແລະ ປຸກຈິດສຳນຶກ**

ນຳສະເໜີຄວາມໝາຍຄວາມສຳຄັນໃນການປົກປັກຮັກສາຊັບພະຍາກອນປ່າໄມ້ ແລະ ສົນທະນາກ່ຽວກັບຜົນກະທົບຕໍ່ການດຳລົງຊີວິດຂອງປະຊາຊົນ ອະທິບາຍເຖິງການອະນຸລັກແລະ ການນຳໃຊ້ຊັບພະຍາກອນປ່າໄມ້ຢ່າງຍືນຍົງ ເຮັດໃຫ້ຊັບພະຍາກອນເຫຼົ່ານັ້ນຄົງຢູ່ຮອດຮຸ່ນລູກ ແລະ ຮຸ່ນຫຼານ. ຄວາມຍືນຍົງໝາຍເຖິງ ການດຸ່ນດ່ຽງລະຫວ່າງການຊົມໃຊ້ ແລະ ການຟື້ນຟູ ເພື່ອເຮັດໃຫ້ປ່າໄມ້ສາມາດສະໜອງສິ່ງທີ່ພວກເຮົາຕ້ອງການໄດ້ຕະຫຼອດໄປ.

ປຶກສາຫາລື ຜົນຂອງການເກັບກຳຂໍ້ມູນ ກ່ຽວກັບໄພຂົ່ມຂູ່ຕໍ່ຊັບພະຍາກອນທຳມະຊາດແບບມີສ່ວນຮ່ວມ (ບາດກ້າວ1.3.2) ໂດຍການນຳສະເໜີຂໍ້ມູນທີ່ໄດ້ຮັບ ຕໍ່ກອງປະຊຸມ ແລະ ຮ່ວມກັນພິຈາລະນາ ໃຫ້ເຫັນສະພາບໃນອະດີດ, ປັດຈຸບັນ ແລະ ຄາດຄະເນສະພາບໃນອະນາຄົດ ພ້ອມທັງຊ່ວຍກັນຄົ້ນຄວ້າຊອກຫາແນວທາງໃນການປົກປັກຮັກສາ, ຟື້ນຟູ ແລະ ອະນຸລັກຮ່ວມກັນ ໃນການນຳສະເໜີດັ່ງກ່າວ ອາດຈະມີການສະແດງຮູບພາບ ຫຼື ຮູບແຕ້ມຂອງຊະນິດພັນພືດ ແລະ ພັນສັດທີ່ຕ້ອງໄດ້ມີການປົກປັກຮັກສາ.

ພ້ອມກັນນັ້ນກໍ່ຕ້ອງອະທິບາຍເພື່ອຊ່ວຍໃຫ້ປະຊາຊົນເຂົ້າໃຈວ່າການອະນຸລັກສາມາດໃຫ້ຜົນປະໂຫຍດແກ່ບ້ານ, ແຕ່ອາດຈະສ້າງຜົນກະທົບຕໍ່ກັບຊຸມຊົນໄດ້ ຖ້າຖືກຈຳກັດການນຳໃຊ້ຊັບພະຍາກອນປ່າໄມ້. ໃນເວລາສົນທະນາໃຫ້ນຳໃຊ້ແຜ່ນພາບເພື່ອປຽບທຽບບ້ານທີ່ມີການອະນຸລັກ ແລະ ບ້ານທີ່ບໍ່ມີການອະນຸລັກຊັບພະຍາກອນປ່າໄມ້ ເພື່ອຊີ້ໃຫ້ເຫັນຜົນປະໂຫຍດຂອງການອະນຸລັກ.

ໂຄງການຈະທົດແທນໃຫ້ແກ່ຜູ້ໄດ້ຮັບຜົນກະທົບທາງລົບ ຫລື ເພີ່ມຜົນປະໂຫຍດແກ່ຊຸມຊົນໃຫ້ຫຼາຍຂຶ້ນ ເພື່ອໃຫ້ປະຊາຊົນພາຍໃນບ້ານສາມາດຢູ່ຮ່ວມກັບປ່າໄມ້ໄດ້ຢ່າງຍືນຍົງ.

- **ການປຶກສາລື, ສອບຖາມຄຳຄິດເຫັນຕໍ່ການອະນຸລັກ ແລະ ການພັດທະນາຂອງບ້ານ**

ເພື່ອໃຫ້ຜູ້ເຂົ້າຮ່ວມໄດ້ຊ່ວຍກັນປະກອບຄຳຄິດເຫັນ ຕ້ອງໃຊ້ຄຳຖາມ, ບັນທຶກ ແລະ ເກັບຄຳຕອບຂອງປະຊາຊົນດັ່ງນີ້:

- ບ້ານມີຄວາມຕ້ອງການໃນການອະນຸລັກດ້ານໃດແດ່?
- ຜົນກະທົບຕໍ່ຄອບຄົວ ແລະ ຊຸມຊົນໃນການປົກປັກຮັກສາ ຊະນິດພັນພືດ ແລະ ສັດປ່າຕ່າງໆມີຫຍັງແດ່?
- ຂໍ້ສະເໜີຂອງປະຊາຊົນ ເພື່ອທົດແທນຜົນກະທົບຈາກການປົກປັກຮັກສາ ຊະນິດພັນພືດ ແລະ ສັດປ່າເຫຼົ່ານັ້ນມີຫຍັງແດ່?
- ຂໍ້ສະເໜີອື່ນໆ ເພື່ອໃຫ້ເກີດການອະນຸລັກ ແລະ ພັດທະນາທີ່ຍືນຍົງມີຫຍັງແດ່?

2.1.3: ລະຫວ່າງ: ຢັ້ງຢືນຄວາມສະໝັກໃຈໃນການເຂົ້າຮ່ວມໂຄງການຈາກປະຊາຊົນພາຍໃນບ້ານ

ກ່ອນທີ່ຈະເລີ່ມຂັ້ນຕອນຕໍ່ໄປຂອງໂຄງການ, ທີມງານວິຊາການຈະຢັ້ງຢືນວ່າປະຊາຊົນພາຍໃນບ້ານມີຄວາມສະໝັກໃຈທີ່ຈະສືບຕໍ່.

ໃຊ້ ເອກະສານຊ້ອນທ້າຍ A13 ໃນການຢັ້ງຢືນການເຫັນດີຂອງປະຊາຊົນ

- **ທົບທວນ ແລະ ສ້າງຄວາມເຂົ້າໃຈຕໍ່ໂຄງການ**

ທີມງານວິຊາການ ຄວນຖາມວ່າພວກເຂົາເຂົ້າໃຈສິ່ງທີ່ເປັນຜົນປະໂຫຍດ, ຜົນກະທົບ, ແລະ ພັນທະ ຂອງເຂົາເຈົ້າ ຕໍ່ໂຄງການ ຫຼືບໍ່. ອະທິບາຍວ່າຂັ້ນຕອນຕໍ່ໄປໂຄງການຈະລົງເກັບກຳຂໍ້ມູນກ່ຽວກັບຊັບພະຍາກອນທຳມະຊາດ, ການວາງແຜນນຳໃຊ້ທີ່ດິນ, ແລະ ການສ້າງຂໍ້ຕົກລົງຮ່ວມກັນກັບບ້ານຖ້າຫາກວ່າປະຊາຊົນມີຄວາມກັງວົນ ຫຼື ຄຳຖາມ, ໂຄງການຕ້ອງຕອບເຂົາເຈົ້າຢ່າງເປີດເຜີຍ ແລະ ຊັດເຈນ.

- **ຖາມປະຊາຊົນວ່າ ພວກເຂົາເຈົ້າເຫັນດີທີ່ຈະສືບຕໍ່ຂັ້ນຕອນຕໍ່ໄປ ຫຼື ບໍ່ (ອ້າງອີງເອກະສານຊ້ອນທ້າຍ A13 ສຳລັບການຢັ້ງຢືນຄວາມເຕັມໃຈຂອງປະຊາຊົນ).**

ຖ້າຫາກຈຳນວນຫຼາຍບໍ່ເຫັນດີເປັນເອກະພາບ, ໃຫ້ຖາມເຫດຜົນກັບພວກເຂົາວ່າ ເປັນຫຍັງຈຶ່ງບໍ່ເຫັນດີ ແລະ ບັນທຶກເຫດຜົນເຫຼົ່ານີ້ເພື່ອລາຍງານໃຫ້ໂຄງການພາຍໃຕ້ ຫປກສ. ຊຸມຊົນມີສິດທີ່ຈະບໍ່ເຂົ້າຮ່ວມ.

ຖ້າຫາກປະຊາຊົນພາຍໃນບ້ານສ່ວນຫຼາຍເຫັນດີຕົກລົງທີ່ຈະສືບຕໍ່ໂຄງການກໍ່ໃຫ້ເລີ່ມຕົ້ນການວາງແຜນກິດຈະກຳໃນການດຳເນີນງານຂັ້ນຕອນຕໍ່ໄປ.

2.1.4: ລະຫວ່າງ: ກຳນົດແຜນການຈັດຕັ້ງປະຕິບັດຂັ້ນຕອນ ຂອງໂຄງການພາຍໃນບ້ານ

- ວາງແຜນຂັ້ນຕອນ ແລະ ບາດກ້າວຕໍ່ໄປໃນການເຮັດວຽກ ຮ່ວມກັບຊຸມຊົນ.

2.1.5: ຫຼັງ: ສະຫຼຸບ ແລະ ລາຍງານກິດຈະກຳ

- ປະຊຸມທີມງານ
- ສະຫຼຸບຜົນໄດ້ຮັບ ແລະ ບົດຮຽນ ທີ່ຖອດຖອນໄດ້
- ຂຽນບົດລາຍງານ

❖ **ຄຳແນະນຳເພີ່ມເຕີມ:**

- ຖ້າເປັນໄປໄດ້, ໃຫ້ເຊີນປະຊາຊົນ ຈາກບ້ານອື່ນ ບ້ານທີ່ກອງທຶນປົກປັກຮັກສາສິ່ງແວດລ້ອມ ໃຫ້ທຶນ ຫຼື ບ້ານທີ່ໄດ້ມີການລິເລີ່ມໂຄງການທີ່ຄ້າຍຄືກັນ. ຊຸກຍູ້ໃຫ້ເຂົາເຈົ້າ ສົນທະນາແລກປ່ຽນ ກ່ຽວກັບຜົນປະໂຫຍດ ແລະ ຜົນກະທົບຂອງໂຄງການທີ່ເກີດຂຶ້ນພາຍໃນບ້ານຂອງເຂົາເຈົ້າ.
- ບາດກ້າວນີ້ ຄວນເນັ້ນການມີສ່ວນຮ່ວມຂອງຊຸມຊົນໃນຂະບວນການຮຽນຮູ້ ແລະ ຫຼີກລ້ຽງການບັນຍາຍຝ່າຍດຽວຈາກເຈົ້າຂອງ ໂຄງການ

ບາດກ້າວ 2.2: ການເກັບກຳຂໍ້ມູນທາງດ້ານຊັບພະຍາກອນທຳມະຊາດ ແລະ ເສດຖະກິດ-ສັງຄົມ

❖ **ຈຸດປະສົງ**

- ເພື່ອຊ່ວຍໃຫ້ປະຊາຊົນພາຍໃນບ້ານເຂົ້າໃຈ ກ່ຽວກັບສະພາບໃນປັດຈຸບັນຂອງການນຳໃຊ້ຊັບພະຍາກອນທຳມະຊາດ ແລະ ຜົນຂອງການປ່ຽນແປງການນຳໃຊ້ ຊັບພະຍາກອນທຳມະຊາດ ຕໍ່ກັບການດຳລົງຊີວິດຂອງເຂົາເຈົ້າ ໂດຍນຳໃຊ້ວິທີການ ປະເມີນສະພາບຊົນນະບົດ ແບບມີສ່ວນຮ່ວມ (PRA);
- ເພື່ອເກັບກຳຂໍ້ມູນ ທາງດ້ານ ຊັບພະຍາກອນທຳມະຊາດ ແລະ ເສດຖະກິດ-ສັງຄົມ ທີ່ມີລາຍລະອຽດສົມບູນ,ຖືກຕ້ອງ ແລະ ໄດ້ຮັບການເຫັນດີຈາກປະຊາຊົນພາຍໃນບ້ານ;
- ເພື່ອເປັນຂໍ້ມູນພື້ນຖານສຳລັບການສ້າງແຜນພັດທະນາບ້ານ ໂດຍອີງຕາມພູມປັນຍາຊາວບ້ານ;
- ເພື່ອເປັນຂໍ້ມູນພື້ນຖານສຳລັບການວັດແທກການປ່ຽນແປງ ທີ່ເກີດຈາກໂຄງການ.

❖ **ກຸ່ມເປົ້າໝາຍ**

- ອົງການປົກຄອງບ້ານ, ອົງການຈັດຕັ້ງມະຫາຊົນຂອງບ້ານ
- ປະຊາຊົນພາຍໃນບ້ານ, ທຸກຄຸ້ມບ້ານ
- ກໍລະນີມີຫຼາຍຊົນເຜົ່າ ໃຫ້ທຸກຊົນເຜົ່າເຂົ້າຮ່ວມທັງໝົດ

2.2.1: ກ່ອນ: ການກະກຽມການເກັບຂໍ້ມູນ

- **ທີມງານທົບທວນຂະບວນການສຳລັບດຳເນີນການປະເມີນສະພາບຊົນນະບົດແບບມີສ່ວນຮ່ວມ (PRA) ແລະ ສ້າງແຜນ**

ທີມງານຄວນສ້າງແຜນລະອຽດ ພ້ອມທັງສ້າງວາລະກອງປະຊຸມ. ກິດຈະກຳເຫຼົ່ານີ້ຈະໃຊ້ເວລາ ສອງ ຫາ ສາມວັນຢູ່ແຕ່ລະບ້ານ ເພື່ອກຳນົດຜູ້ຮັບຜິດຊອບໃນການປະສານງານໂດຍລວມ, ຜູ້ດຳເນີນແຕ່ລະກິດຈະກຳ ແລະ ຜູ້ຮັບຜິດຊອບໃນການເກັບກຳຂໍ້ມູນ.

- **ປະສານສົມທົບກັບອົງການຈັດຕັ້ງພາຍນອກ**

ອົງການຈັດຕັ້ງພາຍນອກສາມາດໃຫ້ການສະໜັບສະໜູນ ແລະ ການຝຶກອົບຮົມ ເຊັ່ນ: ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ , ອົງການຈັດຕັ້ງສາກົນ, ການຈັດຕັ້ງຂອງລັດ, ການຈັດຕັ້ງສັງຄົມ ແຂວງ, ເມືອງ, ແລະ ອື່ນໆ. ທີມງານຄວນປະສານກັບອົງການຈັດຕັ້ງດັ່ງກ່າວ ເພື່ອຊ່ວຍໃນການວາງແຜນ ແລະ ການຈັດຕັ້ງປະຕິບັດໃນການເກັບກຳຂໍ້ມູນ.

- **ກະກຽມທີມງານວິຊາການ, ທີມງານທີ່ຈະດຳເນີນການປະເມີນ ແລະ ສັງລວມຂໍ້ມູນມືສອງ**

ກຳນົດວ່າແມ່ນໃຜຈະເຂົ້າຮ່ວມໃນການປະເມີນ, ລວມທັງກຳນົດທີມງານວິຊາການ, ທີ່ປຶກສາຈາກພາຍນອກ, ທວນຄືນຂະບວນການຮ່ວມກັບເຂົາເຈົ້າ ແລະ ວາງແຜນວ່າແມ່ນໃຜຈະເຂົ້າຮ່ວມໃນແຕ່ລະວຽກງານ.

ສະມາຊິກຢ່າງໜ້ອຍໜຶ່ງຄົນຂອງທີມງານຄວນມີຄວາມຊຳນິຊຳນານ ໃນການດຳເນີນການປະເມີນສະພາບຊົນນະບົດແບບມີສ່ວນຮ່ວມ (PRA) ຫຼື ເຄື່ອງມືທີ່ຄ້າຍຄືກັນ ແລະ ສະມາຊິກທີມງານຄົນອື່ນໆ ຄວນມີປະສົບການໃນການປະເມີນ ຢ່າງໜ້ອຍໜຶ່ງຄັ້ງ. ຖ້າບໍ່ມີ ປະສົບການ ແລະ ຄວາມຊຳນິຊຳນານດັ່ງກ່າວ ຕ້ອງມີການຝຶກອົບຮົມ ແລະ ການຊ່ວຍເຫຼືອເພີ່ມເຕີມຈາກພາຍນອກ, ໃນການຝຶກປະຕິບັດກິດຈະກຳ 9 ຢ່າງ ຂອງການປະເມີນສະພາບຊົນນະບົດແບບມີ ສ່ວນຮ່ວມ (PRA).

ຈັດຝຶກອົບຮົມໃຫ້ແກ່ທີມງານວິຊາການລະດັບກຸ່ມບ້ານ ເພື່ອໃຫ້ເຂົາເຈົ້າມີຄວາມເຂົ້າໃຈທີ່ຈະແຈ້ງກ່ຽວກັບຈຸດປະສົງ, ລັກສະນະ, ຂອບເຂດຂອງໂຄງການ, ການເກັບກຳຂໍ້ມູນຊັບພະຍາກອນ ແລະ ສາມາດອະທິບາຍຄືນໃຫ້ຊຸມຊົນຂອງຕົນເອງໄດ້ຮັບຮູ້. ພວກເຂົາເຈົ້າຍັງຈະຊ່ວຍໃນການສື່ສານກັບຊຸມຊົນ ແລະ ຮັບປະກັນວ່າໂຄງການດຳເນີນໄປ ດ້ວຍຄວາມເຕັມໃຈຂອງປະຊາຊົນພາຍໃນບ້ານ. ສັງລວມຂໍ້ມູນມືສອງ ທີ່ມີຄວາມຈຳເປັນໃນການດຳເນີນການເກັບກຳຂໍ້ມູນແບບມີສ່ວນຮ່ວມຂອງຊຸມຊົນ (PRA)

- **ການປະສານງານກັບບ້ານ**

ທີມງານຕ້ອງປະສານສົມທົບກັບຄະນະກຳມະການພັດທະນາບ້ານ ແລະ ປະຊາຊົນພາຍໃນບ້ານ ເພື່ອກຳນົດວັນ ແລະ ເວລາທີ່ບ້ານມີຄວາມສະດວກໃນການເຂົ້າຮ່ວມ ແລ້ວຈັດຕາຕະລາງກິດຈະກຳ, ເຮັດວຽກຮ່ວມກັນ . ຜູ້ເຂົ້າຮ່ວມຄວນປະກອບມີເພດຍິງ, ຕົວແທນຂອງທຸກຊົນເຜົ່າ ຫຼື ກຸ່ມຄົນ ທີ່ດ້ອຍໂອກາດ ແລະ ອື່ນໆ ພາຍໃນບ້ານ.

- **ກະກຽມອຸປະກອນຕ່າງໆທີ່ຈຳເປັນ**
  - ແບບສອບຖາມ,
  - ເຈ້ຍ A0, A4
  - ປົກເຟີດຫຼາຍໆສີໃນຈຳນວນທີ່ພໍພຽງ
  - ສະກ໊ອດຕິດ ແລະ ເຂັມມຸດ
  - ແຜນທີ່ບ້ານ (ຖ້າມີ)
  - ກ້ອງຖ່າຍຮູບ
  - ປຶ້ມຂຽນ ແລະ ປົກ
  - ອຸປະກອນອື່ນໆ ທີ່ຈຳເປັນ.

2.2.2: ລະຫວ່າງ: ຢັ້ງຢືນການເຫັນດີກ່ອນເລີ່ມການເກັບກຳຂໍ້ມູນ PRA

ຂໍ້ຄິດເຫັນຂອງປະຊາຊົນ ກ່ຽວກັບການລິເລີ່ມໂຄງການ ກ່ອນການເກັບກຳຂໍ້ມູນ, ທີມງານວິຊາການ ຈະມີການເລີ່ມຈັດຕັ້ງປະຕິບັດການເກັບກຳຂໍ້ມູນຊັບພະຍາກອນທຳມະຊາດ ຖ້າຜູ້ເຂົ້າຮ່ວມສ່ວນຫຼາຍ ລວມທັງທຸກຊົນເຜົ່າ ສະແດງຄວາມເຕັມໃຈກໍ່ສືບຕໍ່ດຳເນີນງານ ດັ່ງນີ້:

2.2.3: ລະຫວ່າງ: ການດຳເນີນການເກັບກຳຂໍ້ມູນ PRA ພາຍໃນບ້ານ

ຈັດແບ່ງກຸ່ມປະຊາຊົນອອກເປັນກຸ່ມຜູ້ຊາຍ ແລະ ກຸ່ມແມ່ຍິງ ເພື່ອເຂົ້າຮ່ວມໃນແຕ່ລະກິດຈະກຳ ໂດຍການນຳໃຊ້ເຈ້ຍແຜ່ນໃຫຍ່ ແລະ ແບບຟອມ ທີ່ມີໃນເອກະສານຊ້ອນທ້າຍ ພ້ອມທັງວິທີການ ດັ່ງລຸ່ມນີ້:.

- **ປະຫວັດຄວາມເປັນມາຂອງບ້ານ**

❖ **<u>ຈຸດປະສົງ</u>**

– ເພື່ອເກັບກຳປະຫວັດຄວາມເປັນມາ ຂອງບ້ານ
– ເພື່ອບັນທຶກເຫດການສຳຄັນ ທີ່ເຄີຍເກີດຂຶ້ນພາຍໃນບ້ານແຕ່ອະດີດເຖິງປະຈຸບັນ

❖ **<u>ວິທີການ</u>**

ຈັດກຸ່ມປຶກສາຫາລື ກັບແນວໂຮມຂອງບ້ານ ຫຼື ຜູ້ທີ່ຍັງກຳປະຫວັດຄວາມເປັນມາຂອງບ້ານ ພ້ອມທັງເຊີນຕົວແທນຈາກແຕ່ລະຊົນເຜົ່າ ທີ່ມີພາຍໃນບ້ານມາເຂົ້າຮ່ວມ.

ບາງບ້ານອາດມີຫຼາຍຄຸ້ມບ້ານ ທີ່ມີປະຫວັດຄວາມເປັນມາແຕກຕ່າງກັນ, ຕົວຢ່າງ: ມີຫຼາຍຊົນເຜົ່າ ຫຼື ຫຼາຍບ້ານ ທີ່ໄດ້ມີການໂຮມເຂົ້າກັນໃນອະດີດ. ໃຫ້ນຳໃຊ້ແບບຟອມສະເພາະ ເພື່ອບັນທຶກປະຫວັດຄວາມເປັນມາທີ່ແຕກຕ່າງກັນ. ນຳໃຊ້ຄຳຖາມ ແລະ ບັນທຶກຄຳຕອບກ່ຽວກັບລາຍລະອຽດປະຫວັດຂອງບ້ານ ຫຼື ຄຸ້ມບ້ານ ດັ່ງນີ້:

- ບ້ານໄດ້ສ້າງຕັ້ງຂຶ້ນໃນປີໃດ? ແມ່ນໃຜເປັນຜູ້ສ້າງຕັ້ງກ່ອນໝູ່?
- ຊື່ຂອງບ້ານມີຄວາມໝາຍວ່າແນວໃດ?
- ແຕ່ລະຊົນເຜົ່າເຂົ້າມາຢູ່ໃນບ້ານໃນປີໃດແດ່?
- ບ້ານເຄີຍມີການຍົກຍ້າຍບໍ່? ເຄີຍມີຊຸມຊົນອື່ນໆຍົກຍ້າຍເຂົ້າມາໃນບ້ານນີ້ບໍ່?
- ໄລຍະຜ່ານມາມີການພັດທະນາໃດແດ່ ທີ່ເກີດຂຶ້ນເປັນຕົ້ນ: ໄຟຟ້າ, ນ້ຳປະປາ, ຫົນທາງ, ໂຮງຮຽນ ແລະ ອື່ນໆ?

- ໂຄງການພັດທະນາຂະໜາດໃຫຍ່ເກີດຂຶ້ນປີໃດແດ່?
- ປ່າສະຫງວນ *(PA)* ແລະ ປ່າປ້ອງກັນໄດ້ຖືກຮັບຮອງໃນປີໃດ? ໄດ້ກໍ່ໃຫ້ເກີດມີການປ່ຽນແປງຕໍ່ບ້ານຄືແນວໃດແດ່?
- ມີເຫດການໄພພິບັດທາງດ້ານທໍາມະຊາດ ແລະ ການລະບາດຂອງພະຍາດຫຍັງແດ່ທີ່ເກີດຂຶ້ນພາຍໃນບ້ານ?
- ຈໍານວນປະຊາກອນຂອງບ້ານທີ່ມີໃນແຕ່ລະໄລຍະຄືແນວໃດ?
- ວິທີການຄຸ້ມຄອງຊັບພະຍາກອນທໍາມະຊາດທີ່ໄດ້ໃຊ້ໃນແຕ່ລະໄລຍະຄືແນວໃດ?
- ການແຕ້ມແຜນວາດທາງສັງຄົມແບບມີສ່ວນຮ່ວມ

❖ **<u>ຈຸດປະສົງ</u>**


– ເພື່ອແຕ້ມແຜນຜັງທີ່ຕັ້ງບ້ານ ໂດຍສະແດງຂອບເຂດ, ເສັ້ນທາງ, ທີ່ຕັ້ງຂອງບ້ານ, ໂຮງຮຽນ ແລະ ໂຄງລ່າງພື້ນຖານຂອງ ບ້ານ ແລະ ອື່ນໆ ໃຫ້ກວດຄືນຈຸດປະສົງໃນຂໍ້ທີ່ຜ່ານມາ

❖ **<u>ວິທີການ</u>**

ແຍກປະຊາຊົນພາຍໃນບ້ານອອກເປັນສອງກຸ່ມ ປະກອບດ້ວຍ ກຸ່ມແມ່ຍິງ ແລະ ກຸ່ມຜູ້ຊາຍ. ກວດຄືນຂໍ້ຜ່ານມາຂໍໃຫ້ຊາວບ້ານ ແຕ້ມແຜນທີ່ຂອງບ້ານໃສ່ເຈ້ຍແຜ່ນໃຫ່ຍດ້ວຍປົກເຟິດ. ຖ້າມີແຜນທີ່ຢູ່ແລ້ວ ກໍ່ໃຫ້ໃຊ້ແຜນທີ່ນັ້ນເປັນບ່ອນອີງໃນການແຕ້ມແຜນ ວາດ ໃຫ້ຖືກຕ້ອງຫຼາຍຂຶ້ນ. ຊ່ວຍອໍານວຍຄວາມສະດວກໃນການສົນທະນາກັນພາຍໃນກຸ່ມ, ບັນທຶກຄໍາເຫັນ ແລະ ຜົນໄດ້ຮັບຂອງ ການສົນທະນາ. ຂໍໃຫ້ປະຊາຊົນພາຍໃນບ້ານແຕ້ມລາຍການທີ່ໄດ້ກ່າວໄວ້ຂ້າງລຸ່ມນີ້ໃສ່ແຜນວາດ ໂດຍໃຊ້ປົກເຟິດສີທີ່ເໝາະສົມ. ແຕ້ມແຜນວາດເຂດປຸກສ້າງບ້ານ ແລະ ເຂດທີ່ຢູ່ອ້ອມຂ້າງບ້ານ (ບ້ານໃກ້ຄຽງ, ປ່າໄມ້, ແລະ ອື່ນໆ)

- ຫົນທາງຫຼັກທີ່ຜ່ານບ້ານ
- ແມ່ນ້ໍາ ຫຼື ຫ້ວຍທີ່ໄຫຼຜ່ານບ້ານ
- ຫ້ອງການບ້ານ, ເຮືອນຂອງນາຍບ້ານ ແລະ ຜູ້ນໍາຂອງບ້ານຜູ້ອື່ນໆ
- ເຂດສະເພາະຊົນເຜົ່າຢູ່ໃນບ້ານ (ຖ້າມີ)
- ສະຖານທີ່ ທີ່ມີຄວາມສໍາຄັນທາງດ້ານວັດທະນະທໍາ
- ສຸກສາລາ
- ໂຮງຮຽນ
- ຕະຫຼາດ
- ວັດ
- ປ່າຊ້າ
- ສະຖານທີ່ຈັດງານເທສະການ ຫຼື ງານບຸນປະເພນີຕ່າງໆ
- ສະຖານທີ່ອື່ນໆ

ບັນທຶກຈໍານວນສະມາຊິກຂອງບ້ານທີ່ຮ່ວມໃນການສ້າງແຜນວາດ, ລວມທັງຈໍານວນຜູ້ຍິງ ແລະ ຜູ້ຊາຍ.



ຮູບພາບ 11 ການແຕ້ມແຜນວາດທາງສັງຄົມແບບມີສ່ວນຮ່ວມ

ການນຳໃຊ້ຊະນິດພັນພືດ ແລະ ສັດປ່າ ຕ່າງໆຂອງຊຸມຊົນ ແລະ ການປະເມີນຊັບພະຍາກອນທຳມະຊາດແບບວ່ອງໄວ

❖ **<u>ຈຸດປະສົງ</u>**

- ເພື່ອຮວບຮວມ ແລະ ລະບຸຊື່ຊະນິດພັນພືດ ແລະ ສັດປ່າທີ່ ສຳຄັນ ແລະ ໃກ້ຈະສູນພັນ
- ເພື່ອເກັບກຳຂໍ້ມູນການນຳໃຊ້ປະໂຫຍດຈາກຊະນິດພັນພືດ ແລະ ສັດປ່າຂອງຊຸມຊົນ
- ເພື່ອຈັດ 10 ອັນດັບທຳອິດ ຂອງຊະນິດພັນພືດ ແລະ ສັດປ່າທີ່ສຳຄັນ, ທີ່ຖືກໄພຂົ່ມຂູ່ (ໃກ້ຈະສູນພັນ) ແລະ ທີ່ຍັງມີຢ່າງຫຼວງຫຼາຍ
- ເພື່ອປຽບທຽບການນຳໃຊ້ ໃນອະດີດ ແລະ ປະຈຸບັນ ລວມເຖິງສາເຫດຂອງການປ່ຽນແປງ

❖ **<u>ວິທີການ</u>**

- ນຳສະເໜີລາຍຊື່ຂອງຊະນິດພັນພືດ ແລະ ສັດປ່າໃຫ້ປະຊາຊົນໄດ້ຮັບຮູ້ນຳກັນ
- ສອບຖາມຄຳຖາມລຸ່ມນີ້ ກັບປະຊາຊົນ ເພື່ອເກັບຂໍ້ມູນໃສ່ໃນແບບຟອມການນຳໃຊ້ຊະນິດພັນພືດ ແລະ ສັດປ່າຕ່າງໆຂອງປະຊາຊົນ (ເອກະສານຊ້ອນທ້າຍ A8):
  - ຊະນິດພັນພືດ ແລະ ສັດປ່າໃດທີ່ພົບເຫັນຢູ່ໃນບ້ານ ແລະ ພື້ນທີ່ອ້ອມຮອບ?
  - ຊະນິດພັນພືດ ແລະ ສັດປ່າໃດແດ່ທີ່ເອົາມານຳໃຊ້ເປັນອາຫານ ແລະ ນຳໃຊ້ພາຍໃນຄົວເຮືອນ?
  - ຊະນິດພັນພືດ ແລະ ສັດປ່າໃດທີ່ເກັບເອົາໄວ້ ເພື່ອຊື້ຂາຍ?
  - ໃນການນຳໃຊ້ຊະນິດພັນພືດ ແລະ ສັດປ່າແມ່ນເອົາສ່ວນໃດມານຳໃຊ້ ແລະ ເອົາມາໃຊ້ແນວໃດ?
- ຊະນິດພັນພືດ ແລະ ສັດປ່າ10 ອັນດັບທຳອິດທີ່ສຳຄັນຂອງບ້ານ, ການປຽບທຽບການນຳໃຊ້ໃນອະດີດ ແລະ ປັດຈຸບັນ ແລະ ສາເຫດຂອງການປ່ຽນແປງ (ເອກະສານຊ້ອນທ້າຍ A9)
  - ຈັດລຽງ 10 ອັນດັບທຳອິດຂອງຊະນິດພັນພືດ ແລະ ສັດປ່າມີຄວາມສຳຄັນຂອງບ້ານ ແມ່ນຫຍັງແດ່?

ຊະນິດພັນພືດ ແລະ ສັດປ່າທີ່ປະຊາຊົນພາຍໃນບ້ານມັກນຳເອົາມາໃຊ້ຫຼາຍທີ່ສຸດ ມີຫຍັງແດ່? ໄລຍະເດີນທາງໄປລ່າສັດ, ຊອກຫາ ແລະ ເກັບເອົາມາຊົມໃຊ້ ໃນປັດຈຸບັນ ທຽບໃສ່ ໃນ 5 ປີຫຼັງເປັນແນວໃດ (ໄກ ຫຼື ໃກ້) ? ປະລິມານທີ່ເກັບໄດ້ໃນປັດຈຸບັນ ທຽບໃສ່ ໃນ 5 ປີຫຼັງ ເປັນແນວໃດ (ຫຼາຍ ຫຼື ໜ້ອຍ)? ສາເຫດຂອງການປ່ຽນແປງແມ່ນຫຍັງ?

– ຈັດລຽງ 10 ອັນດັບທຳອິດຂອງຊະນິດພັນພືດ ແລະ ສັດປ່າທີ່ຖືກໄພຂົ່ມຂູ່ (ໃກ້ສູນພັນ) ມີຫຍັງແດ່?

ຊະນິດພັນພືດ ແລະ ສັດປ່າທີ່ປະຊາຊົນພາຍໃນບ້ານບອກວ່າ ຊອກຫາຍາກ ຍ້ອນວ່າຊະນິດພັນພືດ ແລະ ສັດປ່າເຫຼົ່ານັ້ນຖືກເກັບເອົາມາຊົມໃຊ້ ຫຼື ຖືກລ່າຫຼາຍເກີນໄປ ມີອັນໃດແດ່? ໄລຍະເດີນທາງໄປລ່າ, ຊອກຫາ ແລະ ເກັບເອົາມາຊົມໃຊ້ ໃນ 5 ປີຫຼັງ ແລະ ປັດຈຸບັນ ເປັນແນວໃດ(ໄກ ຫຼື ໃກ້) ? ປະລິມານທີ່ເກັບໄດ້ໃນ 5 ປີຫຼັງ ແລະ ປັດຈຸບັນ ເປັນແນວໃດ(ຫຼາຍ ຫຼື ໜ້ອຍ)? ສາຍເຫດຂອງການປ່ຽນແປງແມ່ນຫຍັງ?

– ຈັດລຽງ 10 ອັນດັບທຳອິດຂອງຊະນິດພັນພືດ ແລະ ສັດປ່າທີ່ຍັງມີຢ່າງຫຼວງຫຼາຍ

ຊະນິດພັນພືດ ແລະ ສັດປ່າໃດແດ່ທີ່ສາມາດເອົາມານຳໃຊ້ ຫຼື ເອົາໄປຂາຍໄດ້ ທີ່ປະຊາຊົນພາຍໃນບ້ານເຫັນວ່າມີຢ່າງຫຼວງຫຼາຍຢູ່ໃນປ່າ? ໄລຍະການເດີນທາງຊອກຫາ ແລະ ເກັບເອົາມາຊົມໃຊ້ ໃນ 5 ປີຫຼັງ ແລະ ປັດຈຸບັນ ເປັນແນວໃດ(ໄກ ຫຼື ໃກ້) ? ລະດັບທີ່ເກັບໄດ້ໃນ 5 ປີຫຼັງ ແລະ ປັດຈຸບັນ ເປັນແນວໃດ (ຫຼາຍ ຫຼື ໜ້ອຍ)? ສາຍເຫດຂອງການປ່ຽນແປງແມ່ນຫຍັງ?

❖ <u>ຂໍ້ຄິດເຫັນເພີ່ມຕື່ມ</u>

ການເກັບກຳຂໍ້ມູນ ໃຫ້ຂຽນໃສ່ເຈ້ຍແຜ່ນໃຫຍ່ ເພື່ອໃຫ້ປະຊາຊົນໄດ້ຮັບຮູ້ ແລະ ເຫັນນຳກັນ. ພາຍຫຼັງໄດ້ຂໍ້ສະຫຼຸບແລ້ວ ຈຶ່ງຈຶ່ງນຳຂໍ້ມູນມາບັນທຶກໃນແບບຟອມ.

- **ການແຕ້ມແຜນວາດແຫຼ່ງຊັບພະຍາກອນທຳມະຊາດຂອງບ້ານ**


❖ **<u>ຈຸດປະສົງ</u>**

– *ເພື່ອແຕ້ມຂອບເຂດຄຸ້ມຄອງ ການນຳໃຊ້ຊັບພະຍາກອນທຳມະຊາດ, ຂອງບ້ານ ແລະ ສະແດງທີ່ຕັ້ງຂອງ ພູເຂົາ, ປ່າ, ພື້ນທີ່ທຳມາຫາກິນ, ແຫຼ່ງນ້ຳ, ຫ້ວຍນ້ຳ, ເສັ້ນທາງຄົມມະນາຄົມ, ພື້ນທີ່ທຳການຜະລິດ, ພື້ນທີ່ລ້ຽງສັດ ແລະ ອື່ນໆ*

❖ **<u>ວິທີການ</u>**

ຈັດແບ່ງກຸ່ມຜູ້ເຂົ້າຮ່ວມກອງປະຊຸມອອກເປັນສອງກຸ່ມຄື: ກຸ່ມຜູ້ຊາຍ ແລະ ກຸ່ມຜູ່ຍິງ. ຂໍໃຫ້ແຕ່ລະກຸ່ມແຕ້ມແຜນວາດຂອບເຂດຄຸ້ມຄອງຂອງບ້ານ ເພື່ອສະແດງທີ່ຕັ້ງຂອງຊັບພະຍາກອນທຳມະຊາດ ແລະ ແຫຼ່ງການເຮັດກະສິກຳທີ່ມີຢູ່ໃນບ້ານ. ໃຫ້ລວມເອົາເຂດພື້ນທີ່ຊັບພະຍາກອນທີ່ຊາວບ້ານນຳໃຊ້ທີ່ອາດຈະຢູ່ນອກຂອບເຂດຂອງບ້ານເຂົ້ານຳ. ໃນການແຕ້ມແຜນວາດແຫຼ່ງຊັບພະຍາກອນ ໃຫ້ພິຈາລະນາຄຳຖາມດັ່ງລຸ່ມນີ້:

- ຂອບເຂດຄຸ້ມຄອງຂອງບ້ານຢູ່ໃສ ແລະ ມີເຂດແດນຕິດກັບຫຍັງແດ່? (ເຂດປ່າສະຫງວນ, ບ້ານອ້ອມຂ້າງ, ແມ່ນ້ຳ ແລະ ອື່ນໆ)
- ຊັບພະຍາກອນທຳມະຊາດອັນໃດທີ່ຢູ່ໃນຂອບເຂດຄຸ້ມຄອງຂອງບ້ານ ແລະ ເຂດອ້ອມຮອບ ທີ່ໄດ້ຖືກເອົາມານຳໃຊ້?
- ຊະນິດພັນພືດ ແລະ ສັດປ່າຫຼັກອາໃສຢູ່ບ່ອນໃດ? (ທີ່ໄດ້ຈັດລຽງໄວ້ໃນລາຍຊື່ຊະນິດພັນພືດ ແລະ ສັດປ່າ)
- ພື້ນທີ່ໃດທີ່ປະຊາຊົນພາຍໃນບ້ານສາມາດໄປຊອກຫາເຄື່ອງປ່າຂອງດົງ ໂດຍໃຫ້ອະທິບາຍດັ່ງລຸ່ມນີ້:
  - ເຂດພື້ນທີ່ປ່າໄມ້ ປະກອບມີ: ປ່າສະຫງວນ, ປ່າປ້ອງກັນ ແລະ ຊຶມໃຊ້*ເຂດປ້ອງກັນຊາດ ປ້ອງກັນຄວາມສະຫງົບ ປະກອບມີ: ເຂດປ້ອງກັນຍຸດທະສາດທາງການທະຫານ, ເຂດແນວຫຼັງຍຸດທະສາດການທະຫານ ແລະ ເຂດຊາຍແດນ ລະຫວ່າງປະເທດ*
  - *ເຂດວັດທະນາທຳ ປະກອບມີ ປ່າສັກສິດ, ປ່າຊ້ຳ ຫຼື ເຂດທີ່ກ່ຽວຂ້ອງກັບຄີດຄອງປະເພນີ? (ຖ້າຫາກມີຫຼາຍກຸ່ມທີ່ມີວັດທະນະທຳແຕກຕ່າງກັນ ອາໃສຢູ່ໃນບ້ານນັ້ນ, ໃຫ້ອະທິບາຍເຂດທີ່ມີຄວາມສຳຄັນສະເພາະຕໍ່ກັບແຕ່ລະວັດທະນະທຳ)*
  - *ເຂດພື້ນທີ່ກະສິກຳ ປະກອບມີ ເຂດໃດທີ່ໃຊ້ສຳລັບການເຮັດໄຮ່? ເຂດໃດທີ່ແມ່ນເຂດປ່າເຫຼົ່າ ເຂດໃດແມ່ນໄດ້ນຳໃຊ້ ໃນປະຈຸບັນນີ້ ແລະ ເຂດທີ່ຄາດວ່າຈະ ໄດ້ນຳໃຊ້ໃນອະນາຄົດ?*
  - *ກົດລະບຽບ ຫຼື ຂໍ້ຈຳກັດທາງດ້ານວັດທະນະທຳສະເພາະບ້ານ ໃນການນຳໃຊ້ເຄື່ອງປ່າຂອງດົງ ຫຼື ຂໍ້ຫ້າມໃນການເຂົ້າໄປ ໃນບາງພື້ນທີ່ຂອງປ່າ ມີຫຍັງແດ່?*
  - *ແມ່ນໃຜທີ່ໄດ້ຮັບອະນຸຍາດໃຫ້ເກັບ ຫຼື ນຳໃຊ້ເຄື່ອງປ່າຂອງດົງ ໃນແຕ່ລະພື້ນທີ່? (ຕົວຢ່າງ ປ່າບາງບ່ອນແມ່ນມີເຂດ ແດນຮ່ວມກັບບ້ານອື່ນ, ປະຊາຊົນໄດ້ຮັບອະນຸຍາດໃນການລ່າສັດ ຫຼື ເກັບເອົາເຄື່ອງປ່າຂອງດົງໃນເຂດດັ່ງກ່າວບໍ່?)*
- ແຫຼ່ງນ້ຳ (ນ້ຳສ້າງ, ນ້ຳອອກບໍ່, ແລະ ອື່ນໆ)
- ເຂດຫາປາ
- ເຂດເຮັດການກະສິກຳ
- ເຂດລ້ຽງສັດ (ໃນ ຫຼື ນອກເຂດປ່າສະຫງວນ)



ຮູບພາບ 12 ແຜນວາດການນຳໃຊ້ຊັບພະຍາກອນທຳມະຊາດຂອງຊຸມຊົນ

- **ຈັດລະດັບຖານະດ້ານ ເສດຖະກິດ ຂອງປະຊາຊົນພາຍໃນບ້ານ**

❖ **<u>ຈຸດປະສົງ</u>**

– ເພື່ອຈຳແນກຖານະຄວາມເປັນຢູ່ ທາງດ້ານເສດຖະກິດຂອງປະຊາຊົນພາຍໃນບ້ານ
– ເພື່ອເກັບກຳຈຳນວນ ລະດັບ ສະຖານະຂອງຄອບຄົວໃນບ້ານ

❖ **<u>ວິທີການ</u>**

– ຈັດກຸ່ມສົນທະນາ ເພື່ອໃຫ້ຂໍ້ມູນ ແລະ ສ້າງຄວາມເຂົ້າໃຈ ຕໍ່ການຈັດລະດັບຖານະຄວາມເປັນຢູ່ທາງເສດຖະກິດ ຂອງປະຊາຊົນພາຍໃນບ້ານເປົ້າໝາຍຫຼັກ ເພື່ອສຶກສາກ່ຽວກັບຊີວິດການເປັນຢູ່ຂອງປະຊາຊົນ ແລະ ຊອກຫາແນວທາງໃນການຊ່ວຍເຫຼືອເຊິ່ງກັນ ແລະ ກັນ ແລະ ບໍ່ແມ່ນ ເພື່ອສ້າງຄວາມອັບອາຍ.
– ໃຫ້ປະຊາຊົນພາຍໃນບ້ານເປັນຜູ້ກຳນົດເອງ ກ່ຽວກັບລັກສະນະ ແລະ ສະພາບຄວາມເປັນຈິງຂອງແຕ່ລະກຸ່ມສົນທະນາ ຕາມລະດັບຖານະທາງດ້ານເສດຖະກິດ ຂອງແຕ່ລະຄອບຄົວ (ເອກະສານຊ້ອນທ້າຍ A10).

- **ການວິເຄາະເສດຖະກິດຂອງບ້ານ**

❖ **<u>ຈຸດປະສົງ</u>**


– ເພື່ອສັງລວມຂໍ້ມູນ ກ່ຽວກັບກິດຈະກຳໃນການສ້າງລາຍຮັບ ແລະ ລາຍຈ່າຍ ຂອງຄອບຄົວ ແລະ ຂອງປະຊາຊົນພາຍໃນບ້ານ ໂດຍລວມ
– ເພື່ອຈັດລຽງບູລິມະສິດ ທາງດ້ານລາຍຮັບ ແລະ ລາຍຈ່າຍ

❖ **<u>ຮູບແບບວິທີການ</u>**

- ສ້າງຄວາມເຂົ້າໃຈໃຫ້ແກ່ຜູ້ເຂົ້າຮ່ວມກອງປະຊຸມກ່ຽວກັບຈຸດປະສົງຂອງຂັ້ນຕອນນີ້
- ນຳຮູບແຕ້ມ (ຮູບໄຫເປົ່າ) ທີ່ທີມງານໄດ້ກະກຽມໄວ້ໃນເຈ້ຍແຜ່ນໃຫຍ່ຕິດໃຫ້ສະມາຊິກກຸ່ມໄດ້ເຫັນນຳກັນ
- ທີມວິຊາການດຳເນີນການເກັບກຳຂໍ້ມູນຮ່ວມກັບປະຊາຊົນພາຍໃນບ້ານ ໂດຍນຳໃຊ້ຄຳຖາມດັ່ງລຸ່ມນີ້:
    - ລາຍຮັບທີ່ເຂົ້າມາໃນຄອບຄົວມີຫຍັງແດ່? (ໃຫ້ສອບຖາມຂໍ້ມູນໂດຍລະອຽດເຊັ່ນ: ຖ້າລາຍຮັບມາຈາກການເກັບເຄື່ອງປ່າຂອງດົງ, ໃຫ້ລະບຸວ່າເຄື່ອງປ່າຂອງດົງນັ້ນແມ່ນຫຍັງ?) ຂຽນຄຳຕອບລົງໃສ່ຮູບພາບດັ່ງລຸ່ມນີ້. ພາຍຫຼັງແຕ້ມລາຍຮັບໝົດແລ້ວ ໃຫ້ຈັດລຽງລຳດັບບູລິມະສິດລາຍຮັບທີ່ສຳຄັນວ່າອັນໃດເປັນລາຍຮັບຫຼັກ
    - ສອບຖາມກ່ຽວກັບລາຍຈ່າຍວ່າຄອບຄົວມີລາຍຈ່າຍຫຍັງແດ່? ດຳເນີນຂັ້ນຕອນດຽວກັນກັບລາຍຮັບ

❖ **<u>ຄຳແນະນຳເພີ່ມຕື່ມ</u>**

ເວລາບັນທຶກລາຍຮັບ ແລະ ລາຍຈ່າຍ ໃຫ້ຖາມເຈາະຈີ້ມໂດຍລະອຽດ ເຊັ່ນ: ຄ່າປິ່ນປົວຈາກການເຈັບປ່ວຍ ຕ້ອງລະບຸວ່າປ່ວຍເປັນພະຍາດຫຍັງ ແລະ ຄ່າປິ່ນປົວລວມມີການໃຊ້ຈ່າຍຫຍັງແດ່?



ຮູບພາບ 13 ແຜນວາດການວິເຄາະສະຖານະພາບ

- **ບັນຫາຫຼັກ ແລະ ຮູບແບບການແກ້ໄຂບັນຫາຂອງບ້ານ**

❖ <u>ຈຸດປະສົງ</u>

- ເພື່ອຮັບຮູ້ບັນຫາຫຼັກ ແລະ ຮູບແບບການແກ້ໄຂບັນຫາຂອງບ້ານທີ່ຜ່ານມາ
- ເພື່ອຮັບຮູ້ ຂໍ້ສະເໜີ ຕໍ່ການແກ້ໄຂບັນຫາຂອງບ້ານ
- ເພື່ອກຳນົດບຸລິມະສິດບັນຫາທີ່ຕ້ອງໄດ້ຮັບການແກ້ໄຂ

❖ <u>ວິທີການ</u>

ຈັດແບ່ງປະຊາຊົນຜູ້ເຂົ້າຮ່ວມ ອອກເປັນ 2 ກຸ່ມຄື: ກຸ່ມແມ່ຍິງ ແລະ ກຸ່ມຜູ້ຊາຍ, ຂໍໃຫ້ເຂົາເຈົ້າລະດົມຄວາມຄິດກ່ຽວກັບບັນຫາຫຼັກ ຂອງບ້ານວ່າມີຫຍັງແດ່? ໂດຍໃຫ້ດຳເນີນການຕາມຂັ້ນຕອນດັ່ງລຸ່ມນີ້: (ໃຫ້ອີງໃສ່ຕາລະລາງດັ່ງລຸ່ມນີ້).

- ບັນຫາທີ່ໃຫ່ຍທີ່ສຸດທີ່ກ່ຽວພັນກັບການດຳລົງຊີວິດ ແລະ ການອະນຸລັກ

ບັນຫາໃດທີ່ຕ້ອງການແກ້ໄຂພາຍໃນບ້ານນັ້ນ? (ໃຫ້ອະທິບາຍບັນຫາ, ບໍ່ແມ່ນແຕ່ອະທິບາຍປະເດັນ, ຕົວຢ່າງ: “ການຫຼຸດລົງຂອງຜົນຜະລິດ ຂອງທີ່ດິນກະສິກຳໃນແຕ່ລະປີ,” ບໍ່ແມ່ນ “ການກະສິກຳ”)

- ສາເຫດ ຫຼື ປັດໄຈ

ແມ່ນຫຍັງທີ່ເປັນສາເຫດ ຫຼື ເປັນປັດໄຈກ່ຽວພັນ ຂອງແຕ່ລະບັນຫາ?

- ຮູບແບບການແກ້ໄຂບັນຫາຂອງບ້ານ

ຜ່ານມາໄດ້ລອງແກ້ໄຂບັນຫາດ້ວຍວິທີໃດ, ແຜນແກ້ໄຂບັນຫາໃນອະນາຄົດ (ຕ້ອງເປັນແຜນທີ່ມີວິທີການແກ້ໄຂ ທີ່ສາມາດປະຕິບັດໄດ້)?

- ຄວາມຕ້ອງການ ຕໍ່ການສະໜັບສະໜູນ

ມີການສະໜັບສະໜູນອັນໃດແດ່ທີ່ບ້ານຕ້ອງການ ເພື່ອແກ້ໄຂບັນຫາ ທີ່ບໍ່ທັນໄດ້ແກ້ໄຂ?

- ລຳດັບຄວາມຮ້າຍແຮງ

ລຳດັບຄວາມຮ້າຍແຮງຂອງແຕ່ລະບັນຫາມີຫຍັງແດ່? (1 ແມ່ນມີຄວາມສຳຄັນທີ່ສຸດ)

ຫຼັງຈາກ ກຸ່ມແມ່ຍິງ ແລະ ຜູ້ຊາຍສຳເລັດກິດຈະກຳນີ້ແລ້ວ, ໃຫ້ນຳເອົາທັງສອງກຸ່ມເຂົ້າມາຮວມກັນ ແລະ ສັງລວມລາຍການທີ່ໄດ້ຈາກທັງສອງກຸ່ມເຂົ້າໃສ່ຕາຕະລາງອັນດຽວກັນ

- **ປະຕິທິນລະດູການ ແລະ ວັດທະນະທຳ**


❖ <u>ຈຸດປະສົງ</u>

- ເພື່ອຮັບຮູ້ຊ່ວງເວລາໃນຮອບປີ ຂອງບ້ານ ໃນການທຳການຜະລິດ, ລ້ຽງສັດ, ທຳມາຫາກິນ, ກິດຈະກຳສ້າງລາຍຮັບ ແລະ ຮີດຄອງປະເພນີ
- ເພື່ອຮັບຮູ້ຊ່ວງເວລາ ທີ່ສະດວກໃນການເຮັດກິດຈະກຳກັບຊຸມຊົນ
- ເພື່ອຮັບຮູ້ຊ່ວງເວລາທີ່ຄວນໄດ້ເອົາໃຈໃສ່ເປັນພິເສດໃນການແກ້ໄຂບັນຫາ ເຊັ່ນ: ຊ່ວງເວລາທີ່ມີການລ່າສັດຫຼາຍ ຫຼື ຊ່ວງເວລາທີ່ມີການຜະລິດເຂົ້າ ບໍ່ກຸ້ມກິນ
- ເພື່ອຮັບຮູ້ບົດບາດຂອງຍິງ-ຊາຍ ຕາມກິດຈະກຳຕ່າງໆໃນຮອບປີຂອງບ້ານ

❖ <u>ວິທີການ</u>

- ນຳຮູບແຕ້ມປະຕິທິນ (ຮູບຂ້າງລຸ່ມນີ້) ຂຶ້ນໃຫ້ປະຊາຊົນໄດ້ເຫັນ ພ້ອມອະທິບາຍຮູບແຕ້ມປະຕິທິນໃຫ້ຜູ້ເຂົ້າຮ່ວມໄດ້ເຂົ້າໃຈ ເຊັ່ນ: ເດືອນ 1 ແມ່ນເດືອນຕາມປະຕິທິນ ບໍ່ແມ່ນເດືອນ 1 ຕາມປະເພນີ
- ໃນການລະດົມຄວາມຄິດເຫັນ ເພື່ອບັນທຶກເປັນປະຕິທິນຂອງປີ ໃຫ້ດຳເນີນການດັ່ງນີ້:
  - ປະຕິທິນລະດູການຜະລິດ (ປູກຝັງ-ລ້ຽງສັດ) ຄື: ກິດຈະກຳຫຼັກຂອງປະຊາຊົນມີຫຍັງແດ່ ເຊັ່ນ: ເຮັດໄຮ່, ເຮັດນາ, ເຮັດສວນ ແລະ ລ້ຽງສັດ

- ກິດຈະກຳສ້າງລາຍຮັບຂອງຄອບຄົວ ແລະ ຊຸມຊົນ ຄື: ການເກັບເຄື່ອງປ່າຂອງດົງ (ສອບຖາມໂດຍລະອຽດວ່າເກັບຫຍັງແດ່? ການຂາຍສັດລ້ຽງ ຫຼື ຜົນຜະລິດຈາກຄອບຄົວ, ການໄປຮັບຈ້າງ ແລະ ອື່ນໆ.
- ປະເພນີ ແລະ ຮີດຄອງ ຄື: ຊຸມຊົນມີຮີດຄອງປະເພນີຫຍັງແດ່ໃນຮອບປີ?
- ໃນແຕ່ລະກິດຈະກຳແມ່ນໃຜເຮັດຫຍັງແດ່? (ໂດຍຍົກໃຫ້ເຫັນ ເພດ, ຊົນເຜົ່າ, ກຸ່ມອາຍຸ ສາມາດເຮັດກິດຈະກຳດ້ານໃດ)
- ຊ່ວງເວລາທີ່ໂຄງການ ບໍ່ຄວນເຂົ້າມາໃນບ້ານ ເນື່ອງຈາກຊຸມຊົນກຳລັງຢູ່ໃນຊ່ວງເວລາທຳການຜະລິດ ຫຼື ການຖືຮີດ? ຊ່ວງເວລາໃດທີ່ເໝາະສົມທີ່ສຸດສຳລັບເຮັດໂຄງການຢູ່ໃນບ້ານ ທີ່ຈະບໍ່ຕຳກັບເວລາເຮັດວຽກຂອງປະຊາຊົນ?



ຮູບພາບ 14 ປະຕິທິນລະດູການ ແລະ ວັດທະນະທຳ

- **ການວິເຄາະຕະຫຼາດໃນເຂດຊົນນະບົດແບບມີສ່ວນຮ່ວມ:**

❖ **<u>ຈຸດປະສົງ</u>**

– ເພື່ອກຳນົດຜະລິດຕະພັນທີ່ສາມາດຜະລິດພາຍໃນບ້ານ ແລະ ຂາຍໃຫ້ກັບຕະຫຼາດ

❖ **<u>ວິທີການ</u>**

- ເລືອກຜະລິດຕະພັນທີ່ເໝາະສົມທີ່ສຸດສຳລັບປະຊາຊົນພາຍໃນບ້ານໃນການຜະລິດເພື່ອສ້າງລາຍຮັບ

ເຂົ້າພົບກັບກຸ່ມຊາວກະສິກອນຂອງແຕ່ລະບ້ານ ແລະ ສົນທະນານຳເຂົາເຈົ້າກ່ຽວກັບຜະລິດຕະພັນ ທີ່ເຂົາເຈົ້າສາມາດປູກ ຫຼື ຜະລິດ ທີ່ຈະສາມາດຂາຍໄດ້ດີ ເພື່ອສ້າງລາຍຮັບໃຫ້ແກ່ຄອບຄົວຊາວກະສິກອນ. ອາດຈະໃຊ້ລາຍຊື່ຂອງຊະນິດພັນພືດ ແລະ ສັດປ່າ ແລະ ແຜນທີ່ຊັບພະຍາກອນ ຈາກແຕ່ລະບ້ານເປັນບ່ອນອ້າງອີງ.

ເລືອກຜະລິດຕະພັນທີ່ຕອບສະໜອງເງື່ອນໄຂການຜະລິດແບບຍືນຍົງລຸ່ມນີ້:

- ຜະລິດຕະພັນທີ່ຫຼຸດຜ່ອນໄພຂົ່ມຂູ່ຕໍ່ປ່າໄມ້ ແລະ ສັດປ່າໄດ້ໂດຍກົງ
- ສາມາດຜະລິດ ຫຼື ເກັບເອົາໄປຂາຍ ແລະ ສ້າງລາຍຮັບໃຫ້ຫຼາຍຄອບຄົວ
- ບໍ່ສ້າງຄວາມເສຍຫາຍໃຫ້ແກ່ສິ່ງແວດລ້ອມ (ບໍ່ໄດ້ຫາຍາກ ຫຼື ຖືກໄພຂົ່ມຂູ່)
- ບໍ່ຕ້ອງໄດ້ໃຊ້ຢາຂ້າແມງໄມ້, ຢາຂ້າຫຍ້າ ຫຼື ປຸຍເຄມີ
- ມີມູນຄ່າສູງໃນຕະຫຼາດ

ຖາມກ່ຽວກັບສະຖານທີ່ ແລະ ເວລາ (ເດືອນ) ທີ່ຜະລິດສິນຄ້າເຫຼົ່ານັ້ນ. ຖ້າເປັນໄປໄດ້ ຖາມກ່ຽວກັບຈຳນວນທີ່ສາມາດຜະລິດໄດ້. ຂໍໃຫ້ຊາວກະສິກອນເຮັດລາຍການຂໍ້ມູນກ່ຽວກັບຜູ້ຊື້ສິນຄ້າເຫຼົ່ານັ້ນ ຫຼື ຕະຫຼາດບ່ອນທີ່ເຂົາເຈົ້າເອົາສິນຄ້າໄປຂາຍ.

- ເລືອກຜະລິດຕະພັນທີ່ເໝາະສົມທີ່ສຸດໃນລະດັບກຸ່ມບ້ານໃນການຜະລິດເພື່ອສ້າງລາຍຮັບ
- ສັງລວມຂໍ້ມູນຕະຫຼາດ

ເດີນທາງໄປຕະຫຼາດ ຫຼື ຈັດເວລາ ເພື່ອພົບກັບຜູ້ຊື້ໂດຍນຳໃຊ້ຄຳຖາມດັ່ງລຸ່ມນີ້ກັບເຂົາເຈົ້າ:

- ທ່ານຊື້ຜະລິດຕະພັນເຫຼົ່ານີ້ຫຼາຍປານໃດ? ແລະ ໃນລາຄາເທົ່າໃດ?
- ຖ້າຜະລິດຕະພັນນັ້ນມີຂາຍ ທ່ານຈະຊື້ຫຼາຍປານໃດ
- ເດືອນໃດທີ່ທ່ານຊື້ຜະລິດຕະພັນຫຼາຍທີ່ສຸດ? ເດືອນໃດທີ່ທ່ານໄດ້ຜະລິດຕະພັນບໍ່ພຽງພໍ? ເດືອນໃດທີ່ຜະລິດຕະພັນຫຼາຍກວ່າທີ່ທ່ານຕ້ອງການຊື້?
- ມີຜະລິດຕະພັນອື່ນໆ ທີ່ຄອບຄົວຊາວກະສິກອນສາມາດຜະລິດໄດ້ຢ່າງຍືນຍົງທີ່ທ່ານຕ້ອງການຊື້ເປັນຈຳນວນຫຼາຍ? (ໂດຍອີງຕາມເງື່ອນການຜະລິດແບບຍືນຍົງຂ້າງເທິງ)
- ທ່ານຂາຍຕໍ່ຜະລິດຕະພັນທີ່ທ່ານຊື້ມາຢູ່ໃສ ຫຼື ຂາຍໃຫ້ໃຜ? ທ່ານຂາຍໃນລາຄາເທົ່າໃດ?
- ດຳເນີນການປະເມີນໃນແບບດຽວກັນກັບຜູ້ຊື້ໃນຂັ້ນຕໍ່ໄປ ຈົນຮອດຜູ້ທີ່ສົ່ງອອກ ຫຼື ຜູ້ຄ້າລາຍຍ່ອຍ.

2.2.4: ສະຫຼຸບ, ສັງລວມ ແລະ ວິເຄາະຂໍ້ມູນ

❖ **ທົບທວນຄືນເປັນກຸ່ມ**

ສະແດງຮູບແຕ້ມ ຫຼື ຄຳຕອບທີ່ໄດ້ບັນທຶກໃນເຈ້ຍແຜ່ນໃຫຍ່ທີ່ໄດ້ຈາກແຕ່ລະກິດຈະກຳ. ຂໍໃຫ້ຊາວບ້ານເບິ່ງເຈ້ຍແຕ່ລະແຜ່ນ ແລະ ຂໍໃຫ້ຄົນໃດຄົນໜຶ່ງຈາກຊຸມຊົນອະທິບາຍຄວາມໝາຍຂອງຂໍ້ມູນໃນນັ້ນ. ຖາມສະມາຊິກຄົນອື່ນໆວ່າໄດ້ອະທິບາຍຄົບຖ້ວນແລ້ວຫຼືບໍ່ ຫຼື ມີໃຜທີ່ຕ້ອງການປະກອບຄຳຄິດເຫັນເພີ່ມເຕີມ ຫຼື ມີໃຜທີ່ບໍ່ເຫັນດີກັບສິ່ງທີ່ໄດ້ແຕ້ມອອກມາ. ການເພີ່ມເຕີມ ຫຼື ດັດແກ້ຂໍ້ມູນ ໃຫ້ອີງຕາມຄວາມເຫັນດີຢ່າງເປັນເອກະພາບຂອງປະຊາຊົນ.


❖ **ສັງລວມ**

ໃຊ້ກ້ອງຖ່າຍຮູບດິຈິຕອລ ເຊັ່ນ: ກ້ອງໂທລະສັບ ເພື່ອຖ່າຍຮູບເຈ້ຍແຜ່ນໃຫຍ່ທັງໝົດໃຫ້ຈະແຈ້ງ ແລະ ຮັກສາເຈ້ຍແຜ່ນໃຫຍ່ໄວ້ນຳ. ເກັບຮວບຮວມເອົາເອກະສານທັງໝົດກັບຫ້ອງຂອງໂຄງການ ເພື່ອວິເຄາະຂໍ້ມູນ. ເກັບຂໍ້ມູນຕາມແບບຟອມໃນເອກະສານຊ້ອນທ້າຍ ເພື່ອຂຽນບົດລາຍງານການວິເຄາະຊັບພະຍາກອນ. ສິ່ງສຳເນົາຂອງບົດລາຍງານໃຫ້ບ້ານ.

ບາດກ້າວ 3.1: ການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ (PLUB)

ການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ (PLUP) ແມ່ນການແບ່ງເຂດ, ປະເພດ ແລະວາງແຜນຄຸ້ມຄອງນຳໃຊ້ທີ່ດິນ ເພື່ອສ້າງຄວາມຍືນຍົງ, ສ້າງຄວາມສົມດຸນ ລະຫວ່າງການຜັດທະນາທາງເສດຖະກິດ-ສັງຄົມ, ການປົກປັກຮັກສາສະພາບແວດລ້ອມ, ເພື່ອເຮັດໃຫ້ປະຊາຊົນພາຍໃນບ້ານຮັບຮູ້ເຖິງຄວາມເປັນເຈົ້າຂອງໃນທີ່ດິນ, ສາມາດນຳໃຊ້ທີ່ດິນໄດ້ຢ່າງໝັ້ນຄົງ ແລະ ຍືນຍົງ.

ສຳລັບບັນດາກິດຈະກຳຂອງ ການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ (PLUP) ແມ່ນປະຕິບັດຕາມຄູ່ມື “ການວາງແຜນນຳໃຊ້ທີ່ດິນ ກະສິກຳ-ປ່າໄມ້ຂັ້ນບ້ານ, ການສ້າງແຜນຈັດສັນທີ່ດິນຂັ້ນບ້ານ, ແລະ ກຸ່ມບ້ານຢ່າງມີສ່ວນຮ່ວມ”, ອາດຂໍຄວາມຊ່ວຍ ເຫຼືອຈາກຜູ້ຊ່ຽວຊານດ້ານວິຊາການ ໃນການດຳເນີນການສຳຫຼວດ ໃນການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ (PLUP), ມີລາຍລະອຽດ ແລະ ຂັ້ນຕອນ ສຳລັບຄູ່ມືແນະນຳການສ້າງແຜນຈັດສັນທີ່ດິນຂັ້ນບ້ານແມ່ນເບິ່ງຢູ່ໃນຄູ່ມື ເລກທີ 04 ຂອງກົມທີ່ດິນ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ. ເປັນຄູ່ມືເພື່ອແນະນຳກ່ຽວກັບ ລະບຽບ ການ ແລະ ຂັ້ນຕອນໃນການຈັດຕັ້ງປະຕິບັດວຽກງານການສ້າງແຜນຈັດສັນທີ່ດິນຂັ້ນບ້ານ ໃຫ້ຄວາມເປັນເອກະພາບກັນທົ່ວປະເທດ.



ຜົນໄດ້ຮັບຂອງຂະບວນການ ການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ (PLUP) ແມ່ນແຕ່ລະບ້ານມີແຜນນຳໃຊ້ທີ່ດິນ ຊຶ່ງໄດ້ແບ່ງທີ່ດິນອອກເປັນ 8 ປະເພດຂອງການນຳໃຊ້ທີ່ດິນ.

- **ຈຸດປະສົງ**
  - ວິເຄາະຂໍ້ມູນກ່ຽວກັບການນຳໃຊ້ຊັບພະຍາກອນທຳມະຊາດຂອງຊຸມຊົນ ໂດຍມີປະຊາຊົນພາຍໃນບ້ານເຂົ້າຮ່ວມ
  - ກຳນົດຂອບເຂດນຳໃຊ້ທີ່ດິນ ແລະ ປະເພດຂອງທີ່ດິນ ໃຫ້ຊັດເຈນ

❖ **ກຸ່ມເປົ້າໝາຍ**

- ອົງການປົກຄອງບ້ານ, ອົງການຈັດຕັ້ງມະຫາຊົນຂອງບ້ານ
- ປະຊາຊົນພາຍໃນບ້ານ
- ກໍລະນີມີຫຼາຍຊົນເຜົ່າ ໃຫ້ທຸກຊົນເຜົ່າເຂົ້າຮ່ວມທັງໝົດ

3.1.1: ກ່ອນ: ການກະກຽມ

1. ການປະສານງານກັບຄູ່ຮ່ວມງານ

ສ້າງຕັ້ງທີມງານເພື່ອດຳເນີນການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ (PLUP) ຊຶ່ງລວມທັງອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ, ທີມວິຊາການຈາກບັນດາກຸ່ມບ້ານ, ພະນັກງານຈາກໂຄງການ, ທີ່ປຶກສາ ແລະ ຜູ້ຊ່ຽວຊານດ້ານວິຊາການ.

ສ້າງແຜນ ແລະ ກຳນົດເວລາໃນການຈັດກິດຈະກຳຕ່າງໆ, ຊຶ່ງຄວນຄຳນຶງເຖິງຄວາມສະດວກຂອງປະຊາຊົນໃນບ້ານນັ້ນ ແລະ ງານບຸນເທດສະການທີ່ສຳຄັນ ຫຼື ລະດູການເກັບກ່ຽວຂອງພວກເຂົາເຈົ້າ.



ຮູບພາບ 15 ປະຊາຊົນພາຍໃນບ້ານສ້າງແຜນດຳເນີນງານຂອງຊຸມຊົນຈາກຂໍ້ມູນທີ່ສັງລວມໄດ້ຈາກການສຳຫຼວດ

2. ການກະກຽມເອກະສານ ແລະ ແຜນທີ່

- ສັງລວມ ແລະ ກະກຽມບັນດານະໂຍບາຍ, ຍຸດທະສາດ ແລະ ແຜນການທີ່ກ່ຽວຂ້ອງ
- ສັງລວມ ແລະ ກະກຽມແຜນທີ່ຂອງບ້ານ ແລະ ພື້ນທີ່ອ້ອມຮອບ
- ກະກຽມພາບຖ່າຍດາວທຽມຂອງເຂດພື້ນທີ່ນັ້ນ
- ກະກຽມຂໍ້ມູນທີ່ໄດ້ຈາກການສຳຫຼວດເສດຖະກິດສັງຄົມ ແລະ ປົດວິເຄາະຊັບພະຍາກອນຂອງແຕ່ລະພື້ນທີ່

3.1.2: ລະຫວ່າງ: ກອງປະຊຸມການວາງແຜນນຳໃຊ້ທີ່ດິນ ແລະ ກອງປະຊຸມຝຶກອົບຮົມ

- ດຳເນີນກອງປະຊຸມໃນແຕ່ລະບ້ານກ່ອນຈະເລີ່ມການປະເມີນການນຳໃຊ້ທີ່ດິນ ແລະ ອະທິບາຍຫົວຂໍ້ລຸ່ມນີ້:

- **ອະທິບາຍຈຸດປະສົງ ແລະ ຂັ້ນຕອນຕ່າງໆ ຂອງການວາງແຜນນຳໃຊ້ທີ່ດິນ**

ອະທິບາຍໃຫ້ປະຊາຊົນເຂົ້າໃຈກ່ຽວກັບຈຸດປະສົງ ແລະ ຂັ້ນຕອນຂອງການສຳຫຼວດ ແລະ ວາງແຜນນຳໃຊ້ທີ່ດິນ. ຊ່ວຍໃຫ້ປະຊາຊົນເຂົ້າໃຈວ່າ ການວາງແຜນນຳໃຊ້ທີ່ດິນ ຈະຊ່ວຍໃຫ້ເຂົາເຈົ້າໄດ້ຮູ້ກ່ຽວກັບເນື້ອທີ່ເຂດແດນຂອງທີ່ດິນຂອງພວກເຂົາຢ່າງຊັດເຈນ ແລະ ຍັງຊ່ວຍໃຫ້ ພວກເຂົາຮັກສາສິດນຳໃຊ້ທີ່ດິນ ໂດຍຫຼຸດຜ່ອນການເກີດຂໍ້ຂັດແຍ່ງ ແລະ ຄວາມສັບສົນໃຫ້ໜ້ອຍທີ່ສຸດ.

- **ສຶກສາອົບຮົມກ່ຽວກັບສິດຄອບຄອງທີ່ດິນຂອງບ້ານ ແລະ ໜ້າທີ່ຕ່າງໆ ເຊິ່ງປະກອບມີເນື້ອໃນຕໍ່ໄປນີ້:**

<u>ຜົນປະໂຫຍດຈາກທີ່ດິນ ແລະ ປ່າໄມ້ແມ່ນຫຍັງ?</u>

ຖ້າຫາກມີການນຳໃຊ້ຢ່າງຍືນຍົງ, ປ່າໄມ້ກໍ່ສະໜອງສະບຽງອາຫານໃນຮູບແບບຂອງພືດ ແລະ ສັດ ໄດ້ຢ່າງພຽງພໍ ແລະ ຍາວນານ. ນອກນັ້ນ, ມັນຍັງຊ່ວຍປົກປ້ອງເຂດບໍລິເວນນ້ຳ ເພື່ອຮັກສາສາຍນ້ຳ ແລະ ປ້ອງກັນການເຊາະເຈື່ອນ. ປ່າໄມ້ຍັງສາມາດຖືກນຳໃຊ້ສຳລັບຈຸດປະສົງອື່ນໆ ເຊັ່ນ: ເປັນທົ່ງຫຍ້າສຳລັບລ້ຽງສັດ ແລະ ດຶງດູດນັກທ່ອງທ່ຽວ.

ສິດໃນການນຳໃຊ້ທີ່ດິນແມ່ນຫຍັງ?

ສິດໃນການນຳໃຊ້ທີ່ດິນປະກອບມີ **4** ສິດ ຄື:

- ສິດປົກປັກຮັກສາ
- ສິດຊົມໃຊ້
- ສິດໄດ້ຮັບຜົນປະໂຫຍດ
- ສິດສືບທອດ

ຫາກທີ່ດິນໄດ້ຮັບການຂຶ້ນທະບຽນ ແລະ ອອກໃບຕາດິນ, ກໍ່ຈະເພີ່ມສິດທິ 5 ຄື: ສິດໃນການຊື້ ແລະ ຂາຍທີ່ດິນ.

ທ່ານສາມາດແກ້ໄຂບັນຫາຂໍ້ຂັດແຍ່ງ ແລະ ການຜິດຖຽງກັນກ່ຽວກັບທີ່ດິນໄດ້ແນວໃດ?

ຖ້າຫາກມີການວາງແຜນນຳໃຊ້ທີ່ດິນ, ກໍ່ຈະເຮັດໃຫ້ການຜິດຖຽງກັນ ແລະ ຂໍ້ຂັດແຍ່ງກ່ຽວກັບທີ່ດິນເກີດຂຶ້ນໜ້ອຍລົງ. ເມື່ອເວລາເກີດມີຂໍ້ຂັດແຍ່ງ, ກໍ່ຈະມີກົນໄກສຳລັບແກ້ໄຂບັນຫາເຫຼົ່ານີ້:

- ການແກ້ໄຂບັນຫາແບບຮີດຄອງປະເພນີ ແລະ ແບບບໍ່ເປັນທາງການ
- ໜ່ວຍໄກ່ເກ່ຍຂັ້ນບ້ານ

- **ຕອບຄຳຖາມທີ່ຊາວບ້ານໄດ້ຍົກຂຶ້ນ**

.....
.....
.....
.....
.....

3.1.3: ລະຫວ່າງ: ການສຳຫຼວດການນຳໃຊ້ທີ່ດິນ

- ນຳໃຊ້ແຜນທີ່ພູມສັນຖານຂອງປະເທດ, ພາບຖ່າຍດາວທຽມ, ແຜນທີ່ດິຈິຕອລ, ແລະ ອຸປະກອນ GPS ເພື່ອກຳນົດ ແລະ ອະທິບາຍຂອບເຂດຊາຍແດນຂອງບ້ານໃຫ້ຈະແຈ້ງ.
- ທົບທວນຄືນກ່ຽວກັບເຂດແດນລະຫວ່າງບ້ານ ແລະ ກຸ່ມບ້ານ.
- ຈັດທີ່ດິນບ້ານອອກເປັນແຕ່ລະປະເພດຕາມຄວາມເໝາະສົມ ຄື: ທີ່ດິນກະສິກຳ, ທີ່ດິນປ່າໄມ້, ທີ່ດິນບໍລິເວນນ້ຳ, ທີ່ດິນອຸດສາຫະກຳ (ຖ້າມີ), ທີ່ດິນຄົມມະນາຄົມ, ທີ່ດິນວັດທະນະທຳ, ທີ່ດິນປ້ອງກັນຊາດປ້ອງກັນຄວາມສະຫງົບ ແລະ ທີ່ດິນປຸກສ້າງ. ພ້ອມທັງລວມເອົາປະເພດຍ່ອຍຂອງແຕ່ລະປະເພດທີ່ດິນ.
- ການຈັດປະເພດທີ່ດິນຕ້ອງອີງໃສ່ຄວາມຕ້ອງການໃນການນຳໃຊ້ທີ່ດິນຂອງປະຊາຊົນພາຍໃນບ້ານ ແລະ ບໍ່ແມ່ນຂຶ້ນກັບແຜນການນຳໃຊ້ທີ່ດິນອັນເກົ່າ.
- ການສຳຫຼວດຈຳເປັນຕ້ອງດຳເນີນການ ໂດຍການລົງໄປສຳຫຼວດພາກສະໜາມ ແລະ ການບັນທຶກການນຳໃຊ້ທີ່ດິນຕົວຈິງ, ບໍ່ແມ່ນພຽງແຕ່ການສັງເກດຈາກແຜນທີ່ ແລະ ພາບຖ່າຍດາວທຽມ.

3.1.4: ລະຫວ່າງ: ການທົບທວນຄືນ ແລະ ແລກປ່ຽນ

- ຈັດຕັ້ງກອງປະຊຸມທົບທວນຄືນ ແລະ ແລກປ່ຽນກັນລະຫວ່າງປະຊາຊົນພາຍໃນບ້ານ.
- ກ່າວຄືນໃຫ້ປະຊາຊົນພາຍໃນບ້ານຮັບຮູ້ກ່ຽວກັບຈຸດປະສົງ ແລະ ເປົ້າໝາຍຂອງການວາງແຜນການນຳໃຊ້ທີ່ດິນແບບມີສ່ວນຮ່ວມ(PLUP).
- ນຳສະເໜີຜົນໄດ້ຮັບຂອງການສຳຫຼວດ, ສະແດງແຜນທີ່ ແລະ ບົດລາຍງານ.
- ປຶກສາຫາລືກ່ຽວກັບສິ່ງທ້າທ້າຍທີ່ເກີດໃນຂັ້ນຕອນການວາງແຜນການນຳໃຊ້ທີ່ດິນແບບມີສ່ວນຮ່ວມ (PLUP) ແລະ ບັນຫາທີ່ປະຊາຊົນພາຍໃນບ້ານອາດ ຈະປະສົບພົບພໍ້.
- ອະທິບາຍກ່ຽວກັບຂໍ້ສະເໜີ ແລະ ຂັ້ນຕອນຕໍ່ໄປ ສຳລັບແຜນການນຳໃຊ້ທີ່ດິນ

ບາງບ້ານອາດຈະມີການວາງແຜນການນຳໃຊ້ທີ່ດິນແບບມີສ່ວນຮ່ວມ (PLUP) ຢູ່ແລ້ວ. ແທນທີ່ຈະສ້າງແຜນການນຳໃຊ້ທີ່ດິນແບບມີສ່ວນຮ່ວມ (PLUP) ຊ້ຳຄືນ, ໂຄງການ ຄວນທົບທວນຄືນແຜນທີ່ມີຢູ່ແລ້ວ ຮ່ວມກັບປະຊາຊົນພາຍໃນບ້ານ ເພື່ອຮັບປະກັນວ່າ ແຜນນັ້ນຖືກຕ້ອງ ແລະ ສອດຄ່ອງກັບສະພາບຕົວຈິງໃນປັດຈຸບັນ.

3.1.5: ຫຼັງ: ສະຫຼຸບຜົນໄດ້ຮັບ ແລະ ບົດຮຽນທີ່ຖອດຖອນໄດ້

.....
.....
.....
.....
.....

ບາດກ້າວ 3.2: ແຜນພັດທະນາບ້ານ (CAP)

ແຜນພັດທະນາບ້ານ (CAP) ແມ່ນເອກະສານ ທີ່ມີຂໍ້ມູນກ່ຽວກັບເປົ້າໝາຍຂອງໂຄງການ ແລະ ຄວາມຕ້ອງການຂອງປະຊາຊົນ ເພື່ອໃຫ້ບັນລຸເປົ້າໝາຍຮ່ວມກັນ. ແຜນພັດທະນາບ້ານ (CAP) ຂອງແຕ່ລະບ້ານຈະມີຄວາມແຕກຕ່າງກັນ ໂດຍອີງໃສ່ຄວາມຕ້ອງ ການ ຂອງປະຊາຊົນໃນການປັບປຸງການດຳລົງຊີວິດ ແລະ ປົກປ້ອງຊັບພະຍາກອນທຳມະຊາດທີ່ພວກເຂົານຳໃຊ້.

ປະຊາຊົນພາຍໃນບ້ານ ຈະເປັນຜູ້ຂຽນ ແຜນພັດທະນາບ້ານ (CAP) ດ້ວຍຕົນເອງ ຊຶ່ງອີງໃສ່ຄວາມຕ້ອງການຂອງເຂົາເຈົ້າ ໂດຍການ ນຳພາ ຈາກທີມວິຊາການ ແລະ ຄະນະກຳມະການພັດທະນາບ້ານ (VDCs) ໃນການຄົ້ນຄິດກ່ຽວກັບການນຳໃຊ້ ຊັບພະຍາກອນທຳ ມະຊາດ ເຊັ່ນ: ເຄື່ອງປ່າຂອງດົງ, ສັດນ້ຳ ແລະ ສັດປ່າ. ແຜນພັດທະນາບ້ານ(CAP) ຈະໄດ້ນຳໃຊ້ເຂົ້າໃນການສ້າງສັນຍາອະນຸລັກ ຂອງບ້ານ ທີ່ປະຊາຊົນພາຍໃນບ້ານຕົກລົງເຫັນດີຮ່ວມກັນ.

ແຜນພັດທະນາບ້ານ (CAP) ຈະອີງໃສ່ຂໍ້ມູນທາງດ້ານຊັບພະຍາກອນຂອງບ້ານ, ການວາງແຜນນຳໃຊ້ທີ່ດິນແບບມີ ສ່ວນຮ່ວມ (PLUP), ການປະເມີນສະພາບຊົນນະບົດແບບມີສ່ວນຮ່ວມ (PRA), ຄວາມຕ້ອງການໃນການອະນຸລັກພື້ນທີ່ ແລະ ການພັດທະນາ ຂອງບ້ານເອງ. ນຳເອກະສານທັງໝົດເຫຼົ່ານີ້ ເພື່ອເລີ່ມຕົ້ນການສົນທະນາປຶກສາຫາລືຮ່ວມກັບປະຊາຊົນ ເພື່ອສ້າງແຜນພັດທະນາບ້ານ (CAP).

ແຜນພັດທະນາບ້ານ (CAP) ຕ້ອງສອດຄ່ອງກັບກົດໝາຍ ຂອງ ສປປ ລາວ, ຍຸດທະສາດປະເພນີ ແລະ ຄວາມຕ້ອງການ ຂອງປະຊາຊົນ.

ວາງແຜນວ່າຈະສ້າງແຜນພັດທະນາບ້ານ (CAP) ແນວໃດ ແລະ ຂະບວນການທີ່ດີທີ່ສຸດໃນການສົນທະນາ ແມ່ນ ຫຍັງ. ປະຊາຊົນພາຍໃນບ້ານທັງໝົດຄວນຮູ້ສຶກວ່າພວກ ເຂົາມີອິດສະຫຼະໃນການສະແດງຄວາມຕ້ອງການ, ຄວາມ ກັງວົນ, ແລະ ການຕົກລົງເຫັນດີຂອງເຂົາເຈົ້າ.

- **ຈຸດປະສົງ**

– ເພື່ອຄັດເລືອກກິດຈະກຳ ໃນການອະນຸລັກ ແລະ ການພັດທະນາທີ່ໄດ້ຮັບການຕົກລົງຈາກ ປະຊາຊົນ ແລະ ວາງແຜນການຈັດຕັ້ງປະຕິບັດ.



ຮູບພາບ 16 ການຂຽນແຜນພັດທະນາບ້ານ

❖ **ກຸ່ມເປົ້າໝາຍ**

- ອົງການປົກຄອງບ້ານ, ອົງການຈັດຕັ້ງມະຫາຊົນຂອງບ້ານ
- ປະຊາຊົນພາຍໃນບ້ານ
- ກໍລະນີມີຫຼາຍຊົນເຜົ່າ ໃຫ້ທຸກຊົນເຜົ່າເຂົ້າຮ່ວມທັງໝົດ

❖ **ວິທີການປະຕິບັດ**

3.2.1: ກ່ອນ: ກະກຽມເອກະສານ

- ກະກຽມເອກະສານການເກັບກຳຂໍ້ມູນຊັບພະຍາກອນ(PRA), PLUP, ແລະ ການເກັບກຳຂໍ້ມູນດ້ານເສດຖະກິດ-ສັງຄົມ ລວມເຖິງ ຂໍ້ສະເໜີຄວາມຕ້ອງການຂອງປະຊາຊົນ ຕະຫຼອດຊ່ວງໄລຍະທີ່ຜ່ານມາ.
- ກະກຽມທີມງານ, ຈັດແບ່ງບົດບາດ ໜ້າທີ່ໃນການດຳເນີນງານ ແລະ ວາງແຜນການປະຕິບັດວຽກງານ.
- ປະສານງານກັບບ້ານ ເພື່ອນັດໝາຍມື້ທີ່ເໝາະສົມ ກັບເງື່ອນໄຂຂອງບ້ານ.

3.2.2: ລະຫວ່າງ: ສຳຫຼວດຄວາມເຕັມໃຈຂອງຄົນໃນປະຊາຊົນພາຍໃນບ້ານ

ສອບຖາມວ່າປະຊາຊົນເຕັມໃຈທີ່ຈະດຳເນີນໂຄງການຫຼືບໍ່. ປະຊາຊົນຕ້ອງເຂົ້າໃຈວ່າຖ້າພວກເຂົາເຂົ້າເຫັນດີໃຫ້ມີການສືບຕໍ່ວຽກງານຂອງໂຄງການ, ພວກເຂົາຈະຕ້ອງໄດ້ເຂົ້າຮ່ວມໃນຂະບວນ ການສ້າງແຜນພັດທະນາບ້ານ (CAP) ແລະ ສັນຍາອະນຸລັກຂອງບ້ານ (CCA) ແລະ ຈະຕ້ອງໄດ້ປະຕິບັດຜັນທະຕາມທີ່ຈະກຳນົດໄວ້ໃນ ສັນຍາອະນຸລັກຂອງບ້ານ (CCA).

ທີມງານວິຊາການ, ໂດຍອາດຈະໄດ້ຮັບການສະໜັບສະໜູນຈາກທີ່ປຶກສາ (ຖ້າມີ), ຈະຮັບປະກັນວ່າ ປະຊາຊົນສ່ວນໃຫຍ່ໃນບ້ານໄດ້ ສະແດງຄວາມເຕັມໃຈທີ່ຈະດຳເນີນການຕາມຂັ້ນຕອນ ຂອງແຜນພັດທະນາບ້ານ (CAP). ການສະແດງຄວາມເຕັມໃຈນີ້ ບໍ່ແມ່ນການຜູກມັດ ແລະ ປະຊາຊົນສາມາດປະຕິເສດຄວາມເຕັມໃຈຂອງພວກເຂົາເວລາໃດກໍ່ໄດ້. (ອ້າງອີງເອກະສານຊ້ອນທ້າຍ A13 ສຳລັບການຢັ້ງຢືນຄວາມເຕັມໃຈຂອງປະຊາຊົນ).

3.2.3: ລະຫວ່າງ: ວິເຄາະຂໍ້ມູນ ແລະ ກຳນົດ ກິດຈະກຳ

- **ວິເຄາະຂໍ້ມູນທີ່ເກັບກຳໄດ້ໃນຂັ້ນຕອນທີ່ຜ່ານມາ**

ນຳເອົາເຈ້ຍແຜ່ນໃຫຍ່ທີ່ມີຂໍ້ມູນທີ່ເກັບກຳໄດ້ຈາກກິດຈະກຳທີ່ຜ່ານມາ ຕັ້ງແຕ່ໄລຍະການແນະນຳໂຄງການໃນເບື້ອງຕົ້ນ ຈົນຮອດໄລຍະການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ (PLUP) ໃຫ້ຜູ້ເຂົ້າຮ່ວມໄດ້ເບິ່ງ ແລະ ທົບທວນຄືນອີກຄັ້ງ.

ຂຽນບັນຫາຂອງການອະນຸລັກ ແລະ ການພັດທະນາໃສ່ເຈ້ຍແຜ່ນໃຫຍ່ໃບໃໝ່, ໃຫ້ປະຊາຊົນສະເໜີວິທີການຫຼຸດຜ່ອນບັນຫາດັ່ງກ່າວ, ຄວາມຕ້ອງການໃນການອະນຸລັກ ແລະ ການພັດທະນາ ຂອງບ້ານ.

ຖ້າຫາກ ກິດຈະກຳການດຳລົງຊີວິດຂອງປະຊາຊົນໃນປັດຈຸບັນ ໄດ້ນຳໃຊ້ຊັບພະຍາກອນທີ່ຕ້ອງໄດ້ຮັບການປົກປັກຮັກສາ ຫຼື ຢູ່ໃນເຂດຫວງຫ້າມເດັດຂາດ, ປະຊາຊົນຄວນພິຈາລະນາຫາທາງເລືອກອື່ນ ທີ່ສາມາດສ້າງລາຍຮັບ, ສະໜອງອາຫານໃຫ້ເຂົາເຈົ້າໄດ້ເທົ່າເກົ່າ ຫຼື ດີກວ່າເກົ່າ. ບັນດາກິດຈະກຳການດຳລົງຊີວິດແບບໃໝ່ນີ້ອາດສາມາດເຮັດໄດ້ພາຍໃນບໍລິເວນເຂດສະຫງວນ, ແຕ່ບໍ່ອີງໃສ່ຊັບພະຍາກອນທຳມະຊາດທີ່ຢູ່ໃນລາຍການປົກປ້ອງ ຫຼື ອາດຈະເຮັດຢູ່ພື້ນທີ່ອື່ນທີ່ຢູ່ນອກເຂດສະຫງວນ. ທຶນຊ່ວຍເຫຼືອການດຳລົງຊີວິດຂອງປະຊາຊົນ ສາມາດໃຊ້ໃນການສະໜັບສະໜູນການສ້າງແຫຼ່ງລາຍຮັບອັນໃໝ່ທີ່ຍືນຍົງ.

ໃນເອກະສານຊ້ອນທ້າຍໄດ້ລະບຸ ປະເພດຂອງກິດຈະກຳທີ່ສາມາດ ແລະ ບໍ່ສາມາດໄດ້ຮັບການສະໜັບສະໜູນໂດຍໂຄງການທີ່ໄດ້ຮັບທຶນຊ່ວຍເຫຼືອຈາກ ກອງທຶນປົກປັກຮັກສາສິ່ງແວດລ້ອມ. 'ລາຍການກິດຈະກຳທີ່ບໍ່ສະໜັບສະໜູນ' ແມ່ນບັນດາກິດຈະກຳທີ່ອາດສ້າງຜົນກະທົບອັນບໍ່ເໝາະສົມ ຫຼື ກໍ່ໃຫ້ເກີດບັນຫາພາຍໃນບ້ານ ເຊິ່ງຈຳເປັນຕ້ອງໄດ້ຫຼີກເວັ້ນ. 'ລາຍການກິດຈະກຳທີ່ສະໜັບສະໜູນ' ແມ່ນກິດຈະກຳ ທີ່ຈະສ້າງຜົນກະທົບອັນດີໃຫ້ແກ່ປ່າໄມ້ ແລະ ສິ່ງແວດລ້ອມ.

ຂໍໃຫ້ປະຊາຊົນພາຍໃນບ້ານຂຽນລາຍການກິດຈະກຳທີ່ຈະຊ່ວຍໃນການປົກປັກຮັກສາປ່າໄມ້ ແລະ ສັດປ່າ, ແລະ ກິດຈະກຳການພັດທະນາທີ່ຈະຊ່ວຍຊົດເຊີຍ ການສູນເສຍທີ່ອາດຈະເກີດຂຶ້ນຈາກກິດຈະກຳການອະນຸລັກ. ຖ້າກິດຈະກຳໃດທີ່ປະຊາຊົນສະເໜີ ຫາກກົງກັບລາຍການກິດຈະກຳທີ່ບໍ່ສະໜັບສະໜຸນ ໃຫ້ຂີດຂ້າລາຍການນັ້ນອອກ.

- **ຄັດເລືອກກິດຈະກຳ ທີ່ສາມາດແກ້ໄຂບັນຫາຂອງບ້ານໄດ້**

ສຳລັບລາຍການກິດຈະກຳທີ່ມີຄວາມເປັນໄປໄດ້ ຂໍໃຫ້ກຸ່ມທັງໝົດມີຄຳເຫັນຮ່ວມກັນໃນການຮັບຮອງ ກິດຈະກຳທີ່ພວກເຂົາເຫັນດີໃຫ້ເຮັດ. ພ້ອມທັງແຈ້ງໃຫ້ພວກເຂົາຊາບວ່າ ພວກເຂົາສາມາດເລືອກເອົາກິດຈະກຳໄດ້ຈຳນວນຫຼາຍຕາມທີ່ຕ້ອງການ. ຫຼັງຈາກນັ້ນ ໃຫ້ບັນທຶກຄະແນນສຽງເຫັນດີ ສຳລັບແຕ່ລະກິດຈະກຳ.

- **ຈັດລຳດັບບຸລິມະສິດ**

ຖາມຜູ້ເຂົ້າຮ່ວມວ່າ ກິດຈະກຳໃດທີ່ສຳຄັນຫຼາຍກ່ວາໝູ່. ປຶກສາຫາລື ເພື່ອຈັດລຳດັບຄວາມສຳຄັນຂອງແຕ່ລະກິດຈະກຳຕາມຄຳຄິດເຫັນຂອງປະຊາຊົນແຕ່ລະກຸ່ມ. ຮວບຮວມຈຳນວນຄະແນນສຽງທັງໝົດຈາກກຸ່ມຜູ້ຊາຍ ແລະ ກຸ່ມແມ່ຍິງ ແລ້ວບັນທຶກກິດຈະກຳບຸລິມະສິດ.

3.2.4: ລະຫວ່າງ: ການຂຽນແຜນພັດທະນາບ້ານ (CAP)

ຄະນະກຳມະການພັດທະນາບ້ານ (VDC) ແລະ ທີມງານວິຊາການຈະຊ່ວຍໃນການສັງລວມກິດຈະກຳກ່ຽວກັບການອະນຸລັກສິ່ງແວດລ້ອມ ແລະ ການພັດທະນາ ທີ່ປະຊາຊົນພາຍໃນບ້ານກຳນົດໃຫ້ເປັນບຸລິມະສິດຕົ້ນຕໍ ເຂົ້າໃນແຜນພັດທະນາບ້ານ (CAP). CAP ຄວນຈະປະກອບມີປະເດັນເຫຼົ່ານີ້:

- ແຫຼ່ງລາຍຮັບ ແລະ ການນຳໃຊ້ຊັບພະຍາກອນທີ່ດິນ ແລະ ປ່າໄມ້ ຂອງປະຊາຊົນພາຍໃນບ້ານໂດຍໃຫ້ແຍກລາຍລະອຽດຕາມ ເພດ, ຊົນເຜົ່າ, ກຸ່ມອາຍຸ ແລະ ອື່ນໆ;
- ປະເພດຜະລິດຕະພັນຊັບພະຍາກອນທຳມະຊາດ ແລະ ສັດປ່າ ທີ່ມີການຄ້າຂາຍຢູ່ໃນ ແລະ ນອກເຂດປ່າສະຫງວນ ໂດຍໃຫ້ແຍກລາຍລະອຽດຂອງຜູ້ຄ້າຂາຍຕາມ ເພດ ຊາຍ ແລະ ຍິງ, ອີງຕາມລະດູການທີ່ມີການນຳໃຊ້ຜະລິດຕະພັນຈາກປ່າໄມ້ແລະ ຄຸນຄ່າ ຕໍ່ກັບການດຳລົງຊີວິດ;
- ການຈຳກັດການເຂົ້າເຖິງຊັບພະຍາກອນທຳມະຊາດ ໂດຍລະບຸລາຍລະອຽດກ່ຽວກັບ ຂອບເຂດ ແລະ ລະດູການ;
- ຜົນກະທົບທາງດ້ານເສດຖະກິດ-ສັງຄົມ ທີ່ຄາດວ່າຈະເກີດຂຶ້ນ ຈາກການຈຳກັດການເຂົ້າເຖິງດັ່ງກ່າວ;
- ທາງເລືອກໃໝ່ຂອງແຫຼ່ງລາຍຮັບ ແລະ ຄວາມເປັນໄປໄດ້ ໃນການສ້າງລາຍຮັບທີ່ຍືນຍົງ ເພື່ອເຮັດໃຫ້ລະດັບຊີວິດການເປັນຢູ່ຂອງປະຊາຊົນ ດີຂຶ້ນກວ່າເກົ່າ ຫຼື ຢ່າງໜ້ອຍກໍ່ໃຫ້ໄດ້ເທົ່າເກົ່າ;
- ຂໍ້ມູນພົນລະເມືອງ, ເສດຖະກິດ-ສັງຄົມ ແລະ ອື່ນໆ ກ່ຽວກັບບ້ານ ໂດຍສະເພາະ ຊົນເຜົ່າ ແລະ ຜູ້ຂາດໂອກາດອື່ນໆ ພາຍໃນບ້ານ ແລະ ກຸ່ມທີ່ໄດ້ຮັບຜົນກະທົບດ້ານລົບ ຊຶ່ງຄວນມີເງື່ອນໄຂໄດ້ຮັບການຊ່ວຍເຫຼືອເປັນພິເສດ;
- ມາດຕະການສະເພາະ ເພື່ອຊ່ວຍກຸ່ມຄົນໃນບ້ານທີ່ໄດ້ຮັບຜົນກະທົບ ໄດ້ຮັບການປັບປຸງ ແລະ ຟື້ນຟູຊີວິດການເປັນຢູ່ ໂດຍຍັງຮັກສາຊັບພະຍາກອນທຳມະຊາດໃຫ້ຍືນຍົງ;
- ກົນໄກ ແລະ ໄລຍະເວລາ ໃນການຈັດຕັ້ງປະຕິບັດ, ແຫຼ່ງທຶນ ທີ່ລວມເອົາທຶນຈາກການປະກອບສ່ວນຂອງໂຄງການ ແລະ ຈາກປະຊາຊົນພາຍໃນບ້ານທີ່ໄດ້ຮັບຜົນປະໂຫຍດເອງ;
- ກົນໄກແກ້ໄຂຄຳຮ້ອງທຸກ;
- ຂະບວນການຕິດຕາມ ແລະ ປະເມີນຜົນແບບມີສ່ວນຮ່ວມ;

- ກຳນົດກິດຈະກຳປັບປຸງຊີວິດການເປັນຢູ່ ໂດຍປະກອບດ້ວຍລາຍລະອຽດກ່ຽວກັບ ຈຳນວນຄົວເຮືອນທີ່ເຂົ້າຮ່ວມ ແລະ ເຂດທີ່ຈະເຮັດແຕ່ລະກິດຈະກຳ ໂດຍແຕ່ລະເຂດດັ່ງກ່າວຕ້ອງສອດຄ່ອງກັບເຂດການນຳໃຊ້ທີ່ດິນ ທີ່ໄດ້ກຳນົດໄວ້ໃນແຜນການນຳໃຊ້ທີ່ດິນແບບມີສ່ວນຮ່ວມ.

3.2.5: ລະຫວ່າງ: ຢັ້ງຢືນຄວາມເຕັມໃຈຂອງຊຸມຊົນໃນການເຂົ້າຮ່ວມ ແຜນພັດທະນາບ້ານ (CAP)

ພາຍຫຼັງ ທີ່ຮ່າງແຜນພັດທະນາບ້ານ ສຳເລັດ ເຊີນປະຊາຊົນພາຍໃນບ້ານກັບມາຮວມກັນອີກຄັ້ງ ແລະ ທົບທວນ ແຜນພັດທະນາບ້ານຮ່ວມກັນ ເພື່ອປຶກສາຫາລື, ແລກປ່ຽນ ແລະ ຮັບຟັງຄຳເຫັນ ຂອງປະຊາຊົນທີ່ຍັງກັງວົນ ຫຼື ຂ້ອງໃຈ, ຖ້າຫາກພວກເຂົາມີສິ່ງທີ່ ຕ້ອງການເພີ່ມເຕີມ, ລຶບລ້າງ ຫຼື ປັບປ່ຽນໃນແຜນ.

ເມື່ອມີການຕົກລົງເຫັນດີເປັນເອກະພາບກັນດີແລ້ວ ໃຫ້ນຳໃຊ້ແບບຟອມ ເພື່ອບັນທຶກຈຳນວນຄົນທີ່ເຂົ້າຮ່ວມ ແລະ ຈຳນວນຄົນທີ່ສະໜັບສະໜູນ. ຖ້າຫາກເຫັນວ່າປະຊາຊົນພາຍໃນບ້ານຜູ້ໃດ ທີ່ບໍ່ສະໜັບສະໜູນ, ໃຫ້ຖາມພວກເຂົາວ່າ ພວກເຂົາມີຄວາມກັງວົນ ຫຼື ຂ້ອງໃຈ ແລະ ຕ້ອງການຢາກປ່ຽນແປງຫຍັງແດ່. ຖ້າຫາກວ່າປະຊາຊົນພາຍໃນບ້ານສ່ວນໃຫຍ່ ບໍ່ຕົກລົງເຫັນດີນຳ ແມ່ນຈະບໍ່ສາມາດດຳເນີນການຕາມແຜນທີ່ໄດ້ວາງໄວ້.

3.2.6: ຫຼັງ: ສະຫຼຸບ ແລະ ລາຍງານ

- ສະຫຼຸບຜົນໄດ້ຮັບ ແລະ ບົດຮຽນທີ່ຖອດຖອນໄດ້
- ບັນທຶກຜົນໄດ້ຮັບຂອງກິດຈະກຳ ແລະ ຂຽນບົດລາຍງານ

<u>ຄຳແນະນຳເພີ່ມຕື່ມ</u>

ຕໍ່ໄປອາດມີການທົບທວນຄືນ ແລະ ຕົກລົງເຫັນດີ ຫຼື ແກ້ໄຂແຜນພັດທະນາບ້ານ (CAP) ຮ່ວມກັບປະຊາຊົນພາຍໃນບ້ານຄືນໃໝ່ ເພື່ອປັບຕາມສະພາບການຕົວຈິງ ຕາມຄວາມຕ້ອງການ ປັບປຸງຊີວິດການເປັນຢູ່ຂອງຊຸມຊົນ

ບາດກ້າວ 3.3: ສັນຍາອະນຸລັກຂອງຊຸມຊົນ (CCA)

ການມີສ່ວນຮ່ວມຂອງຊຸມຊົນ ໃນການສ້າງ ສັນຍາອະນຸລັກຂອງຊຸມຊົນ (CCA)

ເມື່ອສຳເລັດການວາງແຜນການນຳໃຊ້ທີ່ດິນແບບມີສ່ວນຮ່ວມ (PLUP), ແລະ ເລີ່ມຕົ້ນການສ້າງແຜນພັດທະນາບ້ານ (CAP) ແລ້ວ; ເຈົ້າຂອງໂຄງການ (PO) ແລະ ທີມງານວິຊາການຈະເລີ່ມຕົ້ນການເຮັດວຽກຮ່ວມກັບປະຊາຊົນ ໃນການສ້າງສັນຍາອະນຸລັກຂອງຊຸມຊົນ (CCA).

ສັນຍາອະນຸລັກຂອງຊຸມຊົນ (CCA) ຈະກຳນົດວ່າໃຜແມ່ທີ່ຖືເປັນສ່ວນໜຶ່ງຂອງປະຊາຊົນພາຍໃນບ້ານ ແລະ ໃຜແມ່ທີ່ບໍ່ແມ່ນ ແລະ ໃຫ້ທິດຊີ້ນຳແກ່ສະມາຊິກໃໝ່ຂອງບ້ານ ວ່າຈະສາມາດມີສ່ວນຮ່ວມໃນຂໍ້ຕົກລົງນີ້ແນວໃດ ແລະ ຜູ້ທີ່ບໍ່ແມ່ນສະມາຊິກແມ່ນຈະຖືກຄັດແຍກອອກແນວໃດ.

ສັນຍາອະນຸລັກຂອງຊຸມຊົນ (CCA) ຈະກຳນົດວິທີການທີ່ປະຊາຊົນສາມາດມີສ່ວນຮ່ວມໃນໂຄງການ ໃນການປົກປັກຮັກສາສິ່ງແວດລ້ອມ ແລະ ຜົນປະໂຫຍດທີ່ພວກເຂົາຈະໄດ້ຮັບເພື່ອນຳມາປັບປຸງຊີວິດການເປັນຢູ່ ຂອງພວກເຂົາເຈົ້າໃຫ້ດີຂຶ້ນ.

ສັນຍາອະນຸລັກຂອງຊຸມຊົນ (CCA) ຈະມີລາຍລະອຽດວິທີການປົກປັກຮັກສາປ່າໄມ້, ກິດລະບຽບທີ່ມີຢູ່ ແລ້ວຂອງເຂດປ່າສະຫງວນ ແລະ ເຂດຫວງຫ້າມເດັດຂາດ ຫຼື ເຂດນຳໃຊ້ຂອງປະຊາຊົນພາຍໃນບ້ານ.

ຜົນປະໂຫຍດທີ່ໄດ້ຈາກສັນຍາຕົກລົງນີ້ ຈະຊົດເຊີຍໃຫ້ແກ່ປະຊາຊົນ ສຳລັບການສູນເສຍທີ່ເກີດຂຶ້ນຈາກການເຂົ້າຮ່ວມກິດຈະກຳການອະນຸລັກ ແລະ ການປະຕິບັດກິດລະບຽບຕ່າງໆ. ຖ້າຫາກປະຊາຊົນຢຸດການນຳໃຊ້ຜະລິດຕະພັນຈາກປ່າໄມ້ ແລະ ຢຸດການນຳໃຊ້ທີ່ດິນໃນປ່າສະຫງວນ, ຄອບຄົວຂອງພວກເຂົາອາດຈະມີອາຫານບໍ່ພຽງພໍ ແລະ ມີລາຍຮັບຫຼຸດລົງ. ດັ່ງນັ້ນ, ພວກເຂົາຕ້ອງການໃຫ້ໂຄງການຊ່ວຍພັດທະນາຊີວິດການເປັນຢູ່ຂອງເຂົາເຈົ້າໃຫ້ດີຄືເກົ່າ ຫຼື ດີກ່ວາຕອນທີ່ພວກເຂົາເຈົ້າຈະເລີ່ມເຂົ້າຮ່ວມໃນການອະນຸລັກ.



ຮູບພາບ 17 ສັນຍາອະນຸລັກຂອງຊຸມຊົນ ປະກອບມີວຽກງານການອະນຸລັກ ແລະ ການພັດທະນາ

ສັນຍາອະນຸລັກຂອງຊຸມຊົນ (CCA) ໄດ້ຖືກຂຽນເປັນລາຍລັກອັກສອນ ເພື່ອແກ້ໄຂບັນຫາໄພຂົ່ມຂູ່ຂອງປ່າໄມ້ ແລະ ສັດປ່າ ພ້ອມທັງສິ່ງທີ່ປະຊາຊົນສູນເສຍຈາກການປົກປ້ອງຊະນິດພັນພືດ ແລະ ສັດປ່າເຫຼົ່ານັ້ນ. ສັນຍາອະນຸລັກຂອງຊຸມຊົນ (CCA) ກຳນົດລະບຽບການວ່າ ກິດຈະກຳໃດທີ່ບໍ່ໄດ້ຮັບອະນຸຍາດ, ກິດຈະກຳໃດທີ່ໄດ້ຮັບອະນຸຍາດ ແລະ ກິດຈະກຳການພັດທະນາບ້ານອັນໃດແດ່ທີ່ຈະຮັບທຶນສະໜັບສະໜູນຈາກກອງທຶນປົກປັກຮັກສາສິ່ງແວດລ້ອມ.

❖ **ຈຸດປະສົງ**

- ສ້າງຂໍ້ຕົກລົງລະຫວ່າງ ປະຊາຊົນພາຍໃນບ້ານ ແລະ ໂຄງການ ໃນການຈັດຕັ້ງປະຕິບັດວຽກງານການອະນຸລັກ ແລະ ການພັດທະນາ ທີ່ມີຢູ່ໃນແຜນພັດທະນາບ້ານ.

❖ **ກຸ່ມເປົ້າໝາຍ**

- ອົງການປົກຄອງບ້ານ, ອົງການຈັດຕັ້ງມະຫາຊົນຂອງບ້ານ
- ປະຊາຊົນພາຍໃນບ້ານ
- ກໍລະນີມີຫຼາຍຊົນເຜົ່າ ໃຫ້ທຸກຊົນເຜົ່າເຂົ້າຮ່ວມທັງໝົດ

3.3.1: ກ່ອນ: ກະກຽມເອກະສານ

- **ກະກຽມເອກະສານ ແຜນການຄຸ້ມຄອງເຂດສະຫງວນແບບມີສ່ວນຮ່ວມ**

ໜ່ວຍງານຄຸ້ມຄອງເຂດປ່າສະຫງວນ (PAA) ຈະມີແຜນການຄຸ້ມຄອງ ເຊັ່ນ: ການປົກປ້ອງສັດປ່າ ຫຼື ການອະນຸລັກຊັບພະຍາກອນທຳມະຊາດ. ແຜນການຄຸ້ມຄອງນີ້ຈະຊີ້ບອກໃຫ້ເຈົ້າຂອງໂຄງການ (PO) ຮັບຮູ້ວ່າກິດຈະກຳການອະນຸລັກໃດແດ່ທີ່ຈຳເປັນຕ້ອງມີຢູ່ໃນສັນຍາອະນຸລັກຂອງຊຸມຊົນ (CCA) ເພື່ອຊ່ວຍປົກປັກຮັກສາຄວາມຫຼາກຫຼາຍຂອງຊີວະນາໆພັນຕາມທຳມະຊາດຢູ່ໃນພື້ນທີ່ນັ້ນ.

- **ກະກຽມເອກະສານ ແຜນພັດທະນາບ້ານ (CAP) ຂອງແຕ່ລະບ້ານ**

- **ກະກຽມຂໍ້ມູນບ້ານ ເຊັ່ນ: ຂໍ້ມູນເສດຖະກິດ-ສັງຄົມ, ການນຳໃຊ້ຊັບພະຍາກອນທຳມະຊາດ ແລະ ແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ.**

3.3.2: ລະຫວ່າງ ການສ້າງສັນຍາອະນຸລັກຂອງຊຸມຊົນ (CCA)

ຄະນະກຳມະການພັດທະນາບ້ານ ແລະ ເຈົ້າຂອງ ໂຄງການ (PO) ຄວນຂຽນແຜນກ່ຽວກັບວິທີການເຮັດວຽກຮ່ວມກັນ ໃນການສ້າງ ຂໍ້ຕົກລົງ ລວມທັງ ໜ້າທີ່, ຄວາມຮັບຜິດຊອບຂອງແຕ່ລະຝ່າຍ ແລະ ໄລຍະເວລາຂອງຂັ້ນຕອນຕ່າງໆໃນການສ້າງຂໍ້ຕົກລົງ. ແຜນການ ນີ້ບໍ່ແມ່ນສັນຍາ ແລະ ຕ້ອງໄດ້ໂຄສະນາເຜີຍແຜ່ໃຫ້ປະຊາຊົນພາຍໃນບ້ານ ເພື່ອເຮັດໃຫ້ພວກເຂົາເຂົ້າໃຈກ່ຽວກັບຂັ້ນຕອນຕ່າງໆ.

- **ຢັ້ງຢືນວ່າປະຊາຊົນໄດ້ຕົກລົງເຫັນດີທີ່ຈະສືບຕໍ່ໃນການຈັດຕັ້ງປະຕິບັດແຜນພັດທະນາບ້ານ**

ຄະນະກຳມະການພັດທະນາບ້ານ ຈຳເປັນຕ້ອງຫາເວລາ ເພື່ອໂອ້ລົມກັບປະຊາຊົນພາຍໃນບ້ານ ແລະ ສອບຖາມວ່າພວກເຂົາເຈົ້າມີ ຄວາມພໍໃຈກັບແຜນການ ຫຼືບໍ່, ກ່ອນສ້າງເປັນຂໍ້ຕົກລົງ.

- **ທົບທວນຂໍ້ມູນ ແລະ ແຜນພັດທະນາບ້ານ**

ທົບທວນຄືນຂໍ້ມູນເສດຖະກິດ-ສັງຄົມ, ການນຳໃຊ້ຊັບພະຍາກອນທຳມະຊາດ, ແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ ແລະ ແຜນ ພັດທະນາບ້ານ.

- **ສ້າງສັນຍາອະນຸລັກຂອງຊຸມຊົນ ຮ່ວມກັນ**

ຄະນະກຳມະການພັດທະນາບ້ານ ຈະເຂົ້າຮ່ວມໃນການສ້າງສັນຍາ ແລະ ຖ້າຫາກວ່າຊຸມຊົນບໍ່ພໍໃຈກັບສັນຍາ, ເຂົາເຈົ້າສາມາດ ຢຸດ ຊົ່ວຄາວ ຫຼື ຍົກເລີກໂຄງການ ເພື່ອຮັບປະກັນວ່າປະຊາຊົນມີຄວາມພໍໃຈ ກ່ອນທີ່ພວກເຂົາເຈົ້າຈະລົງລາຍເຊັນໃນສັນຍາ.

- **ຢັ້ງຢືນວ່າຄະນະກຳມະການພັດທະນາບ້ານມີຄວາມເຂົ້າໃຈໃນສັນຍາ**

ຖ້າຫາກວ່າຄະນະກຳມະການພັດທະນາບ້ານ ບໍ່ເຂົ້າໃຈກ່ຽວກັບສັນຍາ, ພວກເຂົາເຈົ້າກໍ່ຈະບໍ່ສາມາດປະຕິບັດຕາມໄດ້, ຂໍໃຫ້ພວກເຂົາ ເຈົ້າອະທິບາຍກ່ຽວກັບເນື້ອໃນສັນຍາຄືນອີກຄັ້ງ ຫຼື ສະແດງລະຄອນກ່ຽວກັບການປະຕິບັດກິດຈະກຳຂອງໂຄງການ, ໃຫ້ເຂົາເຈົ້າ ສະແດງບົດບາດເປັນເຈົ້າຂອງໂຄງການ ຫຼື ເຈົ້າໜ້າທີ່ຄຸ້ມຄອງເຂດປ່າສະຫງວນ ເພື່ອຢັ້ງຢືນວ່າເຂົາເຈົ້າມີຄວາມເຂົ້າໃຈດີກ່ຽວກັບ ສັນຍາ ແລະ ໂຄງການ. ອະທິບາຍຄືນໃໝ່ ຖ້າຫາກເຫັນວ່າເຂົາເຈົ້າຍັງບໍ່ທັນເຂົ້າໃຈ.

ເນື້ອໃນຂອງສັນຍາອະນຸລັກຂອງຊຸມຊົນ (CCA)

ສັນຍາອະນຸລັກຂອງຊຸມຊົນ (CCA) ຄວນປະກອບມີ 4 ພາກຄື:

☐ **ພາກທີ 1. ພັນທະໃນການອະນຸລັກ**

- ຜືນໄດ້ຮັບຈາກການອະນຸລັກ (ເຊັ່ນ: ຊະນິດພັນພືດ ແລະ ສັດປ່າທີ່ຈະໄດ້ຮັບການອະນຸລັກ? ຖ້າຫາກ ຜືນໄດ້ຮັບແມ່ນການ ສ້າງເຂດສະຫງວນ ຕ້ອງບອກຂະໜາດ, ທີ່ຕັ້ງ ແລະ ປະເພດທີ່ດິນ ຂອງເຂດດັ່ງກ່າວກ່ອນຊຸມຊົນສ້າງເປັນເຂດອະນຸລັກ)
- ພັນທະຂອງປະຊາຊົນພາຍໃນບ້ານ (ເຊັ່ນ: ສ້າງເຂດສະຫງວນ, ຢຸດເຊົາການລ່າສັດຊະນິດໃດໜຶ່ງ, ຢຸດເຊົາພຶດຕິກຳທີ່ເປັນ ການທຳລາຍ, ບໍ່ອະນຸຍາດໃຫ້ມີການຕັດໄມ້ ແລະ ອື່ນໆ)
- ພັນທະຂອງເຈົ້າຂອງໂຄງການ (ເຊັ່ນ: ສ້າງຄວາມອາດສາມາດ, ຊ່ວຍຮັບປະກັນສິດໃນການນຳໃຊ້ທີ່ດິນ, ສະໜັບສະໜຸນການ ບັງຄັບໃຊ້ກົດໝາຍ ແລະ ອື່ນໆ).

☐ **ພາກທີ 2. ຜືນປະໂຫຍດທີ່ບ້ານຈະໄດ້ຮັບ**

- ມູນຄ່າຂອງຜືນປະໂຫຍດໂດຍລວມ (ຕ້ອງຢູ່ໃນກອບຈຳນວນທີ່ສາມາດໃຫ້ໄດ້ ແລະ ມີຄວາມເໝາະສົມ)
- ປະເພດຂອງຜືນປະໂຫຍດ (ເຊັ່ນ: ໂຄງລ່າງພື້ນຖານ, ການບໍລິການ, ການຊຳລະເງິນໂດຍກົງ, ວິສາຫະກິດ ແລະ ອື່ນໆ)

- ລະບົບ ຫຼື ລະບຽບການໃນການນຳໃຊ້ເງິນຂອງແຕ່ລະກິດຈະກຳ (ຕົວຢ່າງ: ການຊຳລະເງິນໃຫ້ແກ່ກອງທຶນຂອງບ້ານໂດຍກົງ)
- ກົນໄກສຳລັບການສະໜອງຜົນປະໂຫຍດ: ກົນໄກນີ້ຄວນຖືກກຳນົດຮ່ວມກັນ ເພື່ອສະໜອງຜົນປະໂຫຍດດ້ວຍຄວາມໂປ່ງໃສ
- ໄລຍະຂອງການສະໜອງຜົນປະໂຫຍດ.

☐ **ພາກທີ 3. ການຕິດຕາມການປະຕິບັດຕາມກິດລະບຽບ**

- ມາດຕະຖານການປະຕິບັດພັນທະຂອງການອະນຸລັກ (ເຊັ່ນ: ປະຊາຊົນບຸກເບີກພື້ນທີ່ປ່າໜ້ອຍລົງ, ບໍ່ລ່າສັດ, ບໍ່ຂຸດຄົ້ນບໍ່ແຮ່ທີ່ຜິດກົດໝາຍ ແລະ ໄດ້ຈັດຕັ້ງປະຕິບັດວຽກງານການອະນຸລັກ ເຊັ່ນ: ລາດຕະເວນ, ຮັກສາເຂດແດນ ແລະ ອື່ນໆ)
- ປະສິດທິພາບ ແລະ ຄວາມສະເໝີພາບຂອງການຄຸ້ມຄອງຜົນປະໂຫຍດ (ເຊັ່ນ: ຜົນປະໂຫຍດໄດ້ຖືກແບ່ງປັນໃຫ້ແກ່ຜູ້ຊົມໃຊ້ຊັບພະຍາກອນ ຢ່າງສະເໝີພາບ, ມີຄວາມໂປ່ງໃສ ແລະ ອື່ນໆ)
- ລະດັບຄວາມຮັບຮູ້, ຄວາມເຂົ້າໃຈ ແລະ ຄວາມເພິ່ງພໍໃຈ ຕໍ່ກັບສັນຍາອະນຸລັກ.
- ກົນໄກສຳລັບການກວດສອບການປະຕິບັດຕາມສັນຍາຮ່ວມກັນ ຂອງປະຊາຊົນພາຍໃນບ້ານ ແລະ ເຈົ້າຂອງໂຄງການ (ອາດມີການກວດກາກັນເອງ ຫຼື ພາກສ່ວນອື່ນເຂົ້າຮ່ວມ ເພື່ອຮັບປະກັນຄວາມໂປ່ງໃສ).

☐ **ພາກທີ 4. ມາດຕະການຕໍ່ຜູ້ລະເມີດ ສຳລັບການບໍ່ປະຕິບັດສັນຍາ ຂອງທັງສອງຝ່າຍ**

- ຂະບວນການໃນການກຳນົດການລະເມີດສັນຍາ.
- ການປະຕິບັດຕໍ່ຜູ້ລະເມີດສັນຍາຄວນຈະເປັນແບບເພີ່ມຂຶ້ນຈາກເບົາ ຫາ ໜັກ ເຊັ່ນ: ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ ຕາມສະຖານໜັກ ຫຼື ເບົາ .

ເອກະສານສັນຍາອະນຸລັກຂອງຊຸມຊົນ (CCA) ຄວນລວມມີເອກະສານຊ້ອນທ້າຍທີ່ມີຂໍ້ມູນ ດັ່ງນີ້:

- ຂະບວນການຮ້ອງທຸກທີ່ຈະແຈ້ງ ສຳລັບແກ້ໄຂບັນຫາຕ່າງໆ
- ແຜນທີ່ຂອບເຂດປ່າສະຫງວນ, ເຂດອະນຸລັກ ແລະ ກິດລະບຽບການນຳໃຊ້
- ບັນຊີລາຍຊື່ສະມາຊິກຂອງຄະນະກຳມະການພັດທະນາບ້ານ
- ບັນຊີລາຍຊື່ສະມາຊິກເຈົ້າຂອງໂຄງການ ທີ່ມີສ່ວນຮ່ວມໃນການພັດທະນາເອກະສານດັ່ງກ່າວ.

3.3.3: ລະຫວ່າງ: ຢັ້ງຢືນການຕິກລົງຂອງຊຸມຊົນຕໍ່ກັບ CCA

ປະຕິບັດຂະບວນການຢັ້ງຢືນການຕິກລົງຂອງຊຸມຊົນ ຕາມເອກະສານຊ້ອນທ້າຍ A13

3.3.4: ຫຼັງ: ທົບທວນ ແລະ ລາຍງານ

- ທົບທວນຄືນ ຜົນໄດ້ຮັບ ແລະ ບົດຮຽນທີ່ຖອດຖອນໄດ້
- ບັນທຶກ ແລະ ຂຽນບົດລາຍງານສະຫຼຸບ
- ປະສານງານຢ່າງຕໍ່ເນື່ອງກັບບ້ານເປົ້າໝາຍ ເພື່ອເຊື່ອມຕໍ່ຂໍ້ມູນການເຄື່ອນໄຫວຂອງໂຄງການ.

ບາດກ້າວ 4.1: ການຈັດຕັ້ງປະຕິບັດ

ຫຼັງຈາກລົງລາຍເຊັນໃນສັນຍາອະນຸລັກຂອງຊຸມຊົນ (CCA), ຈະໄດ້ມີການຈັດຕັ້ງປະຕິບັດແຜນ (CAP) ໂດຍນຳໃຊ້ເງິນ ຈາກ ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ຈາກແຫຼ່ງທຶນອື່ນໆ. ການສະໜອງເງິນ ແມ່ນຜ່ານເຈົ້າຂອງໂຄງການ (PO) ແລະ ມອບໃຫ້ແກ່ຄະນະກຳມະການພັດທະນາບ້ານ. ການເບີກຈ່າຍໃນຄັ້ງທຳອິດເກີດຂຶ້ນຫຼັງຈາກການລົງລາຍເຊັນໃນ ສັນຍາອະນຸລັກຂອງ ຊຸມຊົນ (CCA) ແລະ ແຜນພັດທະນາບ້ານ (CAP). ການເບີກຈ່າຍເງິນງວດ ທີ່ສອງ ແມ່ນພາຍຫຼັງ ສຳເລັດການຕິດຕາມ ແລະ ປະເມີນຜົນໂຄງການ ຖ້າຫາກວ່າໂຄງການໄດ້ດຳເນີນໄປຕາມທິດທາງທີ່ໜ້າພໍໃຈ.

ງົບປະມານໃນການພັດທະນາຊີວິດການເປັນຢູ່ ແມ່ນຈະນຳໃຊ້ ເພື່ອການຈັດຕັ້ງປະຕິບັດວຽກງານບຸລິມະສິດຫຼັກຂອງບ້ານທີ່ ໄດ້ຕົກລົງເຫັນດີ ໃນແຜນພັດທະນາບ້ານ (CAP). ສ່ວນງົບປະມານໃນການອະນຸລັກ ຈະຊ່ວຍໃຫ້ປະຊາຊົນພາຍໃນບ້ານມີສ່ວນຮ່ວມ ໃນການອະນຸລັກຊະນິດພັນພືດ ແລະ ສັດປ່າ ທີ່ຢູ່ໃນເຂດທີ່ດິນຂອງເຂົາເຈົ້າ ແລະ ໃນເຂດປ່າສະຫງວນ. ຖ້າໂຄງການສືບຕໍ່ຈັດຕັ້ງ ປະຕິບັດຕາມທິດທາງທີ່ຖືກຕ້ອງສອດຄ່ອງກັບ ສັນຍາອະນຸລັກຂອງຊຸມຊົນ (CCA), ບ້ານຈະໄດ້ ຮັບງົບປະມານຈຳນວນທີ່ເຫຼືອໃນ ປີຕໍ່ໆໄປ ຕາມທີ່ໄດ້ກຳນົດໄວ້ໃນສັນຍາອະນຸລັກຂອງຊຸມຊົນ.

ບາດກ້າວ 4.2: ກົນໄກການແກ້ໄຂຄຳຮ້ອງທຸກ

ພາກສະເໜີ ແລະ ຫຼັກການ:

ກົນໄກການຮ້ອງທຸກທີ່ໄດ້ຮັບຜົນ, ມີຄວາມໂປ່ງໃສ ແລະ ສາມາດເຂົ້າເຖິງໄດ້ ແມ່ນພາກສ່ວນໜຶ່ງທີ່ສຳຄັນ ໃນການ ຮັບປະກັນ ການປະຕິບັດນະໂຍບາຍປົກປ້ອງສິ່ງແວດລ້ອມ ແລະ ສັງຄົມຂອງ ກປສ. ກປສ ແລະ ເຈົ້າຂອງໂຄງການຮັບປະກັນວ່າ ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ ຫຼື ອາດຈະໄດ້ຮັບຜົນກະທົບ ຈາກກິດຈະກຳຕ່າງໆຈາກການສະໜອງທຶນ, ຈະໄດ້ຮັບການແຈ້ງກ່ຽວ ກັບແຜນງານ, ໂຄງການດັ່ງກ່າວ ແລະ ກົນໄກການແກ້ໄຂການຮ້ອງທຸກ (GRM) -ໃນໄລຍະເວລາເບື້ອງຕົ້ນ, ຂະບວນການຂອງການ ມີສ່ວນຮ່ວມ ຂອງພາກສ່ວນທີ່ກ່ຽວຂ້ອງ ຖືກປະຕິບັດໃນວິທີການທີ່ເຂົ້າໃຈໄດ້ງ່າຍສຳລັບພາກສ່ວນຕ່າງໆ, ລວມທັງແມ່ຍິງ, ຜູ້ບໍ່ຮູ້ ໜັງສື, ຊົນເຜົ່າຕ່າງໆ ແລະ ພາກສ່ວນອື່ນໆໂດຍສະເພາະແມ່ນກຸ່ມຄົນທີ່ມີຄວາມສ່ຽງ. ມັນຍັງສາມາດເຂົ້າເຖິງດ້ວຍພາກສ່ວນພາຍ ນອກ ແລະ ຄົນທີ່ອາໃສຢູ່ປະເທດເພື່ອນບ້ານ ແລະ ໄດ້ຮັບຜົນກະທົບຈາກ ກິດຈະກຳຕ່າງໆ ທີ່ໄດ້ຮັບທຶນຈາກ ກປສ. ບົດບາດຂອງ ກປສ ໃນ GRM ແມ່ນການແຈ້ງ, ເກັບກຳ ແລະ ອຳນວຍຄວາມສະດວກ ໃຫ້ແກ່ຂະບວນການທາງການຕ່າງໆ. ເພື່ອຮັບປະກັນວ່າ ທຸກພາກສ່ວນກ່ຽວຂ້ອງ ແມ່ນໄດ້ຮັບການແຈ້ງບອກຢ່າງລະອຽດ ກ່ຽວກັບວິທີການລົງທະບຽນການຮ້ອງທຸກ, ລວມທັງລາຍລະອຽດ ການຕິດຕໍ່ ສຳລັບທຸກຄົນທີ່ຈະຍື່ນຄຳຮ້ອງທຸກຢ່າງເປັນທາງການ. ກົນໄກການແກ້ໄຂການຮ້ອງທຸກ ຂອງ ກປສ ແມ່ນສອດຄ່ອງກັບ ມາດຕະຖານສາກົນ ແລະ ກົດໝາຍຂອງລາວ. ເມື່ອກິດຈະກຳໄດ້ຮັບການສະໜັບສະໜຸນ ທາງດ້ານການເງິນຈາກຜູ້ໃຫ້ທຶນສາກົນ, ຜູ້ ທີ່ມີສ່ວນຮ່ວມກໍ່ຈະໄດ້ຮັບການແຈ້ງບອກ ກ່ຽວກັບວິທີການລົງທະບຽນຄຳຮ້ອງທຸກການກົນໄກການແກ້ໄຂການຮ້ອງທຸກຂອງຜູ້ໃຫ້ ທຶນສາກົນໂດຍກົງ.

GRM ຊ່ວຍໃນການຮັບປະກັນ ແລະ ກວມເອົາຫຼັກການ ແລະ ການຈັດຕັ້ງປະຕິບັດ ດັ່ງຕໍ່ໄປນີ້:

- ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ເຂົ້າຮ່ວມ, ຜູ້ທີ່ໄດ້ຮັບຜົນປະໂຫຍດ ແລະ ຜູ້ມີສ່ວນຮ່ວມ ຂອງກິດຈະກຳ, ໂຄງການ ຫຼື ໂຄງການຂອງ ກປສ
- ແກ້ໄຂ້ບັນຫາຄວາມກັງວົນທີ່ເກີດຂຶ້ນໃນລະຫວ່າງການປະຕິບັດງານ ຢ່າງພຽງພໍ ແລະ ທັນເວລາ
- ແຈ້ງໃຫ້ພາກສ່ວນກ່ຽວຂ້ອງ ໃຫ້ຮັບຮູ້ກ່ຽວກັບ GRM ຢ່າງຄົບຖ້ວນ, ເຂົ້າໃຈໄດ້ ແລະ ທັນເວລາ

- ຢືນຢັນການຈັດຕັ້ງປະຕິບັດໃຫ້ພາກສ່ວນທີ່ກ່ຽວຂ້ອງ ແລະ ນະໂຍບາຍຂອງ ກປສ ວ່າດ້ວຍການປົກປ້ອງສິ່ງແວດລ້ອມ ແລະ ສັງຄົມ.

ຂະບວນການຮ້ອງທຸກຂອງ ກປສ ແມ່ນເພື່ອແຈ້ງໃຫ້ພາກສ່ວນກ່ຽວຂ້ອງ, ບັນທຶກ ແລະ ໃຫ້ຄວາມສະດວກໃນຮູບແບບທີ່ ລັດ ຖະບານວາງອອກຢ່າງເປັນທາງການ.

ຂະບວນການຮ້ອງທຸກໄດ້ສ້າງຂຶ້ນໃນຂັ້ນບ້ານ

ສຳລັບການສະໜອງທຶນຂອງ ກປສ ໃຫ້ແກ່ໂຄງການ, ໜ່ວຍງານໄກ່ເກ່ຍຂັ້ນບ້ານ (VMU) ຈະເຮັດໜ້າທີ່ເປັນຄະນະ ກຳມະການຮ້ອງທຸກຂັ້ນບ້ານ (VGC) ແລະ ເປັນບາດກ້າວທຳອິດທີ່ສຳຄັນ ໃນຂັ້ນຕອນການຮ້ອງທຸກຂອງປະຊາຊົນ. ປະຊາຊົນພາຍ ໃນບ້ານສາມາດສະເໜີຂໍ້ຂ້ອງໃຈຂອງພວກເຂົາໃຫ້ໜ່ວຍງານໄກ່ເກ່ຍຂັ້ນບ້ານ ເພື່ອຊອກຫາວິທີແກ້ໄຂ. ໜ່ວຍງານໄກ່ເກ່ຍຂັ້ນບ້ານ ສາມາດເປັນຜູ້ໄກ່ເກ່ຍລະຫວ່າງສອງຝ່າຍ ເພື່ອຊອກຫາວິທີແກ້ໄຂທີ່ຍອມຮັບໄດ້ຈາກທັງສອງຝ່າຍ. ຖ້າບັນຫາໄດ້ຮັບການຢັ້ງຢືນວ່າ ເປັນບັນຫາທີ່ຮ້າຍແຮງ ຫຼື ຖ້າບໍ່ສາມາດແກ້ໄຂໄດ້ໃນລະດັບບ້ານ, ໜ່ວຍງານໄກ່ເກ່ຍຂັ້ນບ້ານ ຈະສົ່ງຄຳຮ້ອງທຸກຂອງປະຊາຊົນພາຍ ໃນບ້ານໄປຫາຕົວແທນອື່ນ ຕາມຮູບຂ້າງລຸ່ມນີ້. ຂັ້ນຕອນຕໍ່ໄປ ແມ່ນສະເໜີຫາຄະນະກຳມະການຮ້ອງທຸກຂັ້ນເມືອງ, ແຂວງ, ສູນກາງ ແລະ ສະພາແຫ່ງຊາດ.

4.2.1: ຫຼັກການພື້ນຖານ

ໃນລະຫວ່າງການຈັດຕັ້ງປະຕິບັດໂຄງການ ຈະເກີດບັນຫາທີ່ສົ່ງຜົນກະທົບຕໍ່ປະຊາຊົນພາຍໃນບ້ານ ຫຼື ກຸ່ມອື່ນໆ ຊຶ່ງຕ້ອງໄດ້ ຮັບການແກ້ໄຂ. ສະນັ້ນ, ຈຶ່ງມີຂະບວນການໃນການຮ້ອງທຸກ ເພື່ອໃຫ້ປະຊາຊົນພາຍໃນບ້ານ ສາມາດສົ່ງຄຳຮ້ອງທີ່ກ່ຽວກັບ ບັນຫາ ຂອງເຂົາເຈົ້າ.


ຫຼັກການພື້ນຖານຂອງກົນໄກການຮ້ອງທຸກມີຄື:

- ສິດ ແລະ ຜົນປະໂຫຍດ ຂອງຜູ້ທີ່ມີສ່ວນຮ່ວມໃນໂຄງການ ຕ້ອງໄດ້ຮັບການປົກປ້ອງ
- ຂໍ້ສະເໜີ ແລະ ຂໍ້ຂ້ອງໃຈຂອງຜູ້ທີ່ມີສ່ວນຮ່ວມໃນໂຄງການ ທີ່ເກີດຂຶ້ນໃນລະຫວ່າງຂະບວນການຈັດຕັ້ງປະຕິບັດໂຄງການ ຕ້ອງໄດ້ຮັບການແກ້ໄຂຢ່າງເໝາະສົມ, ວ່ອງໄວ ແລະ ທັນເວລາ
- ໃຫ້ການຊ່ວຍເຫຼືອແກ່ຜູ້ທີ່ມີສ່ວນຮ່ວມໃນໂຄງການ ຕົງຕາມເວລາ ແລະ ສອດຄ່ອງກັບນະໂຍບາຍການປົກປ້ອງຂອງລັດຖະ ບານ ແລະ ຜູ້ໃຫ້ທຶນ (Safeguard Policy)
- ຜູ້ທີ່ມີສ່ວນຮ່ວມໃນໂຄງການຕ້ອງຮັບຮູ້ສິດໃນການຮ້ອງທຸກ ແລະ ການເຂົ້າເຖິງຂະບວນການດັ່ງກ່າວ ໂດຍບໍ່ມີຄ່າໃຊ້ຈ່າຍ.

ຂັ້ນຕອນການຮ້ອງທຸກຈະປະຕິບັດຕາມໂຄງສ້າງທີ່ໄດ້ສ້າງຕັ້ງຂຶ້ນຢ່າງເປັນທາງການໂດຍລັດຖະບານພ້ອມທັງເພີ່ມລາຍລະອຽດ ອັນສະເພາະ ທີ່ສອດຄ່ອງກັບກົດໝາຍ.

ສຳລັບໂຄງການທີ່ໄດ້ຮັບທຶນຈາກ ກອງທຶນປົກປັກຮັກສາສິ່ງແວດລ້ອມ, ຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ຈະເຮັດໜ້າທີ່ເປັນຄະ ນະກຳມະການຮ້ອງທຸກຂັ້ນບ້ານ ແລະ ຈະເປັນຂັ້ນຕອນອັນທຳອິດທີ່ສຳຄັນໃນຂັ້ນຕອນການຮ້ອງທຸກ. ປະຊາຊົນພາຍໃນບ້ານຈະສະ ເໜີຂໍ້ຂ້ອງໃຈຕ່າງໆຂອງເຂົາເຈົ້າ ໃຫ້ຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ເພື່ອຊອກຫາທາງແກ້ໄຂ. ຖ້າຫາກພົບບັນຫາຂໍ້ຂັດແຍ່ງ ຄະນະ ແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ ສາມາດເປັນສື່ກາງລະຫວ່າງພາກສ່ວນຕ່າງໆ ໃນການຊອກຫາວິທີແກ້ໄຂບັນຫາທີ່ທັງສອງຝ່າຍເຫັນດີ. ຖ້າ ຫາກຄຳຮ້ອງທຸກ ຫຼື ຂໍ້ຂັດແຍ່ງນັ້ນບໍ່ສາມາດ ແກ້ໄຂໃນຂັ້ນບ້ານໄດ້, ຄະນະກຳມະການໄກ່ເກ່ຍບ້ານ ຈະຊ່ວຍປະຊາຊົນພາຍໃນບ້ານ ໃນການປະສານກັບຄະນະກຳມະການຮ້ອງທຸກຂັ້ນເມືອງ. ຜູ້ຮ້ອງທຸກຍັງສາມາດສະເໜີຄຳຮ້ອງທຸກຂອງເຂົາເຈົ້າໄປຫາ ຄະນະກຳມະ ການຊີ້ນຳໂຄງການຂັ້ນສູນກາງ (National Subproject Steering Committee) ຫຼື ສະພາແຫ່ງຊາດ ໄດ້ໂດຍກົງ. ຄະນະກຳ ມະການໄກ່ເກ່ຍຂັ້ນບ້ານ ຕ້ອງໄດ້ຮັບການຝຶກອົບຮົມກ່ຽວກັບສິດ ແລະ ໜ້າທີ່ຂອງຕົນ. ພວກເຂົາຈະຮັບຜິດຊອບໃນການ ດຳເນີນຂະ ບວນການຮ້ອງທຸກ ແລະ ໄກ່ເກ່ຍບັນຫາຂອງປະຊາຊົນພາຍໃນບ້ານ, ສາມາດເປັນສື່ກາງລະຫວ່າງຝ່າຍຕ່າງໆ ໃນຂອບເຂດພາລະບົດ

ບາດຂອງຕົນ ເມື່ອມີຂໍ້ຂັດແຍ່ງເກີດຂຶ້ນ ແລະ ທຸກຝ່າຍເຫັນດີທີ່ຈະເຂົ້າຮ່ວມໃນການໄກ່ເກ່ຍ. ສ່ວນບັນຫາອື່ນໆ ຕ້ອງໄດ້ສະເໜີ ໃຫ້ຄະນະກຳມະການໄກ່ເກ່ຍຂັ້ນເມືອງ ເພື່ອໄກ່ເກ່ຍ ຫຼື ແກ້ໄຂບັນຫາ.



ຮູບພາບ 18 ກົນໄກການຮ້ອງທຸກ

4.2.2: ການສະເໜີຄຳຮ້ອງທຸກ

ປະຊາຊົນພາຍໃນບ້ານທີ່ມີບັນຫາຂໍ້ຂ້ອງໃຈສາມາດກະກຽມສະເໜີຄຳຮ້ອງທຸກຕາມຂັ້ນຕອນດັ່ງລຸ່ມນີ້:

- ຂໍຮັບແບບຟອມຈາກຄະນະກຳມະການໄກ່ເກ່ຍ ຂັ້ນບ້ານ (ໂດຍບໍ່ມີຄ່າໃຊ້ຈ່າຍ).
- ເກັບກຳຂໍ້ມູນ ແລະ ຕື່ມແບບຟອມ.
- ສະເໜີແບບຟອມ ແລະ ອະທິບາຍບັນຫາຂໍ້ຂ້ອງໃຈໃຫ້ແກ່ຄະນະກຳມະການໄກ່ເກ່ຍ ຂັ້ນບ້ານ. ນອກຈາກນັ້ນ, ປະຊາຊົນພາຍໃນບ້ານສາມາດອະທິບາຍບັນຫາຂໍ້ຂ້ອງໃຈຂອງຕົນ ໃຫ້ແກ່ຄະນະກຳມະການໄກ່ເກ່ຍ ໄດ້ໂດຍກົງ ແລະ ໃຫ້ຄະນະກຳມະການຕື່ມແບບຟອມໃຫ້.

ການຂຽນແບບຟອມ (ໂດຍນຳໃຊ້ແບບຟອມທາງການ)

ແບບຟອມຄວນປະກອບມີຂໍ້ມູນສຳຄັນດັ່ງນີ້:

- ຊື່ບ້ານ, ກຸ່ມບ້ານ ແລະ ເມືອງ
- ຊື່ຂອງຄົວເຮືອນ ຫຼື ບຸກຄົນ ທີ່ມີບັນຫາຂໍ້ຂ້ອງໃຈ
- ວັນທີ ລາຍງານ
- ສະຖານທີ່ ທີ່ເກີດເຫດການ ຫຼື ບັນຫາ
- ຄຳອະທິບາຍຂອງບັນຫາ
- ຄູ່ກໍລະນີ
- ວິທີການແກ້ໄຂບັນຫາທີ່ຕ້ອງການ
- ເອກະສານຄັດຕິດ: ຮູບພາບ, ແຜນທີ່, ຮູບແຕ້ມ ແລະ ອື່ນໆ.

ການສະເໜີຄຳຮ້ອງທຸກແບບປາກເປົ່າ:

- ຜູ້ຮ້ອງທຸກ, ຕົວແທນຄອບຄົວ, ຫຼື ບຸກຄົນອື່ນໆ ສາມາດສະເໜີຄຳຮ້ອງທຸກໃຫ້ແກ່ຄະນະກຳມະການໄກ່ເກ່ຍຂັ້ນບ້ານໄດ້
- ປະຊາຊົນພາຍໃນບ້ານສາມາດນຳໃຊ້ອຸປະກອນ ເຊັ່ນ. ແຜນທີ່, ຮູບພາບ ຫຼື ບິດບັນທຶກຕ່າງໆ
- ຄະນະກຳມະການໄກ່ເກ່ຍຂັ້ນບ້ານສາມາດຖາມຄຳຖາມ ດັ່ງຕໍ່ໄປນີ້:
  - ຊື່ຂອງຄອບຄົວທີ່ມີບັນຫາຂໍ້ຂ້ອງໃຈ
  - ສະຖານທີ່ ທີ່ເກີດເຫດການ
  - ວັນທີເກີດບັນຫາ
  - ພາກສ່ວນອື່ນໆ ທີ່ມີສ່ວນກ່ຽວຂ້ອງ (ໂຄງການ ແລະ ພາກສ່ວນອື່ນ)
  - ວິທີການແກ້ໄຂບັນຫາທີ່ຕ້ອງການ.

ໜ້າທີ່ຂອງຄະນະກຳມະການໄກ່ເກ່ຍຂັ້ນບ້ານ

- ສະໜອງແບບຟອມໂດຍບໍ່ມີຄ່າໃຊ້ຈ່າຍ
- ຊ່ວຍເຫຼືອຜູ້ຮ້ອງທຸກໃນການຕື່ມແບບຟອມ ແລະ ດຳເນີນການຮ້ອງທຸກ
- ໃຫ້ການຢັ້ງຢືນໃນທັນທີ ທີ່ໄດ້ຮັບການຮ້ອງທຸກ
- ສືບສວນ-ສອບສວນ, ວິເຄາະຄຳຮ້ອງທຸກ ແລະ ຖ້າຫາກມີຄວາມຈຳເປັນ ກໍ່ລົງໄປເບິ່ງສະຖານທີ່ຈິງ.

ຂັ້ນຕອນການຮ້ອງທຸກ

ພາຍໃນ 5 ວັນ ຫຼັງຈາກຮັບຄຳຮ້ອງທຸກ ຄະນະກຳມະການໄກ່ເກ່ຍຂັ້ນບ້ານ ຄວນອອກໄປພົບກັບຜູ້ຮ້ອງທຸກ. ຖ້າຄຳຮ້ອງທຸກບໍ່ໄດ້ຮັບການແກ້ໄຂພາຍໃນ 20 ວັນ ຫຼື ຝ່າຍໃດຝ່າຍໜຶ່ງບໍ່ພໍໃຈກັບຜົນໄດ້ຮັບ. ຜູ້ຮ້ອງທຸກສາມາດສະເໜີຄຳຮ້ອງທຸກໄປຫາ ຄະນະກຳມະການ

ຄຸ້ມຄອງໂຄງການຂັ້ນເມືອງ, ຂັ້ນແຂວງ ແລະ ຂັ້ນທີ່ສູງກວ່າ. ພາຍຫຼັງ 20 ວັນ ຫຼັງຈາກສົ່ງຄຳຮ້ອງໃຫ້ຄະນະກຳມະການຊີ້ນຳໂຄງການຂັ້ນສູນກາງ ຫຼື ສະພາແຫ່ງຊາດ. ນອກຈາກນີ້, ຜູ້ຮ້ອງທຸກສາມາດສະເໜີຄຳຮ້ອງທຸກຫາສານປະຊາຊົນ ຕາມຂະບວນການຍຸດຕິທຳ.

ການສົ່ງຄຳຮ້ອງທຸກຫາສະພາແຫ່ງຊາດ

ຖ້າມີຝ່າຍໃດຝ່າຍໜຶ່ງບໍ່ພໍໃຈກັບຜົນໄດ້ຮັບ, ບໍ່ໄດ້ຮັບການຕອບສະໜອງ ຫຼື ຖ້າເປັນຄຳຮ້ອງທຸກທີ່ຮ້າຍແຮງ, ຝ່າຍໃດຝ່າຍໜຶ່ງ ສາມາດຍົກບັນຫາດັ່ງກ່າວໃຫ້ສະພາແຫ່ງຊາດຮັບຮູ້ ຜ່ານສາຍດ່ວນສະພາແຫ່ງຊາດ. ປະຊາຊົນພາຍໃນບ້ານຄວນໄດ້ຮັບການແຈ້ງໃຫ້ຊາບວ່າ ຖ້າພວກເຂົາສົ່ງບັນຫາໄປຫາສະພາແຫ່ງຊາດ ໂດຍບໍ່ໄດ້ຜ່ານຂະບວນການໄກ່ເກ່ຍ ຂອງຄະນະກຳມະການໄກ່ເກ່ຍຂັ້ນບ້ານ, ຂັ້ນເມືອງ, ຂັ້ນແຂວງ ແລະ ສູນກາງ. ສະພາແຫ່ງຊາດຈະແນະນຳ ໃຫ້ສະເໜີໄປຫາຄະນະກຳມະການໄກ່ເກ່ຍຂັ້ນບ້ານ ຫຼື ຂັ້ນເມືອງ ດັ່ງກ່າວກ່ອນ.

ບາດກ້າວ 4.3: ການຕິດຕາມ ແລະ ປະເມີນຜົນ

ໂຄງການຈະມີລະບົບການຕິດຕາມ ແລະ ການປະເມີນຜົນແບບມີສ່ວນຮ່ວມ ຊຶ່ງຈະສະໜອງໂອກາດໃຫ້ປະຊາຊົນໃນການສະແດງບັນຫາຂໍ້ຂ້ອງໃຈຂອງເຂົາເຈົ້າ. ໂຄງການທີ່ໄດ້ຮັບທຶນຈາກກອງທຶນປົກປັກຮັກສາສິ່ງແວດລ້ອມ ຈະມີ 2 ຮູບແບບຂອງການຕິດຕາມ ແລະ ປະເມີນຜົນ: ການຕິດຕາມ ແລະ ປະເມີນຜົນແບບມີສ່ວນຮ່ວມ ແລະ ການຕິດຕາມແລະປະເມີນຜົນແບບມາດຕະຖານໂດຍພະນັກງານຂອງໂຄງການ.

4.3.1: ການຕິດຕາມ ແລະ ປະເມີນຜົນແບບມີສ່ວນຮ່ວມ

ຈຸດປະສົງ

- ເພື່ອກວດກາຄວາມຄືບໜ້າ ແລະ ຈັດຕັ້ງປະຕິບັດຕາມສັນຍາຂອງທຸກຝ່າຍທີ່ເຂົ້າຮ່ວມໃນ ສັນຍາອະນຸລັກຂອງຊຸມຊົນ ແລະ ແຜນພັດທະນາບ້ານ.
- ເພື່ອໃຫ້ໂອກາດປະຊາຊົນພາຍໃນບ້ານ ສະແດງຄຳຄິດເຫັນ ແລະ ບັນຫາຂໍ້ຂ້ອງໃຈຂອງເຂົາເຈົ້າ ກ່ຽວກັບໂຄງການ ເພື່ອປັບປຸງ ແລະ ແກ້ໄຂບັນຫາ.

ເປົ້າໝາຍຜູ້ເຂົ້າຮ່ວມ

- ຄະນະກຳມະການພັດທະນາບ້ານ ແລະ ອົງການຈັດຕັ້ງມະຫາຊົນ
- ອົງການປົກຄອງກຸ່ມບ້ານ
- ຕົວແທນຂອງແຕ່ລະຊົນເຜົ່າ (ຍິງ ແລະ ຊາຍ).

ວິທີການ

<u>ທຸກ 3 ເດືອນ:</u>

- ຄະນະກຳມະການພັດທະນາບ້ານ ແລະ ອົງການປົກຄອງກຸ່ມບ້ານ ຈະຈັດກອງປະຊຸມຂັ້ນບ້ານ ໃນແຕ່ລະບ້ານທີ່ນອນຢູ່ໃນໂຄງການ
- ໃນການຈັດກອງປະຊຸມດັ່ງກ່າວຄວນມີຕົວແທນ ຍິງ ແລະ ຊາຍ ເຂົ້າຮ່ວມ
- ຜູ້ເຂົ້າຮ່ວມຈະໄດ້ຮັບການຊຸກຍູ້ ເພື່ອສະເໜີບັນຫາ ຫຼື ຂໍ້ຂ້ອງໃຈ ແລະ ໄດ້ຮັບຄຳແນະນຳ, ວິທີການປັບປຸງການຈັດຕັ້ງປະຕິບັດແຜນພັດທະນາບ້ານຫຼື ຜົນປະໂຫຍດໃຫ້ດີຂຶ້ນ
- ຄະນະກຳມະການພັດທະນາບ້ານຈະບັນທຶກບັນຫາທີ່ກຳລັງເກີດຂຶ້ນ ແລະ ບັນຫາທີ່ຜ່ານມາ ທີ່ຍັງບໍ່ໄດ້ຮັບການແກ້ໄຂ.

<u>ໃນທຸກປີ:</u>

- ເມືອງຈະຈັດກອງປະຊຸມພິເສດ ເພື່ອໃຫ້ສະມາຊິກຂອງຄະນະກຳມະການພັດທະນາບ້ານ ແລະ ຕົວແທນປະຊາຊົນທີ່ໄດ້ຮັບການສະ ເໜີຊື່ຈາກບ້ານ ຂອງແຕ່ລະບ້ານທີ່ນອນຢູ່ໃນໂຄງການ ປະຊຸມຮ່ວມກັນ.
- ຕົວແທນປະຊາຊົນຂອງແຕ່ລະບ້ານ ຄວນມີ ແມ່ຍິງ ແລະ ຜູ້ຊາຍ.

- ຖ້າບ້ານໃດຫຼາຍຊົນເຜົ່າຄວນມີຕົວແທນຈາກແຕ່ລະຊົນເຜົ່າເຂົ້າຮ່ວມ.
- ຕົວແທນຂອງບ້ານຄວນສະເໜີຄວາມຄິດເຫັນຂອງເຂົາເຈົ້າກ່ຽວກັບໂຄງການ, ເວົ້າເຖິງຄຳຮ້ອງທຸກຕ່າງໆທີ່ບໍ່ໄດ້ຮັບການແກ້ໄຂ ແລະ ໃຫ້ຄຳແນະນຳກ່ຽວກັບວິທີການປັບປຸງໂຄງການ. ຜູ້ທີ່ເຂົ້າຮ່ວມໃນກອງປະຊຸມຄວນບັນທຶກກອງປະຊຸມ, ເພື່ອເອົາໄວ້ທົບທວນຄືນໃນເວລາຈັດກອງປະຊຸມໃນປີຕໍ່ໄປ.



ຮູບພາບ 19 ການຕິດຕາມ ແລະ ປະເມີນຜົນແບບມີສ່ວນຮ່ວມ

4.3.2: ການຕິດຕາມ ແລະ ປະເມີນຜົນໂຄງການ ແບບມາດຕະຖານ

ຄຽງຄູ່ກັບການຕິດຕາມ ແລະ ການປະເມີນຜົນແບບມີສ່ວນຮ່ວມ, ແຕ່ລະໂຄງການຈະມີວິທີການມາດຕະຖານ ໃນການຕິດຕາມ ແລະ ການລາຍງານຄວາມຄືບໜ້າ. ວິທີການໃນການຕິດຕາມ ແລະ ປະເມີນຜົນເຫຼົ່ານັ້ນ ຕ້ອງໄດ້ຂຽນໄວ້ຢູ່ໃນບົດສະເໜີໂຄງການ ໂດຍເຈົ້າຂອງໂຄງການ (PO). ໂດຍຜ່ານການເຮັດວຽກກັບປະຊາຊົນ ແລະ ພາກລັດ, ເຈົ້າຂອງໂຄງການ ຈະສ້າງຕົວຊີ້ວັດ ສຳລັບການວັດແທກວັດຖຸປະສົງຂອງໂຄງການລວມມີຕົວຊີ້ວັດ ລຸ່ມນີ້:

- ການດຳເນີນງານເປັນໄປຕາມ ແຜນງົບປະມານ ແລະ ໄລຍະເວລາ
- ບ້ານໄດ້ຮັບປັດໃຈຕ່າງໆຈາກໂຄງການ ຕາມທີ່ກຳນົດໄວ້ໃນສັນຍາ
- ຊຸມຊົນບັນລຸເປົ້າໝາຍການຫັນປ່ຽນການນຳໃຊ້ຊັບພະຍາກອນທຳມະຊາດແບບໃໝ່ ແລະ ພັດທະນາຊີວິດການເປັນຢູ່
- ບັນຫາຕ່າງໆໄດ້ຮັບການແກ້ໄຂ
- ໄດ້ຮັບຜົນປະໂຫຍດ ແລະ ຜົນໄດ້ຮັບ ຈາກກິດຈະກຳຂອງໂຄງການ ຕາມທີ່ໄດ້ກຳນົດໄວ້ໃນສັນຍາ.

ຂໍ້ແນະນຳເພີ່ມຕື່ມ

ຖ້າຫາກມີຄົວເຮືອນໃດໜຶ່ງທີ່ມີລາຍຮັບ ຫຼື ຄວາມໝັ້ນຄົງທາງດ້ານສະບຽງອາຫານໜ້ອຍລົງຫຼັງ ຈາກເລີ່ມໂຄງການ ແລະ ຍັງບໍ່ໄດ້ຮັບການຟື້ນຟູ ໂດຍນຳໃຊ້ຜົນປະໂຫຍດໂຄງການ, ຄົວເຮືອນເຫຼົ່ານັ້ນ ຄວນໄດ້ຮັບການເອົາໃຈໃສ່ເປັນພິເສດໃນການຟື້ນຟູຊີວິດການເປັນຢູ່ຂອງຄົວເຮືອນນັ້ນ.

A1. ກິດຈະກຳທີ່ສະໜັບສະໜຸນໄດ້:

A2. ກິດຈະກຳທີ່ບໍ່ສະໜັບສະໜຸນ

A3. ຕົວຢ່າງຜົນປະໂຫຍດເອົາເຂົ້າໃນ ສັນຍາອະນຸລັກຂອງຊຸມຊົນ

A4. ລາຍການກວດສອບ ການຄັດເລືອກບ້ານ

A5. ແບບຟອມຂໍ້ມູນພື້ນຖານທາງດ້ານເສດຖະກິດ-ສັງຄົມ ຂອງບ້ານ

A6. ການປະເມີນຄວາມສ່ຽງຊີວະນາໆພັນ

A7. ບົດບັນ-ທຶກ ການເກັບກຳຂໍ້ມູນຊັບພະຍາກອນ

A8. ການນຳໃຊ້ສາຍພັນຕ່າງໆຂອງຊຸມ-ຊົນ

A9. ການປະເມີນຊັບພະຍາກອນທຳມະຊາດ

A10. ການຈັດລະດັບຖານະທາງດ້ານເສດຖະກິດ

A11. ການຢັ້ງຢືນການເຫັນດີຂອງຊຸມຊົນ

A12. ໃບຢັ້ງຢືນການຕົກລົງເຫັນດີ ຂອງຊຸມຊົນທີ່ຈະເຂົ້າຮ່ວມໃນກິດຈະກຳຂອງໂຄງການ

A13. ການຢັ້ງຢືນການເຫັນດີຂອງຊຸມຊົນ

A14. ໃບຢັ້ງຢືນການຕົກລົງເຫັນດີ ຂອງຊຸມຊົນທີ່ຈະເຂົ້າຮ່ວມໃນກິດຈະກຳຂອງໂຄງການ

A1. ກິດຈະກຳທີ່ສະໜັບສະໜຸນໄດ້

1. ປົກປັກຮັກສາ, ອະນຸລັກຊັບພະຍາກອນ ແລະ ຖິ່ນອາໄສທຳມະຊາດ;
2. ອະນຸລັກຖິ່ນອາໄສຂອງປ່າໂດຍຊຸມຊົນ, ການຄຸ້ມຄອງປ່າໄມ້ຊຸມຊົນ ແລະ ປົກປັກຮັກສາສັດປ່າ;
3. ປູກໄມ້ເພື່ອປ້ອງກັນການເຊາະໄຫຼຂອງດິນ ແລະ ຕະຝັ່ງເຈື່ອນ;
4. ປັບປຸງການນຳໃຊ້ຟືນແບບທີ່ມີປະສິດທິພາບ ຫຼື ສົ່ງເສີມການນຳໃຊ້ແຫຼ່ງພະລັງງານທາງເລືອກທີ່ຍືນຍົງ;
5. ເຮັດສວນຄົວ, ປູກເຄື່ອງປ່າຂອງດົງ ແລະ ຕົ້ນໄມ້ເປັນຢາ;
6. ສະໜັບສະໜຸນການເຮັດກະສິກຳແບບນິເວດຕ່າງໆ ຫຼື ຈັດສັນປັນເຂດບການຜະລິດກະສິກຳ ເພື່ອເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນໃນຊົນນະບົດ ມີຄວາມຍືນຍົງລວມທັງການປົກປັກຮັກສາພັນພືດ ແລະ ສັດປ່າ;
7. ປັບປຸງການເຂົ້າຮ່ວມຂອງຊົນເຜົ່າໃຫ້ເຂັ້ມແຂງ;
8. ປູກຈິດສຳນຶກ, ຄວາມເປັນເຈົ້າການ ຂອງຊຸມຊົນເພື່ອປົກປັກຮັກສາ, ຄຸ້ມຄອງເຂດປ່າໄມ້, ທີ່ດິນບໍລິເວນ ນ້ຳ, ສັດປ່າ ແລະ ຊີວະນາໆພັນ;
9. ຮັກສາຄວາມສະອາດ, ສຸກຂະອະນາໄມ ແລະ ສາທາລະນະສຸກ;
10. ຮັກສາຄວາມປອດໄພບົນທ້ອງຖະໜົນ ຢູ່ໃນເຂດຊຸມຊົນ ລວມທັງຈິດສຳນຶກ, ຄວາມຮູ້, ການຮ່ວມມື ພາຍໃນປະຊາຊົນທ້ອງຖິ່ນກ່ຽວກັບຄວາມປອດໄພ;
11. ສະຫນັບສະຫນູນການສື່ສານແລະການສ້າງຄວາມສາມາດໃນຫົວຂໍ້ທີ່ກ່າວມາຂ້າງເທິງ;
12. ບູລະນະຮັກສາເສັ້ນທາງເພື່ອການຄົມມະນາຄົມລະຫວ່າງບ້ານ;
13. ສະໜອງການບໍລິການສິ່ງອຳນວຍຄວາມສະດວກເຊັ່ນ: ນ້ຳສະອາດ, ໄຟຟ້າ, ພະລັງງານຖ້ຳການລົງທຶນບໍ່ມີຜົນກະ-ທົບກັບສິ່ງແວດລ້ອມຫຼືຊາວບ້ານ;
14. ສ້າງວິສາຫະກິດຂະໜາດນ້ອຍ ເພື່ອປັບປຸງຊີວິດການເປັນຢູ່ທີ່ສອດຄ່ອງກັບລະບົບນິເວດຂອງປ່າສະຫງວນແຫ່ງຊາດ ເຊັ່ນ: ປຸງແຕ່ງເຄື່ອງປ່າຂອງດົງ (ໝາກໄມ້ຕາກແຫ້ງ, ຫາໜໍ່ໄມ້, ຫັດຖະກຳ, ການທ່ອງທ່ຽວທຳມະຊາດ, ອື່ນໆ.);
15. ປັບປຸງກະສິກຳ ແລະ ການລ້ຽງສັດ ໂດຍການສົ່ງເສີມຫຼືບໍລິການສັດຕະວະແພດ, ສະໜອງແນວພັນພືດແລະສັດ ແລະ ອື່ນໆ;
16. ປັບປຸງການເຂົ້າເຖິງການສຶກສາ ຫຼື ສາທາລະນະສຸກ ໂດຍການບູລະນະຮັກສາສະຖານທີ່, ຈ່າຍເງິນເດືອນໃຫ້ຄູອາຈານ, ຊື້ປຶ້ມ, ອື່ນໆ;
17. ສົ່ງເສີມຊົນລະປະທານຂະໜາດນ້ອຍເຖິງ 10 ເຮັກຕາ ແລະ ຄວາມສາມາດໃນການສະໜອງນ້ຳເຖິງ 50 ລິດຕໍ່ວິນາທີ.

A2. ກິດຈະກຳທີ່ບໍ່ສະໜັບສະໜຸນ

1. ການຍົກຍ້າຍຖິ່ນອາໄສທຳມະຊາດ ຫຼື ການທຳລາຍໂຄງສ້າງທີ່ຢູ່ອາໄສຂອງບ້ານເຮືອນ;
2. ການຕັ້ງບ້ານໃໝ່ ຫຼື ຂະຫຍາຍບ້ານທີ່ມີຢູ່ ເຂົ້າໃນເຂດປ່າສະຫງວນແຫ່ງຊາດ ຫຼື ທີ່ກຳນົດເປັນປ່າສະຫງວນໂດຍການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ ຫຼື ໃນເຂດທີ່ບໍ່ເປັນເຂດກະສິກຳ ຫຼື ບ້ານ ໃນການແບ່ງເຂດບ້ານໃນປ່າສະຫງວນແຫ່ງຊາດ;
3. ການສ້າງຜົນກະທົບທີ່ບໍ່ດີຕໍ່ປະຊາຊົນໃນທ້ອງຖິ່ນໂດຍສະເພາະຊົນເຜົ່າ, ເຖິງແມ່ນ ຈະມີມາດຕະການຫຼຸດຜ່ອນຜົນກະທົບທີ່ສ້າງຂຶ້ນໂດຍໃຫ້ເຂົ້າເຈົ້າເຂົ້າຮ່ວມ;
4. ການທຳລາຍຫຼືເສຍຫາຍຊັບສິນວັດທະນະທຳ ລວມທັງສະຖານທີ່ທີ່ມີຄຸນຄ່າທາງດ້ານວັດຖຸໂບຮານ (ສະໄໝກ່ອນປະຫວັດສາດ), ຍຸກດຶກດຳບັນ, ປະຫວັດສາດ, ສາດສະໜາ, ວັດທະນະທຳ ແລະ ທຳມະຊາດໂດດເດັ່ນ;
5. ການນຳໃຊ້ໂຄງການ ເປັນສິ່ງກະຕຸກຊຸກຍູ້ ແລະ/ຫຼື ເຄື່ອງມືສະໜັບສະໜຸນ ແລະ/ຫຼື ຈັດຕັ້ງປະຕິບັດການຍົກຍ້າຍຈັດສັນປະຊາຊົນໃນທ້ອງຖິ່ນ ແລະ ການເຕົ້າໂຮມບ້ານ. ທຶນຂອງໂຄງການ ສາມາດນຳໃຊ້ໃນບ້ານທີ່ໄດ້ເຕົ້າໂຮມແລ້ວ ໃນເມື່ອປະຕິບັດຂໍ້ **5.1** ໄລຍະ **1** ໄດ້ຄົບຖ້ວນ (ເບິ່ງເອກກະສານການເຂົ້າຮ່ວມຂອງຊຸມຊົນ);
6. ແຮງງານ ແລະ ເງື່ອນໄຂອອກແຮງງານ ທີ່ສ້າງຄວາມເສຍຫາຍ, ຂູດຮີດ, ແຮງງານຮຸນແຮງ ຫຼື ບັງຄັບ, ແຮງງານຖືກຂົ່ມເຫັງ[1], ແຮງງານເດັກນ້ອຍ[2] ຫຼື ບັນຫາສຸກຂະພາບ ແລະ ປອດໄພ;
7. ການສ້າງຖະໜົນຫົນທາງໃໝ່, ການສ້ອມແປງທາງ, ປັບໜ້າ ທາງ ຫຼື ປັບປຸງທາງຢ່າງຢູ່ໃນຖິ່ນອາໄສທຳມະຊາດ ແລະເຂດປ່າສະຫງວນທີ່ມີຢູ່ຫຼືກຳລັງສະເໜີ;
8. ການຊື້ປືນ, ເລື່ອຍໂສ້, ອັດສະເບັດສະຕິດ, ລະເບີດ, ເຄື່ອງມືລ່າສັດ ແລະ ຫາປາທີ່ດັບສູນ ແລະ ການລົງທຶນທີ່ສ້າງຄວາມເສຍຫາຍໃຫ້ສິ່ງແວດລ້ອມ;
9. ຊື້ຢາປາບສັດຕູພືດ, ຢາຂ້າແມງ, ວັດສະພືດ ແລະ ສານເຄມີອັນຕະລາຍ ເກີນຈຳນວນທີ່ຕ້ອງການ ເພື່ອແກ້ໄຂເຂດທີ່ມີການລະບາດ. ຢ່າງໃດກໍດີ, ຖ້າມີການລະບາດຂຶ້ນ, ຈຳນວນຢາປາບສັດຕູພືດທີ່ມີສິດຊື້ໄດ້ ແລະ ຂຶ້ນທະບຽນຢູ່ ສປປລາວ ຈຳນວນເລັກນ້ອຍ ອາດອະນຸຍາດໄດ້ ຖ້າຫາກມີການຝຶກອົບຮົມຊາວກະສິກອນ ຫຼື ໄຫບ້ານ ເພື່ອຮັບປະກັນໃຫ້ການນຳໃຊ້ມັນມີຄວາມປອດໄພ ແລະ ມັນຈຳເປັນຕ້ອງໄດ້ຮັບຄຳເຫັນດີຈາກທະນາຄານໂລກ;
10. ການຈັດປະເພດທີ່ແນະນຳໂດຍອົງການອະນາໄມໂລກ ຕາມປະເພດຂອງຄວາມເປັນອັນຕະລາຍຫຼາຍ (ລວມທັງອັນທີ່ເປັນອັນຕະລາຍຫຼາຍທີ່ສຸດ, ຫຼາຍ ແລະ ປານກາງ);
11. ການເຄື່ອນໄຫວວຽກປ່າໄມ້ແບບຕັດ, ເກັບກູ້ ຫຼື ປຸງແຕ່ງໄມ້ ແລະ ເຄື່ອງປ່າຂອງດົງ, ຢ່າງໃດກໍດີ, ການສະໜັບສະໜຸນການເກັບກູ້ຫຼືປຸງແຕ່ງເຄື່ອງປ່າຂອງດົງແບບຍືນຍົງ ແມ່ນອະນຸຍາດ ຖ້າຫາກມີແຜນຄຸ້ມຄອງ ເພື່ອການນຳໃຊ້ຊັບພະຍາກອນແບບຍືນຍົງ;
12. ການນຳເຂົ້າຊະນິດພັນຕ່າງຖິ່ນທີ່ມີລັກສະນະຄຸກຄາມ, ຖ້າຫາກວ່າບໍ່ມີມາກ່ອນໃນເຂດອ້ອມແອ້ມ ຫຼື ບ່ອນທີ່ຄ້າຍຄືກັນ, ການນຳເຂົ້າຊະນິດພັນພືດທີ່ປັບປຸງພັນທຸກຳ ເຂົ້າໃນເຂດປ່າສະຫງວນທີ່ກຳນົດມາ;
13. ການອະນຸລັກ ແລະ ຂຸດໂຊມຖິ່ນອາໄສ ແລະ ການຂຸດຄົ້ນຊັບພະຍາກອນທຳມະຊາດແບບບໍ່ຍືນຍົງ ລວມທັງ ເຄື່ອງປ່າຂອງດົງ;

14. ການຄ້າຜະລິດຕະພັນໃດໜຶ່ງກັບທຸລະກິດທີ່ມີຄືຈະຜິດກົດໝາຍລາວ ຫຼື ລະບຽບກົດໝາຍສາກົນ ຫຼື ສົນທິສັນຍາສາກົນ ຫຼືສິ່ງກົດຫ້າມ ຂອງສາກົນ;
15. ການຄ້າຜະລິດຕະພັນກັບທຸລະກິດທີ່ມີທັດສະນະສັງຄົມ ແລະ ສິ່ງແວດລ້ອມແບບລະເບີດ ຫຼື ເຂົ້າຮ່ວມໃນກິດຈະກຳທີ່ບໍ່ອະນຸຍາດໃດ ໜຶ່ງ ໂດຍສະເພາະອັນທີ່ພົວພັນກັບຊັບພະຍາກອນທຳມະຊາດ.;
16. ໂຄງການ ທີ່ຕ້ອງເຮັດການປະເມີນຜົນກະທົບດ້ານສິ່ງແວດລ້ອມຄົບຖ້ວນ ຈະບໍ່ໄດ້ຮັບການສະໜັບສະໜູນ;
17. ການກໍ່ສ້າງທີ່ຄາດວ່າຈະເຮັດໃຫ້ມີຜົນກະທົບທາງລົບດ້ານສິ່ງແວດລ້ອມ ທີ່ອາດຫຼຸດຜ່ອນໄດ້ຜ່ານການນຳໃຊ້ກົດປະຕິບັດດ້ານສິ່ງແວດ ລ້ອມ ແລະ/ຫຼື ຢູ່ໃນຖິ່ນອາໄສທຳມະຊາດທີ່ສຳຄັນຫຼາຍ;
18. ໂຄງການຂະໜາດໃຫ່ຍ ແລະ/ຫຼື ກິດຈະກຳ ທີ່ພົວພັນກັບການດຳເນີນງານຂອງເຂື່ອນ (ທີ່ກຳລັງສ້າງຫຼືມີຢູ່) ຈະບໍ່ໄດ້ຮັບທຶນ.

(ໝາຍເຫດ)

1 ແຮງງານຖືກຂົ່ມເຫັງ ໝາຍເຖິງວຽກ ແລະ ການບໍລິການ, ທີ່ຕ້ອງເຮັດແບບບໍ່ສະໝັກໃຈ, ຕາມການລາຍງານຈາກບຸກຄົນພາຍໃຕ້ ການຂົ່ມເຫັງ

2 ແຮງງານເດັກນ້ອຍທີ່ສ້າງຄວາມເສຍຫາຍ ໝາຍເຖິງການນຳໃຊ້ແຮງງານຂອງເດັກນ້ອຍ ທີ່ມີລັກສະນະຂູດຮີດທາງດ້ານເສດຖະກິດ ຫຼື ຄືຈະມີຄວາມເປັນອັນຕະລາຍເພື່ອ, ຫຼືເພື່ອແຊກແຊງເຂົ້າໃນ, ການສຶກສາຂອງເດັກນ້ອຍ, ຫຼື ແຕະຕ້ອງຕໍ່ການພັດທະນາທາງດ້ານ ສຸກຂະພາບ, ຫຼື ທາງຮ່າງກາຍ, ແນວຄິດຈິດໃຈ, ຈາລິຍະທຳຫຼືສັງຄົມຂອງເດັກນ້ອຍ

A3. ຕົວຢ່າງຜົນປະໂຫຍດເອົາເຂົ້າໃນ ສັນຍາອະນຸລັກຂອງຊຸມຊົນ

ການສຶກສາ:

ທຶນ ຫຼື ເງິນເດືອນເພີ່ມໃຫ້ຄູ່ຢູ່ໂຮງຮຽນໃນທ້ອງຖິ່ນ.

ສະໜັບສະໜູນ ການປັບປຸງໂຮງຮຽນ ແລະ ສິ່ງອຳນວຍຄວາມສະດວກທາງດ້ານວັດທະນາທຳຂອງມວນຊົນ.

ທຶນສຶກສາໃຫ້ຊາວໜຸ່ມ.

ການບໍລິການສິ່ງເສີມປຸກຝັງ ແລະ ລ້ຽງສັດ.

ສັນຍາກັບອົງການບໍ່ສັງກັດລັດທ້ອງຖິ່ນ ເພື່ອການສະໜັບສະໜູນ ດ້ານວິຊາການ ແລະຝຶກອົບຮົມ ເພື່ອປັບປຸງຜະລິດຕະພາບດ້ານກະສິກຳ.

ສະໜອງຄວາຍ ເພື່ອຊ່ວຍໄຖນາ ເພື່ອປັບປຸງຜະລິດຕະພາບ.

ຟື້ນຟູດິນປູກຝັງ ໂດຍຈັດຈ້າງລິດໄຖນາມາໄຖນາ.

ປູກຜິດສຳຮອງ.

ຝຶກອົບຮົມ ເຕັກນິກປູກຫຍ້າ.

ເອົາໝາມາໃຫ້ເພື່ອຮັກສາສັດ ປ້ອງກັນສັດປ່າບໍ່ໃຫ້ມາທຳລາຍສັດລ້ຽງ.

ຂຸດນ້ຳບາດານ ຫຼື ເຮັດລະບົບຊົນລະປະທານ.

ວິສາຫະກິດທາງເລືອກ

ຮັບປະກັນໃຫ້ມີຜູ້ມາຊື້ຜົນລະປູກ ເຊັ່ນ ມັນຕົ້ນ.

ຈັດຕັ້ງສະມາຄົມຜູ້ຜະລິດຫຼືເຄື່ອງຫັດຖະກຳຫຼືສິນຄ້າອື່ນໆທີ່ມີໃນຕະຫຼາດ.

ການຊ່ວຍເຫຼືອໃນການຂຶ້ນທະບຽນທີ່ດິນ

ການຊ່ວຍເຫຼືອທາງດ້ານເຕັກນິກ ເພື່ອປະກາດທາງການເຂດສະຫງວນລວມທັງໃຫ້ຄຳເຫັນດ້ານກົດໝາຍ.

ຊ່ວຍເພື່ອສົ່ງເສີມສິດທິຂອງຊຸມຊົນ.

ທົບທວນການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ.

ອຳນວຍຄວາມສະດວກໃນການໄດ້ໃບຕາດິນ.

ການຊົດເຊີຍເປັນເງິນ, ເງິນສົດໃຫ້ແກ່ກອງທຶນພັດທະນາຊຸມຊົນ, ອື່ນໆ

ກອງທຶນສະຫວັດດີການຂອງຊຸມຊົນເພື່ອຊ່ວຍສະໜັບສະໜູນ ຄອບຄົວທຸກຍາກ, ການຊ່ວຍເຫຼືອເວລາ, ຈຳເປັນແລະອື່ນໆ.

ກອງທຶນພັດທະນາ ບ້ານສ້າງຂຶ້ນໂດຍຊຸມຊົນ ເພື່ອສະໜັບສະໜູນ ຄອບຄົວທຸກຍາກ.

ກົນໄກຊົດເຊີຍລວມທັງໃຫ້ທຶນຊົດເຊີຍ.

ກຳນົດລາຄາຊື້ນທີ່ຂາຍ ເພື່ອຮັກສາຈຳນວນສັດ.

ທຶນຮອນຈາກພາກສ່ວນທຸລະກິດ ໃຫ້ກອງທຶນຂອງຊຸມຊົນທີ່ຈະສະໜັບສະໜູນ ຜົນປະໂຫຍດໃນໄລຍະຍາວ.

ການພັດທະນາການທ່ອງທ່ຽວ

ທຶນຮອນເພື່ອວາງແຜນພັດທະນາການທ່ອງທ່ຽວທຳມະຊາດແບບຮອບດ້ານ.

ເງິນສຳລັບການລາດຕະເວນແລະຕິດຕາມກວດກາ

ເງິນຄ່າຈ້າງໃຫ້ຜູ້ທີ່ໄປເຮັດການລາດຕະເວນ.

ອຸປະກອນ, ຝຶກອົບຮົມ ແລະ ເງິນເດືອນໃຫ້ຜູ້ທີ່ໄປເຮັດການລາດຕະເວນ.

ຝຶກອົບຮົມ ເພື່ອຕິດຕາມຊີວະນາໆພັນ ແລະ ເງິນເດືອນແລະອຸປະກອນເພື່ອເຮັດການຕິດຕາມ.

ວາງແຜນຄຸ້ມຄອງຊັບພະຍາກອນທຳມະຊາດ

ຊ່ວຍສ້າງແຜນເພື່ອປົກປັກຮັກສາ ແລະ ແຜນຄຸ້ມຄອງຊັບພະຍາກອນທຳມະຊາດ.

ຊ່ວຍວາງແຜນ ແລະ ລະບຽບກວດກາລາດຕະເວນຂອງຊຸມຊົນ.

ການສື່ສານ

ສ້າງກົນໄກເພື່ອປະສານງານ ແລະ ແລກປ່ຽນຂ່າວສານ.

ວັດແທກຄວາມຄືບໜ້າ ເພື່ອບັນລຸຜົນການອະນຸລັກ (ຕິດຕາມຊີວະນາໆພັນ)

ຕິດຕາມກວດກາການປະຕິບັດຕາມສັນຍາອະນຸລັກຂອງຊຸມຊົນ.

ໂອກາດມີວຽກເຮັດງານທຳ ເພື່ອເປັນການສ້າງລາຍໄດ້ຕື່ມຕາມສັນຍາ.

ເກັບກຳຂໍ້ມູນເພື່ອການໄລ່ລຽງປະສິດທິຜົນຕະຫຼອດປີ ຫຼື ລະດູການ.

ຄວາມຮູ້, ຄວາມສາມາດ ແລະ ພາກພູມໃຈຂອງສະມາຊິກຂອງຊຸມຊົນ.

A4. ລາຍການກວດສອບ ການຄັດເລືອກບ້ານ

	ເງື່ອນໄຂ	ແມ່ນ/ບໍ່ແມ່ນ
	ສະມາຊິກຊຸມຊົນນຳໃຊ້ຊັບພະຍາກອນທຳມະຊາດຕາມປະເພນີໃນເຂດສະຫງວນ	ແມ່ນ ☐ ບໍ່ແມ່ນ ☐
	ອະທິບາຍການນຳໃຊ້ຊັບພະຍາກອນທຳມະຊາດຕາມປະເພນີໃນເຂດສະຫງວນ:	
	ບ້ານໄດ້ເຄີຍຍົກຍ້າຍ ຫຼື ຖືກເຕົ້າໂຮມພາຍໃນ 5 ປີຫຼັງ	ແມ່ນ ☐ ບໍ່ແມ່ນ ☐
	ຖ້າແມ່ນ, ອະທິບາຍ:	
	ມີການຄຸກຄາມສູງ ຕໍ່ກັບການອະນຸລັກ ຈາກການເຮັດກິດຈະກຳທີ່ຜິດກົດໝາຍ	ແມ່ນ ☐ ບໍ່ແມ່ນ ☐
	ອະທິບາຍການຄຸກຄາມ:	
	ຊຸມ-ຊົນເຕັມໃຈເຂົ້າຮ່ວມໃນການ ວາງແຜນການນຳໃຊ້ທີ່ດິນແບບມີສ່ວນຮ່ວມ, ການສ້າງແຜນພັດທະນາບ້ານ, ແລະ ການສ້າງສັນຍາອະນຸລັກຂອງຊຸມ-ຊົນ*	ແມ່ນ ☐ ບໍ່ແມ່ນ ☐
	ອະທິບາຍວິທີການທີ່ຊຸມຊົນສະແດງຄວາມເຕັມໃຈໃນການເຂົ້າຮ່ວມ:	

	ເງື່ອນໄຂ	ແມ່ນ/ບໍ່ແມ່ນ
	*ໝາຍເຫດ: ການສະແດງຄວາມເຕັມໃຈນີ້ ບໍ່ແມ່ນຂໍ້ຜູກມັດ. ຊຸມ-ຊົນສາ-ມາດຖອນຄວາມເຕັມໃຈຂອງເຂົາເຈົ້າໃນການເຂົ້າຮ່ວມໃນຂັ້ນຕອນໃດກໍ່ໄດ້ຂອງໂຄງການໃນຕໍ່ໜ້າ	

A5. ແບບຟອມຂໍ້ມູນພື້ນຖານທາງດ້ານເສດຖະກິດ-ສັງຄົມ ຂອງບ້ານ

(ອຳນາດການປົກຄອງບ້ານໃຫ້ຂໍ້ມູນ ໃນຂັ້ນຕອນທີ 1)

ວັນທີ:	
ຜູ້ໃຫ້ຂໍ້ມູນ (ຕົວແທນບ້ານ):	ຊື່:
	ຕຳແໜ່ງ:
	ເບີໂທ:
ຜູ້ຖາມ (ພະ-ນັກງານໂຄງ-ການ ທີ່ຊ່ວຍໃນການຂຽນ ຂໍ້-ມູນ)	ຊື່:
	ຕຳແໜ່ງ:
ຊື່ບ້ານ:	
ຊື່ກຸ່ມບ້ານ:	
ເມືອງ:	
ແຂວງ:	

ຄະນະກຳມະການພັດທະນາບ້ານ

ໜ້າທີ່ຮັບຜິດຊອບ		ຊື່: ຕຳແໜ່ງ/ສະມາຊິກ	ເພດ	ຊົນເຜົ່າ
ປະທານ				
ຮອງຜູ້ທີ 1				
ຮອງຜູ້ທີ 2				
ເລຂາ				
ການເງິນ				
ອື່ນໆ				

ສະຖານະພາບຂອງບ້ານ

ສະຖານະພາບ	ໝາຍ [✓]	ປີທີຖືກແຕ່ງຕັ້ງ	ຄຳເຫັນ
ບ້ານທຸກຍາກ			
ບ້ານພັດທະນາ			

ສະຖານະພາບ	ໝາຍ [✓]	ປີທີ່ຖືກແຕ່ງຕັ້ງ	ຄຳເຫັນ
ບ້ານແບບຢ່າງ			
ບ້ານສາມສ້າງ			

ປະຊາກອນ

ປະຊາກອນບ້ານ	
ຈຳນວນແມ່ຍິງ	
ຈຳນວນຄອບຄົວ	
ຈຳນວນຄົວເຮືອນ	
ຈຳນວນຜູ້ທີ່ມີອາຍຸຕ່ຳກວ່າ 15 ປີ (14 ປີ ລົງມາ)	
ຈຳນວນຜູ້ທີ່ມີອາຍຸສູງກວ່າ 64 ປີ (65 ປີ ຂຶ້ນເມືອ)	

ຄົວເຮືອນທີ່ມີຫົວໜ້າຄົວເຮືອນຄົນດຽວ

ຫົວໜ້າຄົວເຮືອນຜູ້ຊາຍ	
ຫົວໜ້າຄົວເຮືອນຜູ້ຍິງ	

ກຸ່ມຊົນເຜົ່າທີ່ຢູ່ໃນບ້ານ

ລຳດັບ	ຊົນເຜົ່າ	ຈຳນວນປະຊາກອນ	ຈຳນວນແມ່ຍິງ	ຈຳນວນຄົວເຮືອນ	ຈຳນວນຄອບຄົວ
1.					
2.					
3.					
4.					
5.					

ໂຄງລ່າງພື້ນຖານບ້ານ

ລາຍການໂຄງລ່າງພື້ນຖານ	ໝາຍ [✓] ໃສ່ສິ່ງທີ່ມີໃນບ້ານ	ປີທີ່ສ້າງ	ຖ້າຫາກບໍ່ມີຢູ່ໃນບ້ານ, ໃຫ້ບອກຈຳນວນຊົ່ວໂມງທີ່ໃຊ້ໃນການເດີນທາງໄປບ່ອນທີ່ໃກ້ທີ່ສຸດ
ທາງດິນແດງ			
ທາງປູຢາງ			
ທາງທີ່ໃຊ້ໄດ້ຕະຫຼອດປີ (ທຸກລະດູ)			
ໂຮງຮຽນມູນລະປະຖົມ			
ໂຮງຮຽນປະຖົມສົມບູນ			
ໂຮງຮຽນມັດທະຍົມຕອນຕົ້ນ			
ໂຮງຮຽນມັດທະຍົມຕອນປາຍ			
ຖົງຢາປະຈຳບ້ານ			
ສຸກສາລາ			
ຕະຫຼາດ			
ນ້ຳປະປາ			

ໂຄງລ່າງພື້ນຖານຂອງຄົວເຮືອນ

ລາຍການ	ຈຳນວນຄົວເຮືອນໃນບ້ານທີ່ມີ
ນ້ຳກ໊ອກ (ນ້ຳປະປາ)	
ໄຟຟ້າ	
ຫ້ອງນ້ຳ (ວິດ)	

ມີອາຫານພໍພຽງ

ມີອາຫານພໍພຽງຕະຫຼອດປີ	
ຂາດແຄນອາຫານ 1-3 ເດືອນ	

ຂາດແຄນອາຫານ 4-6 ເດືອນ	
ຂາດແຄນອາຫານ ຫຼາຍກວ່າ 6 ເດືອນ	

ສະຖານະພາບຄົວເຮືອນ

ຈຳນວນຄົວເຮືອນຮັ່ງມີ	
ຈຳນວນຄົວເຮືອນທຸກຈົນ	
ຈຳນວນຄົວເຮືອນຍາກແຄ້ນ	

ໂຄງການພັດທະນາໃນບ້ານ

	ໝາຍ [✓] ຖ້າຫາກມີໃນບ້ານ	ປີທີ່ສ້າງຕັ້ງ	ລາຍລະອຽດ
ໂຄງການສຳປະທານ			
ໂຄງການລົງທຶນ			
ກະສິກຳແບບມີສັນຍາ			
ໂຄງການຂຸດຄົ້ນໄມ້			
ໂຄງການພັດທະນາ ອື່ນໆ			

ການເຂົ້າເຖິງກອງທຶນກູ້ຢືມ

	ໝາຍ [✓] ຖ້າຫາກມີໃນບ້ານ	ປີທີ່ສ້າງຕັ້ງ	ລາຍລະອຽດ
ທະນາຄານບ້ານ			
ກອງທຶນໝູນວຽນ			
ກອງທຶນເງິນຝາກ			
ກອງທຶນອື່ນໆ			

ອາຊີບຂອງປະຊາຊົນໃນບ້ານ (ຈັດລຳດັບຕາມເວລາທີ່ໃຊ້ໃນການເຮັດອາຊີບ)

ລຳດັບ	ອາຊີບ/ວຽກງານ	ກຸ່ມຄົນທີ່ເຮັດຫຼາຍທີ່ສຸດ (ເຊັ່ນ: ກຸ່ມຊົນເຜົ່າ, ຄອບຄົວທຸກຈົນ ແລະ ອື່ນໆ)	ກຸ່ມຄົນທີ່ເຮັດໜ້ອຍທີ່ສຸດ
1.			
2.			
3.			
4.			
5.			

ອາຊີບຂອງປະຊາຊົນໃນບ້ານ (ລາຍຮັບທີ່ໄດ້ຈາກອາຊີບດັ່ງກ່າວ)

ອາຊີບ/ວຽກງານ	ກຸ່ມຄົນທີ່ເຮັດຫຼາຍທີ່ສຸດ (ເຊັ່ນ: ກຸ່ມຊົນເຜົ່າ, ຄອບຄົວທຸກຈົນ ແລະ ອື່ນໆ)	ກຸ່ມຄົນທີ່ເຮັດໜ້ອຍທີ່ສຸດ
ກະສິກຳ		
ຫັດຖະກຳ		
ແຮງງານຮັບຈ້າງ		
ລ້ຽງສັດ		
ເກັບເຄື່ອງປ່າຂອງດົງ		
ອື່ນໆ		

ທີ່ດິນຂອງບ້ານ (ຮວມທັງ ດິນບຸກຄົນ, ດິນລວມໝູ່, ແລະ ດິນລັດ)

ປະເພດ	ເນື້ອທີ່ທັງໝົດ ເປັນເຮັກຕາ	ຈຳ-ນວນຕອນດິນທັງໝົດ	ຄຳເຫັນ
ແມ່ນ້ຳ			

ປະເພດ	ເນື້ອທີ່ທັງໝົດ ເປັນເຮັກຕາ	ຈຳ-ນວນຕອນດິນທັງໝົດ	ຄຳເຫັນ
ພູ			
ຖະໜົນ/ທາງຍ່າງ			
ດິນເຊົ່າ ຫຼື ສຳປະທານໂດຍນາຍທຶນ			
ເຮືອນ			
ດິນນາທີ່ນຳໃຊ້ນ້ຳຝົນ			
ດິນນາທີ່ນຳໃຊ້ນ້ຳຈາກຊົນລະປະທານ			
ດິນໄຮ່ (ທີ່ກຳລັງເຮັດຢູ່)			
ດິນປ່າເຫຼົ້າ			
ສວນປູກ (ເຊັ່ນ: ຢາງພາລາ, ໄມ້ສັກ, ໄມ້ວີກ)			
ດິນສວນ (ໄມ້ກິນໝາກ)			
ພືດກິນໄດ້ອື່ນໆ			
ພືດສຳລັບຂາຍ			
ປ່າສັກສິດ			
ເຂດທີ່ສຳຄັນທາງວັດທະນະທຳ			
ປ່າປູກທົດແທນ			
ປ່າສະຫງວນ			
ປ່າຊົມໃຊ້ (ປ່າທີ່ບ້ານຊົມໃຊ້)			
ເຂດປ່າອື່ນໆ			
ອື່ນໆ			

ປະເພດ		ເນື້ອທີ່ທັງໝົດ ເປັນເຮັກຕາ	ຈຳ-ນວນຕອນດິນທັງໝົດ	ຄຳເຫັນ
ເນື້ອທີ່ທັງໝົດ				

A6. ການປະເມີນຄວາມສ່ຽງການຄຸກຄາມຊັບພະຍາກອນ

ໂຄງການ:

ປຶກສາຫາລືກັບ ຄະນະພັດທະນາບ້ານ ແລະ ທັງນັກວິຊາການ, ຂຽນຕາຕະລາງຂ້າງລຸ່ມນີ້ ໃສ່ເຈ້ຍແຜ່ນໃຫຍ່

ລຳດັບ	ໄພຄຸກຄາມຕໍ່ກັບຊີວະນາໆພັນ	ການຕອບສະໜອງການພັດທະນາ ເພື່ອຫຼຸດຜ່ອນໄພຄຸກຄາມ
1.		
2.		
3.		
4.		
5.		
6.		
7.		

8.		
9.		

A7. ບົດບັນທຶກ ການເກັບກຳຂໍ້ມູນຊັບພະຍາກອນ

ປະຫວັດຄວາມເປັນມາຂອງບ້ານ
ຈຳນວນຜູ້ເຂົ້າຮ່ວມ

ຈຳນວນຜູ້ຊາຍ		ຈຳນວນເຜົ່າລາວ	
ຈຳນວນແມ່ຍິງ		ຈຳນວນຜູ້ທີ່ບໍ່ແມ່ນເຜົ່າລາວ	

ໄລຍະເວລາ (ປີ)	ເຫດການປ່ຽນແປງ	ສະພາບຂອງປ່າໄມ້ ແລະ ສັດປ່າ

ລາຍການສາຍພັນ
ຈຳນວນຜູ້ເຂົ້າຮ່ວມ

ຈຳນວນຜູ້ຊາຍ		ຈຳນວນເຜົ່າລາວ	
ຈຳນວນແມ່ຍິງ		ຈຳນວນຜູ້ທີ່ບໍ່ແມ່ນເຜົ່າລາວ	

A8. ລາຍການ ຊະນິດພັນພືດ ແລະ ສັດປ່າ

ລ/ດ	ປະເພດ ເຄື່ອງປ່າຂອງດົງ	ປະລິມານທີ່ມີ			ການນຳໃຊ້			
		ຫຼາຍ	ກາງ	ໜ່ອຍ	ກິນ	ຂາຍ	ນຳໃຊ້	ເປັນຢາ
I	ປະເພດສັດປ່າ							
1	ໝາໃນ							
2	ເສືອໂຄ່ງ							
3	ລີງ							
4	ຂາແດງ							
5	ທະນີ							
6	ໝູປ່າ							
7	ໝູລີ່ງ							
8	ລີ່ງລີ່ມ							
9	ເໝັ້ນ							
10	ໄກ່ຂົ່ວ							
11	ກວາງ							
12	ຝານ							
13	ງູສີ່ງ							
14	ງູເຫລືອມ							
15	ງູເຫົ່າ							
16	ເຕົ່າ							
17	ງູຈົ່ງອາງ							
18	ລີ່ນ							
19	ອົ້ນ							
20	ແລນ							
21	ກະທ້າງ							
22	ກະຮອກ							
23	ກະແຕ							
24	ຈອນຜອນ							
25	ໝູຫວາຍ, ໝູຟຸກ							
26	ຕຸນ							
27	ເຫງັນ							

ລ/ດ	ປະເພດ ເຄື່ອງປ່າຂອງດົງ	ປະລິມານທີ່ມີ			ການນຳໃຊ້			
		ຫຼາຍ	ກາງ	ໜ່ອຍ	ກິນ	ຂາຍ	ນຳໃຊ້	ເປັນຢາ
28	ເສືອດາວ							
29	ກະເລັນ							
30	ໝີ							
31	ໄກ້ປ່າ							
32	ກັບແກ້							
33	ກະປອມ							
34	ກະຮອກໜໍ້							
35	ບາງລໍ້							
36	ບ່າງປີກ							
37	ເຍືອງ							
38	ເມີຍ							
39	ນາກ							
40	ຄວາຍປ່າ							
41	ງົວປ່າ							
42	ໄກ່ປ່າ							
43	ແມວປ່າ							
44	ເສືອແມວ							
45	ນົກເຄົ້າ							
46	ນົກກົກ							
47	ນົກກາງ							
48	ນົກແກ							
49	ນົກກະປົດ							
50	ນົກເປົ້າ							
51	ນົກເຂົ້າ							
52	ນົກແອ່ນ							
53	ນົກອ້ຽງ							
54	ນົກແສງກາ							
55	ນົກກະແຊ່ວ							
56	ນົກກົດ							

ລ/ດ	ປະເພດ ເຄື່ອງປ່າຂອງດົງ	ປະລິມານທີ່ມີ			ການນຳໃຊ້			
		ຫຼາຍ	ກາງ	ໜ່ອຍ	ກິນ	ຂາຍ	ນຳໃຊ້	ເປັນຢາ
57	ນົກກາ							
58	ນົກປາຫຼຽວ							
59	ນົກແຂກ							
60	ນົກແກ້ວຂາວ							
61	ນົກມຸມ							
62	ນົກຂີ້ນໂດກ							
63	ນົກ 30							
64	ນົກໄກ່ນາ							
65	ນົກໄສ່							
66	ນົກແຕ້ນຊີວ							
67	ນົກກະເວົ້າ							
68	ນົກເປັດນ້ຳ							
69	ນົກເຈຍ							
70	ນົກກະບາ							
71	ນົກລາງ							
72	ນົກກະຈີບ							
73	ນົກກະແດດເດົ້າ							
74	ນົກກະທາ							
75	ນົກແກ້ວ							
76	ນົກຊຸ້ມ							
II	**ປະເພດສັດນ້ຳ**							
77	ອີ່ງ							
78	ຂຽດຕະປາດ							
79	ຂຽດດິນ							
80	ຂຽດໂມ້							
81	ຂຽດນ້ຳເຕົ້າ							
82	ຂຽດເຫລືອງ							
83	ກົບ							
84	ຄັນຄາກ							

ລ/ດ	ປະເພດ ເຄື່ອງປ່າຂອງດົງ	ປະລິມານທີ່ມີ			ການນຳໃຊ້			
		ຫຼາຍ	ກາງ	ໜ່ອຍ	ກິນ	ຂາຍ	ນຳໃຊ້	ເປັນຢາ
85	ປາດຸກ							
86	ປາກັ້ງ							
87	ປາຄໍ່							
88	ປາຈາດ							
89	ປາໄນ							
90	ປາຂາວ							
91	ປາຫົວມ່ວມ							
92	ປາປູ່							
93	ກຸ້ງ							
94	ອ່ຽນ							
95	ປາຫລິດ							
96	ປາຫຼາດ							
97	ປາກົມ							
98	ປາສູດ							
99	ປາຄຽງ							
100	ປາກົດ							
101	ປາເຄິ່ງ							
102	ປາຝາອອງ							
103	ຫອຍ							
104	ກະປູ							
105	ປາຊີວ							
106	ປາຮາກກ້ວຍ							
107	ປາຫວ້າ							
108	ປາປີກ							
109	ປາຢາງບອນ							
110	ປາສະຫລັງ							
111	ປາຕິດຫີນ							
112	ປາກະເດີດ							
113	ປາຂ້າວ							

ລ/ດ	ປະເພດ ເຄື່ອງປ່າຂອງດົງ	ປະລິມານທີ່ມີ			ການນຳໃຊ້			
		ຫຼາຍ	ກາງ	ໜ່ອຍ	ກິນ	ຂາຍ	ນຳໃຊ້	ເປັນຢາ
114	ປາມັນ							
115	ປາໝູມັນ							
116	ປາປາກ							
117	ປາຫລັງໝາມ							
III	**ປະເພດ ເຄື່ອງປ່າຂອງດົງ**							
118	ຫວາຍຂາວ							
119	ຫຍ້າຄາ							
120	ກົກຄ້າ							
121	ແຂມ							
122	ກົກບົງ							
123	ຂ່າປ່າ							
124	ໝາກແໜ່ງ							
125	ປໍສາ							
126	ກອຍ							
127	ເຕີຍ							
128	ຕາວ							
129	ສານ							
130	ກ້ວຍປ່າ							
IV	**ປະເພດ ໄມ້ປ່ອງ**							
131	ໄມ້ຝຸງ							
132	ໄມ້ເຮ້ຍ							
133	ໄມ້ຊອດ							
134	ໄມ້ໄຜ່							
135	ໄມ້ເຜັກ							
136	ໄມ້ຂີ້ມ							
V	**ປະເພດ ຜັກ ແລະ ເຫັດ**							
137	ຜັກກູດ							
138	ຜັກໝອກ							
139	ຜັກໝາມ							

ລ/ດ	ປະເພດ ເຄື່ອງປ່າຂອງດົງ	ປະລິມານທີ່ມີ			ການນຳໃຊ້			
		ຫຼາຍ	ກາງ	ໜ່ອຍ	ກິນ	ຂາຍ	ນຳໃຊ້	ເປັນຢາ
140	ຜັກຂະ							
141	ຜັກກະໂດນ							
142	ຜັກຕົ້ວ							
143	ຜັກກຸ່ມ							
144	ຜັກຕີນລິດ							
145	ຜັກອີເລີດ							
146	ຜັກໃຊ							
147	ຜັກສະເມັກ							
148	ຜັກຂີ້ເຫລັກ							
149	ຜັກແວ່ນ							
150	ຜັກຕົບ							
151	ເຫັດປອກ							
152	ເຫັດບິດ							
153	ເຫັດຊຶ້ນ							
154	ເຫັດຂາວ							
155	ເຫັດຫູໜູ							
156	ເຫັດໄລ່							
157	ເຫັດເຜາະ							
158	ເຫັດລະໂງ້ກ							

A9. ການປະເມີນຊັບພະຍາກອນທຳມະຊາດ

ຈຳນວນຜູ້ເຂົ້າຮ່ວມ

ຈຳນວນຜູ້ຊາຍ		**ຈຳນວນເຜົ່າລາວ**	
ຈຳນວນແມ່ຍິງ		**ຈຳນວນຜູ້ທີ່ບໍ່ແມ່ນເຜົ່າລາວ**	

10 ອັນດັບທຳອິດ ຂອງສາຍພັນທີ່ສຳຄັນທີ່ສຸດ	ໄລຍະເວລາໃນການເດີນທາງ		ຈຳນວນທີ່ເກັບໄດ້		ສາເຫດຂອງການປ່ຽນແປງ
	5 ປີຫຼັງ	ປັດຈຸບັນ	5 ປີຫຼັງ	ປັດຈຸບັນ	

1.					
2.					
3.					
4.					
5.					
6.					
7.					
8.					
9.					
10.					

10 ອັນດັບທຳອິດ ຂອງສາຍພັນທີ່ຖືກ ຄຸ້ມຄອງຫຼາຍທີ່ສຸດ	ໄລຍະເວລາໃນການເດີນທາງ		ຈຳນວນທີ່ເກັບໄດ້		ສາເຫດຂອງການປ່ຽນແປງ
	5 ປີຫຼັງ	ປັດຈຸບັນ	5 ປີຫຼັງ	ປັດຈຸບັນ	
1.					
2.					
3.					
4.					
5.					
6.					
7.					
8.					
9.					

10.					

10 ອັນດັບທຳອິດ ຂອງສາຍພັນທີ່ຍັງມີຢ່າງຫຼວງຫຼາຍ	ໄລຍະເວລາໃນການເດີນທາງ		ຈຳນວນທີ່ເກັບໄດ້		ສາເຫດຂອງການປ່ຽນແປງ
	5 ປີຫຼັງ	ປັດຈຸບັນ	5 ປີຫຼັງ	ປັດຈຸບັນ	
1.					
2.					
3.					
4.					
5.					
6.					
7.					
8.					
9.					
10.					

A10. ການຈັດລະດັບຖານະທາງດ້ານເສດຖະກິດ

ຈຳນວນຜູ້ເຂົ້າຮ່ວມ

ຈຳນວນຜູ້ຊາຍ		**ຈຳນວນເຜົ່າລາວ**	
ຈຳນວນແມ່ຍິງ		**ຈຳນວນຜູ້ທີ່ບໍ່ແມ່ນເຜົ່າລາວ**	

ຖານະທາງດ້ານເສດຖະກິດ	ຈຳນວນຄອບຄົວ	ຄຳອະທິບາຍ

A11. ການວິເຄາະສະຖານທີ່ບ້ານ

ຈຳນວນຜູ້ເຂົ້າຮ່ວມ

ຈຳນວນຜູ້ຊາຍ		ຈຳນວນເຜົ່າລາວ	
ຈຳນວນແມ່ຍິງ		ຈຳນວນຜູ້ທີ່ບໍ່ແມ່ນເຜົ່າລາວ	

ແຫຼ່ງລາຍຮັບຕົ້ນຕໍ

ລຳດັບ	ແຫ່ງລາຍຮັບ
1.	
2.	
3.	
4.	
5.	
6	

ລາຍຈ່າຍຕົ້ນຕໍ

ລຳດັບ	ລາຍຈ່າຍ
1.	
2.	
3.	
4.	
5.	
6	

A12. ບັນຫາທີ່ເກີດໃນບ້ານ

ຈຳນວນຜູ້ເຂົ້າຮ່ວມ

ຈຳນວນຜູ້ຊາຍ		ຈຳນວນເຜົ່າລາວ	
ຈຳນວນແມ່ຍິງ		ຈຳນວນຜູ້ທີ່ບໍ່ແມ່ນເຜົ່າລາວ	

ບັນຫາ	ສາເຫດ	ຂັ້ນຕອນໃນການແກ້ໄຂ	ການຊ່ວຍເຫຼືອທີ່ຕ້ອງການ	ລຳດັບບຸລິມະສິດ

A13. ການຢັ້ງຢືນການເຫັນດີຂອງຊຸມຊົນ

ການດຳເນີນໂຄງການຕ້ອງມີການຕົກລົງຂອງປະຊາຊົນ ເຊິ່ງສະແດງອອກດັ່ງຕໍ່ໄປນີ້:

- ການຍິນຍອມເຫັນດີຂອງຕົວແທນຂອງບ້ານໃນເວລາແນະນຳໂຄງການໃນເບື້ອງຕົ້ນ ແລະ ປະເມີນເສດຖະກິດ-ສັງຄົມ (ຂັ້ນຕອນທີ 1.2 ແລະ 1.3)
- ການເຫັນດີໃນເບື້ອງຕົ້ນຫຼັງຈາກການປຶກສາຫາລືກັບປະຊາຊົນ (ຂັ້ນຕອນທີ 2.1) ແລະ ກ່ອນທີ່ຈະມີການເກັບກຳຂໍ້ມູນຊັບພະຍາກອນ (ຂັ້ນຕອນທີ 2.2)
- ຂໍ້ຕົກລົງກ່ຽວກັບແຜນພັດທະນາຂອງປະຊາຊົນ (ຂັ້ນຕອນທີ 3.2)

- ຂໍ້ຕົກລົງກ່ຽວກັບສັນຍາອະນຸລັກຂອງປະຊາຊົນ (ຂັ້ນຕອນທີ 3.3)
- ພາຍຫຼັງສຳເລັດການສ້າງແຜນດຳເນີນງານຂອງປະຊາຊົນ (CAP) ແລະ ສັນຍາອະນຸລັກຂອງປະຊາຊົນ (CCA) ແລະ ເລີ່ມຕົ້ນຈັດຕັ້ງປະຕິບັດໂຄງການ, ຊຸມຊົນອາດເລືອກທີ່ຈະຢຸຕິໂຄງການ ແຕ່ປະຊາຊົນອາດຈະຕ້ອງຊຳລະເງິນທີ່ໄດ້ຈ່າຍໄປແລ້ວຄືນໃຫ້ໂຄງການ.

ໃນການຢັ້ງຢືນການເຫັນດີຂອງຊຸມຊົນ, ທີມງານວິຊາການ ຕ້ອງປະຕິບັດດັ່ງລຸ່ມນີ້:

- ບອກຊຸມຊົນວ່າໂຄງການຈະດຳເນີນໄປຕາມການຕົກລົງເຫັນດີຂອງເຂົາເຈົ້າເທົ່ານັ້ນ. ອະທິບາຍວ່າທີມງານວິຊາການຈະຂໍໃຫ້ ເຂົາເຈົ້າສະແດງຄວາມເຫັນດີ ຫຼື ບໍ່ເຫັນດີ ແລະ ຄຳຄິດເຫັນຂອງເຂົາເຈົ້າ. ອະທິບາຍໃຫ້ຈະແຈ້ງວ່າ ສະມາຊິກສາມາດບອກວ່າ “ບໍ່” ຫຼື “ບໍ່ແນ່ໃຈ”.
- ຂໍໃຫ້ຜູ້ເຂົ້າຮ່ວມຢູ່ຮ່ວມນຳຈົນຈົບການປະຊຸມ ແລະ ແຈ້ງໃຫ້ຮູ້ຖ້າຫາກມີຜູ້ມາເຂົ້າຮ່ວມໃໝ່
- ນັບຈຳນວນຜູ້ເຂົ້າຮ່ວມກອງປະຊຸມທັງໝົດ. ຖາມຜູ້ເຂົ້າຮ່ວມວ່າມາຈາກກຸ່ມຊົນເຜົ່າໃດ ແລະ ບັນທຶກຈຳນວນຂອງແມ່ຍິງ ແລະ ຜູ້ຊາຍຈາກແຕ່ລະກຸ່ມຊົນເຜົ່ານັ້ນ. ຖາມວ່າ “ແມ່ນໃຜທີ່ມີອາຍຸ 15 ປີ ຫຼື ຫຼາຍກວ່າ ຈາກແຕ່ລະກຸ່ມຊົນເຜົ່າ?” ບັນທຶກຈຳນວນຂອງແມ່ຍິງ ແລະ ຜູ້ຊາຍທີ່ມີອາຍຸ 15 ຫຼື ຫຼາຍກວ່າ ທີ່ມາຈາກແຕ່ລະກຸ່ມເຂົ້າໃນຂໍ້ຕົກລົງ (ຕາມແບບຟອມ <OV>)
- ທວນຄືນໃຫ້ແກ່ກຸ່ມກ່ຽວກັບຈຸດປະ-ສົງ, ລັກສະນະ, ແລະ ຂອບເຂດຂອງກິດຈະກຳໃນແຕ່ລະຂັ້ນຕອນ ແລະ ບາດກ້າວ
- ປຶກສາຫາລືກັບຊຸມຊົນ ເພື່ອຊ່ວຍໃນການຂຽນລາຍງານສະຫຼຸບສັງ-ລວມການປະ-ຊຸມກ່ຽວກັບຂໍ້ຕົກລົງ ແລະ ການມີສ່ວນຮ່ວມຂອງກິດ-ຈະ-ກຳໂຄງ-ການລົງໃນແບບຟອມ
- ຖາມຊຸມຊົນວ່າມີຫຍັງແດ່ທີ່ອາດເປັນຜົນກະທົບທີ່ສາມາດເກີດຂຶ້ນໄດ້, ຜັນທະຂອງຊຸມຊົນ ແລະ ຂໍ້ຈຳກັດຂອງໂຄງການ. ອະທິບາຍຄືນ ຖ້າເຂົາເຈົ້າບໍ່ສາມາດບອກໄດ້. ຖາມພວກເຂົາເຈົ້າວ່າ ເຂົາເຈົ້າຍັງເຫັນດີ ທີ່ຈະສືບຕໍ່ໂຄງການ ເຖິງແມ່ນວ່າມີຜົນກະທົບ ແລະ ຂໍ້ຈຳກັດ ເຫຼົ່ານັ້ນ ຫຼືບໍ່
- ຖາມວ່າມີໃຜມີຂໍ້ກັງວົນ ຫຼື ຂໍ້ສົງໃສກ່ຽວກັບການເລີ່ມຕົ້ນໂຄງການຫຼືບໍ່
- ຖາມຊຸມຊົນວ່າເຂົາເຈົ້າມີຄວາມເຕັມໃຈທີ່ຈະເລີ່ມໂຄງການຫຼືບໍ່. ຂໍໃຫ້ຜູ້ເຂົ້າຮ່ວມທັງໝົດທີ່ມີອາຍຸ 15 ປີ ແລະ ຫຼາຍກວ່າ ທີ່ເຫັນດີ ວ່າປະຊາຊົນຄວນເລີ່ມໂຄງການສະແດງຄວາມເຕັມໃຈໃນການເຂົ້າຮ່ວມ ໂດຍການຍົກມືຂຶ້ນ
- ຖາມຄຳຖາມແຕ່ລະກຸ່ມຊົນເຜົ່າວ່າ: “ຖ້າຫາກທ່ານແມ່ນ ແມ່ຍິງ/ຜູ້ຊາຍ ທີ່ມີອາຍຸ 15 ປີຂຶ້ນໄປ ແລະ ແມ່ນຕົວແທນຂອງກຸ່ມຊົນເຜົ່າ ແລະ ເຫັນດີໃຫ້ບ້ານລິເລີ່ມໂຄງການ, ກະລຸນາຍົກມືຂຶ້ນ”. ຫຼັງຈາກໄດ້ຈຳນວນຜູ້ທີ່ເຫັນດີຈາກກຸ່ມຊົນເຜົ່າທຳອິດແລ້ວ ໃຫ້ສືບຕໍ່ຖາມກຸ່ມຊົນເຜົ່າຕໍ່ໄປ (ແຍກຖາມແຕ່ລະກຸ່ມຊົນເຜົ່າ)
- ບັກທຶກຈຳນວນຜູ້ເຂົ້າຮ່ວມທັງໝົດ ແລະ ຈຳນວນຜູ້ເຂົ້າຮ່ວມທີ່ມີຄວາມເຕັມໃຈໃນການເລີ່ມໂຄງການ. ຖ້າຈຳນວນຜູ້ເຂົ້າຮ່ວມທີ່ເຫັນດີ ຫາກມີຫຼາຍກວ່າເຄິ່ງໜຶ່ງ, ຈຶ່ງຈະມີການສືບຕໍ່ໂຄງການ.

ຖ້າຊາວບ້ານບໍ່ມີຄວາມຕ້ອງການດຳເນີນໂຄງການ, ທີມງານຄວນຖາມເຖິງເຫດຜົນ, ແຕ່ບໍ່ຄວນຂົ່ມຂູ່, ບີບບັງຄັບ, ຫຼື ເຮັດໃຫ້ເຂົາເຈົ້າ ຮູ້ສຶກອັບອາຍ. ຖ້າຫາກບ້ານມີສະມາຊິກທີ່ເປັນຊົນເຜົ່າກຸ່ມນ້ອຍ ທີ່ບໍ່ໄດ້ມາຮ່ວມໃນລະຫວ່າງການຕັດສິນໃຈ, ຄວນຈັດກອງປະຊຸມຄືນອີກຄັ້ງໜຶ່ງ ແລະ ສ້າງຂໍ້ຕົກລົງເວລາສະມາຊິກຂອງກຸ່ມຊົນເຜົ່າທັງໝົດເຂົ້າຮ່ວມ.

ຖ້າຜູ້ເຂົ້າຮ່ວມສ່ວນໃຫຍ່, ລວມທັງກຸ່ມຊົນເຜົ່າຕ່າງໆ ສະແດງຄວາມເຕັມໃຈໃນການດຳເນີນງານ, ຈຶ່ງຈະມີການເລີ່ມຈັດຕັ້ງປະຕິບັດການເກັບກຳຂໍ້ມູນຊັບພະຍາກອນ.

A14. ໃບຢັ້ງຢືນການຕົກລົງເຫັນດີ ຂອງຊຸມຊົນທີ່ຈະເຂົ້າຮ່ວມໃນກິດຈະກຳຂອງໂຄງການ

ວັນທີ	

ບ້ານ	
ເມືອງ	
ແຂວງ	

ຊື່ໂຄງການ:

ຄຳອະທິບາຍການຕິກລົງ

ພັນທະ ແລະ ກິດລະບຽບ ທີ່ທັງສອງຝ່າຍຕ້ອງປະຕິບັດ

ຜົນກະທົບທາງອາດເກີດຂຶ້ນໄດ້ຈາກການຕິກລົງນີ້ (ແລະ ວິທີແກ້ໄຂ)

ການຕົກລົງເປັນເອກະພາບ ໂດຍແຍກຕາມ ກຸ່ມຊົນເຜົ່າ ແລະ ເພດ


	ກຸ່ມຊົນເຜົ່າ	ເພດ	ຈຳນວນຜູ້ເຂົ້າຮ່ວມທີ່ມີອາຍຸ 15 ປີ ຂຶ້ນໄປ	ຈຳນວນຜູ້ເຫັນດີ ທີ່ມີອາຍຸ 15 ປີ ຂຶ້ນໄປ
1		ຊາຍ		
		ຍິງ		
2		ຊາຍ		
		ຍິງ		
3		ຊາຍ		
		ຍິງ		
4		ຊາຍ		
		ຍິງ		
5		ຊາຍ		
		ຍິງ		
ລວມ:				

ໝາຍເຫດ: ໃບຍັ້ງຢືນນີ້ບໍ່ແມ່ນສັນຍາຜູກມັດ ແລະ ສາມາດທົບທວນຄືນ ແລະ ຍົກເລີກ ໃນທຸກຊ່ວງຂອງໂຄງການ

A15. ສະຫຼຸບນະໂຍບາຍ ກ່ຽວກັບຊົນເຜົ່າຂອງ (ກປສ)

ຄວາມເປັນມາ

ກປສ ມີຄວາມມຸ່ງໝັ້ນທີ່ຈະເຮັດວຽກໃນການຮ່ວມມືກັບທຸກໆ ຊົນເຜົ່າພາຍໃນ ສປປ ລາວ. ກປສ ຍັງຮັບຮູ້ວ່າບາງຊົນເຜົ່າ (ເຊັ່ນ: ກຸ່ມປະຊາກອນທີ່ເວົ້າພາສາອື່ນນອກຈາກພາສາລາວ) ແມ່ນມີຄວາມ ສ່ຽງໂດຍສະເພາະໃນຫຼາຍໆດ້ານ. ກປສ ມີຄວາມມຸ່ງໝັ້ນ ແລະ ເອົາໃຈໃສ່ ທີ່ຈະເຮັດວຽກຮ່ວມກັບທຸກຄົນໃນແຕ່ລະພື້ນທີ່ ດ້ວຍ ຄວາມລະມັດລະວັງໂດຍສະເພາະເມື່ອໃດທີເຮັດວຽກກັບຊົນເຜົ່າທີ່ບໍ່ ແມ່ນຊົນເຜົ່າລາວ ຫຼື ໃນພື້ນທີ່ດັ້ງເດີມຂອງຊົນເຜົ່າ.



ອັດຕາສ່ວນຂອງຊົນເຜົ່າໃນລາວ.

(Open Development Laos, n.d.)

ລັດຖະບານລາວມັກໃຊ້ ຄຳ ວ່າ "ຊົນເຜົ່າ" ເພື່ອລວມເອົາທຸກໆ ຄົນໃນ ສປປ ລາວ. ລັດຖະບານລາວຖືວ່າ ສປປ ລາວ ເປັນປະເທດທີ່ ມີຫຼາຍຊົນເຜົ່າ ແລະ ບໍ່ມີການຈຳແນກໃດໆ. ໃນຂະນະດຽວກັນ, ສປຊ ຖືວ່າຊົນເຜົ່າພື້ນເມືອງເປັນໝວດແຍກຕ່າງຫາກ, ແຕກຕ່າງ ຈາກຊົນເຜົ່າອື່ນ ຫຼື ກຸ່ມດ້ອຍໂອກາດ. ນິຍາມທີ່ຊັດເຈນກ່ຽວກັບສິ່ງ ທີ່ປະກອບເປັນປະຊາກອນ ຊົນເຜົ່າພື້ນເມືອງເປັນສິ່ງທ້າທາຍຍ້ອນ ປະຫວັດສາດທີ່ວໂລກທີ່ຫຼາກຫຼາຍ. ສຳລັບຈຸດປະສົງຂອງນະໂຍບາຍ ນີ້ຂອງ ກປສ, “ ຊົນເຜົ່າ” ຄວນໄດ້ຮັບການເຂົ້າໃຈວ່າເປັນການສະໜັບສະໜຸນ ໂດຍສະເພາະປະຊາຊົນຜູ້ທີ່ມີເງື່ອນໄຂກົງກັບ ຄຳນິຍາມສາກົນ ຂອງຄົນພື້ນເມືອງ.

ສປປ ລາວ ແມ່ນປະເທດທີ່ມີຫຼາຍວັດທະນະທຳ, ຫຼາຍຊົນເຜົ່າ ແລະ ຫຼາຍພາສາ. ທຸກມື້ນີ້ປະຊາກອນ 53% ແມ່ນຊົນເຜົ່າລາວ, ສ່ວນທີ່ ເຫຼືອ ແມ່ນຊົນເຜົ່າອື່ນໆ. ລັດຖະບານລາວຮັບຮູ້ 49 ຊົນເຜົ່າຢ່າງເປັນທາງການ ແລະ ຍັງມີອີກຫຼາຍກຸ່ມຍ່ອຍ. ໂດຍລວມແລ້ວ ປະເທດລາວມີ ປະຫວັດຄວາມກົມກຽວກັນລະຫວ່າງຊົນເຜົ່າຕ່າງໆ. ເຖິງຢ່າງໃດກໍ່ຕາມ, ມີຂໍ້ຍົກເວັ້ນດ້ານປະຫວັດສາດທີ່ສຳຄັນ ແລະ ປະຈຸບັນບັນດາຊົນເຜົ່າ ແມ່ນຍັງດ້ອຍໂອກາດໃນຫຼາຍດ້ານ. ຄວາມທຸກຍາກແມ່ນຍັງມີຢູ່ໃນບັນດາກຸ່ມຂອງແຕ່ລະຊົນເຜົ່າ, ມີການຂັດແຍ່ງທາງດ້ານຊົນເຜົ່າ ແລະ ການ ຈຳແນກ. ໃນທຸກມື້ນີ້, ເອກະລັກຂອງຊົນເຜົ່າເປັນກະແສຢູ່ໃນ ສປປ ລາວ. ຍົກຕົວຢ່າງ ການແຕ່ງງານຂອງຊົນເຜົ່າຕ່າງໆ ແລະ ຫຼາຍຄົນກໍ່ລະບຸ ວ່າຕົນເອງມີຫຼາຍກວ່າໜຶ່ງຊົນເຜົ່າ. ມີຫຼາຍບ້ານທີ່ເປັນຊົນເຜົ່າດຽວກັນ, ຫຼາຍບ້ານກໍມີຫຼາຍຊົນເຜົ່າຜະສົມຜະສານອາໄສຢູ່ນຳກັນ. ທາງດ້ານ ປະຫວັດສາດ, ລັກສະນະນິຍາມທັງ 2 ຢ່າງໄດ້ກຳນົດຂອບເຂດຊົນເຜົ່າໃນ ສປປ ລາວ: ພາສາ ແລະ ທີ່ຕັ້ງ/ຊີວິດການເປັນຢູ່ (ຄວາມແຕກຕ່າງທີ່ ສຳຄັນແມ່ນການປູກເຂົ້ານາແຊງໃນເຂດທົ່ງພຽງ ແລະ ການຫັນປ່ຽນການປູກຝັ່ງໃນເຂດທົ່ງພຽງ ແລະ ເຂດເນີນສູງ). ພາສາຂອງກຸ່ມຊົນເຜົ່າ ສ່ວນຫຼາຍແມ່ນເປັນພາສາເວົ້າເທົ່ານັ້ນບໍ່ແມ່ນພາສາຂຽນ. ທຸກມື້ນີ້, ຍ້ອນວ່າການສຶກສາລະດັບປະເທດແມ່ນມີພຽງແຕ່ພາສາລາວເທົ່ານັ້ນ, ສ່ວນ ໃຊ້ພາສາກຸ່ມຊົນເຜົ່າແມ່ນສ່ວນນ້ອຍ (ໂດຍສະເພາະຊາວໝຸ່ມ) ຕ້ອງສາມາດເວົ້າພາສາລາວໄດ້ ແລະ ພາສາລາວແມ່ນເປັນພາສາຂຽນຢ່າງເປັນ ທາງການຂອງຊົນເຜົ່າຕ່າງໆໃນ ສປປ ລາວ. ບາງກຸ່ມຄົນເລືອກທີ່ຈະຍ້າຍຖິ່ນຖານໄປຢູ່ໃນຕົວເມືອງໃຫຍ່ຕ່າງໆເຮັດໃຫ້ກຸ່ມຊົນເຜົ່າຍັງຖືວ່າ ພາສາເວົ້າເປັນສ່ວນໜຶ່ງຂອງຊົນເຜົ່າຫຼາຍຄົນ (ໂດຍສະເພາະຊາວໜຸ່ມ) ເວົ້າພາສາລາວໄດ້ງ່າຍກວ່າ. ກປສ ຮັບຮູ້ ແລະ ເຄົາລົບສິດທິຂອງ ພົນລະເມືອງລາວທຸກຄົນໃນການເລືອກເອົາຊົນເຜົ່າທີ່ເໝາະສົມກັບຊຸມຊົນຂອງຕົນ. ລັດຖະບານລາວຖືວ່າພົນລະເມືອງທຸກຄົນມີສິດເທົ່າທຽມ ກັນ; ມາດຕາ 8 ຂອງລັດຖະທຳມະນູນປີ 2015 ໄດ້ຢັ້ງຢືນວ່າ “ ລັດປະຕິບັດນະໂຍບາຍສົ່ງເສີມຄວາມສາມັກຄີ ແລະ ຄວາມສະເໝີພາບ ລະຫວ່າງບັນດາຊົນເຜົ່າ. ທຸກຊົນເຜົ່າລ້ວນແຕ່ມີສິດປົກປ້ອງ ຮັກສາ ແລະ ສົ່ງເສີມຮີດຄອງປະເພນີແລະວັດທະນະທຳ ອັນດີງາມຂອງຊົນເຜົ່າຕົນ ແລະ ຂອງຊາດ. ທຸກໆການກະທຳ ທີ່ສ້າງການແບ່ງແຍກ ແລະ ການຈຳ ແນກລະຫວ່າງຊົນເຜົ່າແມ່ນຖືກຫ້າມ.” ລັດຖະບານລາວຍັງໄດ້ໃຫ້ຈັນ ຍາບັນຖະແຫຼງການສະຫະປະຊາຊາດວ່າດ້ວຍສິດທິຂອງຄົນພື້ນເມືອງ.

ຄຳນິຍາມການເຮັດວຽກຂອງຊົນເຜົ່າພື້ນເມືອງຂອງສະຫະປະຊາຊາດ, ດັ່ງທີ່ໄດ້ກ່າວໃນ UN PFII / 2004 / WS.1 / 3 (2004). ຊຸມຊົນເຜົ່າພື້ນເມືອງ, ປະຊາຊົນ ແລະ ປະເທດຊາດ ແມ່ນຊຸມຊົນທີ່ມີຄວາມຕໍ່ເນື່ອງທາງປະຫວັດສາດກັບສັງຄົມກ່ອນການບຸກລຸກພື້ນທີ່

ດັ່ງກ່າວຕ້ອງພິຈາລະນາຄວາມແຕກຕ່າງໃນພື້ນທີ່ ແລະ ສັງຄົມທີ່ມີຢູ່ໃນອານາເຂດເຫຼົ່ານີ້ ຫຼື ບາງສ່ວນຂອງ ພວກເຂົາໃນການປະກອບສ່ວນໃນຂະແໜງການທີ່ບໍ່ແມ່ນເສດຖະກິດຂອງສັງຄົມໃນປັດຈຸບັນ ແລະ ມີຄວາມຕັ້ງໃຈທີ່ຈະຮັກສາ, ພັດທະນາ ແລະ ຖ່າຍທອດອານາເຂດຂອງບັນພະບຸລຸດ, ເອກະລັກຂອງຊົນເຜົ່າຂອງແຕ່ລະຊຸມຊົນໃຫ້ລຸ້ນຫລັງ, ເພື່ອເປັນພື້ນຖານການດຳລົງຊີວິດຢ່າງບໍ່ຢຸດຢັ້ງຂອງປະຊາຊົນ, ໂດຍອີງຕາມແບບແຜນວັດທະນະທຳ, ສະຖາບັນສັງຄົມ ແລະ ລະບົບກົດໝາຍ.

ການສືບຕໍ່ປະຫວັດສາດນີ້ອາດປະກອບດ້ວຍການສືບຕໍ່ເປັນໄລຍະເວລາຍາວນານເຖິງປັດຈຸບັນ ຈາກໜຶ່ງ ຫຼື ຫຼາຍປັດໃຈດັ່ງຕໍ່ໄປນີ້:

ກ) ການຄອບຄອງທີ່ດິນບັນພະບຸລຸດ;

ຂ) ເຊື້ອສາຍທົ່ວໄປກັບຜູ້ຄອບຄອງເດີມຂອງດິນເຫລົ່ານີ້;

ຄ) ວັດທະນະທຳ ໂດຍທົ່ວໄປ, ຫລື ລັກສະນະສະເພາະ (ເຊັ່ນ: ສາດສະໜາ, ການດຳລົງຊີວິດພາຍໃຕ້ລະບົບຊົນເຜົ່າ, ການເຂົ້າເປັນສະມາຊິກຂອງຊຸມຊົນພື້ນເມືອງ, ການນຸ່ງຖື, ວິຖີການດຳລົງຊີວິດ ແລະ ອື່ນໆ);

ງ) ພາສາ (ບໍ່ວ່າຈະໃຊ້ເປັນພາສາດຽວ ເຊັ່ນ: ພາສາທ່ອງຖິ່ນ ເປັນວິທີການທີ່ໃຊ້ໃນການສື່ສານຢູ່ເຮືອນ ຫຼື ໃນຄອບຄົວ, ພາສາລາວເປັນພາສາຫຼັກ, ພາສາທີ່ຕ້ອງໃຊ້ທາງການ, ເປັນນິໄສ, ທົ່ວໄປ ຫຼື ປົກກະຕິ);

ຈ) ທີ່ຜັກອາໄສໃນບາງພື້ນທີ່ຂອງປະເທດ ຫຼື ໃນບາງຂົງເຂດຂອງໂລກ;

ສ) ປັດໃຈອື່ນໆທີ່ກ່ຽວຂ້ອງ.

ໂດຍພື້ນຖານແລ້ວ ກຸ່ມຄົນພື້ນເມືອງ ແມ່ນຜູ້ທີ່ເປັນກຸ່ມໜຶ່ງຂອງປະຊາກອນໂດຍໄດ້ມີການລະບຸຕົວເອງວ່າເປັນຄົນພື້ນເມືອງ (ຈິດສຳນຶກຂອງກຸ່ມ) ແລະ ໄດ້ຮັບການຍອມຮັບຈາກປະຊາກອນເຫຼົ່ານີ້ເປັນໜຶ່ງ ໃນສະມາຊິກ (ການຍອມຮັບໂດຍກຸ່ມ). ສິ່ງນີ້ເປັນການປົກປັກຮັກສາສິດ ແລະ ອຳນາດໃນການຕັດສິນໃຈຂອງຊຸມຊົນເຫຼົ່ານີ້, ໂດຍປາດສະຈາກການແຊກແຊງຈາກພາຍນອກ.

ຖະແຫຼງການນະໂຍບາຍຂອງ ກປສ ກ່ຽວກັບກຸ່ມຊົນເຜົ່າ

ນະໂຍບາຍຂອງ ກປສ ກ່ຽວກັບບັນດາຊົນເຜົ່າຢັ້ງຢືນວ່າ:

- ກປສ ສົ່ງເສີມສະຫວັດດີການ, ການປະກອບສ່ວນ ແລະ ຄວາມເປັນຜູ້ນຳ ຂອງທຸກໆຊົນເຜົ່າ. ກປສ ເຄົາລົບໂດຍສະເພາະແມ່ນຊົນເຜົ່າມີບົດບາດ, ສິດ, ທັດສະນະທີ່ສຳຄັນກ່ຽວກັບສິ່ງແວດລ້ອມ ແລະ ການພັດທະນາແບບຍືນຍົງໃນສະຖານທີ່ທີ່ຊົນເຜົ່າອາໄສຢູ່, ລວມທັງປ່າໄມ້. ຊົນເຜົ່າມີຄວາມຮູ້ພື້ນເມືອງ, ຊີວິດການເປັນຢູ່ ແລະ ລະບົບການຄຸ້ມຄອງຊັບພະຍາກອນແບບຍືນຍົງສິ່ງເຫຼົ່ານີ້ອາດຈະແຕກຕ່າງຈາກບັນດາເຂດທົ່ງພຽງທີ່ເວົ້າພາສາລາວ. ສິ່ງສຳຄັນທີ່ສຸດທີ່ຈະເຂົ້າໃຈກຸ່ມຊົນເຜົ່າຕ້ອງໃຫ້ຊົນເຜົ່າໃຫ້ ການມີສ່ວນຮ່ວມທີ່ມີຄວາມໝາຍໃນວິທີການທີ່ເໝາະສົມທາງດ້ານວັດທະນະທຳ, ຄວາມອ່ອນໄຫວດ້ານບົດບາດຍິງ - ຊາຍ ແລະ ການມີສ່ວນຮ່ວມໃນກິດຈະກຳຂອງໂຄງການ.

- ກປສ ຮັບປະກັນວ່າຜົນປະໂຫຍດຂອງໂຄງການ ແລະ ໂຄງການທີ່ກ່ຽວຂ້ອງກັບ ກປສ ຈະເຂົ້າເຖິງຫຼາຍຊົນເຜົ່າ ແລະ ມີໂອກາດທີ່ກຸ່ມຊົນເຜົ່າຈະເປັນຜູ້ນຳ ທີ່ຫ້າວຫັນ ແລະ ມີສ່ວນຮ່ວມໃນໂຄງການທີ່ມີຜົນກະທົບຕໍ່ແຕ່ລະຊົນເຜົ່າ.
- ກປສ ສັນຍາວ່າບັນດາຊົນເຜົ່າຕ່າງໆຈະໄດ້ຮັບຮູ້ ຄຳປຶກສາຢ່າງເຕັມທີ່ ແລະ ມີໂອກາດໃນການເຂົ້າຮ່ວມໃນການອອກແບບໂຄງການ, ການຈັດຕັ້ງປະຕິບັດ ແລະ ການຕິດຕາມກວດກາການປະເມີນຜົນໃນຂົງເຂດທີ່ຊົນເຜົ່າອາໄສຢູ່ ຫລື ມີສາຍພົວພັນທີ່ສຳຄັນ.
- ກປສ ມີຄວາມລະມັດລະວັງທີ່ສຸດວ່າຊົນເຜົ່າ ຫຼື ຂອບເຂດພື້ນເມືອງຂອງຊົນເຜົ່ານັ້ນຈະບໍ່ໄດ້ຮັບຜົນກະທົບຈາກກິດຈະກຳຂອງໂຄງການ, ຖ້າຜົນກະທົບທາງລົບທີ່ບໍ່ສາມາດຫຼີກລ່ຽງໄດ້ ຫຼື ບໍ່ຄາດຄິດ ຈະຕ້ອງມີວິທີເຮັດໃຫ້ຄວາມສ່ຽງຈະຫຼຸດໜ້ອຍລົງ ແລະ ປະຊາຊົນໄດ້ຮັບຄ່າຊົດເຊີຍຢ່າງເໝາະສົມ.
- ກປສ ເອົາໃຈໃສ່ຢ່າງໃກ້ຊິດຕໍ່ບັນດາສິ່ງທ້າທາຍຕ່າງໆທີ່ແມ່ຍິງ, ເດັກຍິງ ແລະ ຜູ້ດ້ອຍໂອກາດອື່ນໆ ໄດ້ປະເຊີນຢູ່ພາຍໃນກຸ່ມຊົນເຜົ່າ ໂດຍການຮັບຮູ້ສິ່ງເສີມ ໃຫ້ມີສ່ວນຮ່ວມການເປັນຜູ້ນຳ ທີ່ມີຄວາມໝາຍ.
- ກປສ ເຄົາລົບສິດ, ກຽດສັກສີ, ແຮງບັນດານໃຈ, ຕົວຕົນ, ວັດທະນະທຳ, ວິຖີຊີວິດ ແລະ ຄວາມເປັນເອກກະລາດຂອງຊົນເຜົ່າ, ການຮັບຮູ້ເຖິງການດຳລົງຊີວິດຂອງພວກເຂົາ ໂດຍອີງໃສ່ລະບົບການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ອິດຄອງປະເພນີ. ກປສ ປະຕິບັດຕາມຫຼັກການທີ່ໄດ້ ກຳນົດໄວ້ ໃນສົນທິສັນຍາສິດທິມະນຸດສາກົນ, ລວມທັງສົນທິສັນຍາ ILO 169 ແລະ UNDRIP.
- ກປສ ເຄົາລົບບັນດາຊົນເຜົ່າມີສິດເປັນເຈົ້າຂອງນຳໃຊ້, ພັດທະນາ, ຄຸ້ມຄອງເຂດແດນ ແລະ ຊັບພະຍາກອນພື້ນເມືອງຂອງແຕ່ລະຊົນເຜົ່າເຊັ່ນດຽວກັບກຸ່ມຊົນເຜົ່າທີ່ມີໃນປະຈຸບັນ.
- ກປສ ຮັບຮູ້,ເຄົາລົບວັດທະນະທຳ, ຄວາມຮູ້ ແລະ ປະເພນີຂອງຊົນເຜົ່າ. ກປສ ຮ່ວມກັບກຸ່ມຊົນເຜົ່າເພື່ອໃຫ້ຊົນເຜົ່າມີໂອກາດທີ່ຈະປັບຕົວເຂົ້າກັບສະພາບການປ່ຽນແປງໃນວິທີການທີ່ກຸ່ມຊົນເຜົ່າຍິນດີຮັບ.
- ກປສ ເຄົາລົບ, ສົ່ງເສີມ, ຮັກສາມໍລະດົກທາງດ້ານວັດທະນະທຳ, ຄຸນຄ່າທາງດ້ານວັດທະນະທຳ ແລະ ຈິດໃຈຂອງຊົນເຜົ່າ, ຄວາມຮູ້ພື້ນເມືອງ, ລະບົບການຄຸ້ມຄອງຊັບພະຍາກອນທຳມະຊາດ, ເສດຖະກິດ, ອາຊີບ , ຊີວິດການເປັນຢູ່, ສະຖາບັນແລະ ສະຫວັດດີການ.
- ກປສ ສັນຍາວ່າຊົນເຜົ່າຈະມີໂອກາດພຽງພໍສຳລັບການປຶກສາຫາລື ກ່ຽວກັບແຈ້ງການຍິນຍອມຕໍ່ໂຄງການທີ່ມີຜົນກະທົບຕໍ່ຊົນເຜົ່າ ຫຼື ທີ່ດິນຂອງກຸ່ມຊົນເຜົ່າເອງ.
- ກປສ ສັນຍາວ່າຈະສືບຕໍ່ປຶກສາຫາລື ແລະ ມີສ່ວນຮ່ວມກັບຊົນເຜົ່າກ່ຽວກັບໂຄງການໃດໜຶ່ງ ທີ່ມີຜົນກະທົບຕໍ່ຊົນເຜົ່າ ຫຼື ຂອບເຂດທີ່ດິນຂອງຊົນເຜົ່າ .
- ກປສ ມີກົນໄກແກ້ໄຂການຮ້ອງທຸກທີ່ມີຄວາມໂປ່ງໃສ (GRM), ເຊິ່ງປະກອບມີຂໍ້ກຳນົດສະເພາະເພື່ອໃຫ້ເຂົ້າໃຈເຖິງຄວາມຕ້ອງການ , ທັດສະນະ, ບັນຫາ ແລະ ວັດທະນະທຳ ຂອງຊົນເຜົ່າ.
- ກປສ ຢັ້ງຢືນວ່າຊົນເຜົ່າຈະໄດ້ຮັບຜົນປະໂຫຍດໂດຍກົງຈາກໂຄງການທີ່ມີຜົນກະທົບຕໍ່ແຕ່ລະຊົນເຜົ່າ ຫຼື ທີ່ດິນທີ່ເປັນຂອງຊົນເຜົ່າ.

ການນຳໃຊ້ນະໂຍບາຍຂອງ ກປສ ກ່ຽວກັບຊົນເຜົ່າ

ນະໂຍບາຍຂອງ ກປສ ກ່ຽວກັບຊົນເຜົ່ານີ້ ນຳໃຊ້ກັບທຸກໆການເຄື່ອນໄຫວທີ່ມີຄວາມພະຍາຍາມ ແລະ ການລິເລີ່ມຕ່າງໆຂອງ ກປສ. ໂດຍສະເພາະ ກປສ ໄດ້ປະສົມປະສານນະໂຍບາຍນີ້ເຂົ້າໃນຂັ້ນຕອນການຈັດຕັ້ງແນວທາງຂອງອົງກອນເພື່ອຮັບປະກັນວ່າຄວາມຕ້ອງການ, ຈຸດອ່ອນ, ຈຸດແຂງ ຂອງຊົນເຜົ່າແມ່ນຖືກພິຈາລະນາຢ່າງເໝາະສົມ, ໄດ້ຮັບຄວາມເຄົາລົບສິດອຳນາດ ໃນແຕ່ລະບາດກ້າວ ແລະ ກິດຈະກຳຕໍ່ໄປນີ້ ໃນວົງຈອນການຄຸ້ມຄອງໂຄງການ:

- ເກັບກຳຂໍ້ມູນພື້ນຖານ (ລວມທັງຄວາມສ່ຽງດ້ານສິ່ງແວດລ້ອມ ແລະ ສັງຄົມ ທີ່ມີສ່ວນຮ່ວມຂະບວນການປະເມີນຜົນກະທົບ);
- ປະເດັນທີ່ຄົ້ນພົບການວິເຄາະຜົນກະທົບ, ຄວາມສ່ຽງ ແລະ ໂອກາດທີ່ສຳຄັນ;
- ມາດຕະການເພື່ອຫຼີກລ່ຽງ, ຫຼຸດຜ່ອນຜົນກະທົບທາງລົບ ແລະ ການເພີ່ມໂອກາດໃນທາງບວກ;
- ການຄຸ້ມຄອງຊັບພະຍາກອນທຳມະຊາດໂດຍຊຸມຊົນ;

ການປຶກສາຫາລືທີ່ມີຄວາມໝາຍ ແລະ ມີສ່ວນຮ່ວມ (ໃນລະຫວ່າງຂັ້ນຕອນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ), ເພື່ອສະໜັບສະໜຸນເລື່ອງນີ້, ກປສ ໄດ້ຈັດຄົນຈາກອົງການຈັດຕັ້ງທີ່ເຂົ້າຮ່ວມ; ຕາຕະລາງເວລາ; ຜູ້ທີ່ຮັບຜິດຊອບແຕ່ລະກິດຈະກຳ; ການຍິນຍອມທີ່ບໍ່ເສຍຄ່າກ່ອນ ແຈ້ງໃຫ້ຮູ້ ແລະ ແຜນການມີສ່ວນຮ່ວມໃນອະນາຄົດ.

ກປສ ຍັງພິຈາລະນາການເຄົາລົບສິດ, ກຽດສັກສີ ແລະ ທັດສະນະຂອງຊົນເຜົ່າໃນຂະນະທີ່ມີພັດທະນາ ແລະ ຈັດຕັ້ງປະຕິບັດ:

- ການປະເມີນບົດບາດຍິງ - ຊາຍ ແຜນປະຕິບັດງານ;
- ແຜນການແບ່ງປັນຜົນປະໂຫຍດ;
- ການຈັດການຄອບຄອງທີ່ດິນ;
- ກົນໄກແກ້ໄຂການຮ້ອງທຸກ;
- ຄ່າໃຊ້ຈ່າຍ, ງົບປະມານ, ຕາຕະລາງເວລາ ແລະ ຄວາມຮັບຜິດຊອບຂອງອົງກອນ;.
- ການຕິດຕາມປະເມີນຜົນ ແລະ ລາຍງານ.

ນະໂຍບາຍນີ້ຄວນຖືກ ນຳໃຊ້ເພື່ອຜົນປະໂຫຍດຂອງທຸກໆຊົນເຜົ່າທີ່ດຳລົງຊີວິດຮ່ວມກັນ ຫຼື ຢູ່ໃກ້ກັນ. ໂດຍປົກະຕິແລ້ວ ກປສ ເຮັດໜ້າທີ່ເປັນຕົວກາງ ແລະ ຈັດຕັ້ງປະຕິບັດບັນດາໜ່ວຍງານຕ່າງໆ. ດັ່ງນັ້ນ, ກປສ ມີຄວາມມຸ່ງໝັ້ນ ທີ່ຈະຮັບປະກັນໃຫ້ທຸກຄູ່ຮ່ວມງານເຂົ້າໃຈ, ເຄົາລົບ ແລະ ປະຕິບັດນະໂຍບາຍສະຫຼຸບສັງລວມຂອງຊົນເຜົ່າ. ຕໍ່ບັນຫານີ້ແຕ່ລະອົງການຈັດຕັ້ງຈະຕ້ອງປະຕິບັດການລົງນາມໃນຂໍ້ຕົກລົງ ທີ່ຈະປະຕິ ບັດຕາມນະໂຍບາຍນີ້ ແລະ ຮັບຮູ້ວ່າ ກປສ ມີສິດຢ່າງແທ້ຈິງຄວາມຮັບຜິດຊອບ ເພື່ອດຳເນີນການຢ່າງເໝາະສົມ ແລະ ການຕິດຕາມກວດກາອື່ນໆ ເພື່ອຮັບປະກັນວ່າບັນດາຄູ່ຮ່ວມທັງໝົດຈະຕ້ອງປະຕິບັດຕາມນະໂຍບາຍນີ້ຢ່າງເຂັ້ມງວດ.

ນະໂຍບາຍສະຫຼຸບສັງລວມຂອງ ກປສ ກ່ຽວກັບກຸ່ມຊົນເຜົ່າໃຊ້ໄດ້ກັບທຸກໆໂຄງການຂອງ ກປສ. ນະໂຍບາຍດັ່ງກ່າວໄດ້ປະກອບເຂົ້າໃນເອກະສານສະເພາະດັ່ງນີ້:

- ແມ່ແບບຂໍ້ຕົກລົງການຮ່ວມມື;
- ຄູ່ມືການດຳເນີນງານຂອງໂຄງການ (POM) ແລະ ເອກະສານຊ້ອນທ້າຍ;
- ຄູ່ມືກ່ຽວກັບບຸກຄະລະກອນ;
- ການມີສ່ວນຮ່ວມຂອງຊຸມຊົນ;
- ສະຫຼຸບນະໂຍບາຍກ່ຽວກັບບົດບາດຍິງ - ຊາຍ;
- ສະຫຼຸບນະໂຍບາຍການປົກປ້ອງສິ່ງແວດລ້ອມ ແລະ ສັງຄົມ ແລະ ກົນໄກການຮ້ອງທຸກ;
- ການຕິດຕາມ ແລະ ປະເມີນຜົນ.

ເອກະສານອ້າງອີງ

Government of Lao (GOL). (2015). Constitution of the Lao People's Democratic Republic. Available at: https://www.parliament.go.th/ewtadmin/ewt/ac/ewt_dl_link.php?nid=119&filename=parsystem2

Open Development Laos. (n.d.) Ethnic minorities and indigenous people. Available at: https://laos.opendevelopmentmekong.net/topics/ethnic-minorities-and-indigenous-people/

Sanders, D. E. (1999). Indigenous peoples: Issues of definition. International Journal of Cultural Property, 8(1), 4-13.

Schlemmer, Grégoire. (2017). Ethnic Belonging in Laos: A Politico-Historical Perspective. *Changing Lives: New Perspectives on Society, Politics, and Culture in Laos.* Available at: https://hal.archives-ouvertes.fr/hal-01853834/document

United Nations Secretariat of the Permanent Forum on Indigenous Issues. (2004). *The Concept of Indigenous Peoples.* UN PFII/2004/WS.1/3. Available at https://www.google.com/url?sa=t&rct=j&q=&esrc=s&source=web&cd=1&ved=2ahUKEwiJ8fOL6t7jAhVRfd4KHTv7AuYQFjAAegQIABAC&url=https%3A%2F%2Fwww.un.org%2Fesa%2Fsocdev%2Funpfii%2Fdocuments%2Fworkshop_data_background.doc&usg=AOvVaw2L7kDx8xS5C_LLNKrKYi9Z

United States Central Intelligence Agency. (2019). The World Factbook. Available at: https://www.cia.gov/library/publications/the-world-factbook/geos/la.html

A16. ສະໜູບນະໂຍບາຍ ຂອງ (ກປສ) ກ່ຽວກັບບົດບາດຍິງ-ຊາຍ ແລະ ການມີສ່ວນຮ່ວມໃນສັງຄົມ (GSI)

ຄວາມເປັນມາ

ມັນເປັນສິ່ງທີ່ສຳຄັນຫຼາຍ ທີ່ໂຄງການດ້ານສິ່ງແວດລ້ອມ ຕ້ອງຄຳນຶງ, ພິຈາລະນາ ເຖິງບັນຫາ ບົດບາດຍິງ-ຊາຍ ແລະ ການມີສ່ວນຮ່ວມໃນສັງຄົມ (GSI). ບັນຫາ ດ້ານສິ່ງແວດລ້ອມທາງສັງຄົມ ມີຜົນກະທົບຕໍ່ຄົນໃນຫຼາຍຮູບແບບແຕກຕ່າງກັນ ໄປ, ຄົນທຸກຍາກ, ຜູ້ມີຄວາມສ່ຽງ ຫຼື ຄົນກຸ່ມນ້ອຍ ທີ່ມີຊັບພະຍາກອນໜ້ອຍ ໃນການຮັບມື. ຄວາມສາມາດໃນການປ້ອງກັນ, ຈັດການກັບການປ່ຽນແປງ ແລະ ບັນຫາສິ່ງແວດລ້ອມທາງສັງຄົມແມ່ນໄດ້ຖືກກຳນົດໂດຍຊົນຊັ້ນທາງສັງ ຄົມ ແລະ ຍິ່ງໄປກວ່ານັ້ນ, ການແຊກແຊງຂອງສິ່ງແວດລ້ອມທາງສັງຄົມສາມາດ ເປັນການເພີ່ມຄວາມບໍ່ສະເໝີພາບໃນສັງຄົມໃຫ້ໄວຂຶ້ນກວ່າເກົ່າ. ໃນຂະນະ ດຽວກັນ, ແມ່ຍິງ ແລະ ກຸ່ມຄົນທີ່ດ້ອຍໂອກາດອື່ນໆ ກໍ່ມີຈຸດດີຂອງຕົນເອງ ພວກເຂົາເປັນຕົວແທນ ແລະ ດຳເນີນການໃນສິດຂອງເຂົາເຈົ້າເອງ ແລະ ໂຄງ ການສິ່ງແວດລ້ອມທາງສັງຄົມ ຈະມີປະສິດຕິພາບຫຼາຍຖ້າຄຳນຶງເຖິງຈຸດນີ້. ໃນ ທ່ວໂລກພວກເຮົາເຂົ້າໃຈດີວ່າການໃຫ້ຄວາມສຳຄັນໃນບົດບາດຍິງ-ຊາຍ ແລະ ການມີສ່ວນຮ່ວມໃນສັງຄົມ ຫຼື GSI ແມ່ນພື້ນຖານທີ່ສຳຄັນໃນການປະຕິບັດ ໂຄງການດ້ານສິ່ງແວດລ້ອມ ກປສ ໄດ້ຖືເອົາ GSI ເປັນຫຼັກການພື້ນຖານທີ່ນຳ ໃຊ້ໃນທ່ວໂອງກອນໃນການປະຕິດບັດກິດຈະກຳ, ໂຄງການໃນພື້ນທີ່ສັງຄົມ ແລະ ຊຸມຊົນຕ່າງໆ .

"ແມ່ຍິງສາມາດ ມີບົດບາດສຳຄັນໃນການແກ້ໄຂບັນ ຫາການປ່ຽນແປງສະພາບແວດລ້ອມ ການເຮັດວຽກ ດ້ວຍຄວາມຮູ້ ແລະ ຄວາມເປັນຜູ້ນຳ ໃນທ້ອງຖິ່ນ ຂອງພວກເຂົາເຊັ່ນ: ການຄຸ້ມຄອງຊັບພະຍາກອນ ແບບຍືນຍົງ ຫຼືການນຳພາປະຕິບັດວິທີການແບບຍືນ ຍົງໃນລະດັບຄົວເຮືອນ ແລະ ຊຸມຊົນ. ການມີສ່ວນ ຮ່ວມທາງດ້ານການເມືອງໂດຍແມ່ຍິງ ສິ່ງຜົນເຮັດ ໃຫ້ມີການຕອບຮັບຫຼາຍກວ່າເກົ່າ ຕໍ່ຄວາມຕ້ອງການ ຂອງປະຊາຊົນ, ໂດຍສ່ວນໃຫຍ່ແລ້ວການຮ່ວມມື ກັນລະຫວ່າງບັນດາພາກສ່ວນ, ຊົນເຜົ່າຕ່າງໆແມ່ນ ເພີ່ມຂຶ້ນ ແລະ ສາມາດສ້າງສັນຕິພາບທີ່ຍືນຍົງກວ່າ ເກົ່າ. ໃນລະດັບທ້ອງຖິ່ນ, ການມີສ່ວນຮ່ວມຂອງ ແມ່ຍິງໃນລະດັບການນຳ ສາມາດນຳໄປສູ່ຜົນໄດ້ຮັບ ທີ່ດີກວ່າເກົ່າ ໃນດ້ານສະພາບແວດລ້ອມ ແລະ ນະໂຍບາຍຂອງໂຄງການ. ກົງກັນຂ້າມ, ຖ້າປະຕິບັດ ນະໂຍບາຍ ຫຼື ການດຳເນີນໂຄງການໂດຍບໍ່ມີສ່ວນ ຮ່ວມຢ່າງຈິງຈັງຂອງແມ່ຍິງ, ມັນສາມາດເພີ່ມຄວາມ ບໍ່ສະເໝີພາບທີ່ມີຢູ່ ແລະ ຫຼຸດຜ່ອນປະສິດທິພາບ ຂອງວຽກງານດັ່ງກ່າວ" (UNFCCC 2018).

ບັນຫາສິ່ງແວດລ້ອມທາງສັງຄົມ ສິ່ງຜົນກະທົບໃຫ້ແຕ່ລະຄົນມີລະດັບແຕກຕ່າງ ກັນ. ນອກຈາກນັ້ນ, ແມ່ຍິງ, ຜູ້ຊາຍ, ເດັກຍິງ ແລະ ເດັກຊາຍ ອາດມີການ ປະຕິບັດທີ່ແຕກຕ່າງກັນ, ມີບົດບາດຄວາມຮັບຜິດຊອບ, ຊັບພະຍາກອນ ແລະ ອຳນາດທີ່ແຕກຕ່າງກັນໃນຊຸມຊົນ ທ່ວປະເທດ. ສະນັ້ນ, ການພິຈາລະນາສິ່ງ ຕ່າງໆເຫຼົ່ານີ້ ເຂົ້າໃນການຈັດຕັ້ງແຜນງານຕ່າງໆ ຈຶ່ງມີຄວາມສຳຄັນສຳລັບການດຳເນີນງານດ້ານສິ່ງແວດລ້ອມ ທີ່ມີປະສິດທິພາບ. ຄວາມບໍ່ສະເໝີ ພາບຂອງ GSI ສາມາດສົ່ງຜົນກະທົບຕໍ່ຂະແໜງການສິ່ງແວດລ້ອມ, ລວມທັງສິດດ້ານທີ່ດິນ, ການແບ່ງແຮງງານ, ຄວາມຮູ້ ແລະ ທັກສະ, ອຳ ນາດ ແລະ ການຕັດສິນໃຈ ແລະ ທັດສະນະຕໍ່ກັບຄວາມສ່ຽງ ແລະ ຄວາມອ່ອນໄຫວ (Diamond and Lellement 2014: 5).

ບົດບາດຍິງ - ຊາຍ ສາມາດຕີຄວາມໝາຍເປັນ "ຄຸນລັກສະນະທາງສັງຄົມ, ພຶດຕິກຳ, ວັດທະນະທຳ, ຄວາມຄາດຫວັງ, ຄວາມຮັບຜິດຊອບ ແລະ ມາດຕະຖານທີ່ກ່ຽວຂ້ອງກັບການເປັນເພດຊາຍ ຫຼື ເພດຍິງ" (GCF 2018). ໃນຂະນະດຽວກັນ, ການມີສ່ວນຮ່ວມໃນສັງຄົມ ໝາຍເຖິງ “ຂະບວນການປັບປຸງເງື່ອນໄຂຂອງບຸກຄົນ ຫຼື ກຸ່ມຄົນໃດໜຶ່ງ ທີ່ມີສ່ວນຮ່ວມໃນສັງຄົມ ແລະ ຂະບວນການຜັດທະນາຄວາມສາມາດ, ໂອກາດ ແລະ ກຽດສັກສີຂອງຜູ້ດ້ອຍໂອກາດໂດຍອີງໃສ່ຕົວຕົນຂອງຄົນໃນສັງຄົມ. ຄວາມສະເໝີພາບບົດບາດຍິງ-ຊາຍ ແລະ ການມີສ່ວນຮ່ວມໃນ ສັງຄົມແມ່ນແນວຄວາມຄິດໜຶ່ງ ທີ່ແກ້ໄຂບັນຫາ ການພົວພັນຂອງອຳນາດທີ່ບໍ່ເທົ່າທຽມກັນ ທີ່ມີຜົນກະທົບຕໍ່ ບົດບາດຍິງ-ຊາຍ, ຄວາມຮັ່ງມີ, ຄວາມສາມາດ, ທີ່ຕັ້ງ, ຊັ້ນວັນນະ, ຊົນເຜົ່າ, ພາສາ ແລະ ອົງການ ຫຼື ລັກສະນະລວມຂອງສິ່ງເຫລົ່ານີ້. ໂດຍສຸມໃສ່ຄວາມຈຳເປັນໃນການປະຕິບັດ ເພື່ອສ້າງຄວາມສົມດຸນຂອງການພົວພັນທາງດ້ານອິດທິພົນເຫຼົ່ານີ້, ຫຼຸດຜ່ອນຄວາມແຕກຕ່າງ ແລະ ຮັບປະກັນສິດທິເທົ່າທຽມກັນ, ໂອກາດ ແລະ ຄວາມເຄົາລົບຕໍ່ທຸກຄົນ ໂດຍບໍ່ຄຳນຶງເຖິງ ຊົນຊັ້ນທາງສັງຄົມ" (GCF 2018).

ຖະແຫຼ່ງການຂອງ ກປສ ວ່າດ້ວຍບົດບາດຍິງ-ຊາຍ ແລະ ການມີສ່ວນຮ່ວມທາງສັງຄົມ

ກປສ ຢືນຢັນວ່າ ບົດບາດຍິງ-ຊາຍ ແລະ ການມີສ່ວນຮ່ວມທາງສັງຄົມ ແມ່ນມີຄວາມສຳຄັນຫຼາຍ, ຈຳເປັນທີ່ຕ້ອງເຊື່ອມສານຫົວຂໍ້ເຫຼົ່ານີ້ ເຂົ້າໃນທຸກໆໂຄງການດ້ານສິ່ງແວດລ້ອມ. ກປສ ຮັບຮູ້ວ່າ ຄວາມສະເໝີພາບຂອງບົດບາດຍິງ-ຊາຍ ປະກອບດ້ວຍ ຄວາມເຄົາລົບ ຄຸນຄ່າທາງດ້ານການປະກອບສ່ວນ ແລະ ການພິຈາລະນາທີ່ເຕັມໄປດ້ວຍຄວາມຫຼາກຫຼາຍຂອງ ແມ່ຍິງ, ຜູ້ຊາຍ, ເດັກຍິງ ແລະ ເດັກຊາຍ. ນອກຈາກນີ້ ຍັງມີວິທີອື່ນໆ ທີ່ຄວາມບໍ່ສະເໝີພາບທາງສັງຄົມສະແດງອອກນອກເໜືອ ຈາກ ບົດບາດຍິງ-ຊາຍ ສິ່ງເຫຼົ່ານີ້ຄວນໄດ້ຮັບການແກ້ໄຂຢ່າງເໝາະສົມພາຍໃນການດຳເນີນງານ ແລະ ໂຄງການຕ່າງໆຂອງ ກປສ. ດັ່ງນັ້ນ EPF ຈຶ່ງສັນຍາວ່າ:

- ເສີມຂະຫຍາຍຄວາມສະເໝີພາບລະຫວ່າງຍິງ-ຊາຍ ພາຍໃນໂຄງສ້າງການປົກຄອງ ແລະ ໃນການດຳເນີນງານປະຈຳວັນ.
- ສິ່ງເສີມເປົ້າໝາຍຂອງຄວາມສະເໝີພາບລະຫວ່າງຍິງ-ຊາຍ, ການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ແລະ ການມີສ່ວນຮ່ວມໃນສັງຄົມ ໂດຍຜ່ານການຕັດສິນໃຈໃນການຈັດສັນງົບປະມານ, ການດຳເນີນງານ ແລະ ຜົນກະທົບໂດຍລວມ.
- ຮັບປະກັນວ່າໂຄງການທີ່ໄດ້ຮັບທຶນຈາກ ກປສ ແມ່ນມີຄວາມອ່ອນໄຫວໜ້ອຍທີ່ສຸດ ຕໍ່ກັບບົດບາດຍິງ-ຊາຍ ແລະ ສັງຄົມ, ຕາມມາດຕະຖານ ແລະ ຄຳນິຍາມທີ່ນຳສະເໜີໃນຕາຕະລາງລຸ່ມນີ້.

ດ້ວຍເຫດດັ່ງກ່າວ, ກປສ ປະກາດວ່າຫຼັກການດັ່ງຕໍ່ໄປນີ້ ທີ່ຈະໄດ້ຮັບການເຊື່ອມສານຜ່ານການດຳເນີນງານຂອງຕົນຢ່າງເຕັມທີ່ ເຊິ່ງລວມມີ:

- ສະໜັບສະໜູນການແຊກແຊງດ້ານສິ່ງແວດລ້ອມ ແລະ ນະວັດຕະກຳ ໂດຍຜ່ານວິທີການທີ່ສົມບູນແບບທີ່ມີຄວາມອ່ອນໄຫວກັບບົດບາດຍິງ-ຊາຍ ແລະ ການມີສ່ວນຮ່ວມທັງສັງຄົມ. ວິທີການນີ້ຈະຖືກຈັດຕັ້ງປະຕິບັດ ໃນການດຳເນີນງານຂອງ ກປສ ເອງ ແລະ ໂຄງການອື່ນໆຂອງຄູ່ຮ່ວມງານ ທີ່ໄດ້ຮັບທຶນຈາກ ກປສ.
- ການລົງທຶນດ້ານການເງິນ ທີ່ພັດທະນາຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການມີສ່ວນຮ່ວມທັງສັງຄົມ, ຫຼຸດຜ່ອນຄວາມສ່ຽງໃນສັງຄົມ ທີ່ກ່ຽວຂ້ອງກັບບົດບາດຍິງຊາຍ ເພື່ອສົ່ງເສີມການເຄົາລົບ ແລະ ປະຕິບັດສິດທິມະນຸດຂອງທຸກໆຄົນ, ລວມທັງແມ່ຍິງ ແລະ ຜູ້ຊາຍ ແລະ ຜູ້ທີ່ມາຈາກກຸ່ມທີ່ມີຄວາມສ່ຽງ ແລະ ຊົນກຸ່ມນ້ອຍຕ່າງໆ.
- ສົ່ງເສີມການລົງທຶນ ແລະ ການຮ່ວມມືທີ່ປັບປຸງຄວາມສະເໝີພາບທາງດ້ານບົດບາດຍິງ - ຊາຍ ແລະ ສັງຄົມ ໂດຍທາງກົງ ຫຼື ທາງອ້ອມ.

ໂຄງການທີ່ມີຄວາມອ່ອນໄຫວຕໍ່ບົດບາດຍິງ-ຊາຍ ແລະ ການມີສ່ວນຮ່ວມໃນສັງຄົມ (ດັດປັບມາຈາກ ກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດສາກົນ ແລະ ອົງການສະຫະປະຊາຊາດວ່າດ້ວຍແມ່ຍິງ 2017 (GCF and UN Women 2017).

	ຄວາມບໍ່ຮູ້ກ່ຽວກັບ ບົດບາດຍິງ-ຊາຍ ແລະ ການມີສ່ວນຮ່ວມທາງສັງຄົມ	**ຄວາມອ່ອນໄຫວທາງດ້ານບົດບາດຍິງ-ຊາຍ ແລະ ການມີສ່ວນຮ່ວມທາງສັງຄົມ**	**ບົດບາດຍິງ-ຊາຍ ແລະ ການມີສ່ວນຮ່ວມທາງສັງຄົມສະເພາະ**	**ການປ່ຽນແປງຂອງ ບົດບາດຍິງ-ຊາຍ ແລະ ການມີສ່ວນຮ່ວມທາງ ສັງຄົມ**
ການ ອະທິບາຍ	ໂຄງການທີ່ສ້າງ, ກໍ່ໃຫ້ເກີດຮ້າຍແຮງ ກວ່າເກົ່າ ຫຼື ບໍ່ສົນໃຈຕໍ່ກັບ ຄວາມບໍ່ສະເໝີພາບຂອງບົດບາດຍິງ-ຊາຍ ແລະ ການມີສ່ວນຮ່ວມທາງສັງຄົມ ເຂົ້າໃນເປົ້າໝາຍຂອງໂຄງການ.	ໂຄງການທີ່ປະຕິບັດຂັ້ນຕອນຕ່າງໆ ເພື່ອເຄົາລົບ ແລະ ປະກອບທຸກພາກສ່ວນທີ່ກ່ຽວຂ້ອງ ແຕ່ ບໍ່ພະຍາຍາມປ່ຽນແປງພື້ນຖານຂອງບົດບາດຍິງ-ຊາຍ ຫຼື ຄວາມສຳ ພັນທາງສັງຄົມອື່ນໆ.	ໂຄງການທີ່ສະໜັບ ສະໜູນ ແລະ ປັບປຸງ ຜົນສຳເລັດຂອງກຸ່ມ ສະເພາະໃດໜຶ່ງ ໃນ ການປະຕິບັດຕາມເປົ້າ ໝາຍຂອງໂຄງການ.	ໂຄງການທີ່ຫຼຸດຜ່ອນຄວາມ ບໍ່ສະເໝີພາບຂອງ ບົດ ບາດຍິງຊາຍ ແລະ ການມີ ສ່ວນຮ່ວມທາງສັງຄົມ ຢ່າງ ຈິງຈັງເພື່ອປັບປຸງເປົ້າໝາຍ ຂອງໂຄງການ.

ຕົວຢ່າງ	ໂຄງການທີ່ໃຫ້ຄຳປຶກສາສະເພາະແຕ່ກັບ “ຜູ້ນຳແບບດັ້ງເດີມ” ເຊິ່ງເປັນຜູ້ຊາຍທັງໝົດ ກ່ຽວກັບຜົນກະທົບທີ່ອາດຈະເກີດຈາກການປ່ຽນແປງຂອງສະພາບແວດລ້ອມ ຕໍ່ກັບການຜະລິດກະສິກຳ. ໂຄງການທີ່ຖືວ່າຜູ້ຊາຍເປັນຊາວກະສິກອນ, ສະນັ້ນ "ກຸ່ມເປົ້າໝາຍ"ໂຄງການ ບໍ່ສົນໃຈແມ່ຍິງ ເພາະມີການຍຶດຖືແບບຜິດໆ ວ່າແມ່ຍິງເປັນແມ່ບ້ານທີ່ບໍ່ໄດ້ປະກອບສ່ວນເຂົ້າໃນງານວຽກກະສິກຳ.	ໂຄງການທີ່ພະຍາຍາມສົ່ງເສີມຄວາມໝັ້ນຄົງດ້ານສະບຽງອາຫານໂດຍຜ່ານການຝຶກອົບຮົມວິທີການເຮັດກະສິກຳທີ່ທົນຕໍ່ສະພາບອາກາດ. ໃນຂະນະທີ່ແມ່ຍິງໄດ້ຮັບການຝຶກອົບຮົມວິຊາການປຸງແຕ່ງອາຫານ ແລະ ການແປຮູບອາຫານຈາກສວນຄົວ.	ໂຄງການທີ່ສະໜອງຂໍ້ມູນຂ່າວສານ, ການຝຶກອົບຮົມ, ອຸປະກອນ ແລະ ການເງິນໃຫ້ແມ່ຍິງເພື່ອຍົກລະດັບຄວາມຮູ້ ແລະ ຄວາມສາມາດຂອງເຂົາເຈົ້າໃນການເຮັດກະສິກຳທີ່ມີຄວາມທົນທານຕໍ່ກັບສະພາບອາກາດ.	ໂຄງການທີ່ຝຶກອົບຮົມໃຫ້ແມ່ຍິງ ແລະ ຜູ້ຊາຍ ໃນວິທີການປູກຝັງທີ່ມີຄວາມທົນທານຕໍ່ກັບສະພາບອາກາດ. ກິດຈະກຳໃຫ້ຄຳປຶກສາ, ສະໜັບສະໜູນການມີສ່ວນຮ່ວມຢ່າງເຕັມສ່ວນຂອງແມ່ຍິງໃນການຕັດສິນໃຈ ແລະ ສ້າງໂອກາດໃນການເລືອກວິທີການດຳລົງຊີວິດແບບອື່ນ.
ຜົນໄດ້ຮັບ	ໂຄງການນີ້ມີຜົນດີຕໍ່ຜູ້ຊາຍເພາະວ່າພວກເຂົາໄດ້ຮັບຄວາມຮູ້ ແລະ ຂໍ້ມູນຂ່າວສານ. ສິ່ງນີ້ຈະເພີ່ມທະວີການຄວບຄຸມເຕັກໂນໂລຢີ, ໃນຂະນະທີ່ແມ່ຍິງຖືກແບ່ງແຍກອອກຈາກການນຳໃຊ້ເທັກໂນໂລຢີ ແລະ ຕ້ອງຊອກຫາການດຳລົງຊີວິດແບບອື່ນ.	ໂຄງການຮັບຮູ້ພາລະບົດບາດທີ່ແຕກຕ່າງກັນຂອງຊາຍ ແລະ ຍິງ ໃນການຜະລິດກະສິກຳ ແລະ ວຽກງານຄວາມໝັ້ນຄົງດ້ານສະບຽງອາຫານ. ເຖິງຢ່າງໃດກໍ່ຕາມ, ມັນເປັນການຮັກສາບົດບາດຍິງຊາຍ ແລະ ການແບ່ງວຽກງານທີ່ມີຢູ່ໃນປະຈຸບັນ. ຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍບໍ່ໄດ້ຖືກສຶກສາ ຫຼື ໄດ້ຮັບການແກ້ໄຂ.	ໂຄງການຮັບຮູ້ເຖິງຂໍ້ເສຍປຽບ ທີ່ແມ່ຍິງປະເຊີນໜ້າ ແລະ ສຸມໃສ່ການສະໜອງຊັບພະຍາກອນສະເພາະ ເພື່ອໃຫ້ພວກເຂົາມີໂອກາດເທົ່າທຽມກັບຜູ້ຊາຍ.	ໂຄງການມີປະສິດທິພາບໃນການ ທ້າທາຍຕໍ່ກັບມາດຕະຖານການປະຕິບັດກ່ຽວກັບບົດບາດການຕັດສິນໃຈຂອງຍິງຊາຍ ແລະ ການປ່ຽນແປງຄວາມສຳພັນລະຫວ່າງຊາຍ ແລະ ຍິງເພື່ອໃຫ້ພວກເຂົາສາມາດເຮັດວຽກຮ່ວມກັນເພື່ອປັບຕົວເຂົ້າກັບການປ່ຽນແປງຂອງສະພາບແວດລ້ອມ.

- **ການນຳໃຊ້ນະໂຍບາຍດ້ານບົດບາດຍິງ-ຊາຍຂອງ ກປສ**

ກປສ ຈະສຸມງົບປະມານ, ຊັບພະຍາກອນມະນຸດ ແລະ ຊັບພະຍາກອນອື່ນໆ ທີ່ຈຳເປັນເພື່ອຜັດທະນາບົດສະຫຼຸບຂອງນະໂຍບາຍ ວ່າດ້ວຍບົດບາດຍິງ-ຊາຍ ແລະ ການມີສ່ວນຮ່ວມທັງສັງຄົມຂອງຕົນ. ໃນລະດັບໂຄງການ ກປສ ຈະຮັບປະກັນໃຫ້ບັນດາຄູ່ຮ່ວມງານມີຊັບພະຍາກອນ ແລະ ຄວາມສາມາດຮັບປະກັນວ່າ ບົດບາດຍິງຊາຍ ແລະ ການມີສ່ວນຮ່ວມໃນສັງຄົມ ໄດ້ຮັບການເອົາໃຈໃສ່ຢ່າງເຕັມສ່ວນໃນການອອກແບບໂຄງການ, ການດຳເນີນງານ, ການຕິດຕາມ ແລະ ປະເມີນຜົນ, ການລາຍງານ/ ການສື່ສານ. ຈະພະຍາຍາມຮັບປະກັນວ່າທຸກໆ ໂຄງການຈະມີຄວາມອ່ອນໄຫວຕໍ່ກັບບົດບາດຍິງຊາຍໃຫ້ໜ້ອຍທີ່ສຸດ.

ບັນດາແນວຄວາມຄິດ, ບົດສະເໜີຂໍທຶນ ແລະ ການອອກແບບໂຄງການ ໃຫ້ ກປສ ຄວນປະຕິບັດຕາມຫຼັກການ ແລະ ນະໂຍບາຍຂອງຕົນ ວ່າດ້ວຍບົດບາດຍິງຊາຍ ແລະ ການມີສ່ວນຮ່ວມໃນສັງຄົມ. ບັນດາອົງການດຳເນີນໂຄງການ (POs) ຕ້ອງປະກອບມີການປະເມີນຜົນດ້ານບົດ

ບາດຍິງຊາຍ ແລະ ການມີສ່ວນຮ່ວມໃນສັງຄົມ ກະກຽມຮ່າງບົດແນວຄວາມຄິດ ແລະ ບົດສະເໜີທີ່ຕິດພັນກັບບັນຫາ ບົດບາດຍິງຊາຍ ແລະ ການມີສ່ວນຮ່ວມທັງສັງຄົມ ແລະ ຄວາມບໍ່ສະເໝີ ພາບຕ່າງໆ ທີ່ກ່ຽວຂ້ອງກັບໂຄງການທີ່ສະເໜີ ແລະ ສະເໜີວິທີການ ທີ່ແມ່ຍິງ ແລະ ຜູ້ດ້ອຍໂອກາດອື່ນໆ ສາມາດມີສ່ວນຮ່ວມ ແລະ ໄດ້ຮັບຜົນປະໂຫຍດ. ແຕ່ລະໂຄງການທີ່ສະເໜີ ຄວນປະກອບມີແຜນການ ທີ່ລະອຽດອ່ອນຕໍ່ບົດບາດຍິງ-ຊາຍ ແລະ ການມີສ່ວນຮ່ວມທັງສັງຄົມ ເຊິ່ງລວມທັງການມີສ່ວນຮ່ວມທີ່ມີຄວາມໝາຍ ແລະ ເຂົ້າເຖິງທຸກພາກສ່ວນ, ກິດຈະກຳທີ່ມີປະໂຫຍດແມ່ຍິງ ແລະ ເດັກຍິງມີສ່ວນຮ່ວມໃນທຸກເວລາທີ່ເໝາະສົມ ສຳລັບ ຕິວຊີ້ວັດ ແລະ ເປົ້າໝາຍ ຄວນແຍກອອກຈາກ ບົດບາດຍິງ-ຊາຍ ແລະ ຊົນເຜົ່າ. ກປສ ຍັງຄາດຫວັງ ໃຫ້ມີການໃຫ້ຄຳປຶກສາຢ່າງດີ ຕໍ່ກັບບົດບາດຍິງຊາຍ ແລະ ການມີສ່ວນຮ່ວມໃນສັງຄົມ ສຳລັບການພັດທະນາການປະເມີນຜົນ ແລະ ການສະເໜີບົດໂຄງການ.

ບັນດາໂຄງການທັງໝົດ ໄດ້ຮັບການເຊື່ອມສານດ້ານບົດບາດຍິງຊາຍ ແລະ ການມີສ່ວນຮ່ວມໃນສັງຄົມ ເຂົ້າໃນກອບວຽກການຕິດຕາມ ແລະ ປະເມີນຜົນ ໂຄງຮ່າງການບັນທຶກຕ່າງໆ ທີ່ຈະສະເໜີໃຫ້ ກປສ. ສິ່ງເຫຼົ່ານີ້ປະກອບມີ ຂໍ້ມູນທີ່ແຍກໂດຍເພດ ແລະ ຊົນເຜົ່າ ຜົນຂອງການ ການປະເມີນໂຄງການທີ່ກຳລັງຈັດຕັ້ງປະຕິບັດ ຕໍ່ຜູ້ຊາຍ ແລະ ແມ່ຍິງລວມທັງກຸ່ມອື່ນໆ ໂດຍສະເພາະແມ່ນກຸ່ມທີ່ມີຄວາມສ່ຽງ ຫຼື ດ້ອຍໂອກາດ.

ການຈັດຕັ້ງປະຕິບັດໂຄງການຄວນມີລັກສະນະຕໍ່ເນື່ອງ ແລະ ຄຳນຶງເຖິງຄວາມອ່ອນໄຫວຕໍ່ບົດບາດຍິງຊາຍ ແລະ ການມີສ່ວນຮ່ວມໃນສັງຄົມ. ໂດຍສະເພາະ ກປສ ແລະ ບັນດາໂຄງການ ຈະດຳເນີນຂັ້ນຕອນຕ່າງໆ ເພື່ອຮັບປະກັນວ່ານະໂຍບາຍສັງລວມຂອງ ກປສ ເພື່ອສ້າງຄວາມເຂົ້າໃຈ ແລະ ໄດ້ຮັບການປະຕິບັດຕາມ, ໂຄງການທັງໝົດມີຄວາມອ່ອນໄຫວຕໍ່ບົດບາດຍິງຊາຍໜ້ອຍທີ່ສຸດ ແຜນງານຈັດຕັ້ງວຽກງານບົດບາດຍິງຊາຍ ແລະ ການມີສ່ວນຮ່ວມໃນສັງຄົມ ຂອງທຸກໆໂຄງການໄດ້ຮັບການປະຕິບັດງານ.

ຄູ່ຮ່ວມງານຕ່າງໆຂອງ ກປສ ໄດ້ຮັບຄວາມຄາດຫວັງ ໃຫ້ມີວິທີການເພື່ອຮັບປະກັນບັນຫາຄວາມອ່ອນໄຫວຕໍ່ບົດບາດຍິງຊາຍ ທຸກຄັ້ງທີ່ພວກເຂົາມີການພົວພັນກັບຄົນໃນຊຸມຊົນ. ຂໍ້ມູນຂ່າວສານຄວນໄດ້ຮັບການສື່ສານຢ່າງມີປະສິດທິພາບ, ສາມາດເຂົ້າເຖິງ ແລະ ມີສ່ວນຮ່ວມເທົ່າທຽມກັນລະຫວ່າງ ແມ່ຍິງ ແລະ ຜູ້ຊາຍຜູ້ທີ່ກ່ຽວຂ້ອງ. ກປສ ຮັບປະກັນວ່າໂຄງການທີ່ຕົນໃຫ້ທຶນ ຈະມີໂອກາດສຳລັບພາກສ່ວນທີ່ກ່ຽວຂ້ອງຕ່າງໆ ໃນການແລກປ່ຽນຂໍ້ມູນຂ່າວສານ, ໃຫ້ຄຳຄິດເຫັນຢ່າງເປັນປະຈຳໃນໄລຍະການຈັດຕັ້ງປະຕິບັດ,ຮັບປະກັນທັກສະນະ ແລະ ບູລິມະສິດທີ່ຫຼາກຫຼາຍຈະຖືກລວມເຂົ້າໃນທົ່ວໂຄງການ.

ກປສ ຈະຍັງປະຕິບັດຕາມຂັ້ນຕອນຕ່າງໆ ເພື່ອຮັບປະກັນການຈັດຕັ້ງປະຕິບັດໂຄງການທີ່ຕົນໄດ້ສະໜອງທຶນໃຫ້ນັ້ນ ບໍ່ຖືເປົ່າບັນຫາຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍ, ໂອກາດຄວນໄດ້ຮັບການແບ່ງປັນໂດຍທັງຍິງ ແລະ ຊາຍ. ກປສ ມຸ່ງໝັ້ນໃນການສ້າງຄວາມເຂັ້ມແຂງ ແລະ ເຂົ້າເຖິງກຸ່ມຄົນຕ່າງໆ ໂດຍສະເພາະແມ່ນກຸ່ມຄົນ, ຊຸມຊົນທີ່ດ້ອຍໂອກາດ ແລະ ນຳເອົາຜົນປະໂຫຍດຂອງໂຄງການແກ່ພວກເຂົາ.

ການຕິດຕາມໂຄງການຍັງຈະມີຄວາມອ່ອນໄຫວຕໍ່ບົດບາດຍິງຊາຍ ແລະ ການມີສ່ວນຮ່ວມໃນສັງຄົມ. ເຊິ່ງລວມທັງການໂຄສະນາເຜີຍແຜ່, ການປຶກສາຫາລືຂໍ້ສະເໜີແນະຕ່າງໆ, ການເກັບກຳຂໍ້ມູນ, ການປະເມີນຜົນ ແລະ ການລາຍງານ. ກປສ ຮັບປະກັນວ່ານະໂຍບາຍນີ້ ຖືກຈັດຕັ້ງປະຕິບັດຢ່າງເຕັມສ່ວນໃນທຸກພາກສ່ວນຂອງອົງກອນລວມທັງຢູ່ໃນ:

- ການບໍລິຫານ;
- ການພັດທະນາຄວາມຮູ້ ແລະ ຄວາມອາດສາມາດ;
- ການຈັດສັນຊັບພະຍາກອນ, ການເຂົ້າເຖິງ ແລະ ງົບປະມານ;
- ຂັ້ນຕອນການດຳເນີນງານ ;
- ການສ້າງຄວາມຮູ້ ແລະ ການສື່ສານ;

ນະໂຍບາຍໄດ້ປະກອບເຂົ້າໃນເອກະສານສະເພາະ ດັ່ງຕໍ່ໄປນີ້:

- ຮ່າງແບບຂໍ້ຕົກລົງການຮ່ວມມື;

- ຄູ່ມືດຳເນີນງານຂອງໂຄງການ (POM) ແລະ ເອກະສານຊ້ອນທ້າຍຕ່າງໆ;
- ປຶ້ມຄູ່ມືກ່ຽວກັບບຸກຄະລະກອນ;
- ການມີສ່ວນຮ່ວມຂອງຊຸມຊົນ;
- ສະຫຼຸບສັງລວມນະໂຍບາຍ ສຳລັບຊົນເຜົ່າ;
- ສະຫຼຸບສັງລວມນະໂຍບາຍການປົກປັກຮັກສາສິ່ງແວດລ້ອມ ແລະ ສັງຄົມ;
- ກົນໄກການຮ້ອງທຸກ;
- ກອບການຕິດຕາມ ແລະ ປະເມີນຜົນ.

ເອກະສານອ້າງອີງ

Diamond, N.K. and D. Lellement (2014). An Online Sourcebook: Integrating Gender in Climate Change Adaptation Proposals. United States Agency for International Development and the Asia Pacific Adaptation Network.

Green Climate Fund (GCF). 2018. GCF Gender Equality and Social Inclusion Policy and Action Plan 2018-2020. GCF/B.19/25.

Green Climate Fund and UN Women. 2017. Mainstreaming Gender in Green Climate Fund Projects. Available at https://www.greenclimate.fund/documents/20182/194568/Guidelines_-_GCF_Toolkit_Mainstreaming_Gender.pdf/860d1d03-877d-4c64-9a49-c0160c794ca7.

UNFCCC (2018). Introduction to Gender and Climate Change. https://unfccc.int/topics/gender/the-big-picture/introduction-to-gender-and-climate-change

A17. ສັງລວມນະໂຍບາຍຂອງ (ກປສ) ກ່ຽວກັບ ການປົກປ້ອງສິ່ງແວດລ້ອມ ແລະ ສັງຄົມ (ESS)

ຄວາມເປັນມາ

ກອງທຶນປົກປັກຮັກສາສິ່ງແວດລ້ອມ (ກປສ) ສະໜອງທຶນດ້ເພື່ອສົ່ງເສີມການປົກປັກຮັກສາສິ່ງແວດລ້ອມ, ການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ, ການອະນຸລັກຊີວະນາໆພັນ ແລະ ການພັດທະນາຊຸມຊົນໃນ ສປປ ລາວ. ກປສ ຍັງເຄົາລົບສິດ, ຄວາມສາມາດຂອງພົນລະເມືອງລາວທຸກຄົນ ແລະ ຮັບຮູ້ວ່າມັນເປັນສິ່ງສຳຄັນ ທີ່ຈະຮັບປະກັນວ່າບັນດາກິດຈະກຳຂອງໂຄງການຕ່າງໆ ທີ່ໄດ້ຮັບທຶນຈາກ ກປສ ສອດຄ່ອງກັບມາດຕະຖານລະດັບໂລກ ເພື່ອປ້ອງກັນປະຊາຊົນ ຫຼື ສິ່ງແວດລ້ອມ ຈາກໄພອັນຕະລາຍ. ນອກຈາກນັ້ນ, ການແຊກແຊງ ດ້ານລະບົບນິເວດວິທະຍາ ທີ່ມີປະສິດທິພາບທີ່ສຸດແມ່ນມັກຈະມີຄວາມອ່ອນໄຫວ ຕໍ່ຄວາມຕ້ອງການ ແລະ ຄວາມປາຖະໜາຂອງປະຊາຊົນທ້ອງຖິ່ນ.ໃນທາງກົງກັນຂ້າມ, ເຖິງແມ່ນວ່າໂຄງການທີ່ມີຈຸດປະສົງດີທີ່ສຸດ ກໍ່ສາມາດສ້າງຄວາມສ່ຽງຕ່າງໆດ້ານສັງຄົມ ແລະ ສິ່ງແວດລ້ອມໄດ້. ຕາມ ນະໂຍບາຍຂອງ ກປສ, ການສະໜອງທຶນແມ່ນໃຫ້ສະເພາະແຕ່ໂຄງການ ທີ່ມີຜົນກະທົບ ໜ້ອຍທີ່ສຸດຕໍ່ສັງຄົມ ແລະ ສິ່ງແວດລ້ອມ ຫຼື ບໍ່ມີຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມເລີຍ. ແຕ່ຢ່າງໃດກໍ່ຕາມ, ໂຄງການດັ່ງກ່າວ, ຕ້ອງກຽມພ້ອມທີ່ຈະຈັດການ ກັບຜົນກະທົບທີ່ບໍ່ຄາດຄິດວ່າຈະເກີດຂຶ້ນ. ນະໂຍບາຍສະຫຼຸບສັງລວມຂອງ ກປສ ນີ້ ຢືດໝັ້ນ ຕໍ່ການປົກປ້ອງສິ່ງແວດລ້ອມ ແລະ ສັງຄົມ (ESS). ຖະແຫຼງການນະໂຍບາຍຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ (ກປສ) ວ່າດ້ວຍການປົກປ້ອງສິ່ງແວດລ້ອມ ແລະ ສັງຄົມ (ESS)

ເພື່ອສະໜັບສະໜູນພາລະກິດໃນການຄຸ້ມຄອງຊັບພະຍາກອນທຳມະຊາດໃນ ສປປ ລາວ, ກປສ ຢືດໝັ້ນໃນການປະຕິບັດບາດກ້າວອັນຫ້າວຫັນ ເພື່ອຫລີກລ້ຽງ ແລະ ຄຸ້ມຄອງຄວາມສ່ຽງດ້ານສິ່ງແວດລ້ອມ ແລະ ສັງຄົມທີ່ກ່ຽວຂ້ອງກັບໂຄງການຂອງຕົນ. ດ້ວຍນະໂຍບາຍດັ່ງກ່າວ , ກປສ ຮຽກຮ້ອງໃຫ້ທຸກກິດຈະກຳທີ່ຕົນໃຫ້ທຶນ ມີມາດຕະການຕ່າງໆເພື່ອ:

- ຫຼີກລ້ຽງ ,ປ້ອງກັນຜົນກະທົບຕໍ່ຄົນ ຫຼື ສິ່ງແວດລ້ອມ ແລະ ຈັດການກັບບັນຫາຕ່າງໆທີ່ອາດຈະເກີດຂຶ້ນໃນໄລຍະການດຳເນີນໂຄງການ.
- ສົ່ງເສີມການເຂົ້າເຖິງຜົນປະໂຫຍດຂອງການພັດທະນາ ທີ່ຍຸດຕິທຳ ແລະ ສະເໝີພາບ.
- ຮັບປະກັນການໃຫ້ຄຳປຶກສາທີ່ມີຄວາມໝາຍ ເຊິ່ງລວມມີຂັ້ນຕອນຕ່າງໆເພື່ອສະໜັບສະໜູນ ແລະ ລວມເອົາຄົນທີ່ມີຄວາມສ່ຽງ ແລະ ດ້ອຍໂອກາດຕ່າງໆ.

ນະໂຍບາຍນີ້ເປັນກອບສະແດງໃຫ້ເຫັນວ່າ ກປສ ຄຸ້ມຄອງຄວາມສ່ຽງ ແລະ ຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ ຢູ່ພາຍໃຕ້ຂອບຂອງຄວາມມຸ່ງໝັ້ນອັນກວ້າງຂວາງ ເພື່ອສົ່ງເສີມການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ ແລະ ລວມທັງການພັດທະນາ ໂດຍສະເພາະແມ່ນນະໂຍບາຍດັ່ງລຸ່ມນີ້:

- ຢືດໝັ້ນໃຫ້ ກປສ ເພື່ອເຊື່ອມນະໂຍບາຍດ້ານການປົກປ້ອງສັງຄົມ ແລະ ສິ່ງແວດລ້ອມ (ESS) ເຂົ້າໃນລະບົບການຄຸ້ມຄອງຂອງຕົນ ຜ່ານວົງຈອນການຄຸ້ມຄອງໂຄງການທັງໝົດ.
- ຊ່ວຍໃນການຕັດສິນໃຈວ່າ ໂຄງການໃດທີ່ຕົນຄວນຈະສະໜອງທຶນ;
- ສ້າງກອບເປັນລະບົບ ເພື່ອເຊື່ອມສານເຂົ້າໃນການຄຸ້ມຄອງຄວາມສ່ຽງດ້ານສິ່ງແວດລ້ອມ ແລະ ສັງຄົມ ເຂົ້າໃນການປະຕິບັດວຽກງານຂອງ ກປສ.
- ປະຕິບັດຕາມຂໍ້ກຳນົດໃຫ້ສອດຄ່ອງກັບການປົກປັກຮັກສາສິ່ງແວດລ້ອມ ແລະ ສັງຄົມ ຢ່າງເຂັ້ມງວດ ທີ່ກ່ຽວຂອງກັບ ການປະຕິບັດງານຂອງ ກປສ ແລະ ທຸກໂຄງການທີ່ໄດ້ຮັບທຶນຈາກ ກປສ ຈະໄດ້ຮັບການຈັດຕັ້ງປະຕິບັດໂດຍບັນດາຄູ່ຮ່ວມງານຕ່າງໆໃນເຄືອຂ່າຍຂອງຕົນ.

ນະໂຍບາຍນີ້ສະທ້ອນໃຫ້ເຫັນບັນດາຫຼັກການດັ່ງຕໍ່ໄປນີ້:

- ຄວາມຍືນຍົງດ້ານສິ່ງແວດລ້ອມ ແລະ ສັງຄົມ ແມ່ນຖືກຈັດຕັ້ງປະຕິບັດໃນທຸກໆໂຄງການ. ກປສ ກະຕຸກຊຸກຍູ້ໃຫ້ທີມງານ ແລະ ຄູ່ຮ່ວມງານຂອງຕົນ ບໍ່ພຽງແຕ່ໃຫ້ຄຳນຶງເຖິງບັນຫາທີ່ຈະຫຼີກລ້ຽງສິ່ງອັນຕະລາຍເທົ່ານັ້ນ, ແຕ່ຍັງໃຫ້ຕັ້ງໜ້າ ຊອກຫາໂອກາດເພື່ອປັບປຸງຜົນໄດ້ຮັບດ້ານສິ່ງແວດລ້ອມ ແລະ ສັງຄົມ.
- ການພິຈາລະນາຜົນກະທົບຂ້າມພົມແດນ ກ່ຽວກັບຄວາມສ່ຽງ ຫຼື ຜົນກະທົບທີ່ອາດຈະກະທົບຕໍ່ປະເທດເພື່ອນບ້ານ ອັນເນື່ອງມາຈາກຜົນຂອງການຈັດຕັ້ງປະຕິບັດກິດຈະກຳຕ່າງໆທີ່ ກປສ ໃຫ້ທຶນ.
- ຢຶດໝັ້ນຕໍ່ຄວາມສະເໝີພາບ ແລະ ການບໍ່ຈຳແນກ, ລວມທັງໃນກໍລະນີທີ່ບໍ່ຄາດຄິດ ເນື່ອງມາຈາກໂຄງການໃດໜຶ່ງຂອງ ກປສ ມີບາດກ້າວໜ້າສະເພາະດ້ານ ເພື່ອສະໜອງຄວາມຕ້ອງການສຳລັບຜູ້ທີ່ມີຄວາມສ່ຽງພິເສດ.
- ຖືເອົາສະຖານະພາບການຫຼຸດຜ່ອນ ເປັນວິທີການເພື່ອຄຸ້ມຄອງຄວາມສ່ຽງດ້ານສິ່ງແວດລ້ອມ ແລະ ສັງຄົມ. ໂດຍສະເພາະ ກປສ ແນໃສ່: ຄາດຫວັງ, ຫຼີກລ້ຽງຄວາມສ່ຽງ, ຜົນກະທົບຕໍ່ຄົນ ແລະ ສິ່ງແວດລ້ອມ.
- ໃນກໍລະນີທີ່ບໍ່ສາມາດຫຼີກລ້ຽງຄວາມສ່ຽງ ແລະ ຜົນກະທົບ ຕ້ອງໄດ້ມີວິທີການຫຼຸດຜ່ອນເພື່ອເຮັດໃຫ້ເກີດຜົນກະທົບໜ້ອຍທີ່ສຸດ.
- ຫຼຸດຜ່ອນຄວາມສ່ຽງ ແລະ ຜົນກະທົບທີ່ຍັງເຫຼືອຢູ່.
- ໃນກໍລະນີທີ່ຈຳເປັນຕ້ອງດຳເນີນບາດກ້າວຕ່າງໆ ເພື່ອແກ້ໄຂ, ເພື່ອຟື້ນຟູ ແລະ ທົດແທນຄ່າເສຍຫາຍຕໍ່ຄົນ ຫຼື ສິ່ງແວດລ້ອມ.
- ສືບຕໍ່ການປັບປຸງການຈັດຕັ້ງປະຕິບັດທີ່ດີທີ່ສຸດ ໂດຍສະເພາະວິທີການຈັດຕັ້ງປະຕິບັດທີ່ໂປ່ງໃສ, ແບບມີສ່ວນຮ່ວມໃນການເຮັດວຽກກັບຊຸມຊົນ ເພື່ອຮັບປະກັນວ່າຄວາມສ່ຽງດ້ານສັງຄົມ ແລະ ສິ່ງແວດລ້ອມ ໄດ້ມີວິທີຫຼີກລ້ຽງ ແລະ ການຄຸ້ມຄອງຢ່າງເໝາະສົມ.
- ການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ ແລະ ການເປີດເຜີຍທີ່ໂປ່ງໃສຕະຫຼອດໄລຍະກຳເນີນໂຄງການ, ລວມທັງການເຜີຍແຜ່, ການມີສ່ວນຮ່ວມຂອງຊຸມຊົນ, ຄວາມອ່ອນໄຫວຕໍ່ແມ່ຍິງ, ຊົນເຜົ່າ ແລະ ອື່ນໆ ໂດຍສະເພາະຕໍ່ກັບກຸ່ມທີ່ມີຄວາມສ່ຽງ ຫຼື ກຸ່ມຄົນດ້ອຍໂອກາດ.
- ຄວາມອ່ອນໄຫວຕໍ່ບົດບາດຍິງ-ຊາຍ ໃນການປະຕິບັດວຽກງານ ແລະ ກິດຈະກຳທັງໝົດ.
- ການປະຕິບັດຕາມກົດໝາຍຂອງລາວ, ກົດໝາຍ ແລະ ອະນຸສັນຍາສາກົນອື່ນໆ ທີ່ກ່ຽວຂ້ອງກັບ ESS.
- ເງື່ອນໄຂການເຮັດວຽກ ຂອງແຮງງານມີຄວາມຍຸດຕິທຳ ໂດຍອີງຕາມມາດຕະຖານທີ່ໄດ້ກຳນົດໂດຍອົງການແຮງງານສາກົນ ແລະ ລັດຖະບານລາວ.
- ຄວາມມຸ່ງໝັ້ນຕໍ່ມາດຕະການ ແລະ ການເບິ່ງແຍງພິເສດ ໃນເວລາທີ່ເຮັດວຽກກັບກຸ່ມຊົນເຜົ່າ ຫຼື ໂຄງການທີ່ມີຜົນກະທົບຕໍ່ຊົນເຜົ່າ. ຕາມນະໂຍບາຍການສັງລວມຂອງ ກປສ ກ່ຽວກັບຊົນເຜົ່າ, ລວມທັງກົດໝາຍຂອງລາວ ແລະ ມາດຕະຖານສາກົນທີ່ກ່ຽວຂ້ອງ (ລວມທັງຖະແຫຼງການຂອງ ອົງການສະຫະປະຊາຊາດວ່າ ດ້ວຍສິດທິຂອງຊົນເຜົ່າພື້ນເມືອງ).
- ຄວາມມຸ່ງໝັ້ນຕໍ່ກັບສິດທິມະນຸດ ແລະ ວິທີການທີ່ຖືເອົາສິດທິມະນຸດເປັນໃຈກາງ ໃນໂຄງການດ້ານສິ່ງແວດລ້ອມ.
- ຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ ແລະ ຄວາມສົມບູນດ້ານສິ່ງແວດລ້ອມ ແມ່ນແຮງຂັບເຄື່ອນຕົ້ນຕໍຂອງວຽກງານການອະນຸລັກຂອງ ກປສ. ດ້ວຍເຫດຜົນດັ່ງກ່າວ ໂຄງການທັງໝົດທີ່ ກປສ ໃຫ້ທຶນ ໄດ້ຖືເອົາວິທີດຳເນີນການ ດ້ວຍລັກສະນະທີ່ມີການອອກແບບມາເພື່ອປົກປ້ອງ ແລະ ປົກປັກຮັກສາຊີວະນາໆພັນ ໃຫ້ມີທີ່ຢູ່ອາໄສເປັນບັນຫາສຳຄັນ, ຮັກສາລະບົບການໄຫຼວຽນຂອງນ້ຳຕາມທຳມະຊາດ, ຮັກສາຜົນປະໂຫຍດຂອງການບໍລິຫານດ້ານນິເວດວິທະຍາ ແລະ ສົ່ງເສີມການນຳໃຊ້ທີ່ຍືນຍົງ ແລະ ການຄຸ້ມຄອງຊັບພະຍາ ກອນທຳມະຊາດທີ່ມີຊີວິດ.

ລະບົບການປົກປ້ອງສະພາບແວດລ້ອມ ແລະ ການຄຸ້ມຄອງສັງຄົມທີ່ມີປະສິດທິພາບ ຂຶ້ນກັບຂັ້ນຕອນການກຳນົດ, ປ້ອງກັນ ແລະ ການຫຼຸດຜ່ອນຄວາມສ່ຽງ. ເຊິ່ງລວມມີບັນຫາຕ່າງໆທີ່ບໍ່ຄາດຄິດວ່າຈະເກີດຂຶ້ນ ຫຼື ຮ້າຍແຮງກວ່າເກົ່າ ທີ່ເກີດຂຶ້ນໃນລະຫວ່າງການດຳເນີນໂຄງການ. ນະໂຍບາຍຂອງ ກປສ ວ່າດ້ວຍການປົກປ້ອງແກ້ໄຂ ຄວາມສ່ຽງສະເພາະຂອງສັງຄົມ ແລະ ສິ່ງແວດລ້ອມ ໃນຂົງເຂດດັ່ງລຸ່ມນີ້:

- ເງື່ອນໄຂດ້ານແຮງງານ ແລະ ການເຮັດວຽກ;
- ປະສິດທິພາບຂອງການນຳໃຊ້ຊັບພະຍາກອນ ແລະ ການປ້ອງກັນມົນລະພິດ;

- ສຸຂະພາບ, ຄວາມປອດໄພ ແລະ ຄວາມໝັ້ນຄົງຂອງຊຸມຊົນ;
- ການຊື້ ແລະ ການຍົກຍ້າຍຈັດສັນທີ່ດິນໂດຍບໍ່ສະໝັກໃຈ;
- ການອະນຸລັກຊີວະນາໆພັນ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດທີ່ມີຊີວິດແບບຍືນຍົງ;
- ຊົນເຜົ່າ (ຄົນພື້ນເມືອງ);
- ມໍລະດົກທາງວັດທະນະທຳ;
- ບົດບາດຍິງ-ຊາຍ ແລະ ການມີສ່ວນຮ່ວມໃນສັງຄົມ.

ນະໂຍບາຍຂອງ ກປສ ແມ່ນເພື່ອຫຼີກລ້ຽງການສະໜອງທຶນໃຫ້ແກ່ໂຄງການໃດໜຶ່ງ ທີ່ກໍ່ໃຫ້ເກີດຄວາມສ່ຽງໃນຂົງເຂດເຫຼົ່ານີ້. ຕໍ່ກັບຂົງເຂດເຫຼົ່ານີ້, ກປສ ມີຄວາມມຸ່ງໝັ້ນໃນການປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງລັດຖະບານລາວ, ລວມທັງ ມາດຕະຖານສາກົນຕ່າງໆທີ່ກ່ຽວຂ້ອງ. ໃນກໍລະນີມີບັນຫາຄວາມສ່ຽງທີ່ກ່ຽວຂ້ອງກັບການປົກປ້ອງເກີດຂຶ້ນໂດຍບໍ່ຄາດຄິດ ໃນລະຫວ່າງ ການຈັດຕັ້ງປະຕິບັດໂຄງການ, ຄູ່ມືການຈັດຕັ້ງປະຕິບັດໂຄງການຂອງ ກປສ (POM) ໄດ້ໃຫ້ຄຳແນະນຳ ທີ່ໄດ້ກຳນົດເປັນລາຍລະອຽດແຕ່ ລະບາດກ້າວ ກ່ຽວກັບວິທີການບັນທຶກ ແລະ ຄຸ້ມຄອງບັນຫາ ຫຼື ການເພີ່ມຂຶ້ນໃນລະດັບຄວາມສ່ຽງ. ທີມງານ ແລະ ຄູ່ຮ່ວມງານທັງໝົດຂອງ ກປສ ຕ້ອງປະຕິບັດຕາມແນວທາງ ການຄຸ້ມຄອງຄວາມສ່ຽງໃນ POM, ເຊິ່ງໄດ້ຮັບການດຳເນີນການໃນຕະຫຼອດໄລຍະຮອບວຽນ ການຄຸ້ມ ຄອງໂຄງການຂອງ ກປສ.

ກົນໄກການຮ້ອງທຸກ (GRM) ທີ່ໃຊ້ໄດ້, ໂປ່ງໃສ ແລະ ເຂົ້າເຖິງໄດ້ ແມ່ນມີຄວາມຈຳເປັນ ສຳລັບທຸກໆນະໂຍບາຍການປົກປ້ອງ. GRM ແມ່ນກົນໄກການຮ້ອງທຸກທາງການ ເພື່ອຮັບ, ສອບສວນ ແລະ ແກ້ໄຂ້ບັນຫາຮ້ອງທຸກຕ່າງໆ. ກປສ ຮັບປະກັນໃຫ້ມີຂະບວນການດັ່ງກ່າວ ຖືກ ຈັດຕັ້ງປະຕິບັດໃນທຸກໆໂຄງການທີ່ຕົນໃຫ້ທຶນ. ກປສ ຫຼື ຄູ່ຮ່ວມງານທີ່ດຳເນີນໂຄງການ ຮັບປະກັນວ່າຊຸມຊົນທີ່ໄດ້ຮັບຜົນກະທົບ ຫຼື ອາດຈະໄດ້ ຮັບຜົນກະທົບຈາກກິດຈະກຳ ທີ່ໄດ້ຮັບການສະໜັບສະໜຸນຈາກ ກປສ ວ່າ ເຂົາເຈົ້າໄດ້ຮັບການແຈ້ງ ກ່ຽວກັບໂຄງການ ໃນໄລຍະທຳອິດຂອງ ຂະບວນການມີສ່ວນຮ່ວມ ຂອງພາກສ່ວນກ່ຽວຂ້ອງ ແລະ ການແຈ້ງການນັ້ນຕ້ອງໄດ້ຖືກຈັດຕັ້ງປະຕິບັດໃນລັກສະນະທີ່ເຂົ້າໃຈງ່າຍ ໂດຍມີ ພາກສ່ວນກ່ຽວຂ້ອງ, ເຊິ່ງລວມມີແມ່ຍິງ, ຄົນບໍ່ຮູ້ໜັງສື, ຊົນເຜົ່າ ແລະ ໂດຍສະເພາະແມ່ນຄົນທີ່ມີຄວາມສ່ຽງ. ບັນດາພາກສ່ວນກ່ຽວຂ້ອງໃນ ທ້ອງຖິ່ນ ຈະໄດ້ຮັບການແຈ້ງບອກຢ່າງເຕັມສ່ວນ ກ່ຽວກັບວິທີການລົງທະບຽນ ຄຳຮ້ອງທຸກ, ລວມທັງລາຍລະອຽດການຕິດຕໍ່ ກປສ. ກົນໄກ ດັ່ງກ່າວ ຍັງສາມາດເຂົ້າເຖິງໂດຍບຸກຄົນທີ່ອາໄສຢູ່ໃນປະເທດເພື່ອນບ້ານ ທີ່ໄດ້ຮັບຜົນກະທົບ ຈາກກິດຈະກຳຕ່າງໆ ທີ່ໄດ້ຮັບທຶນ ແລະ ໄດ້ຮັບ ການສະໜັບສະໜຸນຈາກ ກປສ. ກົນໄກການຮ້ອງທຸກ ຂອງ ກປສ ແມ່ນສອດຄ່ອງກັບຂະບວນການໄກ່ເກ່ຍຂອງລັດຖະບານ ທີ່ກຳນົດໄວ້ໃນແຕ່ ລະ ລະດັບຂອງ ລັດຖະບານລາວ (ລະດັບບ້ານ, ເມືອງ, ແຂວງ ແລະ ລະດັບສູນກາງ). ຜູ້ທີ່ມີສ່ວນກ່ຽວຂ້ອງສາມາດຍື່ນຄຳຮ້ອງທຸກໂດຍກົງກັບ ກປສ ຫຼື ຜູ້ໃຫ້ທຶນສາກົນ (ຖ້າມີ). ການນຳໃຊ້ນະໂຍບາຍຂອງ ກປສ ໃນວຽກງານການປົກປ້ອງສິ່ງແວດລ້ອມ ແລະ ສັງຄົມ (ESS)

ບັນດາຫຼັກການສຳລັບການປົກປ້ອງສິ່ງແວດລ້ອມ ແລະ ສັງຄົມແມ່ນນຳໃຊ້ກັບທຸກໆການດຳເນີນງານຂອງ ກປສ, ລວມທັງໂຄງການທີ່ໄດ້ ຮັບທຶນຈາກ ກປສ ທີ່ດຳເນີນງານໂດຍບັນດາຄູ່ຮ່ວມງານ. ບັນດາຫຼັກການເຫຼົ່ານີ້ຖືກຈັດຕັ້ງປະຕິບັດຜ່ານ:

- ເອກະສານນະໂຍບາຍ;
- ຂັ້ນຕອນໃນການກຳນົດຄວາມສ່ຽງ ແລະ ຜົນກະທົບຕໍ່ການຄຸ້ມຄອງ (POM ແລະ ເອກະສານຊ້ອນທ້າຍຕ່າງໆ);
- ການຄຸ້ມຄອງ, ການປະຕິບັດງານ ແລະ ການຕັດສິນໃຈ;
- ການສ້າງຂີດຄວາມສາມາດຂອງອົງການຈັດຕັ້ງ;
- ການຕິດຕາມ ແລະ ປະເມີນຜົນ;
- ການສື່ສານກັບພາຍນອກ.

ວຽກງານການປົກປ້ອງສິ່ງແວດລ້ອມ ແລະ ສັງຄົມ (ESS) ມີການດຳເນີນງານໂດຍສະເພາະໃນຂົງເຂດຕໍ່ໄປນີ້:

- ປຶ້ມຄູ່ມືການປະຕິບັດງານຂອງໂຄງການ (POM), ເຊິ່ງປະກອບມີກົນໄກກວດກາຄວາມສ່ຽງດ້ານ ວຽກງານການປົກສິ່ງແວດລ້ອມ ແລະ ສັງຄົມ. ເຊິ່ງໃຫ້ການຢັ້ງຢືນວ່າ ບໍ່ມີຄວາມສ່ຽງດ້ານສັງຄົມ/ ສິ່ງແວດລ້ອມໃນຂົງເຂດດັ່ງຕໍ່ໄປນີ້: ສະພາບແຮງງານ ແລະ ການເຮັດວຽກ; ປະສິດທິພາບຂອງຊັບພະຍາກອນ ແລະ ການປ້ອງກັນມົນລະພິດ; ສຸຂະພາບ, ຄວາມປອດໄພ ແລະ ຄວາມໝັ້ນຄົງຂອງຊຸມຊົນ; ການຊື້ທີ່ດິນ ແລະ ການຍົກຍ້າຍຈັດສັນແບບບໍ່ສະໝັກໃຈ; ການອະນຸລັກຊີວະນາໆພັນ ແລະ ການຄຸ້ມຄອງ; ຊັບພະຍາກອນທຳມະຊາດທີ່ມີຊີວິດ; ຊົນເຜົ່າພື້ນເມືອງ; ມໍລະດົກວັດທະນະທຳ; ບົດບາດຍິງ-ຊາຍ ແລະ ການມີສ່ວນຮ່ວມໃນສັງຄົມ; POM ຍັງປະກອບມີຂໍ້ແນະນຳໃນການບັນທຶກ ແລະ ການຄຸ້ມຄອງເຫດການທີ່ບໍ່ຄາດຄິດ ຫຼື ການເພີ່ມຂຶ້ນຂອງຄວາມສ່ຽງ;
- ກົນໄກການຊິດເຊີຍການຮ້ອງທຸກ;
- ກອບວຽກຂອງຊຸມຊົນ;
- ຂັ້ນຕອນການທົບທວນຂໍ້ສະເໜີ ແລະ ແບບຟອມການປະເມີນຜົນ;
- ຂອບການຕິດຕາມ ແລະ ປະເມີນຜົນໂຄງການ;
- ຂໍ້ຕົກລົງຂອງຄູ່ຮ່ວມງານ ແລະ ຂັ້ນຕອນການກວດສອບຄວາມເອົາໃຈໃສ່ ແລະ ແບບຟອມ;
- ນະໂຍບາຍວ່າດ້ວຍບົດບາດຍິງ-ຊາຍ ແລະ ການມີສ່ວນຮ່ວມໃນສັງຄົມ;
- ນະໂຍບາຍຊົນເຜົ່າ.